ແຜນທີ່ ກະສິກຳ ໃນ ສປປ ລາວ

ຮູບແບບ ແລະ ທ່າອ່ຽງ ລະຫວ່າງປີ 1999 ຫາ 2011

Lao DECIDE info
w w w . d e c i d e . l a
Informing Decisions for Sustainable Development

ແຜນທີ່ກະສິກຳ ສປປ ລາວ

ສະພາບລວມ ແລະ ການປ່ຽນແປງ ລະຫວ່າງປີ 1999 ຫາ 2011

UNIVERSITÄT BERN
CDE
CENTRE FOR DEVELOPMENT AND ENVIRONMENT

ກະຊວງກະສິກຳ ແລະ ປ່າໄມ້ (ກປ), ສປປ ລາວ ແລະ ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລເບີນ, ປະເທດສະວິດເຊີແລນ, ກັບ Bern Open Publishing (BOP), 2018

ສ້າງ ແລະ ກວດກາໂດຍ:

Michael Epprecht, Anne-Kathrin Weber, Rasso Bernhard, ຄຳຫຼວງ ແກ້ວກາ, ທັດເທວາ ສະພັງທອງ, ວົງປະພັນ ມະນີວົງ, ພັນໄຊ ອິງໄຊ, ພັນທະວົງ ວົງສຳພັນ, Nicholas Bosoni, ສະຫວັນ ຫານພິມ, ພອນສະຫວັນ ວັນມີໄຊ, ແອງສອນ ກວ້າງບຸນຮຽງ, ແຫຄຳ ສີສຸວັນ, ແສງພະຈັນ ຊຸນທີກຸມມານ, ປໍຫາ ໄຊຈູໜໍຊົວ, Micah Ingalls, ວົງ ນັນທະວົງ, Juliet Lu, ອິນທະເນດ ນໍຣະສີງຫ໌, Urs Wiesmann, Thomas Breu

ສະໜັບສະໜູນໂດຍ: ອົງການເພື່ອການພັດທະນາ ແລະ ການຮ່ວມມື ຂອງປະເທດ ສະວິດເຊີແລນ

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

ຂໍ້ຄວາມປະຕິເສດ:

ເສັ້ນເຂດແດນ, ສີ, ສັດສ່ວນ, ແລະ ຂໍ້ມູນອື່ນໆ ທີ່ສະແດງໃນປຶ້ມແຜນທີ່ ຊຸດນີ້ ບໍ່ໄດ້ຊີ້ບອກເຖິງລາຍລະອຽດທາງດ້ານນິຕິກຳໃດໆ ທາງດ້ານເສັ້ນຊາຍແດນ ຫຼື ການຢັ້ງຢືນທີ່ເປັນທາງການ ຫຼື ການຮັບຮອງທາງດ້ານເຂດແດນເຊື່ອມຕໍ່ໃນສ່ວນຂອງລັດຖະບານ ສປປ ລາວ ແຕ່ຢ່າງໃດ.

ລິຂະສິດ ປີ © 2018 ກະຊວງກະສິກຳ ແລະ ປ່າໄມ້ (ກປ), ສປປ ລາວ ແລະ ສູນການພັດທະນາ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລເບີນ, ປະເທດສະວິດເຊີແລນ, ກັບ Bern Open Publishing (BOP).

ປຶ້ມແຜນທີ່ກະສິກຳສະບັບນີ້ ແມ່ນໄດ້ຮັບອະນຸຍາດພາຍໃຕ້ Creative Commons Attribution 4.0 International (CC BY 4.0) License (http://creativecommons.org/licenses/by/4.0/). ທ່ານສາມາດເຂົ້າໄປອ່ານ ຫຼື ດາວໂຫຼດ, ສຳເນົາເກັບ ໄວ້, ນຳໄປໃຊ້, ນຳໄປເຜີຍແຜ່, ຈັດພິມ, ຊອກຂໍ້ມູນ, ແລະ ນຳໄປເຊື່ອມຕໍ່ໃສ່ເນື້ອໃນທີ່ກ່ຽວຂ້ອງກັບແຜນທີ່ກະສິກຳນີ້ໄດ້ ແຕ່ຕ້ອງໄດ້ສະເໜີທີ່ມາຂອງຂໍ້ມູນວ່າໃຜເປັນຜູ້ຂຽນ ແລະ ແຫຼ່ງທີ່ມາຂອງຂໍ້ມູນຢ່າງຊັດເຈນ, ລວມເຖິງອີງການ ຈັດຕັ້ງທີ່ຈັດພິມຄື: ສູນການພັດທະນາ ແລະ ສິ່ງແວດລ້ອມ (CDE) ແລະ ກະຊວງກະສິກຳ ແລະ ປ່າໄມ້ (ກປ). ສຳລັບການເອົາຂໍ້ມູນໄປນຳໃຊ້ ຫຼື ການນຳໄປເຜີຍແຜ່ ທີ່ຕິດພັນກັບໜ້າວຽກໃດໜຶ່ງນັ້ນ, ຈະຕ້ອງໄດ້ສະແດງໃຫ້ເຫັນວ່າ ໄດ້ຮັບອະນຸຍາດຈາກຜູ້ຈັດພິມຢ່າງຊັດເຈນ.

ກະກຽມໂດຍ: ກະຊວງກະສິກຳ ແລະ ປ່າໄມ້ (ກປ), ສປປ ລາວ ແລະ ສູນການພັດທະນາ ແລະ ສິ່ງແວດລ້ອມ (CDE), ມະຫາວິທະຍາໄລເບີນ, ປະເທດສະວິດເຊີແລນ

ຜູ້ທີ່ມີສ່ວນໃນການປະກອບສ່ວນ ທັງຜູ້ຂຽນ ແລະ ຜູ້ກວດກາ: Michael Epprecht, Anne-Kathrin Weber, Rasso Bernhard, ຄຳຫຼວງ ແກ້ວກາ, ທັດເທວາ ສະພັງທອງ, ວົງປະພັນ ມະນີວົງ, ພັນໄຊ ອີງໄຊ, ພັນທະວົງ ວົງສຳພັນ, Nicholas Bosoni, ສະຫວັນ ຫານພິມ, ພອນສະ ຫວັນ ວັນມີໄຊ, ແອງສອນ ກວ້າງບຸນຮຽງ, ແຫຄຳ ສີສຸວັນ, ແສງພະຈັນ ຂຸນທິກຸມມານ, ປໍຫາ ໄຊຈູໜໍຊີວ, Micah Ingalls, ວົງ ນັນທະວົງ, Juliet Lu, ອິນທະເນດ ນໍຣະສີງຫ໌, Urs Wiesmann, Thomas Breu

ຜູ້ສ້າງແຜນທີ່: Anne-Kathrin Weber, Rasso Bernhard, Michael Epprecht, ຈັນທະວອນ ພິມພັກດີ, ແຫຄຳ ສີສຸວັນ, ແສງພະຈັນ ຂຸນທິກຸມມານ, ປໍຫາ ໄຊຈູໜໍຊີວ

ວາງຜັງ ແລະ ອອກແບບ: Watcharapol Isarangkul Na Ayuthaya

ຈັດພິມໂດຍ: ປານຄຳ ຈຳປາ ການພິມ, ນະຄອນຫຼວງວຽງຈັນ, ສປປ ລາວ

ສະໜັບສະໜູນໂດຍ: Swiss Agency for Development and Cooperation (SDC)

DOI: https://doi.org/10.7892/boris.116698

ISBN (e-print): 978-3-906813-59-2

ISBN (print): 978-3-906813-58-5

ຕິດຕໍ່ສອບຖາມ: ກະຊວງກະສິກຳ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ, ສປປ ລາວ; www.maf.gov.la; maf.info@gmail.com
ສູນການພັດທະນາ ແລະ ສິ່ງແວດລ້ອມ (CDE), ມະຫາວິທະຍາໄລເບີນ, ປະເທດສະວິດເຊີແລນ; www.cde.unibe.ch; publications@cde.unibe.ch

ອ້າງອີງໂດຍ: Epprecht Michael, Weber Anne-Kathrin, Bernhard Rasso, ແກ້ວກາ ຄຳຫຼວງ, ສະພັງທອງ ທັດເທວາ, ມະນີວົງ ວົງປະພັນ, ອີງໄຊ ພັນໄຊ, ວົງສຳພັນ ພັນທະວົງ, Bosoni Nicholas, ຫານພິມ ສະຫວັນ, ວັນມີໄຊ ພອນສະຫວັນ, ກວ້າງບຸນຮຽງ ແອງສອນ, ສີສຸວັນ ແຫຄຳ, ຂຸນທິກຸມມານ ແສງພະຈັນ, ໄຊຈູໜໍຊີວ ປໍຫາ, Ingalls Micah, ນັນທະວົງ ວົງ, Lu Juliet, ນໍຣະສີງຫ໌ ອິນທະເນດ, Wiesmann Urs, Breu Thomas. 2018. ປຶ້ມແຜນທີ່ກະສິກຳ ຢູ່ ສປປ ລາວ: ສະພາບລວມ ແລະ ການປ່ຽນແປງລະຫວ່າງ ປີ 1999 ຫາ 2011. ນະຄອນຫຼວງວຽງຈັນ,ສປປ ລາວ ແລະ ນະຄອນຫຼວງເບີນ, ປະເທດສະວິດເຊີແລນ: ກະຊວງກະສິກຳ ແລະ ປ່າໄມ້, ສປປ ລາວ, ແລະ ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ,ມະຫາວິທະຍາໄລ ເບີນ, ກັບ Bern Open Publishing. ຈຳນວນ 164 ໜ້າ.

ສາລະບານ

ລາຍຊື່ຮູບສະແດງ....12

ລາຍຊື່ຕາຕະລາງ.... 12

ຕົວຫຍໍ້.... 13

ບົດນຳ....14

ອາລຳພະບົດ.... 15

ບົດກ່າວຂອບໃຈ....17

ກ່ຽວກັບປຶ້ມແຜນທີ່.... 18

ສະພາບລວມຂອງຊາດ.... 21

ກ. ພາກສະເໜີ....27

ກ 1 ທັດສະນະທົ່ວໄປຈາກພາບຖ່າຍດາວທຽມ....28

ກ 2 ການຜ່ອນຄາຍ, ພູມອາກາດ, ແລະ ເຄືອຂ່າຍການຄົມມະນາຄົມ....30

ກ 3 ການແບ່ງເຂດການປົກຄອງ....32

ກ 4 ການເຂົ້າເຖິງໝູ່ບ້ານ....34

ກ 5 ການເຂົ້າເຖິງຕະຫຼາດ....36

ກ 6 ປະເພດທີ່ດິນຕົ້ນຕໍ....38

ຂ. ພາບລວມດ້ານກະສິກຳ.... 41

ຂ 1 ທີ່ດິນກະສິກຳ....42

ຂ 2 ສິ່ງອຳນວຍຄວາມສະດວກດ້ານຊົນລະປະທານ....44

ຂ 3 ການເຮັດ ໄຮ່ເລື່ອນລອຍ ແລະ ໝູນວຽນ....46

ຂ 4 ຈຳນວນປະຊາກອນທີ່ເຮັດກະສິກຳ....48

ຂ 5 ພື້ນທີ່ດິນກະສິກຳ ທີ່ຖືກຜົນກະທົບຈາກລະເບີດ ທີ່ບໍ່ທັນແຕກ....50

ຂ 6 ສັດສ່ວນຂອງຕະຫຼາດ ຕໍ່ກັບການເຮັດກະສິກຳເພື່ອກຸ້ມກິນ....52

ຂ 7 ຄ່າແຮງງານແບ່ງຕາມເພດ ແລະ ຫົວໜ້າຄອບຄົວ....54

ຂ 8 ແຫຼ່ງລາຍຮັບຈາກການເຮັດກະສິກຳ....56

ຂ 9 ໄພພິບັດທາງທຳມະຊາດ: ໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ດິນເຊາະເຈື່ອນ....58

ຂ 10 ການເຂົ້າເຖິງສິນເຊື່ອ ແລະ ການຂາຍຜົນຜະລິດກະສິກຳ....60

ຄ. ພືດ....63

ຄ 1 ສັດສ່ວນຂອງພືດຢືນຕົ້ນ ຕໍ່ກັບພືດລົ້ມລຸກລະດູຝົນ....64

ຄ 2 ເນື້ອທີ່ ແລະ ຈຳນວນຄົວເຮືອນທີ່ປູກພືດລົ້ມລຸກ ແລະ ພືດຢືນຕົ້ນ....66

ຄ 3 ຄວາມຫຼາກຫຼາຍຂອງພືດ....68

ເຂົ້າ

ຄ 4 ເຂົ້າໄຮ່ 70

ຄ 5 ເຂົ້ານາປີ.................... 72

ຄ 6 ເຂົ້ານາແຊງ 74

ຄ 7 ການຂະຫຍາຍເນື້ອທີ່ການປູກເຂົ້າ 76

ຄ 8 ການພັດທະນາແນວພັນເຂົ້າ.................... 80

ພືດລົ້ມລຸກ ທີ່ບໍ່ແມ່ນເຂົ້າ

ຄ 9 ພືດລົ້ມລຸກຕົ້ນຕໍ.................... 82

ຄ 10 ພືດລົ້ມລຸກ ຈັດເປັນກຸ່ມ.................... 84

ຄ 11 ສາລີ 86

ຄ 12 ໝາກເດືອຍ.................... 90

ຄ 13 ມັນຕົ້ນ.................... 92

ຄ 14 ຖົ່ວດິນ.................... 96

ຄ 15 ໝາກຖົ່ວເຫຼືອງ 100

ຄ 16 ອ້ອຍ 104

ຄ 17 ສາລີຫວານ 108

ພືດຢືນຕົ້ນ

ຄ 18 ພືດຢືນຕົ້ນ ຕົ້ນຕໍ.................... 110

ຄ 19 ພືດຢືນຕົ້ນ ຈັດເປັນກຸ່ມ.................... 112

ຄ 20 ຢາງພາລາ.................... 114

ຄ 21 ກາເຟ.................... 118

ຄ 22 ໝາກກ້ວຍ 122

ຄ 23 ໝາກແໜ່ງ 126

ຄ 24 ຊາ 130

ຄ 25 ໝາກມ່ວງ.................... 134

ສັດລ້ຽງ.................... 139

ງ 1 ສະພາບລວມຂອງສັດລ້ຽງ 140

ງ 2 ປະເພດຂອງສັດລ້ຽງ ແລະ ການສັກຢາປ້ອງກັນພະຍາດ.................... 142

ງ 3 ຄວາຍ.................... 144

ງ 4 ງົວ.................... 146

ງ 5 ໝູ.................... 148

ງ 6 ໄກ່.................... 150

ງ 7 ເປັດ 152

ງ 8 ການຫາປາ 154

ງ 9 ການລ້ຽງສັດນ້ຳ 156

ເອກະສານອ້າງອີງ.................... 159

ລາຍຊື່ຮູບສະແດງ

ຮູບສະແດງ 1: ອັດຕາສ່ວນຮ້ອຍຂອງຜົນຜະລິດກະສິກຳ ທີ່ຜະລິດເພື່ອສົ່ງໃຫ້ຕະຫຼາດ ຂອງແຕ່ລະແຂວງ ໃນປີ 1999 ແລະ 2011 52

ຮູບສະແດງ 2: ນື້ອທີ່ເພາະປູກ ບັນດາພືດຢືນຕົ້ນ, ພືດລົ້ມລຸກ ແລະ ທົ່ງຫຍ້າລ້ຽງສັດ ໃນ ສປປ ລາວ ຄິດເປັນອັດຕາສ່ວນຮ້ອຍ 64

ຮູບສະແດງ 3: ການກະຈາຍຂອງການເພາະປູກ ບັນດາພືດຢືນຕົ້ນ ແລະ ພືດລົ້ມລຸກແຕ່ລະຊະນິດ 68

ຮູບສະແດງ 4: ເນື້ອທີ່ລວມຂອງການປູກເຂົ້າໄຮ່, ເຂົ້ານາໃນລະດູຝົນ ແລະ ລະດູແລ້ງ ຂອງແຕ່ລະແຂວງ ໃນປີ 2010/2011 78

ຮູບສະແດງ 5: ສັດສ່ວນ ສ່ວນຫຼາຍຂອງບັນດາບ້ານທີ່ປູກພືດລົ້ມລຸກ (ບໍ່ແມ່ນ ເຂົ້າ) 82

ຮູບສະແດງ 6: ສັດສ່ວນ ສ່ວນຫຼາຍຂອງບັນດາບ້ານທີ່ປູກພືດຢືນຕົ້ນຫຼາຍ 110

ຮູບສະແດງ 7: ການປ່ຽນແປງຂອງປະຊາກອນສັດລ້ຽງ ລະຫວ່າງປີ 1999 ແລະ 2011 140

ລາຍຊື່ຕາຕະລາງ

ຕາຕະລາງ 1: ຈຳນວນຄົວເຮືອນທັງໝົດ, ຈຳນວນຄົວເຮືອນກະສິກຳ ທັງໝົດ ແລະ ສ່ວນແບ່ງຂອງຄົວເຮືອນ ກະສິກຳ ຕໍ່ກັບຄົວເຮືອນທັງໝົດ ປີ 1999 ແລະ 2011 48

ຕາຕະລາງ 2: ເນື້ອທີ່ ແລະ ອັດຕາສ່ວນຂອງການປູກໝາກເດືອຍໃນລະດູຝົນ, ລະດູແລ້ງ ແລະ ທັງສອງລະດູ ໃນປີ 2010/2011 90

ຕາຕະລາງ 3: ເນື້ອທີ່ທັງໝົດ ແລະ ການປ່ຽນແປງຂອງການປູກຖົ່ວເຫຼືອງ ລະຫວ່າງ ປີ 1999 ແລະ 2011 100

ຕາຕະລາງ 4: ເນື້ອທີ່ທັງໝົດ ແລະ ອັດຕາສ່ວນຂອງການປູກສາລີຫວານລະດູຝົນ, ລະດູແລ້ງ ແລະ ທັງສອງ ລະດູ ໃນປີ 2010/2011 108

ຕາຕະລາງ 5: ເນື້ອທີ່ທັງໝົດ, ອັດຕາສ່ວນ ແລະ ການປ່ຽນແປງ ຂອງການນຳໃຊ້ດິນປູກຢາງພາລາ ໃນປີ 1999 ແລະ ປີ 2011 114

ຕາຕະລາງ 6: ເນື້ອທີ່ທັງໝົດ ແລະ ການປ່ຽນແປງຂອງການປູກກ້ວຍ ລະຫວ່າງປີ 1999 ແລະ ປີ 2011 124

ຕາຕະລາງ 7: ເນື້ອທີ່ທັງໝົດ ແລະ ການປ່ຽນແປງຂອງການປູກກາໝາກມ່ວງ ລະຫວ່າງ ປີ 1999 ແລະ ປີ 2011 134

ຕົວຫຍໍ້

ACIAR	ສູນຄົ້ນຄວ້າກະສິກຳສາກົນແຫ່ງປະເທດອົດສະຕາລີ (Australian Centre for International Agricultural Research)
ASEAN	ສະມາຄົມປະຊາຊາດ ອາຊີຕາເວັນອອກສຽງໃຕ້ (Association of Southeast Asian Nations)
CDE	ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລ ເບີນ (Centre for Development and Environment, University of Bern)
CIAT	ສູນເພື່ອການກະສິກຳເຂດຮ້ອນ ສາກົນ (International Center for Tropical Agriculture)
DALaM	ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ (Department of Agricultural Land Management)
EU	ສະຫະພາບເອີຣົບ (European Union)
FAO	ອົງການອາຫານ ແລະ ການກະເສດຂອງ ສະຫະປະຊາຊາດ (Food and Agriculture Organization of the United Nations)
FMD	ພະຍາດປາກເປື່ອຍລີບເລັບ (Foot and Mouth Disease)
GAP	ການຍັ້ງຢືນກະສິກຳດີເດັ່ນ (Good Agriculture Practices)
GDP	ລວມຍອດຜະລິດຕະພັນພາຍໃນ (Gross Domestic Product)
GI	ຕົວຊີ້ວັດທາງດ້ານພູມີສາດ (Geographical Indicators)
GIS	ລະບົບຂໍ້ມູນທາງພູມີສາດ (Geographic Information Systems)
GIZ	ອົງການຮ່ວມມືສາກົນ ຂອງປະເທດເຢຍລະມັນ (German Corporation for International Cooperation GmbH)
GoL	ລັດຖະບານແຫ່ງ ສປປ ລາວ (Government of the Lao PDR)
ha	ເຮັກຕາ (Hectare)
hh	ຄົວເຮືອນ (household)
HS	ພະຍາດຊຶມເຊື້ອຂອງຄວາຍ (Haemorrhagic Septicaemia)
IRRI	ສະຖາບັນຄົ້ນຄວ້າເຂົ້າສາກົນ (International Rice Research Institute)
JICA	ອົງການເພື່ອການຮ່ວມມືສາກົນ ປະເທດຍີ່ປຸ່ນ (Japan International Cooperation Agency)
km	ກິໂລແມັດ (Kilometre)
Lao PDR	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (Lao People's Democratic Republic)
LCA	ການສຳຫຼວດສະຖິຕິກະສິກຳແຫ່ງຊາດລາວ (Lao Census of Agriculture)
m	ແມັດ (Metre)
MAF	ກະຊວງກະສິກຳ ແລະ ປ່າໄມ້ (Ministry of Agriculture and Forestry)
masl	ສູງກວ່າລະດັບນໍ້າທະເລ (Metre above sea level)
NAFRI	ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ (ສຄກປ) (National Agriculture and Forestry Research Institute)
NBCA	ເຂດຮັກສາຊີວະນາໆພັນແຫ່ງຊາດ (National Biodiversity Conservation Areas)
NGD	ກົມແຜນທີ່ແຫ່ງຊາດ (National Geographic Department of the Lao PDR)
NRA	ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ (National Regulatory Authority)
NSEDP	ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ (National Socioeconomic Development Plan)
NTFPs	ເຄື່ອງປ່າຂອງດົງ (Non-Timber Forest Products)
OA	ກະສິກຳອິນຊີ (Organic Agriculture)
SDC	ອົງການເພື່ອການພັດທະນາ ແລະ ການຮ່ວມມື ຂອງປະເທດ ສະວິດເຊີແລນ (Swiss Agency for Development and Cooperation)
SDG	ເປົ້າໝາຍການພັດທະນາແບບຍືນຍົງ (Sustainable Development Goals)
UN	ອົງການສະຫະປະຊາຊາດ (United Nations)
UXO	ອົງການເກັບກູ້ລະເບີດ (Unexploded Ordnance)

ຄຳນຳ

ລັດຖະບານແຫ່ງ ສປປ ລາວ ຍາມໃດກໍ ຮັບຮູ້ເຖິງຄວາມສຳຄັນທີ່ໃຫຍ່ຫຼວງ ຂອງທ່າແຮງການພັດທະນາດ້ານກະສິກຳຂອງປະເທດຢູ່ສະເໝີ. ທັງນີ້ ກໍເນື່ອງຈາກວ່າ ຂະແໜງການກະສິກຳ ໄດ້ປະກອບສ່ວນຢ່າງແຂງແຮງໃຫ້ແກ່ການເຕີບໂຕຂອງຊາດ, ແລະ ເປັນເສັ້ນທາງທີ່ເຕັມໄປດ້ວຍຄວາມຫວັງ ໃນການນຳພາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ເຊິ່ງເປັນຜົນງານທີ່ຢັ້ງຢືນເຖິງການຊີ້ນຳອັນສະຫຼາດສ່ອງໃສຂອງບັນດາຜູ້ນຳປະເທດ.

ການສຳຫຼວດກະສິກຳ ທີ່ໄດ້ຈັດຕັ້ງປະຕິບັດຄັ້ງທຳອິດໃນປີ 1999 ແລະ ຄັ້ງຕໍ່ມາ ໃນປີ 2011 ປະກອບເປັນຂີດໝາຍທີ່ສຳຄັນໃນການພັດທະນາຂໍ້ມູນ ເພື່ອການວິເຄາະ, ການສ້າງແຜນ ແລະ ການຕັດສິນໃນຂະແໜງກະສິກຳຂອງ ສປປ ລາວ. ດ້ວຍການໃຫ້ຂໍ້ມູນລະອຽດເລິກເຊິ່ງ ໃນບັນດາປັດໃຈການຜະລິດກະສິກຳຂອງແຕ່ລະຄົວເຮືອນ ການສຳຫຼວດກະສິກຳ ຖືວ່າເປັນຂໍ້ມູນສະຖິຕິ ທີ່ສຳຄັນຂອງຊາດກ່ຽວກັບວິຖີຊີວິດຊົນນະບົດ ຂອງປະຊາຊົນລາວ.

ການນຳໃຊ້ຂໍ້ມູນລະອຽດທາງພູມີສາດ ປະກອບກັບຂໍ້ມູນສະຖິຕິ ທີ່ອຸດົມສົມບູນຂອງການສຳຫຼວດ, ການປ່ຽນແປງ ລັກສະນະການຜະລິດກະສິກຳຂອງທ້ອງຖິ່ນ ໃນແຕ່ລະໄລຍະ ແລະ ໃນຂອບເຂດທົ່ວປະເທດ ໄດ້ຖືກນຳມາສະເໜີໃນລາຍລະອຽດ ເປັນຄັ້ງທຳອິດ.

ຄວາມຮູ້ໃໝ່ດັ່ງກ່າວ ເປັນສິ່ງຈຳເປັນ ບໍ່ພຽງແຕ່ ສຳລັບການຕິດຕາມຄວາມຄືບໜ້າ ຂອງການກ້າວສູ່ເປົ້າໝາຍການພັດທະນາ ທີ່ໄດ້ລະບຸໄວ້ ໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ VIII ເທົ່ານັ້ນ, ແຕ່ມັນຍັງເປັນຫຼັກຖານອ້າງອີງທີ່ສຳຄັນ ເພື່ອວາງທິດທາງການພັດທະນາທີ່ຍືນຍົງ ຂອງຂະແໜງກະສິກຳ ໂດຍສະເພາະ, ແລະ ຂອງການພັດທະນາຊົນນະບົດ ໂດຍລວມ ຕາມທີ່ໄດ້ກຳນົດໄວ້ໃນບັນດາເອກະສານສຳຄັນຕ່າງໆ ເຊັ່ນ ແຜນຍຸດທະສາດການພັດທະນາກະສິກຳ ຮອດປີ 2025.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ຖານຄວາມຮູ້ໃໝ່ນີ້ ຈະຖືກນຳໃຊ້ຢ່າງກວ້າງຂວາງ ເປັນບ່ອນອີງໃຫ້ແກ່ບັນດານັກວາງແຜນ ແລະ ຜູ້ກຳນົດທິດທາງນະໂຍບາຍ ພາຍໃນລັດຖະບານ ເພື່ອສະໜັບສະໜູນການພັດທະນາແບບຍືນຍົງ ຢ່າງຕໍ່ເນື່ອງ ຂອງປະເທດຊາດຂອງພວກເຮົາ.

ທ່ານ ປ.ອ ພວງປາຣິສັກ ປຣະວົງວຽງຄຳ

ຮອງລັດຖະມົນຕີ, ກະຊວງກະສິກຳ ແລະ ປ່າໄມ້

ອາລໍາພະບົດ

ດັ່ງທີ່ພວກເຮົາຮູ້ແລ້ວວ່າ ອົງການສະຫະປະຊາຊາດ ໄດ້ເຫັນດີເປັນເອກະພາບ ໂດຍລວມຢູ່ໃນແຜນພັດທະນາແບບຍືນຍົງ ເຊິ່ງໄດ້ກໍານົດໄວ້ວ່າ ການພັດທະນາດ້ານກະສິກໍາ ຖືເປັນບັນຫາສໍາຄັນ ແລະ ຕ້ອງຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດ. ສິ່ງທ້າທາຍໃນຂະແໜງການກະສິກໍາ ມັນບໍ່ພຽງແຕ່ແມ່ນການທີ່ຈະເພີ່ມຂີດຄວາມສາມາດໃນການຜະລິດກະສິກໍາເພື່ອມາຮອງຮັບໃຫ້ແກ່ຈໍານວນປະຊາກອນ ທີ່ເພີ່ມຂຶ້ນເທົ່ານັ້ນ, ແຕ່ວ່າ ການສົ່ງເສີມການພັດທະນາທາງດ້ານກະສິກໍາ ມັນຍັງຈະຕ້ອງໄດ້ໄປຊຸກຍູ້ໃຫ້ແກ່ວຽກງານການພັດທະນາຊົນນະບົດໃນແງ່ຂອງການຮັກສາຄວາມສົມດຸນດ້ານສິ່ງແວດລ້ອມ ແລະ ໃນຂະນະ ດຽວກັນກໍຕ້ອງໄດ້ປະກອບສ່ວນໃຫ້ແກ່ການບໍລິການດ້ານສິ່ງແວດລ້ອມຂອງໂລກ ອີກດ້ວຍ. ຕໍ່ບັນຫານີ້, ການເຮັດກະສິກໍາໃນຫຼາຍຮູບແບບນັ້ນ ຖືວ່າເປັນແນວທາງທີ່ສົດໃສ ໃນອະນາຄົດຂ້າງໜ້າ. ກອບຄວາມຄິດດັ່ງກ່າວນີ້ ຈະນໍາໄປສູ່ການກະກຽມດ້ານສະບຽງອາຫານ, ອາຫານສັດ, ສານອາຫານ, ແລະ ເຊື້ອເພີງທໍາມະຊາດຕ່າງໆ: ມັນຍັງ ນໍາໄປສູ່ການເຮັດການກະສິກໍາ ໃນຮູບແບບອື່ນອີກດ້ວຍ ເຊັ່ນ: ການກະສິກໍາທີ່ຮັກສາສິ່ງແວດລ້ອມ, ການຮັກສາໜ້າດິນ, ມີການຈ້າງງານ, ແລະ ດ້ານສາທາລະນະສຸກ, ນອກນີ້ ກໍຍັງຖືໄດ້ວ່າ ການກະສິກໍາ ມີບົດບາດສໍາຄັນໃນການຮັກສາຮີດຄອງປະເພນີ ແລະ ວັດທະນະທໍາຂອງຊາດອີກດ້ວຍ.

ເປັນເວລາດົນນານມາແລ້ວ ທີ່ບັນດານະໂຍບາຍ ແລະ ການສຶກສາຄົ້ນຄວ້າຕ່າງໆທາງດ້ານກະສິກໍາ ໄດ້ເລັ່ງໃສ່ດ້ານການເພີ່ມຂີດຄວາມສາມາດຂອງການຜະລິດກະສິກໍາ ໂດຍການນໍາໃຊ້ເຕັກນິກ ແລະ ນະວັດຕະກໍາໃໝ່ໆເຂົ້າມາຊ່ວຍ. ໃນນັ້ນ ທາງດ້ານເມັດພືດ, ການຂະຫຍາຍພັນສັດລ້ຽງ, ການປັບປຸງຄຸນນະພາບຂອງດິນ, ດ້ານຊົນລະປະທານ ແລະ ດ້ານອື່ນໆ ກໍຖືວ່າໄດ້ມີຄວາມກ້າວໜ້າຫຼາຍ. ສິ່ງເຫຼົ່ານີ້ ຖືເປັນຄວາມພະຍາຍາມຢູ່ໃນທົ່ວໂລກ ທີ່ຮັບຮູ້ກັນດີກໍຄື ການກ້າວສູ່ຍຸກສີຂຽວ – ເຊິ່ງແນໃສ່ການຜະລິດສະບຽງອາຫານໃນທົ່ວໂລກ ໃຫ້ໄດ້ສອງເທົ່າພາຍໃນອີກ 30 ປີ ຂ້າງໜ້າ. ເມື່ອບໍ່ດົນມານີ້, ກໍເຫັນໄດ້ວ່າ ຫຼາຍໆການ ພັດທະນາໃນຂະແໜງການກະສິກໍາ ກໍໄດ້ນໍາເອົາວິທີການເຫຼົ່ານີ້ໄປນໍາໃຊ້, ຮວມເຖິງ ສປປ ລາວ ກໍເຊັ່ນດຽວກັນ. ປັດໃຈທີ່ສໍາຄັນຕົ້ນຕໍ ກໍແມ່ນ ທາງດ້ານລະບົບຂອງການກະສິກໍາ ແລະ ສະບຽງອາຫານທີ່ໄດ້ມີການເພີ່ມຂຶ້ນໃນທົ່ວໂລກ. ການພັດທະນາໃນຮູບແບບ ການເຮັດການຄ້າແບບເສລີ, ການລົງທຶນຂອງຕ່າງປະເທດ, ແລະ ການຂະຫຍາຍເນື້ອທີ່ຕົວເມືອງ ນັ້ນ ລ້ວນແຕ່ເຮັດໃຫ້ເກີດການປ່ຽນແປງທາງດ້ານໂຄງສ້າງຂອງການກະສິກໍາ ຮວມເຖິງຕະຫຼາດຈັດຈໍາໜ່າຍຢ່າງໄວວາ ແລະ ບໍ່ເຄີຍມີມາກ່ອນ. ໃນຂະນະດຽວກັນ ການຂະຫຍາຍຕົວທາງດ້ານກະສິກໍາໃນທົ່ວໂລກ ຖືໄດ້ວ່າເປັນການສ້າງໂອກາດໃໝ່ໆ, ຮວມທັງການຂະຫຍາຍຕົວທາງດ້ານເສດຖະກິດ, ພ້ອມກັນນັ້ນ ມັນກໍພັດເປັນການສ້າງຄວາມສ່ຽງຫຼາຍດ້ານຕໍ່ຄົນ ແລະ ສິ່ງແວດລ້ອມ, ເຊິ່ງມັນຮຽກຮ້ອງໃຫ້ມີການກໍານົດນະໂຍບາຍໃໝ່ໆອອກມາພ້ອມທັງຂະບວນການຕ່າງໆໃນການຕັດສິນບັນຫາ.

ການເຮັດກະສິກໍາໃນອະນາຄົດ ທີ່ເຫັນວ່າມີການຂະຫຍາຍຕົວໃນທົ່ວໂລກ ປະກອບສ່ວນໃຫ້ແກ່ ການບັນລຸເປົ້າໝາຍຂອງແນວທາງແຜນພັດທະນາຮອດປີ 2030 ນັ້ນ ມັນຮຽກຮ້ອງຫຼາຍດ້ານເຊັ່ນ ຄວາມຮູ້ ແລະ ຄວາມສາມາດ, ແຫຼ່ງທຶນ, ແລະ ນະໂຍບາຍທີ່ຈະມາຮອງຮັບທາງດ້ານສິ່ງແວດລ້ອມ ນໍາດ້ວຍ. ລັດຖະບານ, ອົງການຈັດຕັ້ງມະຫາຊົນ, ພາກເອກະຊົນ ແລະ ແມ່ນແຕ່ ອົງການຈັດຕັ້ງຂັ້ນທ້ອງຖິ່ນຕ່າງໆ ລ້ວນແຕ່ ຈະຕ້ອງໄດ້ມີທິດທາງທີ່ຊັດເຈນ ເພື່ອທີ່ຈະພາໃຫ້ປະສົບຜົນສໍາເລັດຕາມຄວາມຄາດຫວັງໄດ້. ເຫັນໄດ້ວ່າ ປຶ້ມແຜນທີ່ກະສິກໍາ ຂອງ ສປປ ລາວ ສະບັບນີ້ ໄດ້ມີຂໍ້ມູນທີ່ຄົບຖ້ວນສົມບູນ ແລະ ມີລັກສະນະຄວາມຮູ້ທາງດ້ານວຽກງານກະສິກໍາ ແລະ ເຕັມໄປດ້ວຍແນວຄວາມຄິດທີ່ສ້າງສັນຕ່າງໆ.

ຂ້າພະເຈົ້າເຊື່ອໝັ້ນວ່າ ປຶ້ມແຜນທີ່ກະສິກໍາທີ່ມີລັກສະນະສະເພາະເຫຼັ້ມນີ້ ຈະສາມາດຕອບສະໜອງ ແລະ ເປັນເຄື່ອງມືທີ່ສໍາຄັນເພື່ອມາຮັບໃຊ້ໃຫ້ແກ່ການສ້າງແຜນພັດທະນາ ແລະ ການກໍານົດນະໂຍບາຍ ແລະ ເປັນບ່ອນອີງໃນການຕັດສິນບັນຫາ ພ້ອມທັງສາມາດນໍາໄປຮັບໃຊ້ໃນການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງໃນຂົງເຂດຂອງການພັດທະນາດ້ານກະສິກໍາແບບຍືນຍົງ ໃນ ສປປ ລາວ ກໍຄື ການພັດທະນາແບບຍືນຍົງໃນທົ່ວໂລກ.

ສຈ. ດຣ. ໂທມາສ ບຣອຍ

ຜູ້ອໍານວຍການ, ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ CDE, ມະຫາວິທະຍາໄລ ເບີນ

ຄວາມຂອບໃຈ

ການພັດທະນາ ປຶ້ມແຜນທີ່ ທີ່ສົມບູນແບບສະບັບນີ້ ເກີດຂຶ້ນໄດ້ ກໍຍ້ອນມີການສະໜັບສະໜູນດ້ານງົບປະມານ ຈາກອົງການ ເພື່ອການພັດທະນາ ແລະ ການຮ່ວມມື ຂອງ ປະເທດ ສະວິດເຊີແລນ (Swiss Agency for Development and Cooperation – SDC) ໃຫ້ແກ່ການລິເລີ່ມຂອງ ລາວ ດີຊາຍ ອິນໂຟ (Lao DECIDE info initiative).

ຄຽງຄູ່ກັບການປະກອບສ່ວນຢ່າງຕັ້ງໜ້າຂອງຜູ້ຂຽນປຶ້ມຫົວນີ້ຈຳນວນໜຶ່ງ ແລະ ຍັງໄດ້ປຶກສາກັບບັນດາຜູ້ຊ່ຽວຊານຫຼາຍກ່ວາ 20 ທ່ານ ທີ່ໄດ້ປະກອບສ່ວນອັນມີຄຸນຄ່າ ເຂົ້າໃນການຕີຄວາມໝາຍຮູບແບບການຜະລິດກະສິກຳໃນ ສປປ ລາວ. ພວກເຮົາ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ກັບບັນດາຜູ້ຊ່ຽວຊານເຫຼົ່ານັ້ນ ທີ່ໄດ້ໃຊ້ເວລາ ແລະ ສະຕິປັນຍາ ອັນມີຄຸນຄ່າຂອງພວກເຂົາ ດັ່ງມີລາຍຊື່ລຸ່ມນີ້:

- ທ່ານ ຈະລຸນ ບຸນນິທິພອນ, ຮອງຫົວໜ້າໜ່ວຍງານເຄື່ອງປ່າຂອງດົງ, ສູນຄົ້ນຄວ້າປ່າໄມ້, ສຄກປ[1]
- ທ່ານ ປອ. ບຸນເນື່ອງ ດວງບຸບຜາ, ຫົວໜ້າສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ, ສຄກປ
- ທ່ານ ປອ. ບຸນທັນ ແກ້ວບົວລະພາ, ຫົວໜ້າສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ, ສຄກປ
- ທ່ານ ສູນທອນ ເກດພັນ, ຮອງຫົວໜ້າສູນຄົ້ນຄວ້າກະສິກຳ-ປ່າໄມ້, ສຄກປ
- ທ່ານ ຈັນທະສອນ ຄຳໄຊໄຂ, ຮອງຫົວໜ້າສູນອະນຸລັກ ແລະ ພັດທະນາດິນກະສິກຳ, ຄພດກ[2]
- ທ່ານ ປອ. ສອນວິໄລ ນາມປັນຍາ, ວິຊາການ ໂຄງການຄົ້ນຄ້ວາ, ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້, ສູນຄົ້ນຄວ້າກະສິກຳສາກົນ ແຫ່ງປະເທດອົດສະຕຣາລີ (ACIAR)
- ທ່ານ ສີງຄຳ ເນດພັນຫຼ້າ, ຫົວໜ້າສູນຄົ້ນຄວ້າ ສາລີ ແລະ ພືດເສດຖະກິດ, ສຄກປ
- ທ່ານ ປອ. ໂຈນາທານ ນິວບີ, ສູນຄົ້ນຄວ້າກະສິກຳສາກົນ ແຫ່ງປະເທດອົດສະຕຣາລີ (ACIAR), CIAT
- ທ່ານ ນາງ ປະມວນ ເພັດທານີ, ຜູ້ອຳນວຍການ ສະມາຄົມ ການເງິນຈຸລະພາກແຫ່ງ ສປປ ລາວ
- ທ່ານ ປອ. ສີວຽງແຂກ ພົມມະລາດ, ນັກຄົ້ນຄວ້າ ບໍລິສັດພັດທະນາແນວພັນ, ສຄກປ
- ທ່ານ ສົມມະໂນ ພູນສະຫວັດ, ຫົວໜ້າຂະແໜງການປະມົງ, ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະປ່າໄມ້
- ທ່ານ ຄຳພູ ຜູຍຍະວົງ, ຮອງຫົວໜ້າພະແນກແຜນການ ແລະ ການຮ່ວມມື, ສຄກປ
- ທ່ານ ປອ. ເພັງ ເຊັ້ງຊີ້, ຫົວໜ້າສູນ ອະນຸລັກ ແລະ ພັດທະນາກະສິກຳ, ກົມຄຸ້ມຄອງ ແລະ ພັດທະນາດິນກະສິກຳ
- ທ່ານ ຈັນພະສຸກ ຕານທະພອນ, ຫົວໜ້າສູນຄົ້ນຄວ້າ ນະໂຍບາຍກະສິກຳ ແລະ ປ່າໄມ້, ສຄກປ
- ທ່ານ ປອ. ອີຊາແບລ ວາເຢີຣົງ, ຊ່ຽວຊານທາງດ້ານນະໂຍບາຍ ຊີຣາດ ປະຈຳ ສຄກປ
- ທ່ານ ອິນປັນ ແຫວນສົມເພັດ, ຫົວໜ້າສູນກາເຟ, ສຄກປ
- ທ່ານ ປອ. ຄຳຕອນ ວັນທານຸວົງ, ຮອງຫົວໜ້າບໍລິສັດພັດທະນາແນວພັນ, ສຄກປ
- ທ່ານ ສົມລິດ ວິລາວົງ, ຫົວໜ້າຂະແໜງປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ
- ທ່ານ ສີມອນ ວົງຄຳຫໍ່, ຫົວໜ້າໜ່ວຍງານເຄື່ອງປ່າຂອງດົງ, ສູນຄົ້ນຄວ້າປ່າໄມ້, ສຄກປ
- ທ່ານ ສົມສະໃໝ ວົງທິລາດ, ນັກຄົ້ນຄວ້າ ການຈັດສັນຊັບພະຍາກອນນ້ຳ ແລະ ວິສະວະກຳຊົນລະປະທານ, ສູນຄົ້ນຄວ້ານະໂຍບາຍກະສິກຳ ແລະ ປ່າໄມ້, ສຄກປ
- ທ່ານ ປອ. ເພັດມານີແສງ ຊ້າງໄຊສານ, ຮອງຫົວໜ້າສູນຄົ້ນຄວ້າເຂົ້າ, ສຄກປ

[1] ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

[2] ສູນຄົ້ນຄ້ວາອະນຸລັກ ແລະ ພັດທະນາດິນກະສິກຳ

ຄວາມເປັນມາກ່ຽວກັບປຶ້ມແຜນທີ່ກະສິກຳ ແລະ ການສຳຫຼວດ

ປຶ້ມແຜນທີ່ກະສິກຳສະບັບນີ້ໄດ້ສະແດງໃຫ້ເຫັນເຖິງການວິເຄາະພື້ນທີ່ຢ່າງຮອບດ້ານກ່ຽວກັບກິດຈະກຳການກະສິກຳ ແລະ ຮູບແບບການຜະລິດໃນ ສປປ ລາວ ໃນປີ 2011, ແລະ ການປ່ຽນແປງຕ່າງໆ ໃນຊຸມປີທຳອິດຂອງຕົ້ນທົດສະວັດ ຂອງສັດຕະວັດທີ 21. ມັນສະແດງໃຫ້ເຫັນທາງດ້ານສະຖິຕິຄົວເຮືອນຂັ້ນບ້ານ ຂອງການສຳຫຼວດກະສິກຳທົ່ວປະເທດ ໃນປີ 2011 ແລະ ການປ່ຽນແປງຕ່າງໆ ນັບຕັ້ງແຕ່ການສຳຫຼວດກະສິກຳຄັ້ງທຳອິດ ໃນປີ 1999.

ການສຳຫຼວດສະຖິຕິກະສິກຳຂອງ ປີ 1999 ແລະ 2011 ເປັນຫຼັກໝາຍທີ່ສຳຄັນ ໃນການເກັບກຳຂໍ້ມູນສະຖິຕິທີ່ສອດຄ່ອງກັນ, ການລວບລວມ ແລະ ການວິເຄາະຕໍ່ຖານຂໍ້ມູນຂ່າວສານແຫ່ງຊາດກຳລັງຂະຫຍາຍຕົວທີ່ມີຄວາມຈຳເປັນ ເພື່ອເປັນບ່ອນອີງໃນການວາງແຜນ ແລະ ການຕັດສິນໃຈ ໃນຂະແໜງກະສິກຳ ແລະ ຂະແໜງການທີ່ກ່ຽວຂ້ອງກັບການພັດທະນາຊົນນະບົດ. ການສຳຫຼວດທັງສອງ ໄດ້ລວບລວມເອົາຈຳນວນຄົວເຮືອນທັງໝົດໃນຂອບເຂດທົ່ວປະເທດ, ການເກັບກຳຂໍ້ມູນພື້ນຖານກ່ຽວກັບພົນລະເມືອງ, ພ້ອມກັບຂໍ້ມູນກິດຈະກຳການກະສິກຳ ຂອງແຕ່ລະຄົວເຮືອນ, ລວມທັງຈຳນວນ ແລະ ປະເພດສັດລ້ຽງ ພ້ອມທັງປະເພດ ແລະ ເນື້ອທີ່ຂອງພືດລົ້ມລຸກ ແລະ ພືດຢືນຕົ້ນ. ນອກຈາກນັ້ນ, ຍັງໄດ້ເກັບກຳຂໍ້ມູນຢ່າງລະອຽດກ່ຽວກັບກິດຈະກຳຂອງຄົວເຮືອນ ຈາກການສຸ່ມຕົວຢ່າງ 5% ຂອງຄົວເຮືອນທັງໝົດ. ໃນປີ 2011, ແບບສອບຖາມ ຂັ້ນບ້ານໄດ້ຖືກນຳໃຊ້ເຂົ້າໃນການເກັບກຳຂໍ້ມູນກ່ຽວກັບ ລະເບີດທີ່ຍັງບໍ່ທັນແຕກ ແລະ ຄວາມເສຍຫາຍທີ່ເກີດຈາກໄພທຳມະຊາດ, ສະພາບອາກາດ ແລະ ດິນ, ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ, ແລະ ອື່ນໆ ກໍຖືກລວມເຂົ້າໃນປຶ້ມແຜນທີ່ ສະບັບນີ້.

ໃນຂະນະທີ່ຜົນຂອງການສຳຫຼວດເຫຼົ່ານີ້ ປະກອບເປັນແຫຼ່ງຂໍ້ມູນທີ່ອຸດົມສົມບູນ ກ່ຽວກັບສະຖານະພາບປະຈຸບັນຂອງກະສິກຳ, ພ້ອມທັງທ່າອ່ຽງ ແລະ ຮູບແບບຂອງການປ່ຽນແປງທາງດ້ານກະສິກຳຕາມແຕ່ລະໄລຍະ, ການນຳໃຊ້ໂດຍກົງ ແລະ ການຕີຄວາມໝາຍຕົວເລກສະຖິຕິ ທີ່ລະອຽດເຫຼົ່ານີ້ ອາດກາຍເປັນສິ່ງທ້າທາຍອັນໃຫຍ່ຫຼວງ. ສະນັ້ນ ການວິເຄາະຂໍ້ມູນຢ່າງເປັນລະບົບ ແມ່ນມີຄວາມຈຳເປັນຕົ້ນຕໍ ເພື່ອໃຫ້ເກີດປະໂຫຍດ ສຳລັບການວາງແຜນ ແລະ ການຕັດສິນໃຈ.

ລັກສະນະຂອງການສຳຫຼວດ, ຕາມນິຍາມ ກວມເອົາທຸກຄົວເຮືອນຂອງຊາດໜຶ່ງ, ສະໜອງໂອກາດທີ່ໃຫຍ່ຫຼວງແກ່ການວິເຄາະທາງດ້ານພູມສາດທີ່ມີລາຍລະອຽດສູງ ແລະ ເປັນຕົວແທນຂອງຮູບແບບການວິເຄາະພື້ນທີ່ ແລະ ແນວໂນ້ມທີ່ບໍ່ສະແດງໃນຂໍ້ມູນສະຖິຕິ. ເພື່ອສາມາດນຳໃຊ້ທ່າແຮງນີ້, ການບັນທຶກລາຍລະອຽດຂໍ້ມູນຂອງແຕ່ລະສະຖານທີ່ ແມ່ນມີຄວາມຈຳເປັນ. ທ້າຍນີ້, ຂໍ້ມູນພູມສັນຖານດິຈິຕອລ ທີ່ໄດ້ແຍກເກັບກຳຕ່າງໆຫາກ ແລະ ສຳເລັດໃນປີ 2012 ໂດຍກະຊວງກະສິກຳ ແລະ ປ່າໄມ້ (ກປ) ຜ່ານການຮ່ວມມືກັບກົມແຜນທີ່ແຫ່ງຊາດ (ກຜທ) ໄດ້ເຊື່ອມເຂົ້າກັບຖານຂໍ້ມູນການສຳຫຼວດ.

ຕົວຊີ້ວັດຈຳນວນຫຼວງຫຼາຍ, ຖືກຄຳນວນ ແລະ ແຍກປະເພດ ຈາກ ຂໍ້ມູນການສຳຫຼວດ ສ່ວນບຸກຄົນ ແລະ ລະດັບຄົວເຮືອນ ຖືກບັນທຶກລົງໃນແຜນທີ່ບ້ານ. ນອກຈາກນັ້ນ, ຂໍ້ມູນ ປີ 2011 ໄດ້ຖືກເຊື່ອມໂຍງກັບຂໍ້ມູນ ປີ 1999, ເພື່ອໃຫ້ມີການວິເຄາະຢ່າງລະອຽດ ແລະ ເປັນຕົວແທນໃຫ້ແກ່ການສຳຫຼວດທັງສອງຄັ້ງ.

ຜົນການຄົ້ນຄວ້າດັ່ງກ່າວ ໄດ້ຖືກລວບລວມເຂົ້າໃນ ປຶ້ມແຜນທີ່ເຫຼັ້ມນີ້ຢ່າງຄົບຖ້ວນສົມບູນ, ປະກອບດ້ວຍຊຸດຕາຕະລາງສັງລວມທີ່ໄດ້ສ້າງຂຶ້ນ ແລະ ເຜີຍແຜ່ໃນການສຳຫຼວດກະສິກຳຂອງ ສປປ ລາວ ປີ 2010/11 (ACO, 2012) ແລະ ໃນເວັບໄຊທ໌ www.decide.la, ໄປຄຽງຄູ່ກັບກັບການວິເຄາະເພີ່ມເຕີມໃນບັນດາຫົວຂໍ້ສະເພາະທີ່ຖືກຈັດພິມໃນ ການສຳຫຼວດກະສິກຳລາວ ປີ 2010/11 – ການວິເຄາະບັນດາຫົວຂໍ້ເລືອກເຟັ້ນ (FAO, 2014).

ບັນດາຂໍ້ຈຳກັດຂອງການວິເຄາະທາງພູມສາດ ແລະ ການນຳສະເໜີຂໍ້ມູນສະຖິຕິຂອງການສຳຫຼວດທີ່ຈຳເປັນຕ້ອງໄດ້ຍົກຂຶ້ນມາພິຈາລະນາໃນຂະນະຕີຄວາມໝາຍແຜນທີ່ຕ່າງໆໃນປຶ້ມແຜນທີ່ສະບັບນີ້ ມີດັ່ງຕໍ່ໄປນີ້:

1. ການສຳຫຼວດໄດ້ເກັບກຳຂໍ້ມູນຈາກລະດັບຄົວເຮືອນເທົ່ານັ້ນ, ໝາຍຄວາມວ່າ ການຜະລິດກະສິກຳຈາກບໍລິສັດ ແມ່ນບໍ່ໄດ້ຖືກບັນຈຸເຂົ້າ ແລະ ຖືກສະແດງໃນແຜນທີ່. ນີ້ແມ່ນສິ່ງສຳຄັນທີ່ຄວນເອົາໃຈໃສ່ເມື່ອຕີຄວາມໝາຍ ພືດຕ່າງໆ ທີ່ສ່ວນໃຫຍ່ ບໍລິສັດໄດ້ປູກໃນພື້ນທີ່ກວ້າງ (ເຊັ່ນ: ຢາງພາລາ, ແລະອື່ນໆ).

2. ການຜະລິດພືດ ທີ່ຖືກບັນທຶກລົງໃນແຜນທີ່ຂັ້ນບ້ານ ເປັນການສົມມຸດຖານວ່າ ຜູ້ທີ່ອາໃສຢູ່ໃນບ້ານນັ້ນຖືສິດຄອບຄອງ ແລະ ປູກໃນດິນຂອງເຂົາເຈົ້າເອງ. ສ່ວນຫຼາຍຈະເປັນກໍລະນີໃນລັກສະນະນີ້, ແຕ່ກໍ່ມີບາງກໍລະນີທີ່ປະຊາຊົນເຂດຕົວເມືອງມາປູກພືດຢູ່ດິນຂອງຊາວບ້ານ.

3. ຂໍ້ມູນທາງພູມສາດ ກ່ຽວກັບທີ່ຕັ້ງຂອງແຕ່ລະບ້ານ ໄດ້ຖືກບັນທຶກໄວ້ທີ່ສູນກາງປົກຄອງຂອງບ້ານ ເປັນອີກຈຸດໜຶ່ງທີ່ຕ້ອງໄດ້ເອົາໃຈໃສ່. ການຂາດຄວາມຊັດເຈນດ້ານເຂດແດນທີ່ເປັນທາງການ ໃນຫຼາຍໆເຂດຊົນນະບົດຂອງ ສປປ ລາວ, "ຮູບບ້ານຫຼາຍຫຼ່ຽມ" ທີ່ຖືກໝາຍໃນບ້ານຕ່າງໆ ເປັນພຽງແຕ່ການສະແດງໃຫ້ເຫັນດ້ານພູມສັນຖານຂອງຂໍ້ມູນການສຳຫຼວດ. ຂອບເຂດບ້ານເຫຼົ່ານີ້, ຫຼື "ຮູບບ້ານຫຼາຍຫຼ່ຽມ" ນີ້, ຖືກສ້າງຂຶ້ນເພື່ອເປັນການຈຳລອງເທົ່ານັ້ນ, ແລະ ບໍ່ໄດ້ສະທ້ອນເຖິງຂອບເຂດການປົກຄອງຢ່າງແທ້ຈິງແຕ່ຢ່າງໃດ.

ໃນປຶ້ມແຜນທີ່ ໄດ້ຖືກຈັດແບ່ງອອກເປັນ ສີ່ ພາກຫົວຂໍ້: ພາກຫົວຂໍ້ກ່ຽວກັບ ຄວາມເປັນມາ ແລະ ບໍລິບົດຂອງ ປຶ້ມແຜນທີ່ ເປັນການສະເໜີຂໍ້ມູນທີ່ໄດ້ຈາກການສຳຫຼວດ ໂດຍລວມ: ເລີ່ມຈາກພາກແນະນຳທົ່ວໄປກ່ຽວກັບທີ່ຕັ້ງພູມສັນຖານ ຕາມດ້ວຍບົດສະເໜີກ່ຽວກັບບັນດາກິດຈະກຳ ດ້ານກະສິກຳ, ແລະ ພາກຫົວຂໍ້ຫຼັກກ່ຽວກັບການປູກພືດ. ຮູບແບບການຜະລິດໄດ້ຖືກສະເໜີເປັນ ການປູກພືດລົ້ມລຸກ ແລະ ການປູກພືດຢືນຕົ້ນ. ພາກສຸດທ້າຍ ໄດ້ນຳສະເໜີ ເຖິງຜົນໄດ້ຮັບຂອງການວິເຄາະດ້ານພູມສັນຖານ

ປະເພດແຜນທີ່

ມີ 4 ປະເພດແຜນທີ່ ທີ່ໄດ້ຖືກນຳໃຊ້ໃນ ປຶ້ມແຜນທີ່ Atlas ສະບັບນີ້:

1. ແຜນທີ່ ຂັ້ນບ້ານ – ການສຳຫຼວດກະສິກຳ ປີ 2010/11 ໄດ້ເກັບກຳເອົາບັນດາສູນກາງການປົກຄອງບ້ານ, ແຕ່ບໍ່ໄດ້ລວມເອົາຂອບເຂດຊາຍແດນຂອງບ້ານຢ່າງຊັດເຈນ ເພາະວ່າ ສ່ວນຫຼາຍ ຍັງຈະຕ້ອງໄດ້ສືບຕໍ່ກຳນົດໃນໄລຍະຕໍ່ໄປ. ໃນຂະນະທີ່ຂາດຂອບເຂດຊາຍແດນທີ່ສົມບູນ, ຂອບເຂດຕ່າງໆຂອງບ້ານໄດ້ຖືກສ້າງຂຶ້ນ ໂດຍນຳໃຊ້ປັດໄຈຂອງໄລຍະທາງ ລະຫວ່າງ ຈຸດສູນກາງການປົກຄອງບ້ານ. ຮູບບ້ານຫຼາຍຫຼ່ຽມສະແດງຄ້າຍຄືກັບຂອບເຂດບ້ານ ທີ່ອີງຕາມຖານຂໍ້ມູນ GIS. ມັນອາດຈະນຳໄປສູ່ການເຂົ້າໃຈຜິດໃນເວລາທີ່ເບິ່ງແຜນທີ່ໃນຂັ້ນບ້ານ. ຂໍ້ມູນສຳຫຼວດກະສິກຳຢູ່ໃນຂັ້ນບ້ານ ແມ່ນເຊື່ອມຕໍ່ກັບ ຖານຂໍ້ມູນ GIS ແລະ ແຜນທີ່ສຳຫຼວດຂອງຕົວແປຕ່າງໆທີ່ໄດ້ຖືກສ້າງຂຶ້ນ ໃນຂັ້ນບ້ານ. ສຳລັບແຜນທີ່ຂັ້ນບ້ານ, ໄດ້ສະແດງພຽງແຕ່ຕົວເລກທຽບຖານເທົ່ານັ້ນ.

2. ແຜນທີ່ ຂັ້ນແຂວງ – ຂອບເຂດຊາຍແດນຂອງແຂວງ ແມ່ນໄດ້ນຳໃຊ້ແຜນທີ່ ຈາກກົມແຜນທີ່ແຫ່ງຊາດຂອງ ສປປ ລາວ ທີ່ສ້າງໃນປີ 2009. ການຄຳນວນຂໍ້ມູນການສຳຫຼວດກະສິກຳໃນຂັ້ນແຂວງໄດ້ຖືກເຊື່ອມໂຍງກັບຂອບເຂດຊາຍແດນ ຂັ້ນແຂວງ. ຜ່ານແຜນທີ່ ຂັ້ນແຂວງດັ່ງກ່າວນີ້ ການສົມທຽບຂໍ້ມູນລະຫວ່າງແຂວງຈຶ່ງເປັນໄປໄດ້. ນອກຈາກນີ້, ຮູບວົງມົນ ແລະ ຮູບສີ່ຫຼ່ຽມ ທີ່ມີຂະໜາດແຕກຕ່າງກັນ ເຊິ່ງຂຶ້ນກັບຕົວເລກດັດຖານຂອງຕົວແປທີ່ເປັນຕົວແທນໃຫ້ ເຊັ່ນ: ຈຳນວນຄົວເຮືອນ, ເນື້ອທີ່ເປັນເຮັກຕາ, ຫຼື ຈຳນວນສັດລ້ຽງ. ສຳລັບສີ ທີ່ນຳໃຊ້ໃນຕາຕະລາງ ໄດ້ສະແດງໃຫ້ເຫັນເຖິງອີກມິຕິໜຶ່ງ ທີ່ເປັນໂຕເລກດັດຖານ. ຍົກຕົວຢ່າງ, ສອງສີທີ່ແບ່ງຮູບວົງກົມເປັນສອງຊີກ ໄດ້ສະແດງໃຫ້ເຫັນເຖິງຈຳນວນຄົວເຮືອນທັງໝົດ (ສີເຫຼືອງ) ແລະ ຈຳນວນຄົວເຮືອນກະສິກຳ (ສີແດງ). ໃນແຜນທີ່ການປູກພືດລົ້ມລຸກ, ເຄິ່ງວົງມົນທັງສອງຊີກໄດ້ສະແດງໃຫ້ເຫັນເຖິງ ການປູກພືດໃນລະດູແລ້ງ ແລະ ລະດູຝົນ.

3. ແຜນທີ່ 6 ຫຼ່ຽມ ສົມທຽບຂໍ້ມູນ ປີ 1999 – 2011 – ແຜນທີ່ 6 ຫຼ່ຽມ ໄດ້ຖືກໃຊ້ ເພື່ອສົມທຽບຂໍ້ມູນການສຳຫຼວດກະສິກຳ ໃນປີ 1999 ແລະ 2011. ໃນປີ 1999 ມີ ທັງໝົດ11,126 ບ້ານ ຢູ່ໃນ ສປປ ລາວ, ຂະນະທີ່ໃນ ປີ 2011 ມີພຽງແຕ່ 8,643 ບ້ານ ເທົ່ານັ້ນ. ຍ້ອນແນວນັ້ນ ການປ່ຽນແປງຈຳນວນບ້ານ (ບ້ານຖືກຍົກຍ້າຍ, ຖືກລວມເຂົ້າກັນ ຫຼື ຖືກແຍກອອກ) ແລະ ປ່ຽນຕົວເລກລະຫັດບ້ານ ຈຶ່ງເກີດມີຂຶ້ນ. ການປ່ຽນແປງນີ້ ໄດ້ຖືກແກ້ໄຂໂດຍການໃຊ້ "ວິທີເລຂາຄະນິດ" ຫຼື "geometric" ຈຶ່ງນຳໄປສູ່ການໃຊ້ຮູບຫຼາຍຫຼ່ຽມ ທີ່ຄືກັນ. ຂໍ້ມູນບ້ານໃນຮູບ 6 ຫຼ່ຽມ ໄດ້ຖືກແຍກອອກ ແລະ ສົມທຽບກັນ ຫຼັງຈາກນັ້ນ.

4. **ແຜນທີ່ 6 ຫຼ່ຽມ – ແຜນທີ່ 6 ຫຼ່ຽມ** ໄດ້ຖືກນຳໃຊ້ເພື່ອເປັນຕົວແທນໃຫ້ໂຕເລກເດັດຖານທີ່ມີຂະໜາດຕ່າງກັນ ເຊັ່ນ ການແຜ່ກະຈາຍຂອງລະເບີດທີ່ຍັງບໍ່ແຕກ ຫຼື ເຂດທີ່ມີທ່າແຮງດ້ານກະສິກຳ ໄດ້ຖືກສະແດງໃຫ້ເຫັນຊັດເຈນຂຶ້ນ. ອີກຮູບແບບໜຶ່ງຂອງແຜນທີ່ 6 ຫຼ່ຽມ ທີ່ຖືກນຳໃຊ້ເພື່ອສະແດງເຖິງການເພີ່ມຂຶ້ນ ຫຼື ຫຼຸດລົງ ເປັນໂຕເລກເດັດຖານ ເຊັ່ນ ຕົວຢ່າງ ກ່ຽວກັບການປ່ຽນແປງ ເນື້ອທີ່ການປູກມັນຕົ້ນໃນລະວ່າງປີ 1999 ແລະ 2011.

1. ແຜນທີ່ສັດສ່ວນຂອງຄົວເຮືອນກະສິກຳ ໃນລະດັບບ້ານ



2. ແຜນທີ່ສັດສ່ວນຂອງຄົວເຮືອນກະສິກຳ ພ້ອມດ້ວຍຮູບສະແດງ ໃນລະດັບແຂວງ



3. ແຜນທີ່ຮູບທິກຫຼຸ່ມ: ສະແດງຂໍ້ມູນບ້ານ ປີ 1999 ແລະ 2011



4. ແຜນທີ່ຮູບທິມຫຼຸ່ມ ປຽບທຽບການປ່ຽນແປງ ລະຫວ່າງປີ 1999 ແລະ 2011



ສະພາບລວມ

ສະພາບລວມ

ການກະສິກຳ ແລະ ເປົ້າໝາຍການພັດທະນາແບບຍືນຍົງໃນ ສປປ ລາວ

ກະສິກຳຖືວ່າມີບົດບາດຕົ້ນຕໍ ອັນເປັນພື້ນຖານຂອງເສດຖະກິດ ແລະ ການພັດທະນາຂອງ ສປປ ລາວ, ໂດຍສະເພາະ ເພື່ອເຂດຊົນນະບົດຂອງປະເທດເປັນສ່ວນໃຫຍ່. ຍ້ອນແນວນັ້ນ ມັນຈຶ່ງກົງກັບເປົ້າໝາຍຂອງການພັດທະນາແບບຍືນຍົງຈຳນວນໜຶ່ງທີ່ນາໆຊາດໄດ້ຕົກລົງເປັນເອກະພາບກັນ. ເປົ້າໝາຍການພັດທະນາແບບຍືນຍົງ ຖືເປັນເຂັມທິດ ແລະ ຈຸດສົມທຽບສຳລັບການພັດທະນາທົ່ວທັງຊີກໂລກໃຕ້. ສປປ ລາວ ກໍຄືກັບຫຼາຍປະເທດ ເຊິ່ງໄດ້ຕັ້ງເປົ້າໝາຍຂອງຕົນເອງຂຶ້ນຈຳນວນໜຶ່ງ ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງໃນປີ 2030 ແລະ ໃນອະນາຄົດຫຼັງຈາກນັ້ນ. ໃນບັນດາເປົ້າໝາຍເຫຼົ່ານັ້ນ ມີຈຳນວນໜຶ່ງທີ່ກ່ຽວພັນກັບການກະສິກຳ ເຊັ່ນ ເປົ້າໝາຍການພັດທະນາແບບຍືນຍົງທີ 1 – ປາສະຈາກຄວາມທຸກຍາກ, ເປົ້າໝາຍທີ 2 ບໍ່ມີຄວາມອຶດຫິວ, ເປົ້າໝາຍທີ 3 ການມີສຸຂະພາບ ແລະ ຄວາມເປັນຢູ່ເຢັນທີ່ດີ, ເປົ້າໝາຍທີ 5 ຄວາມສະເໝີພາບທາງດ້ານບົດບາດຍິງຊາຍ, ເປົ້າໝາຍທີ 10 ຫຼຸດຜ່ອນຄວາມບໍ່ເທົ່າທຽມກັນ, ເປົ້າໝາຍທີ 12 ການມີຄວາມຮັບຜິດຊອບຕໍ່ການບໍລິໂພກ ແລະ ການຜະລິດ, ເປົ້າໝາຍທີ 13 ມາດຕະການຮັບມືຕໍ່ກັບສະພາບອາກາດ ແລະ ເປົ້າໝາຍທີ 15 ຊີວິດບົນຜືນດິນ. ຄວາມເຂົ້າໃຈສະພາບເງື່ອນໄຂປະຈຸບັນຂອງການການກະເສດ ແລະ ທ່າອ່ຽງຫຼັກ ແມ່ນມີຄວາມຈຳເປັນເພື່ອໃຫ້ຜູ້ທີ່ເຮັດໜ້າທີ່ຕັດສິນບັນຫາ, ອົງກອນເພື່ອການພັດທະນາ ແລະ ຊຸມຊົນທີ່ຢູ່ຕາມຊົນນະບົດເພື່ອສາມາດຕັດສິນບັນຫາໄດ້ຢ່າງມີປະສິດທິພາບ, ບົນພື້ນຖານຄວາມເປັນຈິງ ເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ຕັ້ງໄວ້ ໃນ ສປປ ລາວ. ເພື່ອບັນລຸບັນດາເປົ້າໝາຍຕ່າງໆນີ້ໄດ້ ປື້ມແຜນທີ່ສະບັບນີ້ ໄດ້ພະຍາຍາມປະກອບສ່ວນເພື່ອເປັນບ່ອນອີງ, ບໍ່ພຽງແຕ່ໃນລະດັບຊາດ, ແຕ່ຍັງເຮັດໃຫ້ຂໍ້ມູນເຫຼົ່ານີ້ ຖືກນຳໃຊ້ໃນລະດັບທ້ອງຖິ່ນ, ສ້າງເງື່ອນໄຂໃຫ້ແກ່ການຕັດສິນໃຈ ທີ່ເນັ້ນເປົ້າໝາຍການພັດທະນາຢ່າງມີ ປະສິດທິພາບໃນຈຸດທີ່ມີຄວາມຈຳເປັນຫຼາຍກ່ວາ.

ການວິເຄາະຂອງການສຳຫຼວດກະສິກຳ ສອງຄັ້ງທີ່ຜ່ານມາ ໃນປີ 1999 ແລະ ປີ 2011 ໄດ້ສະແດງໃຫ້ ເຫັນເຖິງການປ່ຽນແປງທີ່ສຳຄັນໃນຂະແໜງກະສິກຳໃນໄລຍະເວລາ 12 ປີ. ເຖິງແມ່ນວ່າໂຕເລກຂອງຄົວເຮືອນກະສິກຳຈະເພີ່ມຂຶ້ນ 17%, ແຕ່ການເພີ່ມຂຶ້ນຂອງຄົວເຮືອນທີ່ບໍ່ໄດ້ເຮັດກະສິກຳ ກໍເຫັນວ່າສູງຫຼາຍ (85%), ເຊິ່ງໄດ້ສະແດງໃຫ້ເຫັນເຖິງ ການຫຼຸດລົງຂອງການກະສິກຳໃນພາກເສດຖະກິດໂດຍລວມ.

ນີ້ກໍຍ້ອນເກີດຈາກຂະບວນການຫັນເປັນອຸດສາຫະກຳ ແລະ ການພັດທະນາເປັນຕົວເມືອງພາຍໃນ ແລະ ເຂດອ້ອມແອ້ມບັນດາຕົວເມືອງໃຫຍ່, ບ່ອນທີ່ຫຼາຍຄົວເຮືອນໄດ້ປ່ຽນສະພາບຈາກຄົວເຮືອນກະສິກຳມາເປັນຄົວເຮືອນທີ່ເນັ້ນການຄ້າຂາຍ ນອກພາກກະສິກຳ, ເຮັດໃຫ້ສ່ວນແບ່ງກິດຈະກຳກະສິກຳໃນເສດຖະກິດຄົວເຮືອນໂດຍລວມຫຼຸດລົງຢ່າງຕໍ່ເນື່ອງ. ຢ່າງໄດ້ກໍຕາມ ເກືອບເຄິ່ງໜຶ່ງຂອງຄົວເຮືອນຢູ່ເຂດທີ່ຖືກຈັດເປັນເຂດຕົວເມືອງ ກໍຍັງມີສ່ວນຮ່ວມໃນກິດຈະກຳກະສິກຳຢູ່.

ການຜະລິດ ແລະ ການສົ່ງອອກສິນຄ້າກະສິກຳ

ເຖິງແມ່ນວ່າເນື້ອທີ່ກະສິກຳຂອງ ສປປ ລາວ ຈະເພີ່ມຂຶ້ນ 53% ໃນລະຫວ່າງປີ 1999 ແລະ ປີ 2011, ຄື ຈາກ 976,000 ຮຕ ເປັນ 1,49 ລ້ານ ຮຕ, ປະເທດຍັງມີອັດຕາສ່ວນຂອງກະສິກຳທີ່ຕໍ່າຢູ່ເມື່ອທຽບໃສ່ກັບບັນດາປະເທດເພື່ອນບ້ານ, ສ່ວນຫຼາຍແມ່ນຍ້ອນລັກສະນະພູມີປະເທດຂອງເນື້ອທີ່ດິນ, ຄວາມໜາແໜ້ນດ້ານປະຊາກອນຕໍ່າ, ຍັງມີລະເບີດທີ່ຍັງບໍ່ແຕກ ແລະ ການນຳໃຊ້ປ່າໄມ້ຢ່າງແຜ່ຫຼາຍເພື່ອຊອກຫາອາຫານ ໂດຍຜູ້ທີ່ອາໃສ ໃນຫຼາຍໆເຂດຊົນນະບົດ.

ການເພີ່ມຂຶ້ນຂອງເນື້ອທີ່ດິນກະສິກຳ ແລະ ຜົນພວງຂອງການເຂົ້າເຖິງດິນປູກຝັງ, ໂດຍສະເລ່ຍແລ້ວການຄອບຄອງດິນຕໍ່ຄົວເຮືອນກະສິກຳໄດ້ເພີ່ມຂຶ້ນຈາກ 1.6 ຮຕ ໃນປີ 1999 ເປັນ 2.4 ຮຕ ໃນປີ 2011. ເຖິງຢ່າງໃດກໍຕາມ, ມີພຽງ 1% ຂອງຈຳນວນຄົວເຮືອນ ບໍ່ມີທີ່ດິນທຳກິນ, ແຕ່ຈາກການສົມທຽບຕົວເລກລະຫວ່າງການສຳຫຼວດສອງຄັ້ງພົບວ່າຈຳນວນດັ່ງກ່າວໄດ້ເພີ່ມຂຶ້ນ 3 ເທົ່າຕົວ. ໃນບັນດາຄົວເຮືອນກະສິກຳທີ່ມີດິນທຳກິນ, ໄດ້ສະແດງເຖິງ ຄວາມແຕກຕ່າງທີ່ສຳຄັນໃນການຖືຄອງເນື້ອທີ່ດິນທົ່ວທັງສັງຄົມລາວ. ໃນຂະນະທີ່ຄົວເຮືອນສ່ວນຫຼາຍ (65%) ຖືຄອງທີ່ດິນລະຫວ່າງ 0.5 ແລະ 3 ຮຕ, ຄວາມບໍ່ສົມດຸນ ສ່ວນຫຼາຍແມ່ນພົບເຫັນ ໜຶ່ງສ່ວນສີ່ ໃນກຸ່ມຂອງຄົວເຮືອນກະສິກຳ ທີ່ຖືສິດຄອບຄອງທີ່ດິນກະສິກຳ ຫຼາຍກ່ວາ 3 ຮຕ, ລວມເຂົ້າກັນກວມເຖິງ 60% ຂອງດິນປູກຝັງໃນທົ່ວປະເທດ.

ເຖິງແມ່ນວ່າ ການສຳຫຼວດໄດ້ສະແດງໃຫ້ເຫັນວ່າ ການຜະລິດກະສິກຳສ່ວນຫຼາຍ ມີລັກສະນະຜະລິດເພື່ອບໍລິໂພກເອງ ແທນທີ່ຈະຜະລິດ ເພື່ອຈຸດປະສົງທາງດ້ານການຄ້າ, ຕົວເລກຄົວເຮືອນທີ່ຜະລິດສົ່ງໃຫ້ຕະຫຼາດ ໄດ້ເພີ່ມຂຶ້ນ ຈາກ 1998/99. ການສຳຫຼວດກະສິກຳ ປີ 2011 ໄດ້ສະແດງໃຫ້ເຫັນວ່າ 33% ຂອງຄົວເຮືອນກະສິກຳທັງໝົດ ໃນ ສປປ ລາວ ແມ່ນຜະລິດໃຫ້ຕະຫຼາດເປັນຫຼັກ, ທຽບໃສ່ ປີ 1998/99 ມີພຽງແຕ່ 6% ເທົ່ານັ້ນ. ຄົວເຮືອນກະສິກຳ ຢູ່ເຂດໃຕ້ຂອງ ແຂວງໄຊຍະບູລີ ແລະ ຢູ່ພູພຽງບໍລະເວນເຂດຕາເວັນອອກຂອງແຂວງຈຳປາສັກ ແມ່ນໄດ້ເນັ້ນກະສິກຳເພື່ອສົ່ງໃຫ້ຕະຫຼາດ. ພືດຫຼັກທີ່ປູກຄືສາລີ ໃນແຂວງໄຊຍະບູລີ ແລະ ກາເຟ ໃນເຂດພູພຽງບໍລະເວນ. ການຫັນກະສິກຳ ເປັນທັນສະໄໝ ແລະ (ບາງສ່ວນ) ທີ່ເກີດຈາກການເພີ່ມຂຶ້ນຂອງສະມັດຕະພາບການຜະລິດພາໃຫ້ຂະແໜງກະສິກຳຫັນໄປສູ່ການຜະລິດເປັນສິນຄ້າ ໃນ ສປປ ລາວ ລະຫວ່າງການສຳຫຼວດທັງ 2 ຄັ້ງ. ຊາວກະສິກອນເຮັດການກະເສດແບບທັນສະໄໝຫຼາຍຂຶ້ນ ເມື່ອປຽບທຽບກັບ ການສຳຫຼວດກະສິກຳກ່ອນໜ້ານັ້ນ. ຈຳນວນຄົວເຮືອນກະສິກຳໃຊ້ຝຸ່ນເພີ່ມຂຶ້ນ ຈາກ 29% ເປັນ 42% ຂອງຄົວເຮືອນກະສິກຳທັງໝົດ ທັງໆທີ່ຍັງມີຄວາມແຕກຕ່າງລະຫວ່າງພາກຢູ່. ຄົວເຮືອນກະສິກຳໄດ້ລາຍງານເຖິງການເພີ່ມຂຶ້ນຂອງການນຳໃຊ້ຢາປາບສັດຕູພືດເຊັ່ນກັນ, ແຕ່ມີພຽງ 11% ຂອງຄົວເຮືອນກະສິກຳ ໄດ້ນຳໃຊ້ສານເຄມີດັ່ງກ່າວ ໃນປີ 1999, 18% ໄດ້ເລີ່ມນຳໃຊ້ຢາປາບສັດຕູພືດ ໃນປີ 2011.

ເຂົ້າລາວ ເປັນເຂົ້າທີ່ມີລາຄາແພງ ເມື່ອທຽບໃສ່ກັບຄຸນນະພາບ ແລະ ລາຄາ ກັບປະເທດໃກ້ຄຽງ, ຈຶ່ງເປັນຜົນເຮັດໃຫ້ຄວາມກະຕືລືລົ້ນໃນຜະລິດເຂົ້າເພື່ອສົ່ງອອກມີໜ້ອຍ – ໂດຍບໍ່ໄດ້ຄຳນຶງເຖິງການຫ້າມການສົ່ງອອກເຂົ້າທີ່ເກີດຂຶ້ນໃນໄລຍະດຽວກັນນັ້ນ.

ການສົ່ງອອກຜະລິດຕະພັນກະສິກຳອື່ນໄດ້ມີການຂະຫຍາຍຕົວໃນຫຼາຍປີຜ່ານມາ, ເຊິ່ງກວມເອົາ 10% ຂອງມູນຄ່າ ການສົ່ງອອກທັງໝົດຂອງປະເທດ. ຕັ້ງແຕ່ປີ 1998/99 ກາເຟໄດ້ກາຍເປັນຜະລິດຕະພັນສົ່ງອອກທີ່ສຳຄັນ ຂອງ ສປປ ລາວ, ສາລີ ກໍເຊັ່ນດຽວກັບພືດຊະນິດອື່ນໆ ເປັນອີກແຫຼ່ງຜະລິດຕະພັນກະສິກຳສົ່ງອອກໜຶ່ງ ໃນທົດສະວັດທີ່ຜ່ານມາ. ການຂະຫຍາຍຕົວຂອງການສົ່ງອອກສາລີ – ໂດຍສະເພາະຢູ່ແຂວງໄຊຍະບູລີ ແລະ ຫົວພັນ ແມ່ນຖືກຂັບເຄື່ອນ ໂດຍການເພີ່ມຂຶ້ນຂອງຄວາມຕ້ອງການອາຫານສັດຂອງປະເທດໃກ້ຄຽງ ເຊັ່ນ ໄທ, ຫວຽດນາມ ແລະ ຈີນ.

ການມີເຂົ້າຢ່າງພໍພຽງ ແລະ ການຄໍ້າປະກັນສະບຽງອາຫານ.

ການມີ ແລະ ການຮັກສາ ການຄໍ້າປະກັນສະບຽງອາຫານ ສຳລັບພົນລະເມືອງຂອງຊາດ ແມ່ນບູລິມະສິດສູງສຸດຂອງລັດຖະບານ ແຫ່ງ ສປປ ລາວ ແລະ ເປັນສ່ວນໜຶ່ງຂອງຂະບວນການປ່ຽນແປງດ້ານກະສິກຳ ແລະ ເສດຖະກິດ–ສັງຄົມ, ຊຶ່ງໄດ້ລະບຸໄວ້ໃນຜົນໄດ້ຮັບ 2, ຜົນງານທີ 2 ຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ 8 (NSEDP) 2016–2020, ພ້ອມທັງໃນເປົ້າໝາຍທີ 2 ຂອງເປົ້າໝາຍການພັດທະນາແບບຍືນຍົງ (SDG 2) ທີ່ມີຈຸດປະສົງຢຸດຕິຄວາມອຶດຫິວ, ສຳເລັດການຄໍ້າປະກັນສະບຽງອາຫານ ແລະ ປັບປຸງດ້ານໂພຊະນາການ ພ້ອມທັງ ສົ່ງເສີມກະສິກຳແບບຍືນຍົງ. ໜຶ່ງໃນບັນດາຕົວຊີ້ວັດແຫ່ງຊາດ ເພື່ອວັດແທກຄວາມຄືບໜ້າຕໍ່ກັບເປົ້າໝາຍນີ້ ຄື ຍົກສູງລະບົບການຜະລິດ ແລະ ເພີ່ມທະວີຜະລິດຕະພາບກະສິກຳ. ການຄໍ້າປະກັນສະບຽງອາຫານ ແມ່ນບໍ່ພຽງແຕ່ຂຶ້ນກັບ ການມີອາຫານເທົ່ານັ້ນ ແຕ່ຍັງຕ້ອງສາມາດເຂົ້າເຖິງສະບຽງອາຫານທີ່ເໝາະສົມ, ການນຳໃຊ້ອາຫານທີ່ມີຢູ່ ແລະ ຄວາມໝັ້ນຄົງຂອງການສະໜອງສະບຽງອາຫານ. ຜົນຂອງການສຳຫຼວດໃນປີ 2011 ໄດ້ສະໜອງຂໍ້ມູນບາງຢ່າງ ກ່ຽວກັບບັນຫາດັ່ງກ່າວນີ້ – ໂດຍສະເພາະການສຳຫຼວດຄັ້ງທີໜຶ່ງ. ເນື້ອທີ່ການຜະລິດພືດກະສິກຳຂອງຄົວເຮືອນກະສິກຳລາວ ແລະ ຈຳນວນສັດລ້ຽງຂອງພວກເຂົາ ເປັນຕົວຊີ້ບອກທີ່ດີສຳລັບການມີອາຫານໂດຍລວມ.

ຜົນສຳເລັດອັນສຳຄັນໃນຂະແໜງການກະສິກຳຂອງລາວໃນຊຸມປີ ລະຫວ່າງການສຳຫຼວດທັງສອງຄັ້ງແມ່ນມີການປ່ຽນແປງຈາກປະເທດທີ່ຂາດດຸນດ້ານການຜະລິດເຂົ້າມາເປັນປະເທດທີ່ມີເຂົ້າແຮໄວ້ໂດຍລວມ, ບັນລຸຄວາມຕ້ອງການເຂົ້າຂອງປະເທດ ແລະ ທັງອະນຸຍາດໃຫ້ເພີ່ມການສົ່ງອອກເຂົ້າ. ການເພີ່ມຂຶ້ນທີ່ສຳຄັນໃນເນື້ອທີ່ການຜະລິດເຂົ້າໄຮ່ ແລະ ເຂົ້ານາແມ່ນຈະຖືກນຳສະເໜີ ແລະ ສົນທະນາໃນບົດ C7 ແລະ ໄດ້ສະແດງຢູ່ໃນແຜນທີ່ I ແລະ II. ອີງໃສ່ການສຳຫຼວດສະຖິຕິສຳລັບເຂົ້າ, ບວກກັບຂໍ້ມູນເຊັ່ນຜົນຜະລິດສະເລ່ຍຕາມສະຖິຕິຂອງແຂວງ, ປະຊາກອນທັງໝົດຕາມການສຳຫຼວດສະຖິຕິຄົວເຮືອນ, ການບໍລິໂພກເຂົ້າຕໍ່ວັນ ຕໍ່ຫົວຄົນ ເພື່ອສະໜອງຕອບຕໍ່ຄວາມຕ້ອງການແຄລໍຣີໃນລະດັບຕໍ່າ, ການຜະລິດເຂົ້າໃນທ້ອງຖິ່ນ ແລະ ຄວາມດຸ່ນດ່ຽງການບໍລິໂພກເຂົ້າໃນຂັ້ນບ້ານໄດ້ຖືກນຳເຂົ້າໃນການຄຳນວນ.
ຜົນໄດ້ຮັບ ສະແດງໃນແຜນທີ່ III, ຊີ້ໃຫ້ເຫັນເຖິງເຂດທີ່ຂາດເຂົ້າກິນ ແລະ ເຂດທີ່ມີເຂົ້າແຮໄວ້: ເຂດທົ່ງພຽງພາກໃຕ້ ສ່ວນຫຼາຍ ເປັນເຂດທີ່ມີການຜະລິດເຂົ້າ ເຫຼືອກິນ ຂອງປະເທດ, ສ່ວນພື້ນທີ່ຂາດເຂົ້າກິນໂດຍທຳມະຊາດ ເປັນເຂດຕົວເມືອງ ບ່ອນທີ່ຊາວບ້ານສ່ວນຫຼາຍ ບໍ່ປູກເຂົ້າ ຫຼື ປູກເຂົ້າໜ້ອຍຫຼາຍ ເຊັ່ນຕົວຢ່າງຢູ່ພູພຽງບໍລະເວນ, ເຊິ່ງມີເງື່ອນໄຂ ພູມີອາກາດທີ່ເໝາະສົມສຳລັບການຜະລິດພືດທີ່ມີມູນຄ່າສູງ ແລະ ເພາະສະນັ້ນ ຈຶ່ງເປັນເຂດທີ່ມີການປູກເຂົ້າໜ້ອຍ. ສ່ວນໃຫຍ່ ເຂດເນີນສູງຂອງປະເທດຜະລິດເຂົ້າເຫຼືອ ກິນພຽງນ້ອຍດຽວ ຫຼື ບໍ່ມີເລີຍ.

ແຜນທີ່ IV ສະແດງສ່ວນແບ່ງຂອງຄົວເຮືອນທັງໝົດ ຕໍ່ບ້ານທີ່ຜະລິດເຂົ້າພຽງພໍ ສຳລັບຄວາມຕ້ອງການບໍລິໂພກພາຍໃນ. ໃນຂະນະທີ່ ໂດຍລວມ ໄດ້ສະທ້ອນໃຫ້ເຫັນເຖິງການມີເຂົ້າຢ່າງພຽງພໍ, ແຕ່ແຜນທີ່ສະແດງໃຫ້ເຫັນວ່າ ທັງໆທີ່ໃນເຂດທີ່ມີເຂົ້າເຫຼືອກິນ ຍັງມີຄົວເຮືອນຈຳນວນຫຼາຍ (ຄົວເຮືອນກະສິກຳ ແລະ ນອກພາກກະສິກຳ) ຍັງຂາດເຂົ້າກິນ. ທຳມະດາແລ້ວ, ການມີເຂົ້າກິນໃນທ້ອງຖິ່ນຢ່າງພຽງພໍ ບໍ່ໄດ້ໝາຍຄວາມວ່າ ຈະມີການຄໍ້າປະກັນສະບຽງອາຫານ ສຳລັບທຸກໆຄົວເຮືອນຢູ່ໃນສະຖານທີ່ແຫ່ງນັ້ນ, ໃນຫຼາຍບ້ານທົ່ວເຂດເນີນສູງຂອງລາວ ສ່ວນໃຫຍ່ໄດ້ຜະລິດເຂົ້າພຽງແຕ່ຕອບສະໜອງຄວາມຕ້ອງການຂອງຄົວເຮືອນເທົ່ານັ້ນ. ແຕ່ການມີເຂົ້າກິນຢ່າງພຽງພໍໃນຂັ້ນບ້ານຍັງບໍ່ສາມາດ ຮັບປະກັນໃຫ້ແກ່ຫຼາຍຄົວເຮືອນໃນເຂດນັ້ນໆໄດ້ເທື່ອ ແລະ ຄວາມຕ້ອງການ ແຄລໍຣີ ຂັ້ນຕໍ່າສຸດ ຍັງຕ້ອງໄດ້ຫາຈາກອາຫານອື່ນໆມາເສີມເຊັ່ນ ອາຫານປະເພດກົນຫົວ, ຜັກ ແລະ ອື່ນໆ ທີ່ຜະລິດໃນສວນຄົວ ຫຼື ເກັບຈາກປ່າ. ຄວາມຈິງແລ້ວຄົວເຮືອນທຸກຍາກ ມັກຈະຂາດທຶນຮອນເພື່ອທີ່ຈະຊື້ເຂົ້າຈາກບ້ານໃກ້ຄຽງໄດ້, ຄົວເຮືອນໃນເຂດດັ່ງກ່າວໂດຍລວມ ຂາດເຂົ້າກິນ ມີການຜະລິດກະສິກຳທີ່ຫຼາກຫຼາຍ ແລະ ເພິ່ງພາອາໃສຜະລິດ ຕະພັນຈາກປ່າເພື່ອຄໍ້າປະກັນສະບຽງອາຫານຂອງຄົວເຮືອນ.

ຄວາມທຸກຍາກ ແລະ ທ່າແຮງໃນການກະເສດຂອງຄົວເຮືອນ

ການເຊື່ອມໂຍງຢ່າງໃກ້ຊິດກັບການຄໍ້າປະກັນສະບຽງອາຫານ ຄືຄວາມມັ່ງຄັ້ງ ແລະ ຄວາມທຸກຍາກຂອງຄົວເຮືອນ. ການລຶບລ້າງຄວາມທຸກຍາກໃນທຸກຮູບແບບ ໃນທຸກຫົນແຫ່ງ ຖືເປັນເປົ້າໝາຍອັນດັບໜຶ່ງຂອງການພັດທະນາແບບຍືນຍົງ ໃນວາລະການພັດທະນາຂອງສະຫະປະຊາຊາດ ແລະ ເປັນບູລິມາສິດທີ່ລະບຸໄວ້ໃນແຜນພັດທະນາເສດທະກິດສັງຄົມແຫ່ງຊາດ ຂອງ ສປປ ລາວ.

ນັບຕັ້ງແຕ່ການປະຕິບັດການປະຕິຮູບດ້ານເສດຖະກິດໃນກາງຊຸມປີ 80, ສປປ ລາວ ໄດ້ມີຄວາມຄືບໜ້າທີ່ສຳຄັນໃນການຫຼຸດຜ່ອນຄວາມທຸກຍາກ, ອັດຕາສ່ວນຂອງຜູ້ທຸກຍາກໄດ້ຫຼຸດລົງຈາກ 39% ຂອງປະຊາກອນໃນກາງຊຸມປີ 1990 ມາເປັນ 27.6% ໃນປີ 2010.

ປະມານເຄິ່ງໜຶ່ງຂອງຜູ້ທຸກຍາກໃນປະເທດ ດຳລົງຊີວິດຢູ່ເຂດພູດອຍ ແລະ ຂຶ້ນກັບກະສິກຳ ແລະ ຊັບພະຍາກອນທຳມະຊາດເພື່ອຄວາມຢູ່ລອດ (ປຽບທຽບແຜນທີ່ V). ພື້ນທີ່ເຫຼົ່ານີ້ມັກຈະຖືກຕັດຂາດຈາກເຄືອຂ່າຍເສັ້ນທາງໃນລະດູຝົນ, ແລະ ມີຄວາມອ່ອນໄຫວຕໍ່ກັບໄພພິບັດທຳມະຊາດ, ດັ່ງທີ່ໄດ້ສະແດງຢູ່ໃນແຜນທີ່ A4 ແລະ B9. ປົກກະຕິແລ້ວ, ຄົນທຸກຍາກທີ່ສຸດຂອງກຸ່ມຄົນທຸກຍາກເປັນຄົນຊົນເຜົ່າ ແລະ ບໍ່ສາມາດເຂົ້າເຖິງ ຫຼື ເຂົ້າເຖິງການບໍລິການຂອງລັດຖະບານ ແລະ ທາງດ້ານການເງິນຢ່າງຈຳກັດ.

ເຂົ້າ ເປັນພືດຕົ້ນຕໍສຳລັບຄົວເຮືອນກະສິກຳຂະໜາດນ້ອຍ ສ່ວນໃຫຍ່ເປັນຄົວເຮືອນທຸກຍາກ. ດັ່ງທີ່ໄດ້ສົນທະນາໃນບົດ B6, ສ່ວນຫຼາຍຄົວເຮືອນໃນປະເທດ, ຜະລິດເຂົ້າ ເປັນຕົ້ນຕໍເພື່ອຕອບສະໜອງຄວາມຕ້ອງການດ້ານສະບຽງອາຫານຂອງຄົວເຮືອນ, ແລະ ຜະລິດພືດສິນຄ້າເປັນສຳຮອງ. ດັ່ງນັ້ນ, ຄຳຖາມຄື ທ່າແຮງສຳລັບຊາວກະສິກອນເຫຼົ່ານັ້ນໃນການເພີ່ມລາຍຮັບເພື່ອປັບປຸງຊີວິດການເປັນຢູ່ຖືເປັນອັນສຳຄັນ.


ແຜນທີ່ I
ການປ່ຽນແປງຂອງເນື້ອທີ່ກະສິກຳເຂດເນີນສູງ
ໃນລະຫວ່າງປີ 1999 ແລະ 2011 ໃນລະດັບບ້ານ
> 100 - 424 ຮຕ
> 20 - 100 ຮຕ
20 - -20 ຮຕ
< -20 - -100 ຮຕ
< -100 - -300 ຮຕ


ແຜນທີ່ II
ການປ່ຽນແປງເນື້ອທີ່ການປູກເຂົ້າເຂດທົ່ງພຽງ
ໃນລະຫວ່າງປີ 1999 ແລະ 2011 ໃນລະດັບບ້ານ
> 100 - 1419 ຮຕ
> 20 - 100 ຮຕ
20 - -20 ຮຕ
< -20 - -100 ຮຕ
< -100 - -715 ຮຕ


ແຜນທີ່ III
ຄວາມພຽງພໍຂອງເຂົ້າ ໃນລະດັບບ້ານ
ຄວາມດຸນດ່ຽງລະຫວ່າງຄວາມຕ້ອງການຜົນຜະລິດ
ແລະ ຄວາມຕ້ອງການໃນການບໍລິໂພກຂັ້ນຕ່ຳ
ກກ ຕໍ່ຄົນ ຕໍ່ປີ
> 1000 - 7195
> 500 - 1000
> 200 - 500
> 20 - 200
20 - -20
< - 20 - -100
< - 100 - -146
ເກີນ
ຂາດ


ແຜນທີ່ IV
ອັດຕາສ່ວນຂອງຄົວເຮືອນທີ່ມີເຂົ້າກຸ້ມກິນ
ໃນລະດັບບ້ານ
0 - 25 %
25 - 50 %
50 - 75 %
75 - 90 %
90 - 99 %
99 - 100 %

ຄວາມທຸກຍາກ

ຄວາມທຸກຍາກໃນການປູກພືດທີ່ບໍ່ແມ່ນເຂົ້າໂດຍທົ່ວໄປແມ່ນເປັນຍຸດທະສາດຂອງຄົວເຮືອນເພື່ອຫຼຸດຜ່ອນຄວາມສ່ຽງຂອງການສູນເສຍ ທີ່ເກີດຈາກສັດຕູພືດ ແລະ ຕົວຢ່າງເຊັ່ນ ການເໜັງຕີງຂອງລາຄາຂອງພືດບາງຊະນິດ ແລະ ມັກຈະເປັນທາງອອກຂອງຄວາມທຸກຍາກ ໂດຍຜ່ານການມີລາຍຮັບສູງຈາກການຂາຍພືດທີ່ມີລາຄາສູງ. ຄວາມທຸກຍາກທາງດ້ານກະສິກຳເປັນພື້ນຖານຕໍ່ຄວາມຍືນຍົງຂອງລະບົບກະສິກຳ ແລະ ຊຸມຊົນໃນຊົນນະບົດ ແລະ ຕໍ່ກັບການປ່ຽນແປງທີ່ກ່າວມາ ແລະ ການປ່ຽນແປງອື່ນໆ ລວມທັງການປ່ຽນແປງດ້ານສະພາບອາກາດໂລກ.

ການສຳຫຼວດການກະສິກຳທັງສອງຄັ້ງ ສະແດງໃຫ້ເຫັນເຖິງການປ່ຽນແປງທີ່ກ່ຽວຂ້ອງໃນຮູບແບບການຜະລິດກະສິກຳຂອງຄົວເຮືອນຕະຫຼອດໄລຍະ 12 ປີ. ໃນຂະນະທີ່ມີການເພີ່ມຂຶ້ນຂອງການປູກພືດລົ້ມລຸກໂດຍຊາວກະສິກອນ, ຄວາມທຸກຍາກຂອງພືດຢືນຕົ້ນໄດ້ຫຼຸດລົງຢ່າງຊັດເຈນ (ປຽບທຽບແຜນທີ່ VI ແລະ VII). ຄວາມແຕກຕ່າງລະດັບພາກ ສາມາດເຫັນໄດ້ຈາກແນວໂນ້ມນີ້: ຄວາມທຸກຍາກຂອງພືດລົ້ມລຸກໄດ້ເພີ່ມຂື້ນໃນຫຼາຍໆບ້ານໃນເຂດພາກເໜືອ ແລະ ພາກກາງ ຂອງ ສປປ ລາວ, ເຊິ່ງເຮັດໃຫ້ລະດັບຄວາມທຸກຍາກໄດ້ຫຼຸດລົງຫຼາຍໃນຕົ້ນທົດສະວັດຂອງສະຕະວັດທີ 21. ຢ່າງໃດກໍ່ຕາມ ຄວາມທຸກຍາກດັ່ງກ່າວໄດ້ຫຼຸດລົງ,



ໃນຫຼາຍບ້ານຢູ່ພາກໃຕ້ຂອງ ສປປ ລາວ, ໂດຍສະເພາະ ພາກຕາເວັນອອກຂອງແຂວງສະຫວັນນະເຂດ ແລະ ແຂວງສາລະວັນ, ເຊິ່ງເປັນແຂວງ ທີ່ຍັງມີຄວາມທຸກຍາກສູງ ແລະ ມີຄວາມຄືບໜ້າໜ້ອຍໃນການປັບປຸງຊີວິດການເປັນຢູ່ໃນຊຸມປີທີ່ຜ່ານມາ. ເຂົ້າ ແມ່ນພືດລົ້ມລຸກທີ່ນິຍົມປູກທົ່ວ ສປປ ລາວ ໃນປີ 1999. ຢ່າງໃດກໍ່ຕາມໃນຫຼາຍໆບ້ານຂອງເຂດທີ່ງພຽງພາກເໜືອ ມີການປ່ຽນແປງຈາກການປູກເຂົ້າ ມາເປັນປູກພືດຢືນຕົ້ນຊະນິດອື່ນໆແທນ ທີ່ສາມາດສັງເກດໄດ້ ລະຫວ່າງ ປີ 1999 ແລະ 2011, ໂດຍສະເພາະແມ່ນໃນເຂດໃຕ້ຂອງແຂວງໄຊຍະບູລີ, ລວມທັງ ບາງເຂດທາງພາກເໜືອ, ເຊັ່ນການປູກພືດລົ້ມລຸກທີ່ບໍ່ແມ່ນເຂົ້າເປັນພືນໃຫຍ່ໃນປີ 2011, ສ່ວນໃຫຍ່ແມ່ນມາຈາກການເພີ່ມຂຶ້ນຂອງການປູກສາລີ ແລະ ໝາກເດືອຍ. ໃນທາງກົງກັນຂ້າມ, ສ່ວນຫຼາຍໃນທົ່ວທາງພາກໃຕ້ຂອງລາວ (ຍົກເວັ້ນ ພູພຽງບໍລະເວນ, ບ່ອນທີ່ເຂົ້າ ບໍ່ໄດ້ເປັນພືດຕົ້ນຕໍ), ເຂົ້າໄດ້ກາຍເປັນພືດຫຼັກ ທັງໃນພື້ນທີ່ ທີ່ປູກພືດຍາວນານ.

ການຫຼຸດລົງຂອງຄວາມທຸກຍາກໃນການປູກພືດຢືນຕົ້ນ ສາມາດສັງເກດໄດ້ໃນທົ່ວປະເທດ, ຍົກເວັ້ນ ເຂດທີ່ມີຄວາມທຸກຍາກຕ່ຳຢູ່ແລ້ວໃນປີ 1999, ເຊັ່ນ ໃນແຂວງຫຼວງນ້ຳທາ ແລະ ພູພຽງບໍລະເວນ.

ໂດຍລວມແລ້ວ, ສ່ວນແບ່ງທີ່ດິນກະສິກຳໃນການປູກພືດຢືນຕົ້ນ ໄດ້ຫຼຸດລົງ ປ່ອຍທາງໃຫ້ແກ່ການຂະຫຍາຍຕົວຢ່າງກວ້າງຂວາງຂອງການປູກພືດລົ້ມລຸກ. ຕໍ່ແນວໂນ້ມນີ້ສາມາດສັງເກດໄດ້ຢູ່ທີ່ແຂວງຫຼວງນ້ຳທາ (ສ່ວນໃຫຍ່ເປັນຢາງພາລາ), ເຊັ່ນດຽວກັບເຂດພາກເໜືອ ແລະ ເຂດທາງພາກຕາເວັນອອກຂອງແຂວງບໍ່ແກ້ວ (ຢາງພາລາ) ແລະ ແຂວງຜົ້ງສາລີ (ຢາງພາລາ, ຊາ, ແລະ ໝາກແໜ່ງ) ຕາມລຳດັບ, ບາງສ່ວນຂອງແຂວງອຸດົມໄຊ ແລະ ວຽງຈັນ (ຢາງພາລາ), ເຊັ່ນດຽວກັບໃນເຂດພຽງບໍລະເວນ ແລະ ເຂດອ້ອມແອ້ມ (ກາເຟ), ເຊິ່ງຖືວ່າ ສ່ວນແບ່ງຂອງທີ່ດິນປູກພືດຢືນຕົ້ນ ຕໍ່ກັບເນື້ອທີ່ກະສິກຳທັງໝົດ ໄດ້ເພີ່ມຂຶ້ນຢ່າງໄວວາ.

ການນຳໃຊ້ທີ່ດິນກະສິກຳ ແລະ ຮູບແບບການຜະລິດ

ການສຳຫຼວດກະສິກຳ ໄດ້ສະແດງໃຫ້ເຫັນເຖິງລາຍລະອຽດກ່ຽວກັບການນຳໃຊ້ທີ່ດິນຂອງຄົວເຮືອນກະສິກຳເພື່ອການຜະລິດກະສິກຳ ໂດຍອີງໃສ່ໂຕເລກເນື້ອທີ່ຂອງພືດແຕ່ລະຊະນິດ, ເຊັ່ນດຽວກັນກັບຄວາມສຳຄັນຂອງການລ້ຽງສັດໂດຍອີງຕາມຈຳນວນສັດ ຕໍ່ຄົວເຮືອນ. ເພື່ອໃຫ້ໄດ້ຄວາມສຳຄັນທາງດ້ານເສດຖະກິດຂອງພືດ ແລະ ສັດລ້ຽງຫຼາຍໆຊະນິດໃນອີງເຂດຕ່າງໆຂອງປະເທດ, ຂໍ້ມູນພື້ນຖານ ແລະ ຈຳນວນສັດລ້ຽງຕ້ອງໄດ້ຖືກປ່ຽນເປັນມູນຄ່າທາງດ້ານການຄ້າ. ການນຳໃຊ້ສະຖິຕິການສຳຫຼວດເນື້ອທີ່, ຈຳນວນສັດລ້ຽງ ແລະ ລະດັບການຜະລິດສິນຄ້າຂອງຄົວເຮືອນ, ບວກກັບລະດັບສະຖິຕິຂອງແຂວງໃນດ້ານຜົນຜະລິດສະເລ່ຍ ແລະ ລາຄາຕົ້ນທາງ, ມູນຄ່າການຜະລິດຂອງພືດ ແລະ ສັດລ້ຽງ ແລະ ທິດທາງການຄ້າທົ່ວໄປໄດ້ຖືກນຳມາໄລ່ລຽງໃນຂັ້ນບ້ານ. ຜົນໄດ້ຮັບສະແດງໃຫ້ເຫັນເຖິງທິດຂະຫຍາຍການຜະລິດຂອງຄົວເຮືອນໂດຍລວມ ລະຫວ່າງ ການລ້ຽງສັດ ແລະ ການປູກພືດ, ເຊັ່ນດຽວກັນກັບ ລະດັບການຄ້າຂາຍໃນພາກຕ່າງໆຂອງປະເທດ (ແຜນທີ່ VIII). ໃນຂະນະທີ່ ມີບ້ານຈຳນວນຫຼາຍ ເຮັດການຜະລິດກະສິກຳແບບກຸ້ມຕົນເອງ, ແຕ່ຍັງມີພື້ນທີ່ ທີ່ເຮັດການຜະລິດກະສິກຳເປັນສິນຄ້າ ແລະ ຍັງຕ້ອງໄດ້ເພິ່ງພາອາໄສການລ້ຽງສັດ ດ້ວຍລະບົບການຜະລິດແບບຄົວເຮືອນຢູ່.

ແຜນທີ່ VI



ແຜນທີ່ VII



ແຜນທີ່ VIII



ພາກສະເໜີ

ກ 1 ທັດສະນະທົ່ວໄປຈາກພາບຖ່າຍດາວທຽມ

ແຜນທີ່ນີ້ສະແດງໃຫ້ເຫັນ ພາບຖ່າຍດາວທຽມໃສ່ສີທຳມະຊາດຂອງ ສປປ ລາວ ແລະ ປະເທດອ້ອມຂ້າງ. ພາບເອົາມາຈາກ Google Earth 5.0-historical imagery ໃນທ້າຍລະດູຝົນຂອງປີ 2010, ທີ່ໄດ້ມາຈາກການປັບປຸງຕາມໜ້າພຽງພື້ນທີ່, ຕໍ່ພາບ ແລະ ປັບສີ ຂອງພາບຖ່າຍດາວທຽມ Land_sat-7. ຮູບສະແດງໃຫ້ເຫັນປະເພດການປົກຫຸ້ມທີ່ດິນໂດຍພື້ນຖານ, ຂອບເຂດແຂວງ ແລະ ເມືອງ, ພ້ອມທັງ ແຫຼ່ງນໍ້າ.

ສປປ ລາວ ມີຄຸນລັກຊະນະທາງຊີວະກາຍະພາບທີ່ແບ່ງອອກເປັນສອງເຂດ- ເຂດທົ່ງພຽງລຽບຕາມສາຍແມ່ນໍ້າຂອງ ແລະ ເຂດພູດອຍທາງພາກເໜືອ ແລະ ຕາມຊາຍແດນຫວຽດນາມທາງພາກຕາເວັນອອກ. ປະເທດອຸດົມໄປດ້ວຍຊັບພະຍາກອນທຳມະຊາດ ເຊັ່ນ ແຮ່ທາດ, ນໍ້າ ແລະ ປ່າໄມ້. ພາບນີ້ ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ການປົກຫຸ້ມປ່າໄມ້ໃນປະເທດລາວສູງກ່ວາປະເທດອ້ອມຂ້າງ. ໃນຕອນທ້າຍຂອງລະດູຝົນ, ປະເທດມີສີຂຽວ ສະແດງໃຫ້ເຫັນເຖິງຄວາມອຸດົມສົມບູນໂດຍສະເພາະຢູ່ເຂດພາກເໜືອ ແລະ ຕາມສາຍພູຫຼວງເຂດຊາຍແດນກັບຫວຽດນາມ. ສີຂຽວທີ່ມີຄວາມເຂັ້ມແຕກຕ່າງກັນ ສະແດງໃຫ້ເຫັນເຖິງຄວາມໜາແໜ້ນຂອງພືດ, ບ່ອນທີ່ມີສີຂຽວເຂັ້ມເທົ່າໃດ ຄວາມໜາແໜ້ນຍິ່ງສູງຂຶ້ນເທົ່ານັ້ນ. ສີຂຽວປ່ຽນເປັນສີນໍ້າໝາກກ້ຽງ ໝາຍເຖິງ ດິນກະສິກຳ, ເຂດຊົນລະປະທານ,ເຂດຕົວເມືອງ ແລະ ເຂດຂຸດຄົ້ນແຮ່ທາດ.

ເຖິງວ່າ ດິນກະສິກຳ ຈະກວມເອົາ ພຽງແຕ່ 7.9 ສ່ວນຮ້ອຍຂອງເນື້ອທີ່ທັງໝົດຂອງ ສປປ ລາວ ກໍ່ຕາມ, ແຮງງານທີ່ເຮັດການກະສິກຳພັດກວມເອົາຫຼາຍກວ່າ 75 ສ່ວນຮ້ອຍຂອງແຮງງານທັງໝົດຂອງປະເທດ ແລະ ໄດ້ປະກອບສ່ວນເຂົ້າໃນການເຕີບໂຕຂອງພະລິດຕະພັນພາຍໃນ ເຖິງ 26 ສ່ວນຮ້ອຍ (*FAO*, 2012). ຫຼາຍກວ່າ 60 ສ່ວນຮ້ອຍຂອງດິນກະສິກຳ (ລວມທັງ ພືດຢືນຕົ້ນ, ພືດປະຈຳປີ ແລະ ພື້ນທີ່ທົ່ງຫຍ້າຖາວອນ) ຖືກນຳໃຊ້ເຂົ້າໃນການປູກເຂົ້າ, ຂະນະທີ່ພືດເສດຖະກິດອື່ນໆ ທີ່ສຳຄັນເຊັ່ນ ສາລີ, ກາເຟ, ອ້ອຍ, ມັນຕົ້ນ ແລະ ຕົ້ນໄມ້ອຸດສະຫະກຳ ດັ່ງຢາງພາລາ, ໄມ້ສັກ, ໄມ້ວິກ, ໄມ້ກະຖິນ ແລະ ໄມ້ເກດສະໜາ.

ຄົວເຮືອນທີ່ຢູ່ໃນຕົວເມືອງໄດ້ກວມເອົາ 31 ສ່ວນຮ້ອຍ ແລະ ຄົວເຮືອນທີ່ບໍ່ໄດ້ເຮັດກະສິກຳ ໄດ້ເພີ້ມຂຶ້ນ. ແຕ່ເຖິງຢ່າງໃດກໍ່ຕາມ ເກືອບຮອດເຄິ່ງໜຶ່ງ ຂອງຄົວເຮືອນໃນຕົວເມືອງ ຍັງສືບຕໍ່ເຮັດກະສິກຳ, ແລະ ຍັງມີສ່ວນກ່ຽວພົວພັນກັບຂະແໜງກະສິກຳ.

ສີຟ້າອ່ອນຢູ່ເທິງແຜນທີ່ ແມ່ນແມ່ນໍ້າ, ບໍລິເວນນໍ້າ ແລະ ອ່າງເກັບນໍ້າເຂື່ອນໄຟຟ້ານໍ້າຕົກ. ສປປ ລາວ ຕັ້ງແຕ່ດຶກດຳບັນເປັນຕົ້ນມາ ມີການຕັ້ງສູນກາງທີ່ຢູ່ອາໃສໄກ້ກັບສາຍນໍ້າ, ຄືດັ່ງທີ່ເຫັນ ທີ່ຕັ້ງຂອງຕົວເມືອງໃຫຍ່ ແລະ ສູນກາງເສດຖະກິດໃນປະຈຸບັນ (ນະຄອນຫຼວງວຽງຈັນ, ປາກເຊ, ສະຫວັນນະເຂດ ແລະ ຫຼວງພະບາງ) ລ້ວນແຕ່ຕັ້ງຢູ່ເລາະລຽບຕາມລຳແມ່ນໍ້າຂອງ. ແມ່ນໍ້າສະໜັບສະໜູນດ້ານເສດຖະກິດ ແລະ ການດຳລົງຊີວິດໃນທົ່ວຂົງເຂດລ້ອງນໍ້າ, ເຮັດໜ້າທີ່ເຊື່ອມຕໍ່ປະເທດ ແລະ ພາກພື້ນ ແມ່ນໍ້າຂອງທັງໝົດ. ແມ່ນໍ້າຂອງ ເປັນເສັ້ນທາງການຄ້າ ເຊື່ອມຕໍ່ ລະຫວ່າງ ສປປ ລາວ ກັບບັນດາປະເທດໃກ້ຄຽງໃນພາກພື້ນຜ່ານຂົວ ແລະ ເສັ້ນທາງຄົມມະນາຄົມທາງນໍ້າ; ເປັນແຫຼ່ງຜະລິດພະລັງງານ ແລະ ສ້າງລາຍຮັບໂດຍຜ່ານໂຄງການໄຟຟ້ານໍ້າຕົກ ແລະ ການປະມົງ ເປັນແຫຼ່ງໂປຼຕີນທີ່ໝັ້ນຄົງ, ໄດ້ປະກອບສ່ວນເຂົ້າໃນຄວາມໝັ້ນຄົງດ້ານສະບຽງອາຫານ.

ການເຊື່ອມໂຍງຂອງ ສປປ ລາວ ໃນສະມາຄົມເສດຖະກິດອາຊຽນ ພ້ອມກັບແຮງດຶງ ຈາກການເຕີບໂຕທາງດ້ານເສດຖະກິດ ຂອງບັນດາປະເທດອາຊຽນ ແລະ ປະເທດຈີນ ທີ່ມີຄວາມຕ້ອງການສູງດ້ານຊັບພະຍາກອນທຳມະຊາດຂອງປະເທດ.

ກ 1 ທັດສະນະທົ່ວໄປຈາກພາບຖ່າຍດາວທຽມ



ກ 2 ການຜ່ອນຄາຍ, ພູມອາກາດ, ແລະ ເຄືອຂ່າຍການຄົມມະນາຄົມ

ສປປ ລາວ ຕັ້ງຢູ່ອາຊີຕາເວັນອອກສ່ຽງໃຕ້, ໃຈກາງຂອງແຫຼມອິນດູຈີນ, ຢູ່ເສັ້ນຂະໜານທີ 14 – 23˚ ເໜືອ ແລະ ເສັ້ນແວງທີ 100 – 108˚ ຕາເວັນອອກ. ພື້ນທີ່ ຖືກແບ່ງເປັນສາມປະເພດຕົ້ນຕໍ ຄື: ເຂດເນີນສູງ, ເຂດທົ່ງພຽງ ແລະ ເຂດພູພຽງ. ເຂດເນີນສູງ ຫຼື ເຂດພູພຽງ ກວມປະມານ 75% ຂອງພື້ນທີ່ທົ່ວປະເທດ. ຈຸດສູງທີ່ສຸດ ຄື ພູເບັ້ຍ ຢູ່ທີ່ລະດັບ 2,820 ແມັດ ເໜືອໜ້ານ້ຳທະເລປານກາງຂອງແຂວງຊຽງຂວາງ ແລະ ຈຸດຕ່ຳສຸດ ຄື 70 ແມັດ ຢູ່ຕາມແຄມແມ່ນ້ຳຂອງ ຂອງແຂວງຈຳປາສັກ, ໃກ້ກັບຊາຍແດນ ກຳປູເຈຍ.

ພາກເໜືອຂອງ ສປປ ລາວ ເປັນເຂດພູສູງ. ສາຍພູຫຼວງ ໄດ້ເນັ່ງຍາວເລາະລຽບຕາມພາກຕາເວັນຕົກສ່ຽງເໜືອ ລົງໄປຫາພາກຕາເວັນອອກສ່ຽງໃຕ້ຂອງປະເທດ, ສ່ວນໃຫຍ່ຕາມເຂດຊາຍແດນກັບຫວຽດນາມ. ເຂດພູພຽງ ໂດຍລວມໄດ້ພົບເຫັນຢູ່ແຂວງຊຽງຂວາງ, ແຂວງຄຳມ່ວນ ແລະ ແຂວງຈຳປາສັກ. ບັນດາເຂດທົ່ງພຽງ ກວມເອົາປະມານ 25% ຂອງເນື້ອທີ່ຂອງປະເທດ ແລະ ເລີ້ມຈາກນະຄອນຫລວງວຽງຈັນ ເລາະລຽບຕາມແຄມແມ່ນ້ຳຂອງຈົນເຖິງເຂດໃຕ້ຊາຍແດນກຳປູເຈຍ.

ພູມອາກາດຂອງ ສປປ ລາວ ແມ່ນເລີ້ມຕັ້ງແຕ່ ເຄິ່ງເຂດຮ້ອນ ເຖິງ ເຂດຮ້ອນ. ອີງຕາມລະບົບການຈັດປະເພດພູມອາກາດ ຂອງ Köppen, ສປປ ລາວ ຖືກຈັດ ໃນປະເພດ *Am* (ອາກາດ ມໍລະສຸມເຂດຮ້ອນ), *Aw* (ອາກາດ ມໍລະສຸມເຂດຮ້ອນຊຸ່ມ), ແລະ *Cwa* (ອາກາດ ເຂດຮ້ອນຊຸ່ມ ທີ່ຖືກອິດທິພົນຈາກອາກາດມໍລະສູມເຂດເຄິ່ງຮ້ອນ). ພູມອາກາດຂອງ ສປປ ລາວ ຖືກກຳນົດເປັນສອງລະ ດູ ຄື: ລະດູແລ້ງ ແລະ ລະດູຝົນ. ລະດູແລ້ງ ເລີ່ມຕົ້ນຈາກ ເດືອນພະຈິກ ຈົນເຖິງ ເດືອນເມສາ, ໃນຂະນະທີ່ ລະດູຝົນ ເລີ້ມຈາກເດືອນພຶດສະພາ ຫາ ເດືອນຕຸລາ. ທັງຫ້າເສັ້ນສະແດງພູມອາກາດໃນແຜນທີ່ ໄດ້ຊີ້ໃຫ້ເຫັນເຖິງ ຝົນຕົກ ແລະ ອຸນຫະພູມ ສະເລັ່ຍຂອງແຕ່ລະເດືອນທີ່ເກີດຂຶ້ນໃນບັນດາເຂດຕ່າງໆທົ່ວປະເທດ. ບັນດາເສັ້ນສະແດງນັ້ນ ໄດ້ຊີ້ໃຫ້ເຫັນເຖິງປະລິມານນ້ຳຝົນ ທີ່ເພີ້ມຂຶ້ນໃນລະດູຝົນ ແລະ ຕົກໜັກໃນເຂດອ້ອມແອ້ມປາກເຊ ແລະ ຜົ້ງສາລີ ແບບໃດ. ໃນຂະນະທີ່ສ່ວນໃຫຍ່ ສປປ ລາວ ມີອຸນຫະພູມທີ່ອຸ່ນຕະຫຼອດປີ, ບາງເຂດຂອງຜົ້ງສາລີ ແລະ ຊຳເໜືອ ມີອຸນຫະພູມເຢັນກ່ວາຫຼາຍໃນລະດູແລ້ງ ທຽບໃສ່ພາກຕ່າງໆທົ່ວປະເທດ ຍ້ອນພື້ນທີ່ດັ່ງກ່າວ ຕັ້ງຢູ່ເຂດສູງກ່ວາ.

ແຜນທີ່ ຍັງສະແດງໃຫ້ເຫັນເຄືອຂ່າຍເສັ້ນທາງຄົມມະນາຄົມແຫ່ງຊາດ ແລະ ບັນດາເສັ້ນທາງຫຼວງ. ສປປ ລາວ ເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ, ດັ່ງນັ້ນ ການພັດທະນາເສດຖະກິດຕ້ອງໄດ້ອີງໃສການຄົມມະຂົນສົ່ງທາງບົກ. ໃນສິບປີຜ່ານມານີ້, ມີການຂະຫຍາຍເຄືອຂ່າຍຄົມມະຂົນສົ່ງ ພາໃຫ້ຈຳນວນຍານພາຫະນະໃນທົ່ວປະເທດ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍເປັນເງົາຕາມຕົວ. ຢ່າງໃດກໍ່ຕາມ, ເຂດຫ່າງໄກສອກຫຼີກຍັງມີພາຫະນະໜ້ອຍທີ່ສຸດ ຍ້ອນບໍລິມາດກິດຈະກຳດ້ານເສດຖະກິດ ມີການຂະຫຍາຍຕົວໃນລະດັບຕ່ຳ. ເຖິງວ່າຈະມີການປັບປຸງເຄືອຂ່າຍເສັ້ນທາງຄົມມະນາຄົມໃນທົດສະວັດທີ່ຜ່ານມາກໍ່ຕາມ, ຖະໜົນຫົນທາງຫຼາຍແຫ່ງ ຍັງຢູ່ໃນສະພາບທີ່ບໍ່ດີ. ການຄົມມະນາຄົມທາງນ້ຳເປັນອີກເສັ້ນທາງໜຶ່ງທີ່ສຳຄັນ ສຳລັບການຂົນສົ່ງຂອງ ສປປ ລາວ ແລະ ແມ່ນ້ຳຂອງ ພ້ອມກັບ ແມ່ນ້ຳອູ ເປັນເສັ້ນທາງທຳມະຊາດ ທີ່ສຳຄັນ ສຳລັບການຂົນສົ່ງ ດ້ວຍເຮືອຂະໜາດໃຫຍ່. ທ້າຍສຸດ, ມີສະໜາມບິນ 10 ແຫ່ງ ທີ່ຖືກສ້າງຂຶ້ນຢູ່ ສປປ ລາວ ແລະ ໃນນັ້ນ ສະໜາມບິນສາມແຫ່ງໄດ້ໃຫ້ບໍລິການຖ້ຽວບິນລະຫວ່າງປະເທດ ເຊັ່ນ ສະໜາມບິນວຽງຈັນ, ສະໜາມບິນຫລວງພະບາງ ແລະ ສະໜາມບິນປາກເຊ.


ການແບ່ງເຂດການປົກຄອງ
ເທດສະບານແຂວງ
ຂອບເຂດແຂວງ
ຂອບເຂດເມືອງ
ນ້ຳ
ເສັ້ນທາງ
ເສັ້ນທາງແຫ່ງຊາດ ແລະ ເສັ້ນທາງຫຼັກ
ສະໜາມບິນ
ສະໜາມບິນພາຍໃນ
ສະໜາມບິນສາກົນ
ຄວາມສູງ (ແມັດ ຈາກລະດັບໜ້ານ້ຳທະເລ)
1,750 - 2,820
1,250 - 1,750
750 - 1,250
250 - 750
70 - 250
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຄຳ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0 50 100 150 km

ກ 3 ການແບ່ງເຂດການປົກຄອງ

ສປປ ລາວ ເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ຕັ້ງຢູ່ໃຈກາງຂອງອາຊີຕາເວັນອອກສ່ຽງໃຕ້, ເຊິ່ງມີເນື້ອທີ່ 236,800 ກມ², ມີຊາຍແດນທາງທິດເໜືອ ຕິດກັບຈີນ, ທິດຕາເວັນອອກ ຕິດກັບຫວຽດນາມ, ທິດໃຕ້ ຕິດກັບກຳປູເຈຍ, ທິດຕາເວັນຕົກ ຕິດກັບໄທ ແລະ ທິດຕາເວັນຕົກສ່ຽງເໜືອ ຕິດກັບມຽນມາ.

ແຜນທີ່ນີ້ ສະແດງໃຫ້ເຫັນ ການແບ່ງເຂດການປົກຄອງຂອງ ສປປລາວໃນປີ 2011, ລວມທັງຂອບເຂດແຂວງ ແລະ ຂອບເຂດເມືອງ, ສູນກາງຂອງແຂວງ ແລະ ເມືອງ, ເຂດນໍ້າ, ທາງຫຼວງແຫ່ງຊາດ ແລະ ບັນດາຖະໜົນຫຼັກ. ລະຫັດເມືອງໃນແຜນທີ່ ທີ່ໄດ້ສະແດງໄວ້ທາງຂ້າງລຸ່ມ ເບື້ອງຊ້າຍ ພ້ອມກັບຊື່ຂອງແຕ່ລະເມືອງ. ສປປ ລາວ ຖືກແບ່ງອອກເປັນ 16 ແຂວງ ແລະ 1 ນະຄອນຫຼວງວຽງຈັນ. ແຂວງຖືກແບ່ງອອກ ເປັນເມືອງ, ເຊິ່ງລວມທັງໝົດມີ 143 ເມືອງ, ເປັນການແບ່ງຂັ້ນການປົກຄອງນລະດັບທີ່ສອງ. ເຂດການປົກຄອງຕໍ່າສຸດ ແມ່ນບ້ານ, ລວມທັງໝົດ ມີ 8,643 ບ້ານ.

ຈຳນວນເມືອງ ແລະ ບ້ານ ໄດ້ມີການປ່ຽນແປງ ນັບຕັ້ງແຕ່ການສ້າງຕັ້ງ ສປປ ລາວ. ການປ່ຽນແປງເຫຼົ່ານີ້ ເປັນສ່ວນໜຶ່ງຂອງຂະບວນການຂັບເຄື່ອນຂອງລັດຖະບານ ແຫ່ງ ສປປ ລາວ ທີ່ມີເປົ້າໝາຍປັບປຸງການເຂົ້າເຖິງ ແລະ ໃຫ້ການຄຸ້ມຄອງບໍລິຫານລັດມີປະສິດທິຜົນລວມທັງການພັດທະນາເສດຖະກິດ ສັງຄົມ ແລະ ວັດທະນະທຳທີ່ມີລັກຊະນະຍຸດທະສາດ ແລະ ມີຈຸດສູມໃນການການນຳໃຊ້ແຫຼ່ງທຶນທີ່ມີ ຢ່າງຈຳກັດ. ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ ປີ 2005 ໄດ້ຊີ້ໃຫ້ເຫັນວ່າ ທັງໝົດ ມີ 133 ເມືອງ ແລະ ຫຼາຍກວ່າ 11,000 ບ້ານ. ແຕ່ເນື່ອງຈາກຄວາມພະຍາຍາມຂອງລັດຖະບານໃນປີ 2011, ຈຳນວນເມືອງທັງໝົດໄດ້ເພີ່ມຂຶ້ນມາເປັນ 143 ເມືອງ, ຂະນະທີ່ຈຳນວນບ້ານໄດ້ຫຼຸດລົງເປັນ 8,643 ບ້ານ ສາຍເຫດຈາກການລວມບ້ານ ແລະ ຍົກຍ້າຍບ້ານ. ນະຄອນຫຼວງວຽງຈັນ ທີ່ເຄີຍເປັນສ່ວນໜຶ່ງຂອງແຂວງວຽງຈັນ ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1989. ເຂດພິເສດໄຊສົມບູນ ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1994 ໂດຍໄດ້ໂຮມເອົາບາງເຂດຂອງແຂວງບໍລິຄຳໄຊ, ແຂວງວຽງຈັນ ແລະ ແຂວງຊຽງຂວາງ. ເຂດພິເສດໄຊສົມບູນ ໄດ້ຖືກຍຸບໃນປີ 2006 ແລະ ຫຼາຍເມືອງ ຖືກໂອນໃຫ້ຂຶ້ນກັບແຂວງວຽງຈັນ ແລະ ແຂວງຊຽງຂວາງ. ໃນປີ 2013, ແຂວງໄຊສົມບູນ ໄດ້ຖືກກໍ່ຕັ້ງຂຶ້ນໃໝ່ອີກຄັ້ງ.

ແຂວງທີ່ມີພົນລະເມືອງຫຼາຍທີ່ສຸດ ແມ່ນແຂວງສະຫວັນນະເຂດ ຊຶ່ງມີເນື້ອທີ່ກວ້າງເຖິງ 21,775 ກິໂລຕາແມັດ. ນະຄອນຫຼວງວຽງຈັນ ມີປະຊາກອນຫຼາຍເປັນອັນດັບທີສອງ (820,940 ຄົນ) ແລະ ມີຄວາມໜາແໜ້ນຂອງພົນລະເມືອງສູງທີ່ສຸດ ຄື 180 ຄົນ ຕໍ່ກິໂລຕາແມັດ. ແຂວງເຊກອງ ເປັນແຂວງທີ່ມີປະຊາກອນໜ້ອຍທີ່ສຸດ, ມີພຽງແຕ່ 113,048 ຄົນ ແລະ ມີຄວາມໜາແໜ້ນຂອງພົນລະເມືອງ ພຽງ 11 ຄົນ ຕໍ່ກິໂລຕາແມັດ.

ນະຄອນຫຼວງວຽງຈັນ ໄດ້ເປັນນະຄອນຫຼວງ ຂອງປະເທດ ນັບຕັ້ງແຕ່ສະຕະວັດທີ 16. ເຂດພື້ນທີ່ນະຄອນຫຼວງເປັນທີ່ຕັ້ງຫ້ອງການບໍລິຫານຂອງລັດຖະບານ, ບັນດາສຳນັກງານສະຖານທູດ ແລະ ສຳນັກງານຂອງທຸລະກິດທີ່ສຳຄັນຫຼາຍແຫ່ງ. ເນື່ອງຈາກອັດຕາການຂະຫຍາຍຕົວຂອງຕົວເມືອງສູງ, ພົນລະເມືອງຂອງນະຄອນຫລວງວຽງຈັນໄດ້ເພີ່ມຂຶ້ນຫຼາຍໃນທົດສະວັດທີ່ຜ່ານມາ, ອັດຕາການເພີ່ມຂຶ້ນຂອງພົນລະເມືອງສະເລ່ຍຢູ່ທີ່ 3.1% ຕໍ່ປີ ລະຫວ່າງ ປີ 1985 ແລະ ປີ 2005 (JICA, 2011).

ຂອບເຂດຂອງແຂວງ ແລະ ເມືອງ ບໍ່ໄດ້ສອດຄ່ອງກັບລັກຊະນະພູມສັນຖານທຳມະຊາດ ເຊັ່ນ ແມ່ນໍ້າ, ຫ້ວຍນໍ້າ, ສັນພູ, ຮ່ອມພູ ແລະ ອື່ນໆ. ທັງນີ້ ເນື່ອງຈາກ ຂະບວນການກຳນົດຂອບເຂດຊາຍແດນ ໄດ້ອີງຕາມຫຼັກປະຫວັດຂອງການພົວພັນດ້ານການປົກຄອງ ກັບ ຫຼັກການບໍລິຫານຄຸ້ມຄອງ ແລະ ການຕົກລົງຮ່ວມກັນລະຫວ່າງເມືອງ ແລະ ແຂວງ, ແຕ່ບໍ່ໄດ້ແບ່ງຕາມລັກຊະນະທາງພູມສາດ.

ກ 3 ການແບ່ງເຂດການປົກຄອງ

#	ຊື່ແຂວງ ແລະ ເມືອງ	#	ຊື່ແຂວງ ແລະ ເມືອງ	#	ຊື່ແຂວງ ແລະ ເມືອງ	#	ຊື່ແຂວງ ແລະ ເມືອງ	#	ຊື່ແຂວງ ແລະ ເມືອງ
1	ນະຄອນຫຼວງວຽງຈັນ	5	ບໍ່ແກ້ວ	804	ເງິນ	1101	ປາກຊັນ	1315	ພະລານໄຊ
101	ຈັນທະບູລີ	501	ຫ້ວຍຊາຍ	805	ຊຽງຮ່ອນ	1102	ທ່າພະບາດ	14	ສາລະວັນ
102	ສີໂຄດຕະບອງ	502	ຕົ້ນເຜີ້ງ	806	ພຽງ	1103	ປາກກະດິງ	1401	ສາລະວັນ
103	ໄຊເສດຖາ	503	ເມິງ	807	ປາກລາຍ	1104	ບໍລິຄັນ	1402	ຕະໂອຍ
104	ສີສັດຕະນາກ	504	ຜາອຸດົມ	808	ແກ່ນທ້າວ	1105	ຄຳເກີດ	1403	ຕຸ້ມລານ
105	ນາຊາຍທອງ	505	ປາກທາ	809	ບໍ່ແຕນ	1106	ວຽງທອງ	1404	ລະຄອນເພັງ
106	ໄຊທານີ	6	ຫຼວງພະບາງ	810	ທົ່ງມີໄຊ	1107	ໄຊຈຳພອນ	1405	ວາປີ
107	ຫາດຊາຍຟອງ	601	ຫຼວງພະບາງ	811	ໄຊສະຖານ	12	ຄຳມ່ວນ	1406	ຄົງເຊໂດນ
108	ສັງທອງ	602	ຊຽງເງິນ	9	ຊຽງຂວາງ	1201	ທ່າແຂກ	1407	ເລົ່າງາມ
109	ປາກງື່ມ	603	ນານ	901	ແປກ	1202	ມະຫາໄຊ	1408	ສະມ້ວຍ
2	ຜົ້ງສາລີ	604	ປາກອູ	902	ຄຳ	1203	ໜອງບົກ	15	ເຊກອງ
201	ຜົ້ງສາລີ	605	ນ້ຳບາກ	903	ໜອງແຮດ	1204	ຫີນບູນ	1501	ລະມາມ
202	ໃໝ່	606	ງອຍ	904	ຄູນ	1205	ຍົມມະລາດ	1502	ກະລືມ
203	ຂວາ	607	ປາກແຊງ	905	ໝອກໃໝ່	1206	ບົວລະພາ	1503	ດາກຈຶງ
204	ສຳພັນ	608	ໂພນໄຊ	906	ພູກູດ	1207	ນາກາຍ	1504	ທ່າແຕງ
205	ບຸນເໜືອ	609	ຈອມເພັດ	907	ໂພນໄຊ	1208	ເຊບັ້ງໄຟ	16	ຈຳປາສັກ
206	ຍອດອູ	610	ວຽງຄຳ	908	ທ່າໂທມ	1209	ໄຊບົວທອງ	1601	ປາກເຊ
207	ບຸນໃຕ້	611	ພູຄູນ	10	ວຽງຈັນ	13	ສະຫວັນນະເຂດ	1602	ຊະນະສົມບູນ
3	ຫຼວງນ້ຳທາ	612	ໂພນທອງ	1001	ໂພນໂຮງ	1301	ໄກສອນ ພົມວິຫານ	1603	ບາຈຽງຈະເລີນສຸກ
301	ນ້ຳທາ	7	ຫົວພັນ	1002	ທຸລະຄົມ	1302	ອຸທຸມພອນ	1604	ປາກຊ່ອງ
302	ສິງ	701	ຊຳເໜືອ	1003	ແກ້ວອຸດົມ	1303	ອາດສະພັງທອງ	1605	ປະທຸມພອນ
303	ລອງ	702	ຊຽງຄໍ້	1004	ກາສີ	1304	ພີນ	1606	ໂພນທອງ
304	ວຽງພູຄາ	703	ວຽງທອງ	1005	ວັງວຽງ	1305	ເຊໂປນ	1607	ຈຳປາສັກ
305	ນາແລ	704	ວຽງໄຊ	1006	ເຟືອງ	1306	ນອງ	1608	ສຸຂຸມາ
4	ອຸດົມໄຊ	705	ຫົວເມືອງ	1007	ຊະນະຄາມ	1307	ທ່າປາງທອງ	1609	ມູນລະປະໂມກ
401	ໄຊ	706	ຊຳໃຕ້	1008	ແມດ	1308	ສອງຄອນ	1610	ໂຂງ
402	ລາ	707	ສົບເບົາ	1009	ວຽງຄຳ	1309	ຈຳພອນ	17	ອັດຕະປື
403	ນາໝໍ້	708	ແອດ	1010	ຫີ່ນເຫີບ	1310	ຊົນບູລີ	1701	ໄຊເສດຖາ
404	ງາ	8	ໄຊຍະບູລີ	1011	ຮົ່ມ	1311	ໄຊບູລີ	1702	ສາມັກຄີໄຊ
405	ແບ່ງ	801	ໄຊຍະບູລີ	1012	ໄຊສົມບູນ	1312	ວິລະບູລີ	1703	ສະໜາມໄຊ
406	ຫຸ່ນ	802	ຄອບ	1013	ໝື່ນ	1313	ອາດສະພອນ	1704	ສານໄຊ
407	ປາກແບ່ງ	803	ຫົງສາ	11	ບໍລິຄຳໄຊ	1314	ໄຊພູທອງ	1705	ພູວົງ

ກ 4 ການເຂົ້າເຖິງໝູ່ບ້ານ

ແຜນທີ່ສະແດງໃຫ້ເຫັນ ເສັ້ນທາງເຂົ້າເຖິງໃນລະດັບບ້ານ ຄຽງຄູ່ກັບ ຂອບເຂດແຂວງ, ຂອບເຂດເມືອງ ແລະ ເທດສະບານແຂວງ. ລະອຽດ ສະແດງໃຫ້ເຫັນ ເຂດທີ່ມີການເຂົ້າເຖິງໄດ້ຕະຫຼອດປີ ຄື ເຂດທົ່ງພຽງ ລຽບຕາມເຂດຊາຍແດນ ຕິດກັບປະເທດໄທ. ເຖິງວ່າ ຫຼາຍກ່ວາ 65 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ຈະມີເສັ້ນທາງເຂົ້າເຖິງໄດ້ຕະຫຼອດປີ ກໍ່ຕາມ, ແຕ່ຍັງມີຫຼາຍບ້ານ ທີ່ມີເສັ້ນທາງເຂົ້າເຖິງ ພຽງແຕ່ລະດູແລ້ງ ແລະ ຍິ່ງໄປກວ່ານັ້ນ ບາງບ້ານກໍ່ບໍ່ມີເສັ້ນທາງເຂົ້າເຖິງໄດ້ຕະຫຼອດທັງປີເລີຍ.

ສີແດງ ບົ່ງບອກເຖິງເຂດຫ່າງໄກສອກຫຼີກກ່ວາມໝູ່ ເຊິ່ງ ສ່ວນໃຫຍ່ຢູ່ພາກເໜືອ ແລະ ລຽບຕາມຊາຍແດນ ພາກຕາເວັນອອກ, ໃກ້ກັບບັນດາສາຍພູ ແລະ ໂດຍສະເພາະຢູ່ເຂດພູດອຍຂອງແຂວງຜົ້ງສາລີ. ເຂດເຫຼົ່ານີ້ ຕັ້ງຢູ່ພາກຕາວັນຕົກ ແລະ ພາກຕາວັນຕົກສ່ຽງໃຕ້ ຂອງແຂວງຫຼວງນ້ຳທາ, ພາກຕາວັນຕົກສ່ຽງໃຕ້ ຂອງແຂວງບໍ່ແກ້ວ, ເຂດພາກໃຕ້ ຂອງແຂວງອຸດົມໄຊ, ເຂດພູດອຍ ຂອງແຂວງຫຼວງພະບາງ, ພາກຕາເວັນຕົກສ່ຽງເໜືອ ຂອງແຂວງຫົວພັນ ແລະ ພາກຕາເວັນອອກຂອງແຂວງບໍລິຄຳໄຊ. ເຂດຕາເວັນອອກ ຂອງແຂວງຄຳມ່ວນ, ເຂດຕາເວັນອອກສ່ຽງເໜືອ ຂອງແຂວງເຊກອງ ແລະ ເຂດຕ່າງໆຂອງແຂວງສາລະວັນ ທີ່ມີເສັ້ນຊາຍແດນກັບ ຫວຽດນາມ ແລະ ເຂດພາກໃຕ້ຂອງແຂວງຈຳປາສັກ ການເຂົ້າເຖິງຍັງມີຂໍ້ຫຍຸ້ງຍາກ ເຊັ່ນກັນ. ລັກຊະນະທາງພູມສາດ ຂອງສະຖານເຫຼົ່ານີ້ ມີຂີດຈຳກັດ ຕໍ່ກັບການພັດທະນາເຄືອຂ່າຍ ເສັ້ນທາງຄົມມະນາຄົມຂົນສົ່ງທີ່ໝັ້ນຄົງ. ມັນມີຄວາມສຳຄັນ ທີ່ຈະຕ້ອງກ່າວເຖິງເຂດທີ່ການເຂົ້າເຖິງ ມີຂໍ້ຫຍຸ້ງຍາກ ຍ້ອນເຂດດັ່ງກ່າວ ເປັນເຂດພື້ນທີ່ອະນຸລັກຊີວະນາໆພັນແຫ່ງຊາດ/ປ່າສະຫງວນແຫ່ງຊາດ, ການພັດທະນາພື້ນຖານໂຄງລ່າງ ຈຶ່ງຖືກຄວບຄຸມຢ່າງເຂັ້ມງວດ. ສີສົ້ມ ສະແດງເຖິງພື້ນທີ່ ທີ່ສາມາດ ເຂົ້າເຖິງໄດ້ພຽງແຕ່ໃນລະດູແລ້ງ ເທົ່ານັ້ນ. ບ້ານທີ່ສາມາດເຂົ້າເຖິງໄດ້ບາງລະດູການ ແມ່ນພົບເຫັນໂດຍທົ່ວໄປໃນພາກເໜືອ ແລະ ພາກຕາເວັນອອກຂອງ ສປປ ລາວ ແລະ ຕາມສາຍພູຫຼວງ. ເຂດເຫຼົ່ານີ້ ເປັນເຂດຈຸດສຸມຂອງລັດຖະບານ ສປປ ລາວ ເພື່ອການພັດທະນາພື້ນຖານໂຄງລ່າງ. ສີເຫຼືອງ ເປັນເຂດ ທີ່ສາມາດເຂົ້າເຖິງໄດ້ຕະຫຼອດປີ, ສ່ວນໃຫຍ່ ຕັ້ງຢູ່ພາກຕາເວັນຕົກຂອງປະເທດ, ຕາມເສັ້ນທາງຫລວງ ແລະລຽບຕາມສາຍແມ່ນ້ຳຂອງ. ເສັ້ນທາງເຊື່ອມຕໍ່ໃນເຂດນີ້ ຊ່ວຍອຳນວຍຄວາມສະດວກໃຫ້ແກ່ ການຄ້າກັບປະເທດເພື່ອນບ້ານ ຜ່ານການເຊື່ອມໂຍງເສດຖະກິດ ລະຫວ່າງ ພາກຕາເວັນອອກ–ຕາເວັນຕົກ ແລະ ພາກເໜືອ–ໃຕ້.

ພື້ນທີ່ຫຼາຍກວ່າ 75% ຂອງ ສປປ ລາວ ເປັນພື້ນທີ່ພູດອຍ ແລະ ຂ້ອນຂ້າງອຸດົມສົມບູນໄປດ້ວຍ ແຫຼ່ງຊັບພະຍາກອນນ້ຳ ພ້ອມກັບຫ້ວຍນ້ອຍຫຼາຍສາຍ. ພື້ນທີ່ 90% ຂອງປະເທດ ຕັ້ງຢູ່ໃນອ່າງແມ່ນ້ຳຂອງ ແລະ ປະມານ 25% ຂອງອ່າງແມ່ນ້ຳຂອງ ໄດ້ຢູ່ໃນດິນແດນຂອງ ສປປ ລາວ. (FAO, 2016) ອີງໃສ່ ຍຸດທະສາດການພັດທະນາ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ລະບົບສາຍນ້ຳລຳເຊ ທີ່ໜາແໜ້ນໃນປະເທດ ກາຍເປັນອຸປະສັກທີ່ສຳຄັນ ສຳລັບການພັດທະນາ ເຄືອຂ່າຍເສັ້ນທາງຄົມມະນາຄົມ ຂົນສົ່ງ. ນອກຈາກນັ້ນ, ຄວາມໜາແໜ້ນຂອງປະຊາກອນ ທີ່ຕ່ຳ ແລະ ຄວາມສອກຫຼີກຂອງຫຼາຍໆເຂດ ໄດ້ສ້າງຄວາມກັງວົນ ທີ່ສຳຄັນ ໃຫ້ກັບລັດຖະບານ ເນື່ອງຈາກວ່າ ມັນເປັນອຸປະສັກ ເພື່ອປັບປຸງປະສິດທິພາບທາງດ້ານເສດຖະກິດຂອງການລົງທຶນໃສ່ພື້ນຖານໂຄງລ່າງໃນເຂດເຫຼົ່ານີ້. ຍ້ອນເຫດ ຜົນດັ່ງກ່າວ, ເຂດເຫຼົ່ານີ້ ຈຶ່ງຍັງບໍ່ໄດ້ຖືກຈັດເຂົ້າເປັນບູລິມະສິດທີ່ສຳຄັນເພື່ອການພັດທະນາເສດຖະກິດຂອງລັດຖະບານ ເທື່ອ.

ເນື່ອງຈາກເກີດໄພທຳມະຊາດຢູ່ເລື້ອຍໆ ເຊັ່ນໄພນ້ຳຖ້ວມ, ດິນເຊາະເຈື່ອນ ແລະ ລົມພະຍູ, ການບຳລຸງຮັກສາເຄືອຂ່າຍເສັ້ນທາງຈຳເປັນຕ້ອງໄດ້ເຮັດເປັນປົກກະຕິຕະຫຼອດປີ. ເຖິງວ່າຈະມີຄວາມຈຳເປັນ ດັ່ງກ່າວກໍ່ຕາມ, ງົບປະມານການສ້ອມແປງ ຍັງມີຈຳກັດ, ການມີສ່ວນຮ່ວມໃນກິດຈະກຳບຳລຸງຮັກສາ ກໍ່ຈຳກັດເຊັ່ນກັນ. ດັ່ງນັ້ນ, ໃນໄລຍະເກີດໄພທຳມະຊາດ, ເສັ້ນທາງຫຼາຍສາຍຖືກຕັດຂາດ, ສ້າງຄວາມທ້າທາຍໃນການເຂົ້າໄປໃຫ້ການຊ່ວຍເຫຼືອ.

ມັນເປັນສິ່ງສຳຄັນທີ່ສຸດທີ່ຕ້ອງໄດ້ເນັ້ນວ່າ ແຜນທີ່ນີ້ສະແດງເຖິງຄວາມແຕກຕ່າງຂອງລະດັບການເຂົ້າເຖິງເສັ້ນທາງ, ແຕ່ບໍ່ສາມາດສະແດງເຖິງປະເດັນອື່ນໆ. ຍົກຕົວຢ່າງ, ຜູ້ທີ່ດຳລົງຊີວິດຢູ່ຕາມສາຍແມ່ນ້ຳຂອງ ແລະ ບາງສາຂາຂອງມັນ, ອາດຈະໃຊ້ທາງນ້ຳ ເປັນວິທີການຄົມມະນາຄົມຂົນສົ່ງໄດ້ ແລະ ເຂດຊາຍແດນອາດສາມາດເຊື່ອມຕໍ່ກັບຕະຫຼາດຂອງບັນດາປະເທດໃກ້ຄຽງ ໃນຂະນະທີ່ ຂ້ອນຂ້າງຖືກຕັດຂາດຈາກການບໍລິການຕ່າງໆຂອງຕາໜ່າງຄົມມະນາຄົມຂົນສົ່ງ ແລະ ພື້ນຖານໂຄງລ່າງເສດຖະກິດພາຍໃນປະເທດ.


0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຄຳ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ແບ່ງເຂດການປົກຄອງ
ເທດສະບານແຂວງ
ຂອບເຂດແຂວງ
ຂອບເຂດເມືອງ
ແມ່ນ້ຳ
ເສັ້ນທາງເຂົ້າເຖິງ
ບ້ານທີ່ບໍ່ມີເສັ້ນທາງເຂົ້າເຖິງ
ບ້ານທີ່ມີເສັ້ນທາງເຂົ້າເຖິງໃນລະດູແລ້ງ
ບ້ານທີ່ມີເສັ້ນທາງເຂົ້າເຖິງໃນທັງສອງລະດູ
ບໍ່ມີຄຳຕອບ
ເສັ້ນທາງຫຼວງ ແລະ ເສັ້ນຫຼັກ
0 50 100 150 km

ກ 5 ການເຂົ້າເຖິງຕະຫຼາດ

ຕະຫຼາດ ແມ່ນ ສະຖານທີ່ ທີ່ຜົນຜະລິດ ຖືກນຳເຂົ້າມາສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ. ຢູ່ປະເທດກຳລັງພັດທະນາ ຕະຫຼາດສ້າງໂອກາດໃຫ້ການສ້າງລາຍຮັບ ແລະ ປະກອບສ່ວນເຂົ້າໃນການລຶບລ້າງຄວາມທຸກຍາກ ແລະ ຄວາມອຶດຫິວ. ການເຂົ້າເຖິງຕະຫຼາດທີ່ເໝາະສົມ ເປັນສິ່ງທີ່ສຳຄັນຍິ່ງ ສຳລັບຊາວກະສິກອນ ເພາະວ່າ ຕະຫຼາດໄດ້ເຮັດໃຫ້ພວກເຂົາສາມາດເຂົ້າເຖິງບັນດາປັດໃຈນຳເຂົ້າ ແລະ ການບໍລິການ ທາງກດ້ານກະສິກຳ ພ້ອມທັງ ລຳລຽງຜະລິດຕະພັນກະສິກຳຂອງພວກເຂົາ ເຖິງຜູ້ຊື້ທີ່ມີອຳນາດຊື້.

ແຜນທີ່ນີ້ສະແດງໃຫ້ເຫັນການເຂົ້າເຖິງຕະຫຼາດ ໃນແງ່ຂອງເວລາທີ່ໃຊ້ໃນການເດີນທາງ. ແຖບສີທີ່ປ່ຽນຈາກສີຂຽວ ຫາ ສີແດງ ນັ້ນເປັນການຊີ້ບອກໃຫ້ເຫັນເຖິງເວລາຂອງຫານເດີນທາງຈາກສະຖານທີ່ໃດໜຶ່ງ ໄປຫາຕະຫຼາດທີ່ຢູ່ໃກ້ທີ່ສຸດ. ເຂດພື້ນທີ່ສີຂຽວ ສະແດງໃຫ້ເຫັນການເຂົ້າເຖິງຕະຫຼາດໄດ້ໄວ ແລະ ງ່າຍດາຍ, ຂະນະທີ່ພື້ນທີ່ສີແດງ ຄື ຕ້ອງໄດ້ໃຊ້ເວລາເຖິງ 10 ຊົ່ວໂມງ ເພື່ອເຂົ້າເຖິງຕະຫຼາດທີ່ຢູ່ໃກ້ທີ່ສຸດ. ສະຖານທີ່ຕັ້ງຂອງຕະຫຼາດ ໄດ້ຖືກແບ່ງອອກເປັນສອງປະເພດ ຄື: ຕະຫຼາດຖາວອນ (ສີເຫຼືອງ) ແລະ ຕະຫຼາດຊົ່ວຄາວ (ສີຟ້າ).

ສ່ວນໃຫ່ຍ ທີ່ຕັ້ງຂອງຕະຫຼາດ ຈະຢູ່ໃນເຂດເທດສະບານແຂວງ, ເທດສະບານເມືອງ, ເຂດທີ່ໃກ້ກັບເສັ້ນທາງຫຼວງແຫ່ງຊາດ ແລະ ບັນດາເສັ້ນທາງຫລັກ, ແລະ ເຂດທົ່ງພຽງ, ໂດຍສະເພາະ ໃນເຂດທົ່ງຮາບລຽບຕາມແຄມແມ່ນ້ຳຂອງ. ຕະຫຼາດ ມີຄວາມໜາແໜ້ນສູງສຸດ ແມ່ນ ຢູ່ໃນເຂດນະຄອນຫຼວງວຽງຈັນ. ເຂດພູດອຍ ແລະ ເຂດພື້ນທີ່ ທີ່ມີເສັ້ນທາງເຂົ້າເຖິງຈຳກັດ ເປັນພື້ນທີ່ສີແດງໃນແຜນທີ່, ການເຂົ້າເຖິງຕະຫຼາດມີຄວາມຫຍຸ້ງຍາກຫຼາຍ.

ປະມານ 150 ຫາ 200 ບ້ານ ຕັ້ງຢູ່ໃນເຂດພື້ນທີ່ ທີ່ມີຄວາມຫຍຸ້ງຍາກໃນການເຂົ້າເຖິງຕະຫຼາດ, ເຊິ່ງເປັນເຂດພື້ນທີ່ທີ່ປະຊາຊົນສ່ວນໃຫ່ຍ ທຳການຜະລິດກະສິກຳແບບກູ້ມຕົນເອງ ແລະ ຂາຍຜົນຜະລິດເຂົ້າຕະຫຼາດພຽງບາງຄັ້ງຄາວ ເມື່ອໃດຜົນຜະລິດຫາກເກີນຄວາມຕ້ອງການເທົ່ານັ້ນ.



ການແບ່ງເຂດການປົກຄອງ
ເທດສະບານແຂວງ
ຂອບເຂດແຂວງ
ຂອບເຂດເມືອງ
ນ້ຳ
ເສັ້ນທາງແຫ່ງຊາດ ແລະ ເສັ້ນທາງຫຼັກ
ການເຂົ້າເຖິງຕະຫຼາດ
ຕະຫຼາດຖາວອນ
ຕະຫຼາດຊົ່ວຄາວ
ບ້ານບໍ່ມີຕະຫຼາດ
ເວລາເດີນທາງ ເປັນຊົ່ວໂມງ
> 10
< 1
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0 50 100 150 km

ກ 6 ປະເພດທີ່ດິນຕົ້ນຕໍ

ແຜນທີ່ນີ້ຊີ້ໃຫ້ເຫັນ ພື້ນທີ່ຫຼັກສາມປະເພດທີ່ພົບໃນ ສປປ ລາວ ເຊິ່ງ ໂດຍພື້ນຖານໄດ້ອີງຕາມຄວາມຄ້ອຍຊັນຂອງດິນກະສິກຳ. ພື້ນທີ່ສີຂຽວ ໝາຍເຖິງເຂດທົ່ງພຽງ, ສ່ວນໃຫຍ່ຢູ່ເລາະລຽບຕາມແຄມແມ່ນ້ຳຂອງ. ພື້ນທີ່ສີນ້ຳຕານ ເປັນເຂດເນີນສູງ, ສ່ວນໃຫຍ່ກວມເອົາເຂດພາກເໜືອ ແລະ ພາກຕາເວັນອອກຂອງປະເທດ. ພື້ນທີ່ສີເຫຼືອງ ເປັນເຂດພູພຽງ ຕັ້ງຢູ່ລະຫວ່າງ ເຂດເນີນສູງ ແລະ ເຂດທົ່ງພຽງ.

ລັດຖະບານ ສປປ ລາວ ວາງແຜນການພັດທະນາທີ່ປິ່ນອ້ອມ ສາມປະເພດເຂດພື້ນທີ່ດິນ ຄື: ເຂດທົ່ງພຽງ, ເຂດເນີນສູງ ແລະ ເຂດພູພຽງ. ເຂດທົ່ງພຽງ ເປັນເຂດປູກຝັງທີ່ອາໃສນ້ຳຝົນ ແລະ/ຫຼື ນ້ຳຊົນລະປະທານເລາະລຽບຕາມລຳແມ່ນ້ຳຂອງ ແລະ ສາຂາຂອງມັນ, ເຊິ່ງສ່ວນໃຫຍ່ ມີການປູກພືດເພື່ອການຄ້າເປັນຫຼັກ. ພືດທີ່ປູກທົ່ວໄປບົນພື້ນທີ່ດິນປະເພດນີ້ ແມ່ນ ເຂົ້າ, ສາລີ, ມັນຕົ້ນ, ອ້ອຍ, ຖົ່ວເຫຼືອງ ແລະ ໝາກກ້ວຍ. ເຂດເນີນສູງ ເປັນເຂດທີ່ມັກພົບເຫັນຢູ່ໃນເຂດພູດອຍ ທາງພາກເໜືອ ແລະ ພາກຕາເວັນອອກ, ປະຊາຊົນສ່ວນໃຫຍ່ປະກອບອາຊີບດ້ວຍການປູກເຂົ້າໄຮ່ ແບບເລື່ອນລອຍ, ແບບປະສົມປະສານກະສິກຳປ່າໄມ້ ແລະ ການປູກຕົ້ນໄມ້ອຸດສະຫະກຳ. ລັດຖະບານ ສປປ ລາວ ຖືວ່າ ວິທີການເຮັດໄຮ່ແບບດັ້ງເດີມ ເປັນການທຳລາຍສິ່ງແວດລ້ອມ ແລະ ຄວາມອຸດົມສົມບູນຂອງດິນ, ດ້ວຍເຫດນີ້ ຈຶ່ງມີນະໂຍບາຍຈຳນວນໜຶ່ງ ເພື່ອລຶບລ້າງການເຮັດໄຮ່ແບບເລື່ອນລອຍ, ໂດຍສົ່ງເສີມການເຮັດໄຮ່ແບບຄົງທີ່ແທນ ແລະ ຫຼຸດຜ່ອນເນື້ອທີ່ໄຮ່ເລື່ອນລອຍລົງ. ຢາງພາລາໄດ້ຖືກສະເໜີໃຫ້ເປັນທາງເລືອກ ແທນການເຮັດໄຮ່ເລື່ອນລອຍ ແລະ ໄດ້ຖືກສົ່ງເສີມຢ່າງກວ້າງຂວາງ, ແຕ່ຜົນຮັບຍັງເປັນທີ່ຖືກຖຽງກັນຢູ່. ເຂດພູພຽງ ແລະ ເຂດທີ່ຄວາມຄ້ອຍຊັນ ໄດ້ຖືກນຳໃຊ້ສ່ວນໃຫຍ່ສຳລັບການຜະລິດສາລີ, ໝາກແໜ່ງ, ກາເຟ ແລະ ຊາ.

ຍຸດທະສາດການພັດທະນາກະສິກຳ ແລະ ປ່າໄມ້ ຮອດ 2025 ແລະ ວິໄສທັດ ຮອດ 2030 ໄດ້ເລັງໃສ່ສົ່ງເສີມການຜະລິດເປັນສິນຄ້າ ແລະ ເພີ່ມການສົ່ງອອກຜະລິດຕະພັນກະສິກຳ. ການຜະລິດເຂົ້າເພື່ອການສົ່ງອອກໄດ້ຮັບການສະໜັບສະໜູນເປັນພິເສດຢູ່ເຂດທົ່ງພຽງໃນພາກກາງ ແລະ ພາກໃຕ້ ເຊັ່ນ ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ. ການສົ່ງເສີມປູກກາເຟ ຢູ່ເຂດພູພຽງບໍລະເວນຢູ່ແຂວງຈຳປາສັກ, ສາລະວັນ ແລະ ເຊກອງ ໄດ້ຖືກເອົາໃຈໃສ່ ເຊັ່ນກັນ. ບໍລິມາດຂອງການຜະລິດຊາກໍ່ເພີ່ມຂຶ້ນຢ່າງຊັດເຈນ ຢູ່ເຂດເນີນສູງຂອງແຂວງຜົ້ງສາລີ ແລະ ບັນດາເຂດພູພຽງ ຂອງຊຽງຂວາງ. ທ້າຍສຸດ, ບໍລິມາດສາລີ ຂະໜາດໃຫຍ່ ທີ່ໄດ້ຜະລິດ ແລະ ໄດ້ສົ່ງອອກຈາກ ບໍ່ແກ້ວ, ອຸດົມໄຊ, ໄຊຍະບູລີ, ຊຽງຂວາງ ແລະ ຫົວພັນ ໄປຍັງບັນດາປະເທດໃກ້ຄຽງ ໄດ້ກາຍເປັນໜຶ່ງໃນຜົນສຳເລັດຫຼັກຂອງນະໂຍບາຍການຜະລິດເປັນສິນຄ້າ.

ສິ່ງສຳຄັນ ທີ່ຄວນຄຳນຶງເຖິງ ຄື ຂໍ້ຈຳກັດໃນການຈັດແບ່ງປະເພດໜ້າດິນ ແມ່ນອີງໃສ່ພຽງແຕ່ຂໍ້ມູນພື້ນທີ່, ເພາະວ່າການນຳໃຊ້ທີ່ດິນ ແລະ ບູລິມະສິດ ມີຄວາມແຕກຕ່າງກັນຫຼາຍໃນແຕ່ລະພື້ນທີ່ຂອງປະເທດ.

ກ 6 ປະເພດທີ່ດິນຕົ້ນຕໍ



ພາບລວມດ້ານກະສິກຳ

ຂ 1 ທີ່ດິນກະສິກຳ

ດິນກະສິກຳ ໝາຍເຖິງ ດິນສ່ວນໜຶ່ງຂອງດິນທັງໝົດທົ່ວປະເທດ ທີ່ເປັນດິນເໝາະແກ່ການປູກຝັງ, ຖືກນຳໃຊ້ເຂົ້າໃນການປູກພືດປະຈຳປີ, ປູກພືດຢືນຕົ້ນ ຫຼື ທົ່ງຫຍ້າລ້ຽງສັດຖາວອນ. ລະຫວ່າງ ປີ 1999 ແລະ ປີ 2011 ສປປ ລາວ ມີດິນກະສິກຳທັງໝົດ ເພີ້ມຂຶ້ນ 53 ສ່ວນຮ້ອຍ, ຈາກ 976,000 ຮຕ ເປັນ 1.49 ລ້ານ ຮຕ. ອັດຕາສ່ວນຂອງດິນກະສິກຳ ເພີ້ມຂຶ້ນຈາກ 4.4 ຫາ 7.9 ສ່ວນຮ້ອຍຂອງດິນທັງໝົດທົ່ວປະເທດ.

ເຖິງວ່າຈະມີການເພີ່ມຂຶ້ນ, ສປປ ລາວ ຍັງມີເນື້ອທີ່ດິນກະສິກໍ ຕໍ່າກວ່າປະເທດໃກ້ຄຽງ ເຊັ່ນ ປະເທດກຳປູເຈຍ 31.5% ຂອງເນື້ອທີ່ທັງໝົດຂອງປະເທດເປັນດິນສຳລັບການຜະລິດກະສິກຳ, ປະເທດໄທ 38.7%, ປະເທດມຽນມາ 19% ແລະ ປະເທດຫວຽດນາມ 33.1% (*FAO*, 2014). ອັດຕາສ່ວນທີ່ຕໍ່ານີ້ເກີດຍ້ອນມີພູຜາຫຼາຍ, ຄວາມໜາແໜ້ນປະຊາກອນຕໍ່າ, ແລະ ຂາດທຶນຮອນໃຊ້ໃນການຫັນປ່ຽນເປັນດິນກະສິກຳ ແລະ ນະໂຍບາຍລັດຖະບານກ່ຽວກັບການຮັກສາປ່າໄມ້. ນອກນັ້ນ ລາວຍັງຂາດພື້ນຖານໂຄງລ່າງ, ພ້ອມທັງ ຍັງມີບາງຂໍ້ຈຳກັດຂະຫຍາຍກະສິກຳໄປຍັງບາງເຂດ. ການປະກົດມີລະເບີດທີ່ບໍ່ທັນແຕກ (UXOs) ທີ່ຖືກຖິ້ມໃສ່ໃນລະຫວ່າງການໂຈມຕີທາງອາກາດຂອງສະຫະລັດອາເມລິກາ ຊ່ວງຊຸມປີ 1970 ຍັງເປັນປັດໃຈກີດໜ່ວງໃນຫຼາຍໆເຂດ. ລະເບີດທີ່ບໍ່ທັນແຕກມີຜົນກະທົບຕໍ່ທຸກໆແຂວງທົ່ວປະເທດ ແລະ ພື້ນທີ່ຖືກກະທົບຫຼາຍທີ່ສຸດ ບໍ່ຖືກນຳໃຊ້ຍ້ອນມີຄວາມສ່ຽງຕໍ່ການປູກຝັງ ແລະ ການພັດທະນາ. ການຄຳນວນເນື້ອທີ່ດິນກະສິກຳ ອາດຈະປະເມີນເນື້ອທີ່ໄຮ່ເລື່ອນລອຍ ຕໍ່າເກີນໄປ ຍ້ອນເນື້ອທີ່ປະເຮືອຫຼາຍແຫ່ງ ຖືກຈັດເປັນເນື້ອທີ່ດິນປ່າໄມ້ ໃນການສຳຫຼວດດ້ານການກະສິກຳປີ 2011, ທັງໆທີ່ເປັນສ່ວນໜຶ່ງຂອງເນື້ອທີ່ໄຮ່ ແລະ ໃຊ້ໃນການປູກພືດຕ່າງໆຢູ່ ລວມທັງ ຄວາມຫຼາກຫຼາຍຂອງເຄື່ອງປ່າຂອງດົງ.

ແຜນທີ່ຍັງສະແດງໃຫ້ເຫັນເຖິງ ພື້ນທີ່ທັງໝົດທີ່ມີທ່າແຮງ, ເໝາະສົມ ແຕ່ພັດບໍ່ຖືກນຳໃຊ້ເພື່ອການຜະລິດກະສິກຳ, ແລະ ສົມທຽບກັບເນື້ອທີ່ດິນກະສິກຳທີ່ມີຢູ່. ດັ່ງນັ້ນ, ຄຳວ່າ "ພື້ນທີ່ທີ່ເໝາະສົມສຳລັບການກະສິກຳ" ໝາຍເຖິງ ດິນທີ່ເໝາະສົມກັບການປູກຝັງ ແຕ່ບໍ່ຖືກນຳໃຊ້ເພື່ອປູກຝັງເທື່ອ. ເຂດເຫຼົ່ານີ້ ລວມທັງດິນທີ່ຖືກຜົນກະທົບຈາກລະເບີດທີ່ບໍ່ທັນແຕກ, ປ່າໄມ້ໄຜ່ ແລະ ປະເພດອື່ນໆ ທີ່ບໍ່ໄດ້ນຳໃຊ້ເຂົ້າໃນການປູກຝັງ. ແຜນທີ່ນ້ອຍ (ເພີ່ມເຕີມ) ລະດັບແຂວງ, ເນັ້ນໃຫ້ເຫັນອັດຕາສ່ວນລະຫວ່າງພື້ນທີ່ດິນ ທີ່ຖືກນຳໃຊ້ ແລະ ພື້ນທີ່ດິນ ທີ່ມີທ່າແຮງດ້ານກະສິກຳ.

ພາກເໜືອຂອງ ສປປ ລາວ ມີເນື້ອທີ່ດິນທີ່ມີທ່າແຮງ ເພື່ອການກະສິກຳຂະໜາດໃຫຍ່. ໂດຍສະເພາະຢູ່ແຂວງຜົ້ງສາລີ ແລະ ແຂວງຊຽງຂວາງ, ພື້ນທີ່ ທີ່ຖືກນຳໃຊ້ ກວມເອົາ 25% ແລະ 34% ຂອງພື້ນທີ່ທີ່ມີທ່າແຮງດ້ານການກະສິກຳທັງໝົດ ຕາມລຳດັບ. ອັດຕາສ່ວນທີ່ສູງ ຂອງພື້ນທີ່ທີ່ມີທ່າແຮງສຳລັບການກະສິກຳທັງໝົດ ຢູ່ແຂວງຜົ້ງສາລີ ອາດຈະກ່ຽວຂ້ອງກັບຂອດຈຳກັດການເຂົ້າເຖິງເສັ້ນທາງຄົມມະນາຄົມຂົນສົ່ງ, ຕະຫຼາດ ແລະ ການບໍລິການຂອງລັດຖະບານ. ແຂວງຊຽງຂວາງ ມີເນື້ອທີ່ດິນ ທີ່ຍັງບໍ່ທັນຖືກບຸກເບີກແຕ່ມີທ່າແຮງດ້ານການກະສິກຳ ລວມທັງໝົດມີ 172,000 ເຮັກຕາ. ນີ້ບໍ່ແມ່ນເລື່ອງແປກ ຍ້ອນວ່າລະເບີດທີ່ບໍ່ທັນແຕກຈຳນວນມະຫາສານ, ເປັນອຸປະສັກຕໍ່ການພັດທະນາກະສິກຳຂອງແຂວງ. ບັນດາແຂວງອື່ນໆ ທີ່ໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກ (ເຊັ່ນ: ແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງເຊກອງ) ຍັງມີເນື້ອທີ່ດິນຂະໜາດໃຫຍ່ທີ່ມີທ່າແຮງການກະສິກຳ (171,000, 158,000 ແລະ 60,000 ຮຕ), ນັ້ນບົ່ງບອກເຖິງຄວາມສຳພັນລະຫວ່າງລະເບີດບໍ່ທັນແຕກ ແລະ ພື້ນທີ່ດິນທີ່ມີທ່າແຮງດ້ານການກະສິກຳແຕ່ບໍ່ຖືກນຳໃຊ້.

ກົງກັນຂ້າມ, ໃນແຂວງໄຊຍະບູລີ, ນະຄອນຫຼວງວຽງຈັນ, ຫຼວງນ້ຳທາ, ບໍ່ແກ້ວ ແລະ ຈຳປາສັກ, ທີ່ດິນກະສິກຳມີຢ່າງໜ້ອຍສອງເທົ່າຂອງທີ່ດິນມີທ່າແຮງກະສິກຳທີ່ສ່ວນໃຫຍ່ຖືກນຳໃຊ້ເຂົ້າໃນການຜະລິດເປັນສິນຄ້າ. ທ່າອ່ຽງໄປທາງຜະລິດເປັນສິນຄ້າໃນຂົງເຂດເຫຼົ່ານີ້ອາດຍ້ອນການປະສົມປະສານກັນຢ່າງລົງຕົວ ລະຫວ່າງຄວາມສະດວກທາງດ້ານພູມສາດ, ໂຄງລ່າງພື້ນຖານ ແລະ ການຈັດຕັ້ງ. ເກືອບໝົດທຸກແຂວງທີ່ໄດ້ກ່າວມາຂ້າງເທິງນັ້ນ ມີພື້ນທີ່ກວ້າງຢູ່ເຂດທົ່ງພຽງໃກ້ກັບແມ່ນ້ຳຂອງ ແລະ ສາຂາຂອງມັນ, ເຄືອຄ່າຍເສັ້ນທາງຄົມມະນາຄົມທີ່ດີ, ລະເບີດບໍ່ທັນແຕກມີຈຳນວນໜ້ອຍ ແລະ ຂ້ອນຂ້າງມີລະບົບການພັດທະນາຕະຫຼາດ; ລັກສະນະເຫຼົ່ານີ້ເຮັດໃຫ້ບັນດາແຂວງດັ່ງກ່າວມີຄວາມເໝາະສົມສຳລັບກິດຈະກຳການຜະລິດກະສິກຳເປັນສິນຄ້າ.



ເນື້ອທີ່ມີທ່າແຮງທັງໝົດ
(ເໝາະສົມແຕ່ບໍ່ໄດ້ນຳໃຊ້) ສຳລັບການກະສິກຳ
> 100 - 250 ຮຕ
> 250 - 500 ຮຕ
> 500 - 2500 ຮຕ
> 2500 - 10000 ຮຕ
> 10000 - 25000 ຮຕ
> 25000 - 70000 ຮຕ
ການປຽບທຽບເນື້ອທີ່ດິນກະສິກຳທີ່ໄດ້ນຳໃຊ້
ແລະ ທີ່ມີທ່າແຮງ
ເນື້ອທີ່ໄດ້ນຳໃຊ້
ເນື້ອທີ່ມີທ່າແຮງ
150000 ຮຕ
100000 ຮຕ
50000 ຮຕ
25000 ຮຕ
ຈີນ
ມຽນມາ
ຫວຽດນາມ
ໄທ
ກຳປູເຈຍ
ນະຄອນຫລວງ
ວຽງຈັນ
8000000E
8200000E
8400000E
2000000N
1800000N
1600000N
1400000N
22°00'N
20°00'N
18°00'N
16°00'N
14°00'N
100°00'E
102°00'E
104°00'E
106°00'E
108°00'E
0
50
100
150 km
ເນື້ອທີ່ດິນກະສິກຳທັງໝົດທີ່ໄດ້ນຳໃຊ້ ແລະ ມີທ່າແຮງ
(ຂະໜາດ)ແລະ ສັດສ່ວນຂອງເນື້ອທີ່ດິນກະສິກຳທີ່
ໄດ້ນຳໃຊ້ ແລະ ມີທ່າແຮງ (ສີ) ໃນລະດັບແຂວງ
400000 ຮຕ
200000 ຮຕ
50000 ຮຕ
ເນື້ອທີ່ໄດ້ນຳໃຊ້
ເນື້ອທີ່ມີທ່າແຮງ
ສ່ວນຮ້ອຍຂອງດິນກະສິກຳທັງໝົດ
ທີ່ໄດ້ນຳໃຊ້ໃນລະດັບແຂວງ (17)
> 20 - 35 % (4)
> 35 - 50 % (3)
> 50 - 65 % (2)
> 65 - 80 % (6)
> 80 - 83 % (2)
0
100
200
300 km

ຂ 2 ສິ່ງອຳນວຍຄວາມສະດວກດ້ານຊົນລະປະທານ

ລະບົບຊົນລະປະທານທີ່ມີປະສິດທິພາບ ແມ່ນເປັນສິ່ງຈຳເປັນ ເພື່ອຮັບປະກັນໃຫ້ມີນ້ຳຢ່າງພຽງພໍໃຫ້ແກ່ການພັດທະນາກະສິກຳ ພ້ອມທັງເພື່ອໃຫ້ຂະແໜງການອື່ນໆ ໄດ້ນຳໃຊ້ປະໂຫຍດຮ່ວມກັນ. ຊົນລະກະເສດແມ່ນເຮັດໜ້າທີ່ສຳຄັນໃນການປະກອບສ່ວນຕໍ່ກັບການຄ້ຳປະກັນດ້ານສະບຽງອາຫານ ແລະ ການຫຼຸດຜ່ອນຄວາມທຸກຍາກໃນຂອບເຂດທົ່ວປະເທດ. ສປປ ລາວ ມີແຫຼ່ງສະໜອງນ້ຳຈືດຫຼາຍກວ່າບັນດາປະເທດອ້ອມຂ້າງໃນພາກພື້ນ. ໃນປີ 2012, ສປປ ລາວ ໄດ້ມີປະລິມານນ້ຳຈືດສະເລ່ຍ 53.78 ພັນແມັດກ້ອນຕໍ່ຫົວຄົນ, ເມື່ອທຽບໃສ່ບັນດາປະເທດໃນພາກພື້ນແມ່ນມີພຽງແຕ່ 5–33 ພັນແມັດກ້ອນ ຕໍ່ຫົວຄົນ. ອັດຕາສ່ວນການນຳໃຊ້ນ້ຳຈືດ ກໍຍັງເປັນປະເທດ ທີ່ໃຊ້ໜ້ອຍທີ່ສຸດໃນພາກພື້ນ, ສະແດງໃຫ້ເຫັນວ່າ ສປປ ລາວ ຍັງມີທ່າແຮງຫຼາຍສຳລັບການພັດທະນາລະບົບຊົນລະປະທານ.

ລັດຖະບານຂອງ ສປປ ລາວ ໄດ້ລົງທຶນສາທາລະນະທີ່ສຳຄັນ ໃນລະຫວ່າງກາງຂອງຊຸມປີ 1990 ເພື່ອສະໜັບສະໜູນການຕິດຕັ້ງຈັກສູບນ້ຳຊົນລະປະທານຈຳນວນ 8,000 ໜ່ວຍ ລຽບຕາມແຄມແມ່ນ້ຳຂອງ ແລະ ແມ່ນ້ຳສາຂາຕ່າງໆ ໃນເຂດທົ່ງພຽງຂອງແຂວງວຽງຈັນ, ສະຫວັນນະເຂດ ແລະ ຄຳມ່ວນ. ດັ່ງນັ້ນ ຈຶ່ງເຮັດໃຫ້ເນື້ອທີ່ຊົນລະປະທານໃນທົ່ວປະເທດໄດ້ເພີ່ມຂຶ້ນຈາກ 0.17 ລ້ານ ຮຕ ໃນປີ 1995 ເປັນ 0.41 ລ້ານ ຮຕ ໃນປີ 2011 (*Pavelic et al.*, 2016). ໃນການສຳຫຼວດສະຖິຕິກະສິກຳລາວ ສົກປີ 2010/11, ໄດ້ມີການສອບຖາມຊາວກະສິກອນກ່ຽວກັບການນຳໃຊ້ນ້ຳຊົນລະປະທານເຂົ້າໃນການປູກພືດ ທັງໃນລະດູຝົນ 2010 ແລະ ລະດູແລ້ງ 2010/11 ແລະ ຄຳຕອບທີ່ໄດ້ມາ ຖືກນຳໃຊ້ ເພື່ອປະເມີນອັດຕາສ່ວນຂອງບັນດາບ້ານທີ່ນຳໃຊ້ສິ່ງອຳນວຍຄວາມສະດວກດ້ານການຊົນລະປະທານ.

ແຜນທີ່ນີ້ ສະແດງໃຫ້ເຫັນອັດຕາສ່ວນ ເນື້ອທີ່ດິນກະສິກຳ ທີ່ໄດ້ຮັບນ້ຳຊົນລະປະທານໃນຂັ້ນບ້ານ.ປະມານ 38% ຂອງຈຳນວນບ້ານທັງໝົດ ຍັງບໍ່ມີເນື້ອທີ່ດິນຮັບນ້ຳຊົນລະປະທານ, ຂະນະທີ່ມີຈຳນວນບ້ານຫຼາຍກວ່າເຄິ່ງໜຶ່ງທີ່ມີເນື້ອທີ່ດິນກະສິກຳລະຫວ່າງ 1 ແລະ 40% ໄດ້ນຳໃຊ້ນ້ຳຊົນລະປະທານ. ເນື້ອທີ່ຮັບນ້ຳຊົນລະປະທານສ່ວນໃຫຍ່ແມ່ນຕັ້ງຢູ່ໃນເຂດພາກເໜືອ ແລະ ພາກກາງ ຂອງປະເທດ. ນອກຈາກນີ້, ບ້ານຕ່າງໆພາຍໃນແຂວງຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຫົວພັນ, ໄຊຍະບູລີ ແລະ ແຂວງວຽງຈັນ ສ່ວນໃຫຍ່ ໄດ້ມີສິ່ງອຳນວຍຄວມສະດວກດ້ານຊົນລະປະທານແລ້ວ. ດັ່ງທີ່ໄດ້ສະແດງໃນແຜນວາດເຄິ່ງວົງມົນ, 78% ຂອງບ້ານທັງໝົດ (344 ບ້ານ ຈາກທັງໝົດ 438 ບ້ານ) ທີ່ຢູ່ໃນແຂວງໄຊຍະບູລີ ໄດ້ມີການນຳໃຊ້ລະບົບຊົນລະປະທານແລ້ວ. ກົງກັນຂ້າມ, ມີພຽງ 17% ຂອງຈຳນວນ ບ້ານທັງໝົດ ໃນແຂວງອັດຕະປື ທີ່ມີລະບົບຊົນລະປະທານ, 21% ໃນແຂວງຄຳມ່ວນ ແລະ 27% ໃນແຂວງສະຫວັນນະເຂດ.

ການນຳໃຊ້ລະບົບຊົນລະປະທານໃນ ສປປ ລາວ ແມ່ນຫຼາກຫຼາຍນັບແຕ່ຝາຍນ້ຳລົ້ນຖາວອນຈົນເຖິງອ່າງເກັບນ້ຳ, ສະຖານີຈັກສູບນ້ຳ, ຈັກສູບນ້ຳສ່ວນບຸກຄົນ, ປະຕູນ້ຳ ແລະ ຄູກັນນ້ຳ, ຝາຍປະຖົມປະຖານ ແລະ ຝາຍກວາຍຫີນ. 29% ຂອງລະບົບຊົນລະປະທານ ໃນທົ່ວປະເທດ ແມ່ນຍັງນຳໃຊ້ຝາຍປະຖົມປະຖານ. ຝາຍນ້ຳລົ້ນຖາວອນ ແມ່ນກວມເອົາ 16% ຂອງສິ່ງອຳນວຍຄວາມສະດວກດ້ານຊົນລະປະທານທັງໝົດ ໃນ ສປປ ລາວ, ຂະນະທີ່ ສະຖານີຈັກສູບນ້ຳ ແມ່ນໄດ້ຮັບຄວາມນິຍົມໂດຍສະເພາະໃນເຂດທາງພາກຕາເວັນຕົກຂອງແຂວງຈຳປາສັກ, ຄຳມ່ວນ ແລະ ນະຄອນຫຼວງວຽງຈັນ, ຊຶ່ງກວມເອົາປະມານ 8% ຂອງການນຳໃຊ້ລະບົບຊົນລະປະທານທັງໝົດ. ສ່ວນຝາຍກວາຍຫີນ ກວມເອົາ 7%, ປະຕູນ້ຳ ແລະ ອ່າງເກັບນ້ຳກວມເອົາ 3% ແລະ 4% ຕາມລຳດັບ.

ບໍ່ແມ່ນລະບົບຊົນລະປະທານທັງໝົດຢູ່ໃນສະພາບການນຳໃຊ້ງານທີ່ດີ. ແຜນທີ່ສະແດງໃຫ້ເຫັນວ່າເປັນຫຍັງບັນດາບ້ານຢູ່ເຂດພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ ໄດ້ພົບກັບບັນຫາດ້ານຊົນລະປະທານ. ບັນຫາຫຼັກດ້ານຊົນລະປະທານ ທີ່ຊາວກະສິກອນພົບພໍ້ ບໍ່ພຽງແຕ່ກ່ຽວຂ້ອງກັບການຂາດແຄນສິ່ງອຳນວຍຄວາມສະດວກດ້ານຊົນລະປະທານເທົ່ານັ້ນ ແຕ່ຍັງກ່ຽວພັນກັບຄ່ານຳໃຊ້ນ້ຳຊົນລະປະທານ ທີ່ສູງ ແລະ ຄ່າໃຊ້ຈ່າຍສຳລັບການບຳລຸງຮັກສາລະບົບຊົນລະປະທານນຳອີກ. ໂດຍສະເພາະໃນແຂວງສະຫວັນນະເຂດ, ທີ່ມີອັດຕາສ່ວນສູງ (80–95%) ຂອງບ້ານທີ່ປະສົບກັບບັນຫາກ່ຽວກັບການຊົນລະປະທານໃນຫຼາຍໆເມືອງ.

ເຖິງວ່າ ຈະເປັນປະເທດທີ່ມີຊັບພະຍາກອນນ້ຳຈືດ ແລະ ປະລິມານນ້ຳຝົນຫຼາຍກໍຕາມ, ແຕ່ລະບົບຊົນລະປະທານໃນ ສປປ ລາວ ແມ່ນຍັງມີຂີດຈຳກັດ ແລະ, ໃນບາງເຂດ, ປະສິດທະພາບກໍ່ຍັງຕ່ຳ.

ຂ 2 ສິ່ງອຳນວຍຄວາມສະດວກດ້ານຊົນລະປະທານ



ຂ 3 ການເຮັດໄຮ່ ເລື່ອນລອຍ ແລະ ໝູນວຽນ

ການເຮັດໄຮ່ເລື່ອນລອຍ ໝາຍເຖິງ ການເຮັດການກະເສດ ທີ່ມັກເອີ້ນກັນວ່າ “ເລື່ອນລອຍ” ຫຼື “ກະສິກຳແບບ ຖາງ ແລະ ຈູດ”. ມັນແມ່ນວິທີການປູກພືດແບບໜຶ່ງ ທີ່ຊາວກະສິກອນໄດ້ ຖາກຖາງພື້ນທີ່ຕອນໜຶ່ງ ໂດຍການຕັດຕົ້ນໄມ້ ແລະ ພູ່ມໄມ້ກ່ອນຈະຈູດ. ໂດຍປົກກະຕິແລ້ວ, ພື້ນທີ່ຫຼັງຈາກເກັບກູ້ຜົນຜະລິດແລ້ວ ຈະບໍ່ຖືກນຳໃຊ້ເປັນໄລຍະເວລາຍາວນານພໍສົມຄວນເພື່ອໃຫ້ພືດໄດ້ຮັບການຟື້ນຟູ. ເມື່ອພື້ນທີ່ໄດ້ຮັບການຟື້ນຟູແລ້ວ, ພື້ນທີ່ດັ່ງກ່າວກໍ່ຖືກຖາງແລ້ວນຳໃຊ້ສຳລັບການປູກພືດອີກ, ແຕ່ກໍ່ບໍ່ສະເໝີໄປ. ເຖິງວ່າໄດ້ມີການປະຕິບັດກັນມາໄດ້ຫຼາຍສັດຕະວັດແລ້ວກໍຕາມ, ໂດຍສະເພາະຢູ່ອາຊີຕາເວັນອອກສຽງໃຕ້ ຍັງໄດ້ມີການຖົກຖຽງກັນ ກ່ຽວກັບຄວາມຍືນຍົງຂອງການເຮັດໄຮ່ແບບເລື່ອນລອຍນີ້ຢູ່. ລັດຖະບານເຫັນວ່າ ການເຮັດໄຮ່ເລື່ອນລອຍ ແມ່ນການຜະລິດແບບປະຖົມປະຖານ ທີ່ໃຫ້ການຕອບແທນ ແລະ ຜົນຜະລິດຕໍ່າ, ການນຳໃຊ້ພື້ນທີ່ ແລະ ຊັບພະຍາກອນມະນຸດບໍ່ມີປະສິດຕິພາບ, ແລະ ເປັນການທຳລາຍປ່າໄມ້. ດ້ວຍເຫດນັ້ນ, ໃນກອງປະຊຸມສຳມະນາປ່າໄມ້ແຫ່ງຊາດ ປີ 1989, ລັດຖະບານ ຈຶ່ງໄດ້ເລັງໃສ່ຫຼຸດຜ່ອນການເຮັດໄຮ່ເລື່ອນລອຍ ແລະ ຄວບຄຸມການເຮັດການຜະລິດຂອງບັນດາໝູ່ບ້ານທີ່ຢູ່ເຂດພູດອຍ ໂດຍການຈັດສັນທີ່ດິນປ່າໄມ້. ໃນຕົ້ນຊຸມປີ 1990, ໂຄງການຈັດສັນທີ່ດິນ ແລະ ພື້ນທີ່ປ່າໄມ້ໄດ້ກາຍເປັນກົນໄກໜຶ່ງທີ່ໝັ້ນຄົງ ເພື່ອຈະກ້າວໄປເຖິງການລຶບລ້າງການເຮັດໄຮ່ເລື່ອນລອຍ (*Fujita and Phanvilay*, 2008). ໃນອີກດ້ານໜຶ່ງ, ລັດຖະບານ ໄດ້ສົ່ງເສີມເຮັດການຜະລິດແບບໝູນວຽນໃນພື້ນທີ່ 3 ຕອນທີ່ໄດ້ຈັດສັນໃຫ້ ທີ່ມີຮອບວຽນການນຳໃຊ້ພື້ນທີ່ທີ່ສັ້ນ. ການເຮັດໄຮ່ແບບໝູນວຽນໄດ້ຖືກຮັບຮູ້ໃຫ້ເປັນຮູບແບບການຜະລິດທີ່ມີຄວາມຍືນຍົງ.

ແຜນທີ່ສະແດງໃຫ້ເຫັນບັນດາບ້ານທີ່ໄດ້ດຳເນີນການຜະລິດແບບເລື່ອນລອຍ, ແບບໝູນວຽນ ຫຼື ທັງສອງຮູບແບບ. ເຄື່ອງໝາຍຈໍ້າເມັດໃນແຜນທີ່ ສະແດງໃຫ້ເຫັນວ່າ ການເຮັດໄຮ່ເລື່ອນລອຍ ແລະ ໄຮ່ໝູນວຽນ ແມ່ນຍັງຄົງປະຕິບັດຢູ່ທົ່ວທຸກພາກຂອງປະເທດເຂດທີ່ຍັງມີການປະຕິບັດຫຼາຍແມ່ນບັນດາບ້ານເຂດພູດອຍຢູ່ແຂວງພາກເໜືອຂອງລາວ ແລະ ຢູ່ໃນພື້ນທີ່ພູລຽບຕາມຊາຍແດນຫວຽດນາມ. ທີ່ຕັ້ງພູມສັນຖານ ແລະ ການຕິດຕາມຂອງບັນດາອຳນາດການປົກຄອງທ້ອງຖິ່ນ ໄດ້ເຮັດໃຫ້ຮູບແບບການຜະລິດກະສິກຳມີການປັບປ່ຽນໄປຕາມນະໂຍບາຍຂອງລັດ.

ຢູ່ເຂດພາກເໜືອຂອງປະເທດ, ແຂວງ ຜົ້ງສາລີ ມີຈຳນວນຫຼາຍບ້ານທີ່ເຮັດໄຮ່ເລື່ອນລອຍ. ແຂວງ ດັ່ງກ່າວແມ່ນແຂວງຫ່າງໄກສອກຫຼີກກວ່າໝູ່ຂອງປະເທດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ອີງຕາມແຜນທີ່ມີພຽງແຕ່ 34 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດທີ່ມີເສັ້ນທາງເຂົ້າເຖິງຕະຫຼອດປີ, ເປັນທີ່ສັງເກດໄດ້ວ່າ ການມີ ເສັ້ນທາງເຂົ້າເຖິງບ້ານມີຄວາມສຳພັນ ກັບການເຮັດໄຮ່ເລື່ອຍລອຍ, ເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງ ຈະມີອັດຕາສ່ວນບ້ານທີ່ເຮັດໄຮ່ເລື່ອນລອຍສູງ. ຢູ່ເຂດພາກໃຕ້, ແຂວງເຊກອງ ກໍ່ເຊັ່ນດຽວກັນ ມີອັດຕາສ່ວນບ້ານທີ່ມີເສັ້ນທາງເຂົ້າເຖິງຕະຫຼອດປີ ຕໍ່າ ແລະ ກໍມີຫຼາຍບ້ານທີ່ເຮັດໄຮ່ເລື່ອນລອຍ. ການເຮັດໄຮ່ເລື່ອນລອຍກໍຍັງຄົງປະຕິບັດຢ່າງແຜ່ຫຼາຍຢູ່ພາກຕາເວັນຕົກສຽງເໜືອຂອງແຂວງຫຼວງນໍ້າທາ ແລະ ພາກຕາເວັນອອກສຽງເໜືອຂອງແຂວງຫົວພັນ. ຊາວກະສິກອນຢູ່ແຂວງຜົ້ງສາລີ, ອຸດົມໄຊ, ຫຼວງພະບາງ, ຊຽງຂວາງ ແລະ ຄຳມ່ວນ ແມ່ນນິຍົມການເຮັດໄຮ່ແບບໝູນວຽນ ຫຼາຍກວ່າ ແບບເລື່ອນລອຍ, ການເຮັດໄຮ່ໃນຮູບແບບນີ້ອາດກ່ຽວພັນເຖິງຄວາມບໍ່ສົມດູນ ຂອງສັດສ່ວນກຸ່ມຊົນເຜົ່າຫຼັກ ທີ່ອາໃສ່ຢູ່ບັນດາແຂວງເຫຼົ່ານັ້ນ.

ຂ 3 ການເຮັດ ໄຮ່ເລື່ອນລອຍ ແລະ ໝູນວຽນ



ຂ 4 ຈຳນວນປະຊາກອນທີ່ເຮັດກະສິກຳ

ກະສິກຳ ເປັນກິດຈະກຳຕົ້ນຕໍສຳລັບເສດຖະກິດຂອງປະຊາຊົນລາວ. ມັນກວມເອົາ ປະມານ 75% ຂອງແຮງງານທັງໝົດ ແລະ ປະກອບສ່ວນເຖິງ 25,5% ຂອງ ລວມຍອດຜະລິດຕະພັນພາຍໃນ (*FAO*, 2010). ປະຊາກອນທີ່ເຮັດກະສິກຳເພດຍິງກວມເອົາຫຼາຍກວ່າເຄິ່ງໜຶ່ງຂອງກິດຈະກຳການຜະລິດກະສິກຳທັງໝົດ.

ຄົວເຮືອນກະສິກຳ ເປັນຄົວເຮືອນທີ່ເຮັດການຜະລິດ ໃນ 200 ຕາແມັດ ຫຼື ຫຼາຍກວ່ານັ້ນ ບໍ່ວ່າໃນລະດູຝົນ ຫຼື ລະດູແລ້ງ. ຄົວເຮືອນກະສິກຳມີຂະໜາດສະເລ່ຍ 5.7 ຄົນ, ອັດຕາສ່ວນລະຫວ່າງເພດໃນລະດັບຊາດ (ຈຳນວນຜູ້ຊາຍ ຕໍ່ ແມ່ຍິງ 100 ຄົນ) ແມ່ນ 101.1. ສ່ວນໃຫຍ່ ຄົວເຮືອນ (65%) ມີທີ່ດິນ ລະຫວ່າງ 0.5 ແລະ 2.99 ຮຕ. ອັດຕາສ່ວນຄົວເຮືອນເກືອບເຖິງ 27% ມີທີ່ດິນ 3 ຮຕ ແລະ ສູງກວ່າ ແລະ ກວມເອົາ 58% ຂອງເນື້ອທີ່ດິນກະສິກຳທົ່ວປະເທດ. ຄົວເຮືອນກະສິກຳທີ່ມີທີ່ດິນຫຼາຍມັກຈະມີຂະໜາດຂອງຄົວເຮືອນທີ່ໃຫຍ່.

ແຜນທີ່ສະແດງໃຫ້ເຫັນເຖິງ ສ່ວນແບ່ງຂອງຄົວເຮືອນກະສິກຳໃນລະດັບບ້ານ. ສີຂຽວ ຍິ່ງເຂັ້ມຂົ້ນເທົ່າໃດ, ນັ້ນ ໝາຍເຖິງອັດຕາສ່ວນຂອງຄົວເຮືອນກະສິກຳໃນໝູ່ບ້ານຍິ່ງສູງຂຶ້ນເທົ່ານັ້ນ. ຢູ່ພາກເໜືອ, ພາກຕາເວັນອອກສ່ຽງເໜືອ ແລະ ພາກຕາເວັນອອກສ່ຽງໃຕ້, ພິເສດ ມີອັດຕາສ່ວນຂອງຄົວເຮືອນທີ່ເປັນຄົວເຮືອນກະສິກຳສູງ. ໃນທາງກົງກັນຂ້າມ ແລະ ເປັນທີ່ຄາດຫວັງໄວ້, ໃນເຂດຊານເມືອງຈຳນວນຄົວເຮືອນມີທ່າອ່ຽງຢຶດອາຊີບນອກພາກກະສິກຳຫຼາຍຂຶ້ນ. ຫຼາຍກວ່າ 34% (2,956 ບ້ານ) ຂອງບ້ານທັງໝົດທີ່ມີອັດຕາສ່ວນຄົວເຮືອນກະສິກຳ ເກີນ 99%, ໃນຂະນະທີ່ 67.7% ຂອງບ້ານທັງໝົດ (5,851 ບ້ານ) ມີສ່ວນແບ່ງຂອງຄົວເຮືອນກະສິກຳ ເກີນ 90%. ຕົວເລກສະຖິຕິ ສະທ້ອນເຖິງຄວາມສຳຄັນຂອງພາກກະສິກຳໃນປະເທດ.

ແຜນທີ່ນ້ອຍ (ເພີ້ມເຕີ້ມ) ລະດັບແຂວງ ສະແດງໃຫ້ເຫັນວ່າ ລະຫວ່າງ 90% ແລະ 96% ຂອງຄົວເຮືອນຢູ່ແຂວງໄຊຍະບູລີ, ແຂວງຜົ້ງສາລີ ແລະ ແຂວງຫົວພັນ ເຮັດການຜະລິດກະສິກຳ. ປະມານ 80 ຫາ 90% ຂອງຄົວເຮືອນ ຢູ່ແຂວງບໍ່ແກ້ວ, ແຂວງຫຼວງນໍ້າທາ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື, ເປັນຄົວເຮືອນກະສິກຳ. ຢູ່ນະຄອນຫຼວງວຽງຈັນ, ເປັນເຂດທີ່ມີການຂະຫຍາຍຕົວເປັນຕົວເມືອງສູງສຸດ ຂອງປະເທດ, ມີພຽງແຕ່ 32% ຂອງຄົວເຮືອນທັງໝົດ ຍັງຖືວ່າເປັນຄົວເຮືອນກະສິກຳ. ອັດຕາສ່ວນຄົວເຮືອນ ກະສິກຳໃນແຂວງອື່ນໆມີປະມານ 55% ຫາ 80%.

ລວມມີ 79% (108,600 ຄົວເຮືອນ) ຂອງຄົວເຮືອນມັງໝົດໃນແຂວງສະຫວັນນະເຂດ (137,300 ຄົວເຮືອນ) ເປັນຄົວເຮືອນກະສິກຳ, ຊຶ່ງຖືວ່າ ແຂວງສະຫລັນນະເຂດມີຈຳນວນຄົວເຮືອນທີ່ເຮັດການຜະລິດກະສິກຳຕົວຈິງ ສູງສຸດ. ກົງກັນຂ້າມ, ແຂວງເຊກອງ ມີພຽງແຕ່ 12,900 ຄົວເຮືອນເທົ່ານັ້ນທີ່ເຮັດການຜະລິດກະສິກຳ. ຢູ່ແຂວງຜົ້ງສາລີ ມີ 28,100 ຄົນ (96%) ຂອງຈຳນວນທັງໝົດ 29,200 ຄົວເຮືອນ, ເປັນຄົວເຮືອນກະສິກຳ, ເຮັດໃຫ້ແຂວງມີສ່ວນກ່ຽວຂ້ອງກັບການກະສິກຳສູງທີ່ສຸດຂອງປະເທດ.

ໃນທຸກໆບ້ານຂອງ ສປປ ລາວ ຢ່າງໜ້ອຍປະກົດມີໜຶ່ງຄົວເຮືອນກະສິກຳ, ຍົກເວັ້ນ ສີ່ສິບບ້ານເທົ່ານັ້ນທີ່ບໍ່ມີຄົວເຮືອນກະສິກຳ. ບ້ານເຫຼົ່ານີ້ ຕັ້ງຢູ່ໃນເຂດຕົວເມືອງ ລວມທັງໃນເຂດອ້ອມແອ້ມໜອງ ແລະ ອ່າງເກັບນໍ້າ, ບ່ອນທີຄົວເຮືອນ ເພິ່ງພາການປະມົງ ຫລື ລ້ຽງສັດນໍ້າ ເພື່ອການດຳລົງຊີວິດຂອງເຂົາເຈົ້າ.

ຕາຕະລາງ 1: ຈຳນວນຄົວເຮືອນທັງໝົດ, ຈຳນວນຄົວເຮືອນກະສິກຳທັງໝົດ ແລະ ສ່ວນແບ່ງຂອງຄົວເຮືອນ ກະສິກຳ ຕໍ່ກັບຄົວເຮືອນ ທັງໝົດ ປີ 1999 ແລະ 2011

ແຂວງ	ຈຳນວນຄົວເຮືອນ 1999	ຈຳນວນຄົວເຮືອນ 2011	ຈຳນວນຄົວເຮືອນ ກະສິກຳ 1999	ຈຳນວນຄົວເຮືອນ ກະສິກຳ 2011	ສ່ວນແບ່ງຄົວເຮືອນ ກະສິກຳ 1999	ສ່ວນແບ່ງຄົວເຮືອນ ກະສິກຳ 2011
ນະຄອນຫຼວງວຽງຈັນ	97,000	132,000	48,600	42,800	50.1	32.4
ຜົ້ງສາລີ	25,600	29,200	24,400	28,100	95.3	96.2
ຫຼວງນໍ້າທາ	21,400	29,200	19,800	26,200	92.5	89.7
ອຸດົມໄຊ	35,800	48,300	33,400	44,600	93.3	92.3
ບໍ່ແກ້ວ	20,800	28,500	18,800	24,800	90.4	87.0
ຫຼວງພະບາງ	62,000	72,800	55,700	59,200	89.8	81.3
ຫົວພັນ	38,500	45,700	36,900	42,200	95.8	92.3
ໄຊຍະບູລີ	52,300	68,300	49,400	63,000	94.5	92.2
ຊຽງຂວາງ	30,900	40,300	28,100	36,200	90.9	89.8
ວຽງຈັນ	50,200	80,800	43,700	62,400	87.1	77.2
ບໍລິຄຳໄຊ	29,600	43,300	26,500	35,000	89.5	80.8
ຄຳມ່ວນ	52,400	65,000	43,600	51,100	83.2	78.6
ສະຫວັນນະເຂດ	111,800	137,300	95,400	108,600	85.3	79.1
ສະລາວັນ	45,400	55,300	41,300	50,000	91.0	90.4
ເຊກອງ	10,500	15,000	9,700	12,900	92.4	86.0
ຈຳປາສັກ	89,400	105,700	70,200	75,400	78.5	71.3
ອັດຕະປື	16,400	22,700	14,800	19,100	90.2	84.1
ລວມທັງໝົດ	**790,000**	**1,019,400**	**660,300**	**781,600**	**83.6**	**76.7**

ຂ 4 ຈຳນວນປະຊາກອນທີ່ເຮັດກະສິກຳ



ຂ 5 ພື້ນທີ່ດິນກະສິກຳ ທີ່ຖືກຜົນກະທົບຈາກລະເບີດ ທີ່ບໍ່ທັນແຕກ

ຕໍ່ຫົວຄົນ, ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດໃສ່ຫຼາຍທີ່ສຸດໃນໂລກ. ເຖິງວ່າ ທັງ 17 ແຂວງ ຂອງລາວໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກກໍ່ຕາມ, ເຂດທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ຄື ເຂດທີ່ຕັ້ງຢູ່ຕາມສາຍພູຫຼວງ ໃກ້ກັບຊາຍແດນຫວຽດນາມ. ໃນໄລຍະສົງຄາມອິນດູຈີນຄັ້ງທີສອງ (1964–1973), ລະເບີດຫຼາຍກວ່າ 2 ລ້ານໂຕນ ໄດ້ຖືກຖິ້ມລົງໃສ່ລາວ. ການຖິ້ມລະເບີດໄດ້ເປັນສ່ວນໜຶ່ງຂອງ ສົງຄາມລັບຂອງສະຫະລັດອາເມລິກາໃນລາວເພື່ອສະໜັບສະໜູນລັດຖະບານຣາດຊະອານາຈັກລາວ ຕໍ່ຕ້ານກັບປະເທດລາວ, ແລະ ເພື່ອສ້າງອຸປະສັກໃຫ້ກັບ "ເສັ້ນທາງໂຮ້ຈິມິນ". ເຂດດັ່ງກ່າວນີ້ ຖືກຖິ້ມລະ ເບີດໃສ່ຢ່າງໜາແໜ້ນທີ່ສຸດ ຍ້ອນຢູ່ໃກ້ກັບ"ເສັ້ນທາງໂຮ້ຈິມິນ", ເຊິ່ງເປັນເສັ້ນທາງລຳລຽງຂອງກອງທັບ ຫວຽດນາມເພື່ອສະໜັບສະໜູນກອງກຳລັງທະຫານຄອມມູນິດທີ່ລຸກຮື້ຂຶ້ນໃນຫວຽດນາມໃຕ້.

ແຜນທີ່ນີ້ສະແດງໃຫ້ເຫັນເນື້ອທີ່ດິນກະສິກຳ (ເປັນ ຮຕ) ທີ່ໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ຢູ່ໃນບ້ານ, ເມືອງ ແລະ ແຂວງ. ການໂຈມຕີຖິ້ມລະເບີດດັ່ງກ່າວ ໄດ້ເຮັດຫຼາຍບ້ານຖືກທຳລາຍ ແລະ ເຮັດໃຫ້ ພົນລະເຮືອນຫຼາຍພັນຄົນເສຍຊີວິດໃນປາງສົງຄາມ. ນອກຈາກນັ້ນ, ຄາດວ່າ ລະເບີດບອມບີ ຈຳນວນ 270 ລ້ານລູກ ໄດ້ຖືກຖິ້ມລົງ, ໃນນັ້ນ 30% ບໍ່ເຮັດວຽກ ແລະ ຍັງຄົງບໍ່ແຕກນະສະຖານທີ່ແຫ່ງນັ້ນ. ນັບແຕ່ນັ້ນມາ, ລະເບີດບໍ່ທັນແຕກເຫຼົ່ານັ້ນ ໄດ້ເຂັ່ນຂ້າ, ສ້າງບາດແຜ ແລະ ສ້າງຄວາມພິການໃຫ້ຈຳນວນຫຼາຍກວ່າ 50,000 ຄົນ ນັບຕັ້ງແຕ່ປີ 1964 ຫາ ປີ 2008. ປະຈຸບັນ, ລະເບີດບໍ່ທັນແຕກ ຍັງສືບຕໍ່ເຮັດໃຫ້ເກີດມີ ການບາດເຈັບ ແລະ ເຂັ່ນຂ້າປະຊາຊົນ, ໃນຂະນະດຽວກັນນັ້ນ ເປັນການກີດໜ່ວງການພັດທະນາເສດ ຖະກິດ – ສັງຄົມ ແລະ ການຄ້ຳປະກັນດ້ານສະບຽງອາຫານ ໃນເຂດທີ່ຖືກກະທົບ (*UXO-NRA*, 2014).

ແຂວງຊຽງຂວາງ ເປັນແຂວງທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ຫຼາຍທີ່ສຸດ ທັງໃນຈຳນວນເດັດຖານ ແລະ ໃນອັດຕາສ່ວນຂອງພື້ນທີ່ ທີ່ໄດ້ຮັບຜົນກະທົບທັງໝົດ. ລວມມີເນື້ອທີ່ດິນກະສິກຳ 53,900 ຮຕ (ປະມານ 90% ຂອງເນື້ອທີ່ກະສິກຳທັງໝົດຂອງແຂວງ) ຍັງມີລະເບີດບໍ່ທັນແຕກຝັງຢູ່. ພື້ນທີ່ດິນກະສິ ກຳທີ່ໄດ້ຮັບຜົນກະທົບຕົວຈິງ ໃນແຂວງສະຫວັນນະເຂດ ແລະ ແຂວງສາລະວັນ ຕໍ່ຈາກແຂວງຊຽງຂວາງ, ລວມມີ 27,000 ຮຕ ແລະ 24,100 ຮຕ, ຕາມລຳດັບ. ເຖິງແມ່ນວ່າ ພື້ນທີ່ຈະນ້ອຍກວ່າກໍ່ຕາມ, ດິນກະ ສິກຳທີ່ຖືກຜົນກະທົບໃນແຂວງເຊກອງ ແລະ ແຂວງຄຳມ່ວນ ຈາກລະເບີດບໍ່ທັນແຕກ ລວມກັນຫຼາຍກວ່າ 25 ສ່ວນຮ້ອຍຂອງຈຳນວນທັງໝົດ.

ອີງຕາມແຜນການພັດທະນາເສດຖະກິດ – ສັງຄົມ ແຫ່ງຊາດ (UXO Lao, 2013), ສະແດງໃຫ້ເຫັນ ເຖິງຄວາມສຳພັນກັນລະຫວ່າງ ລະເບີດບໍ່ທັນແຕກ ແລະ ຄວາມທຸກຍາກ. ລະເບີດບໍ່ທັນແຕກ ຈຳກັດການ ຜະລິດກະສິກຳພ້ອມທັງທຸກປະເພດແຜນງານພັດທະນາ, ຈາກການກໍ່ສ້າງພື້ນຖານໂຄງລ່າງ ໄປເຖິງ ການພັດທະນາການທ່ອງທ່ຽວ. ປະຈູບັນ, ລັດຖະບານແຫ່ງ ສປປ ລາວ, ໄດ້ໃຫ້ການສະໜັບສະໜູນ ຈາກລັດຖະບານ ແລະ ອົງການຈັດຕັ້ງສາກົນຕ່າງໆ, ກຳລັງພະຍາຍາມທຳລາຍລະເບີດບໍ່ທັນແຕກເພື່ອເຮັດ ໃຫ້ເຂດທີ່ຖືກຜົນກະທົບຈາກລະເບີດບໍ່ທັນແຕກມີອະນາຄົດອັນສົດໃສກ່ວາ.

ຂ 5 ພື້ນທີ່ດິນກະສິກຳ ທີ່ຖືກຜົນກະທົບຈາກລະເບີດ ທີ່ບໍ່ທັນແຕກ



ຂ 6 ສັດສ່ວນຂອງຕະຫຼາດ ຕໍ່ກັບການເຮັດກະສິກຳເພື່ອກຸ້ມກິນ

ປະມານ 259,000 ຄົວເຮືອນກະສິກຳ (33% ຂອງຄົວເຮືອນກະສິກຳທັງໝົດ ໃນ ສປປ ລາວ) ຜະລິດເພື່ອສະໜອງຕະຫຼາດເປັນຫຼັກ ເມື່ອທຽບໃສ່ ສົກປີ 1998/99 ມີພຽງແຕ່ 6% ຂອງຄົວເຮືອນກະສິກຳທັງໝົດເທົ່ານັ້ນ (*ACO*, 2012). ເຂົ້າ ເປັນພືດທີ່ປູກເປັນຫຼັກ ກວມເອົາ 70% ຂອງເນື້ອທີ່ການຜະລິດກະສິກຳທັງໝົດ. ພືດສຳຄັນອື່ນໆ ແມ່ນ ສາລີ, ກາເຟ, ອ້ອຍ, ມັນຕົ້ນ, ກ້ວຍ ແລະ ພືດໄມ້ຢືນຕົ້ນອຸດສາຫະກຳ (ເຊັ່ນ ຢາງພາລາ, ຕົ້ນວິກ ແລະ ຕົ້ນກະຖິນ).

ແຜນທີ່ນີ້ ສະແດງໃຫ້ເຫັນອັດຕາສ່ວນຂອງຄົວເຮືອນກະສິກຳ ທີ່ຜະລິດເພື່ອສະໜອງຕະຫຼາດ ແລະ ເພື່ອກຸ້ມກິນໃນຂັ້ນບ້ານ. ຢູ່ຕອນໃຕ້ຂອງແຂວງໄຊຍະບູລີ ແລະ ເຂດພູພຽງບໍລະເວນ ພາກຕາເວັນອອກຂອງແຂວງຈຳປາສັກ ມີການຜະລິດກະສິກຳເພື່ອສະໜອງຕະຫຼາດຢ່າງແຂງແຮງ. ຕາມທີ່ສະແດງໃນແຜນທີ່ເພີ່ມເຕີມ ຢູ່ທາງລຸ່ມເບື້ອງຊ້າຍ, ແຂວງໄຊຍະບູລີ ເປັນແຂວງດຽວໃນ ສປປ ລາວ ທີ່ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຄົວເຮືອນທັງໝົດເຮັດການຜະລິດກະສິກຳເພື່ອສະໜອງຕະຫຼາດ. ຢູ່ແຂວງໄຊຍະບູລີ, ສາລີແມ່ນພືດທີ່ພົ້ນເດັ່ນອັນດັບໜຶ່ງ ຮອງລົງມາແມ່ນ ຝ້າຍ, ຖົ່ວດິນ, ໝາກເດືອຍ ແລະ ຖົ່ວດຳ. ຢູ່ເຂດພູພຽງບໍລະເວນ ສ່ວນໃຫຍ່ ແມ່ນສຸມໃສ່ການປູກກາເຟ ແລະ ຮອງລົງມາກໍ່ແມ່ນ ໝາກແໜ່ງ. ໃນເຂດສຳຄັນອື່ນໆທີ່ຜະລິດກະສິກຳເພື່ອການຄ້າແມ່ນພົບເຫັນຢູ່ທາງໃຕ້ຂອງແຂວງຫຼວງພະບາງ, ພາກຕາເວັນຕົກຂອງແຂວງຜົ້ງສາລີ ແລະ ໃຈກາງຂອງ ແຂວງອຸດົມໄຊ. ໃນທັງ 3 ແຂວງນີ້ ຫຼາຍກວ່າ 25% ຂອງຄົວເຮືອນກະສິກຳແມ່ນຜະລິດເພື່ອຂາຍເປັນສິນຄ້າ.

ດັ່ງທີ່ ຮູບວົງກົມພາບໃຫຍ່ທີ່ສຸດໃນແຜນທີ່ນ້ອຍສະແດງໃຫ້ເຫັນວ່າ ແຂວງສະຫວັນນະເຂດ ມີຈຳນວນຄົວເຮືອນທີ່ເຮັດການຜະລິດກະສິກຳ ສູງທີ່ສຸດ, ຊຶ່ງ ຫຼາຍກວ່າ 75% ແມ່ນຜະລິດເພື່ອກຸ້ມກິນ. ຢູ່ແຂວງອັດຕະປື, ຫຼາຍກວ່າ 85% ຂອງຄົວເຮືອນກະສິກຳ ແມ່ນຜະລິດເພື່ອກຸ້ມກິນ, ເຮັດໃຫ້ແຂວງອັດຕະປືເປັນແຂວງທີ່ຜະລິດກະສິກຳ ເພື່ອການຕະຫຼາດ ໜ້ອຍທີ່ສຸດ ໃນ ສປປ ລາວ. ສ່ວນແຂວງຄຳມ່ວນແມ່ນມີຫຼາຍກວ່າ 80% ຂອງຄົວເຮືອນກະສິກຳ ຜະລິດເພື່ອກຸ້ມກິນ. ເສັ້ນສະແດງ 1 ໃຫ້ລາຍລະອຽດຂອງການຜະລິດກະສິກຳເພື່ອສະໜອງຕະຫຼາດເປັນຫຼັກ ໃນປີ 1999 ແລະ 2011 ໃນແຕ່ລະແຂວງ.

ເຖິງວ່າ ສ່ວນໃຫຍ່ຂອງຊາວກະສິກຳລາວ ຍັງແມ່ນຜູ້ຜະລິດເພື່ອກຸ້ມກິນ, ແຕ່ເມື່ອສົມທຽບໃສ່ການສຳຫຼວດໃນປີ 1998/99 ເຫັນວ່າ ສປປ ລາວ ກຳລັງມີການຫັນປ່ຽນດ້ານກະສິກຳທີ່ສຳຄັນ, ຈາກການຜະລິດກະສິກຳເພື່ອກຸ້ມກິນມາເປັນການຜະລິດເພື່ອການຄ້າເພີ່ມຂຶ້ນເລື້ອຍໆ.

ເສັ້ນສະແດງ 1: ອັດຕາສ່ວນຂອງການຜະລິດກະສິກຳເພື່ອສະໜອງໃຫ້ຕະຫຼາດເປັນຫຼັກ ໃນປີ 1999 ແລະ 2011 ໃນແຕ່ລະແຂວງ.



ຂ 6 ສັດສ່ວນຂອງຕະຫຼາດ ຕໍ່ກັບການເຮັດກະສິກຳເພື່ອກຸ້ມກິນ



ຂ 7 ຄ່າແຮງງານແບ່ງຕາມເພດ ແລະ ຫົວໜ້າຄອບຄົວ

ຄຽງຄູ່ກັບການປະຕິບັດວຽກບ້ານການເຮືອນເປັນເວລາຫຼາຍຊົ່ວໂມງ, ແມ່ຍິງຍັງປະກອບສ່ວນໃນຫຼາຍໆ ກິດຈະກຳຂອງວຽກງານກະສິກຳເພື່ອຄ້ຳປະກັນໃຫ້ຄອບຄົວມີສະບຽງອາຫານ ແລະ ມີລາຍຮັບ. ເຖິງແມ່ນວ່າ ແມ່ຍິງເປັນຜູ້ປະກອບສ່ວນຫຼັກໃນຂະແໜງການກະສິກຳ, ເນື່ອງຈາກຂາດຂໍ້ມູນທາງດ້ານ ສະຖິຕິແຍກເພດ ເຮັດໃຫ້ການປະກອບສ່ວນຂອງເຂົາເຈົ້າ ສ່ວນຫຼາຍບໍ່ປະກົດເຫັນ ແລະ ສ່ວນໃຫຍ່ຈຶ່ງຖືກປະເມີນທາງດ້ານ ເສດຖະກິດຕ່ຳເກີນຈິງ. ຄວາມສະເໝີພາບທາງດ້ານຍິງ–ຊາຍ ແມ່ນບູລິມະສິດໜຶ່ງຂອງລັດຖະບານ ສປປ ລາວ, ທີ່ສົ່ງເສີມຄວາມເທົ່າທຽມກັນລະຫວ່າງ ຍິງ ແລະ ຊາຍ ໃນທົ່ວທຸກຂະແໜງການ. ມັນເປັນວັດຖຸປະ ສົງຫຼັກຂອງການພັດທະນາທີ່ຍືນຍົງ ເພື່ອປັບປຸງຊີວິດການເປັນຢູ່ ແລະ ມາດຕາຖານຊີວິດຂອງປະຊາຊົນ (ADB ແລະ the World Bank, 2012).

ໃນພາກການກະເສດ ຄວາມກັງວົນກ່ຽວກັບບົດບາດຍິງ–ຊາຍ ແມ່ນໄດ້ບັນຈຸເຂົ້າໃນຫຼາຍແຜນງານ ແລະ ໂຄງການສະເພາະທີ່ມີມາດຕະຖານຈຳນວນໜຶ່ງ. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ພັດທະນານະໂຍບາຍໜຶ່ງ ເພື່ອຄວາມກ້າວໜ້າຂອງເພດຍິງໃນຂະແໜງກະສິກຳ ແລະ ປ່າໄມ້, ຊຶ່ງອີງໃສ່ 6 ເປົ້າໝາຍ. ໃນນັ້ນ ສອງ ເປົ້າໝາຍຫຼັກແມ່ນການເຊື່ອມສານ ການວິເຄາະບົດບາດຍິງ–ຊາຍ ແລະ ຂໍ້ມູນແຍກເພດ, ຂ່າວສານ, ແລະ ສະຖິຕິ ເຂົ້າໃນວົງຈອນການວາງແຜນຂອງກະຊວງກະສິກຳ ແລະ ປ່າໄມ້, ແລະ ເພີ່ມຄວາມອາດສາມາດ ຂອງເພດຍິງໃນການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ ແລະ ສິດຜົນປະໂຫຍດຂອງເຂົາເຈົ້າ.

ການສຳຫຼວດກະສິກຳ ໃນປີ 2010/11, ບັນດານາຍບ້ານທີ່ຖືກສອບຖາມເພື່ອປຽບທຽບຄ່າແຮງງານ ຂອງເພດຍິງ ແລະ ຄ່າແຮງງານຂອງເພດຊາຍ ຕໍ່ກັບນວຽກງານກະສິກຳ. ມີ 29 ສ່ວນຮ້ອຍຂອງຈຳນວນ ບ້ານທັງໝົດ ທີ່ນາຍບ້ານບໍ່ສາມາດໃຫ້ຄຳຕອບຕໍ່ບັນດາຄຳຖາມດັ່ງກ່າວໄດ້, ໃນຂະນະທີ່ 67 ສ່ວນຮ້ອຍ ຂອງຈຳນວນບ້ານທັງໝົດ ໄດ້ລາຍງານວ່າ ຄ່າແຮງງານ ແມ່ນຄືກັນ, ມີ 3 ສ່ວນຮ້ອຍ ໄດ້ລາຍງານວ່າ ເພດຍິງ ໄດ້ຮັບຄ່າແຮງງານ ສູງກວ່າ ເພດຊາຍ ແລະ ມີພຽງແຕ່ 1 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ໄດ້ລາຍງານໃຫ້ຮູ້ວ່າເພດຊາຍໄດ້ຮັບຄ່າແແຮງງານສູງກວ່າເພດຍິງ.

ໃນຂັ້ນແຂວງ ແຜນວາດສະແດງການປຽບທຽບອັດຕາສ່ວນຂອງບັນດາບ້ານທີ່ເພດຊາຍມີຄ່າແຮງງານ ສະເລ່ຍ ສູງກວ່າເພດຍິງ, ແລະ ໃນທາງກັບກັນ. ຍົກຕົວຢ່າງທີ່ແຂວງ ບໍ່ແກ້ວ, ຄ່າແຮງງານຂອງເພດຊາຍ ແມ່ນສູງກວ່າ ຄ່າແຮງງານຂອງເພດຍິງ ໃນ 2.5 ສ່ວນຮ້ອບ ຂອງຈຳນວນບ້ານທັງໝົດ. ໃນແຂວງດຽວກັນນີ້, ຄ່າແຮງງານເພດຍິງ ສູງກວ່າ ຄ່າແຮງງານເພດຊາຍ ໃນ 2.1 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ. ແຂວງ ອຸດົມໄຊ ແລະ ຫຼວງພະບາງ ມີແນວໂນ້ມຄ້າຍຄືກັນກັບແຂວງບໍ່ແກ້ວ. ໃນທາງກົງກັນຂ້າມ, ເຂດພາກກາງ ຂອງປະເທດ, ຄ່າແຮງງານຂອງເພດຍິງ ສູງກວ່າ ຄ່າແຮງງານຂອງເພດຊາຍ, ໃນຂະນະດຽວກັນບັນດາ ແຂວງພາກໃຕ້ ບໍ່ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງຂອງທັງສອງຮູບແບບ.

ໃນແຂວງຫຼວງນ້ຳທາ ຄ່າແຮງງານຂອງເພດຍິງໃນພາກກະສິກຳ ສູງກວ່າຄ່າແຮງງານຂອງເພດຊາຍໃນ ປະມານ 6.2 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ. ແຂວງຄຳມ່ວນ ແລະ ນະຄອນຫຼວງວຽງຈັນ ມີແນວໂນ້ມຄ້າຍຄືກັນ ຄ່າແຮງງານໃນພາກກະສິກຳຂອງເພດຍິງສູງກວ່າຄ່າແຮງງານຂອງເພດຊາຍ ໃນ 4.4 ແລະ 3.9 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ຕາມລຳດັບ.

ໃນທາງກົງກັນຂ້າມ, ໃນ 3.2 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ໃນແຂວງ ອຸດົມໄຊ ຄ່າແຮງງານໃນພາກ ກະເສດຂອງເພດຊາຍສູງກວ່າ ຄ່າແຮງງານຂອງເພດຍິງ, ແຂວງ ບໍ່ແກ້ວ ແລະ ຫຼວງພະບາງ ມີລັກສະນະ ຄ້າຍຄືກັນ ມີອັດສັດສ່ວນ 2.5 ແລະ 2.3 ສ່ວນຮ້ອບ ຂອງຈຳນວນບ້ານທັງໝົດ ຕາມລຳດັບ.

ແຜນທີ່ເບື້ອງຊ້າຍມື ດ້ານລຸ່ມ ສະແດງສັດສ່ວນ ຫົວໜ້າຄົວເຮືອນທີ່ເປັນເພດຍິງ ໃນຂັ້ນແຂວງ ແລະ ເມືອງ. 92 ສ່ວນຮ້ອຍຂອງຄົວເຮືອນກະສິກຳທັງໝົດ ແມ່ນເພດຊາຍເປັນຫົວໜ້າໃນຂະນະທີ່ມີພຽງແຕ່ 8 ສ່ວນ ຮ້ອຍແມ່ນເພດຍິງເປັນຫົວໜ້າຄົວເຮືອນ. ໃນບັນດາແຂວງພາກກາງ ມີ 55 ສ່ວນຮ້ອຍ ຂອງຈຳນວນຫົວໜ້າ ຄົວເຮືອນທັງໝົດເປັນເພດຍິງ, ໃນຂະນະທີ່ບັນດາແຂວງພາກໃຕ້ ແລະ ພາກເໜືອ ມີສ່ວນແບ່ງ 25 ສ່ວນຮ້ອຍ ແລະ 19 ສ່ວນຮ້ອຍ ຕາມລຳດັບ. ອັດຕາສ່ວນ ເພດຍິງເປັນຫົວໜ້າຄົວເຮືອນໃນແຂວງ ສະຫວັນນະເຂດ ຖືວ່າສູງສຸດ ມີເຖິງ 15 ສ່ວນຮ້ອຍ, ຄຳມ່ວນ ມີ 14 ສ່ວນຮ້ອຍ ແລະ ແຂວງ ສາລະວັນ ມີ 12 ສ່ວນຮ້ອຍ. ນອກນັ້ນແລ້ວ ແຜນທີ່ຍັງສະແດງໃຫ້ເຫັນວ່າ ບັນດາແຂວງພາກກາງມີແນວໂນ້ມເພດຍິງ ມີຄ່າແຮງງານສູງກວ່າ ເພດຊາຍ. ແຜນທີ່ສະແດງໃຫ້ເຫັນວ່າ ດ້ວຍເຫດຜົນໃດທີ່ ຄ່າແຮງງານດ້ານການ ກະເສດຂອງເພດຍິງມີແນວໂນ້ມສູງກ່ວາຄ່າແຮງງານຂອງເພດຊາຍໃນພາກກາງຂອງສປປ ລາວ ແລະ ສູງກວ່າພາກເໜືອ ແລະ ພາກໃຕ້. ມັນອາດຈະເກີດຈາກການຂະຫຍາຍຕົວທາງດ້ານເສດຖະກິດຢູ່ບັນ ດາແຂວງເຫຼົ່ານັ້ນ ຊຶ່ງເປີດໂອກາດໃຫ້ແກ່ເພດຍິງຫຼາຍກວ່າ. ເມື່ອເບິ່ງຕາມແນວໂນ້ມທີ່ກ່າວ ມານັ້ນ, ມັນຈຳເປັນຕ້ອງໃຫ້ຄວາມສຳຄັນ ຕໍ່ກັບ 29 ສ່ວນຮ້ອບຂອງຈຳນວນບ້ານທັງໝົດ ທີ່ບໍ່ໄດ້ຕອບຄຳຖາມ ຂອງການສຳຫຼວດ, ແລະ 67 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ລາຍງານໃຫ້ຮູ້ວ່າ ອັດຕາຄ່າແຮງງານ ລະຫວ່າງ ເພດຍິງ ແລະ ເພດຊາຍ ເທົ່າກັນ.

ຕາມຮີດຄອງປະເພນີ, ຜົວ ແມ່ນຖືກລະບຸໃຫ້ເປັນຫົວໜ້າຄອບຄົວ ໃນ ສປປ ລາວ, ຊຶ່ງອາດເປັນເຫດຜົນ ໜຶ່ງທີ່ເຮັດໃຫ້ຈຳນວນເພດຍິງເປັນຫົວໜ້າຄອບຄົວມີອັດຕາສ່ວນທີ່ຕ່ຳ. ແມ່ຍິງທີ່ເປັນຫົວໜ້າຄອບຄົວ ເກືອບທັງໝົດຢູ່ໃນຖານະເປັນແມ່ໝ້າຍ, ໃນຂະນະທີ່ ບາງຈຳນວນ ໃນຖານະເປັນແມ່ຮ້າງ ແລະ/ຫຼື ຜົວ ໄດ້ຍ້າຍໄປເຮັດວຽກໃນຕົວເມືອງໃຫຍ່ ຫຼື ໃນຕ່າງປະເທດ ຈຶ່ງສົ່ງຜົນຕໍ່ໂຄງສ້າງຂອງຄົວເຮືອນ. ການເຄື່ອນ ຍ້າຍອອກຂອງປະຊາກອນ ອາດກາຍເປັນເຫດຜົນໜຶ່ງ ທີ່ເຮັດໃຫ້ສ່ວນແບ່ງຂອງຫົວໜ້າຄອບຄົວ ທີ່ເປັນເພດຍິງ ນັ້ນສູງ ຊຶ່ງໄດ້ພົບເຫັນ ໃນພາກກາງຂອງ ສປປ ລາວ ທີ່ປະຊາກອນຈຳນວນຫຼາຍມັກເຄື່ອນ ຍ້າຍໄປເຮັດວຽກຢູ່ປະເທດໄທ.

ຂ 7 ຄ່າແຮງງານແບ່ງຕາມເພດ ແລະ ຫົວໜ້າຄອບຄົວ



ຂ 8 ແຫຼ່ງລາຍຮັບຈາກການເຮັດກະສິກຳ

ປະຊາກອນຂອງລາວ ສ່ວນໃຫຍ່ອາໃສຢູ່ໃນເຂດຊົນນະບົດ ແລະ ມີສ່ວນຮ່ວມໃນຫຼາຍກິດຈະກຳການທຳມາຫາກິນ ແລະ ການສ້າງລາຍຮັບ. ການດຳລົງຊີວິດຂອງພວກເຂົາເຈົ້າໄດ້ອາໃສ ລະບົບການກະເສດແບບທຳມະຊາດ ແລະ ບັນດາແຫຼ່ງຊັບພະຍາກອນຈາກປ່າໄມ້ ເປັນຫຼັກ. ບັນດາປັດໃຈພາຍນອກ ແລະ ປັດໃຈພາຍໃນທີ່ມີອິດທິພົນຕໍ່ປະເພດກິດຈະກຳການດຳລົງຊີວິດ ໄດ້ແກ່: ນະໂຍບາຍລັດຖະບານ, ທີ່ຕັ້ງພູມສັນຖານ, ຊົນເຜົ່າ, ແລະ ການເຂົ້າເຖິງຕະຫຼາດ, ຄວາມຮູ້, ແລະ ເຕັກໂນໂລຊີ ລວມທັງບັນດາປັດໄຈອື່ນໆ.

ແຫຼ່ງລາຍຮັບຕົ້ນຕໍ ໃນລະດັບບ້ານ ແບ່ງອອກເປັນ 4 ປະເພດຫຼັກ: ເຄື່ອງປ່າຂອງດົງ, ພືດ, ສັດລ້ຽງ ແລະ ປາ. ແຜນທີ່ໄດ້ສະແດງໃຫ້ເຫັນວ່າ ການປູກພືດ ແມ່ນແຫຼ່ງລາຍຮັບຫຼັກຂອງພາກກະສິກຳ ກວມເອົາ 54 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ໂດຍສະເພາະຢູ່ບັນດາແຂວງພາກເໜືອ. ເຖິງວ່າ 49 ສ່ວນຮ້ອຍ ຂອງຈຳນວນຄົວເຮືອນກະສິກຳທັງໝົດທີ່ເກັບໝາກໄມ້ ແລະ ພືດຜັກ ຈາກປ່າ, ແລະ 55 ສ່ວນຮ້ອບທີ່ເກັບເຫັດຕ່າງໆ, ແຕ່ມີພຽງ 614 ບ້ານທີ່ອາໃສເຄື່ອງປ່າຂອງດົງສຳລັບລາຍຮັບຄົວເຮືອນຂອງພວກເຂົາ. ບັນດາຜູ້ເກັບຊື້ໃນຂັ້ນບ້ານຂາຍເຄື່ອງປ່າຂອງດົງຢູ່ຕະຫຼາດທ້ອງຖິ່ນ ແລະ ໃຫ້ພໍ່ຄ້າ. ກິດຈະກຳການລ້ຽງສັດໃນ ສປປ ລາວ ສ່ວນຫຼາຍແມ່ນເພື່ອການບໍລິໂພກພາຍໃນຄົວເຮືອນ; ມີພຽງແຕ່ 4 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດໃນທົ່ວປະເທດ ທີ່ມີແຫຼ່ງລາຍຮັບກະສິກຳຕົ້ນຕໍມາຈາກການລ້ຽງສັດ. ງົວ, ຄວາຍ, ໝູ ແລະ ສັດປີກ ເປັນປະເພດສັດຕົ້ນຕໍ ທີ່ຊາວກະສິກອນລ້ຽງ. ການປະມົງກໍເຊັ່ນດຽວກັນເປັນກິດຈະກຳທີ່ສຳຄັນໃຫ້ແກ່ຄົວເຮືອນທີ່ເຮັດການກະເສດພາຍໃນປະເທດ. ມັນເປັນກິດຈະກຳສ້າງລາຍຮັບຕົ້ນຕໍ ຂອງ 68,200 ຄົວເຮືອນ ເຖິງວ່າຈະພົບເຫັນໜ້ອຍກ່ວາການປະມົງ, ການລ້ຽງປາ ເປັນແຫຼ່ງລາຍຮັບຫຼັກຂອງຫຼາຍພັນຄົວເຮືອນໃນຂອບເຂດທົ່ວປະເທດ. ໃນແຜນທີ່ສະບັບນີ້, ການປະມົງ ແລະ ການລ້ຽງປາໄດ້ເອົາລວມເຂົ້າກັນ ແລະ ໄດ້ສະເໜີເປັນແຫຼ່ງລາຍຮັບຫຼັກທາງດ້ານການກະເສດຂອງ 33 ບ້ານ ໃນຂອບເຂດທົ່ວປະເທດ.

ການປູກພືດ ເປັນກິດຈະກຳສ້າງລາຍຮັບຫຼັກ ຂອງບັນດາບ້ານ ສ່ວນໃຫຍ່ຢູ່ພາກເໜືອ ແລະ ພາກໃຕ້ເຊັ່ນ ແຂວງ ສາລະວັນ, ເຊກອງ ແລະ ຈຳປາສັກ. ໃນແຜນທີ່ນ້ອຍ, ຄົວເຮືອນໃນແຂວງ ໄຊຍະບູລີມີລາຍຮັບຫຼາຍກວ່າ 75 ສ່ວຍຮ້ອຍຂອງລາຍຮັບທັງໝົດຈາກການປູກພືດ. ລາຍຮັບຂອງຄົວເຮືອນຢູ່ແຂວງອັດຕະປື, ສະຫວັນນະເຂດ, ຄຳມ່ວນ ແລະ ນະຄອນຫຼວງ ສ່ວນໃຫຍ່ ແມ່ນໄດ້ຈາກຫຼາຍໆກິດຈະກຳທີ່ບໍ່ແມ່ນຈາກ ການເກັບເຄື່ອງປ່າຂອງດົງ, ປູກພືດ, ລ້ຽງສັດ ແລະ ການປະມົງ. ແຜນທີ່ສະແດງໃຫ້ເຫັນວ່າບັນດາບ້ານ ທີ່ມີລາຍຮັບຫຼັກຈາກການເກັບເຄື່ອງປ່າຂອງດົງ ສ່ວນໃຫຍ່ ຕັ້ງຢູ່ເຂດພື້ນທີ່ພູເຂົາ ຢູ່ພາກກາງ ແລະ ພາກເໜືອຂອງປະເທດ, ແລະ ຢູ່ທາງທິດຕາເວັນອອກຂອງແຂວງອັດຕະປື ແລະ ທາງພາກຕາເວັນອອກສຽງໃຕ້ຂອງແຂວງຈຳປາສັກ. ແຜນທີ່ນ້ອຍສະແດງໃຫ້ເຫັນວ່າ ເຄື່ອງປ່າຂອງດົງເປັນແຫຼ່ງລາຍຮັບຫຼັກທາງດ້ານກະສິກຳ ທີ່ສຳຄັນທີ່ສຸດ ຢູ່ເມືອງ ຂວາ ເຂດຕອນໃຕ້ຂອງແຂວງຜົ້ງສາລີ ແລະ ຢູ່ເມືອງໂພນທອງພາກເໜືອຂອງແຂວງຫຼວງພະບາງ. ເມືອງ ບໍລິຄັນ ຢູ່ທາງພາກຕາເວັນຕົກຂອງແຂວງບໍລິຄຳໄຊ ມີກິດຈະກຳໃນການສ້າງລາຍຮັບທີ່ຫຼາກຫຼາຍ.

ສະຫຼຸບລວມ, ການປູກພືດເປັນແຫຼ່ງລາຍຮັບຕົ້ນຕໍ ສຳລັບຊາວກະສິກອນຢູ່ໃນ 88 ເມືອງ, ໃນຂະນະທີ່ 52 ເມືອງ, ສ່ວນໃຫຍ່ຢູ່ພາກກາງຂອງປະເທດມີແຫຼ່ງລາຍຮັບອື່ນທີ່ບໍ່ໄດ້ສະແດງໃຫ້ເຫັນໃນຊ່ວງໄລຍະຂອງການເກັບກຳຂໍ້ມູນ. ເຄື່ອງປ່າຂອງດົງເປັນແຫຼ່ງລາຍຮັບຕົ້ນຕໍຢູ່ໃນສອງເມືອງຂອງບັນດາເມືອງທັງໝົດ. ເປັນທີ່ໜ້າສັງເກດ, ໃນເມືອງໜຶ່ງຂອງແຂວງບໍລິຄຳໄຊ (ເມືອງ ບໍລິຄັນ) ຈຳນວນຄົວເຮືອນສ່ວນຫຼາຍລາຍງານໃຫ້ຮູ້ວ່າ ພວກເຂົາບໍ່ມີພຽງແຕ່ແຫຼ່ງລາຍຮັບດຽວ ແຕ່ມີຫຼາຍໆແຫຼ່ງລາຍຮັບ ທີ່ມີຄວາມສຳຄັນ.

ດັ່ງທີ່ໄດ້ສະເໜີຂ້າງເທິງນັ້ນ, ມີຫຼາຍປັດໃຈທີ່ມີອິດທິພົນຕໍ່ແຫຼ່ງລາຍຮັບມາຈາກກະສິກຳ. ໂດຍສະເພາະການຂະຫຍາຍຕົວຂອງຕະຫຼາດໃນພາກພື້ນ, ຈາກການຄ້າຊາຍແດນແບບດັ້ງເດີມກັບບັນດາປະເທດເພື່ອນບ້ານໄປສູ່ການປະຕິບັດນະໂຍບາຍຫັນເປັນການຜະລິກສິນຄ້າຂອງລັດຖະບານລາວ, ໄດ້ກາຍເປັນຕົວຂັບເຄື່ອນຫຼັກໃນການຂ້າມຜ່ານໄປສູ່ການຜະລິດກະສິກຳເພື່ອຕະຫຼາດ. ນອກຈາກການຂະຫຍາຍຕົວຂອງຕະຫຼາດໃນພາກພື້ນ, ການພັດທະນາເສດຖະກິດຢູ່ບັນດາປະເທດເພື່ອນບ້ານ ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງຄົວເຮືອນກະສິກຳ ແລະ ລະບົບການກະເສດ ໃນ ສປປ ລາວ. ຜົນກະທົບໄດ້ແຜ່ຂະຫຍາຍອອກເປັນວົງກວ້າງ ໄປສູ່ການຕະຫຼາດກະສິກຳຫັນປ່ຽນຈາກການຜະລິດກຸ້ມຕົນເອງ ໄປສູ່ການຜະລິດເປັນສິນຄ້າໂດຍສະເພາະຢູ່ພາກເໜືອຂອງລາວ (ເບິ່ງ ຂ6).

ຂ 8 ແຫຼ່ງລາຍຮັບຈາກການເຮັດກະສິກຳ



ຂ 9 ໄພພິບັດທາງທຳມະຊາດ: ນ້ຳຖ້ວມ, ແຫ້ງແລ້ງ ແລະ ດິນເຊາະເຈື່ອນ

ອາກາດ ຂອງ ສປປ ລາວ ເປັນອາກາດເຂດຮ້ອນ ແລະ ຖືກແບ່ງອອກເປັນ ລະດູຝົນ ແລະ ລະດູແລ້ງ. ລະດູຝົນ ເລີ້ມຈາກເດືອນພຶດສະພາ ຫາ ເດືອນຕຸລາ. ສປປ ລາວ ຍັງໄດ້ຮັບຜົນກະທົບຈາກພະຍຸເຂດຮ້ອນເລື້ອຍໆ ທີ່ພັດມາຈາກທະເລຈີນໃຕ້ ແລະ ພະຍຸໄຊໂກລນ. ໄພນ້ຳຖ້ວມ ມັກເກີດຂຶ້ນຕາມສາຍແມ່ນ້ຳຂອງ ແລະ ສາຂາຂອງມັນ, ແຕ່ມີລັກຊະນະຜິດແປກຈາກເມື່ອກ່ອນ ແລະ ມີໄລຍະແກ່ຍາວຕັ້ງແຕ່ຫຼາຍມື້ຈົນເຖິງໜຶ່ງ ອາທິດ. ຝົນຕົກໜັກເປັນຕົ້ນເຫດໃຫ້ເກີດດິນເຊາະເຈື່ອນ ເຊິ່ງເກີດຂຶ້ນເລື້ອຍໆຢູ່ເຂດເນີນສູງ ແລະ ເກີດ ພ້ອມກັບໄພນ້ຳຖ້ວມຕາມສາຂາແມ່ນນ້ຳຂອງ. ໂດຍສະເລ່ຍ, ທຸກໆຫ້າປີໃດໄພນ້ຳຖ້ວມຢ່າງຮ້າຍແຮງ ເກີດຂຶ້ນໜຶ່ງຄັ້ງ ສ່ວນໄພແຫ້ງແລ້ງຮ້າຍແຮງ ເກີດຂຶ້ນໃນທຸກໆສອງປີ. ຢ່າງໃດກໍຕາມ ໃນປີຜ່ານທີ່ມາໝໍ່ໆນີ້, ການເກີດໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໄດ້ເພີ່ມຂຶ້ນ.

ແຜນທີ່ສະແດງໃຫ້ເຫັນເຖິງປະເພດໄພພິບັດທຳມະຊາດທີ່ເກີດຂຶ້ນໃນລະດັບບ້ານຂອງ ສປປ ລາວ. ໄພແຫ້ງແລ້ງ ເກີດຂຶ້ນທົ່ວປະເທດ ແຕ່ວ່າ ການເກີດໄພແຫ້ງແລ້ງຫຼາຍທີ່ສຸດ ແມ່ນຢູ່ພາກຕາເວັນຕົກຂອງ ແຂວງຈຳປາສັກ, ແຂວງສາລະວັນ, ແລະ ແຂວງສະຫວັນນະເຂດ, ແລະ ໃນພາກຕາເວັນອອກສ່ຽງເໜືອ ຂອງແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງຫຼວງພະບາງ. ຄວາມຖີ່ຂອງການເກີດໄພນ້ຳຖວ້ມມີ ລັກຊະນະຕ່ຳກ່ວາການເກີດໄພແຫ້ງແລ້ງ ແຕ່ໄພນ້ຳຖ້ວມໂດຍທົ່ວໄປເກີດຂຶ້ນໃນເຂດເລາະລຽບຕາມແຄມ ແມ່ນ້ຳຂອງ, ຕາມສາຂາໃຫຍ່ຂອງແມ່ນ້ຳຂອງທົ່ວປະເທດ. ຢູ່ພາກກາງ ແລະ ພາກໃຕ້ຂອງ ສປປ ລາວ, ໂດຍສະເພາະຢູ່ແຂວງຄຳມ່ວນ, ແຂວງສະຫວັນນະເຂດ ແລະ ແຂວງອັດຕະປື, ແລະ ເຂດພາກໃຕ້ຂອງ ແຂວງໄຊຍະບູລີ ແລະ ແຂວງບໍ່ແກ້ວ, ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ ມັກເກີດຂຶ້ນຕິດຕໍ່ກັນ.

ນອກຈາກໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມແລ້ວ, ຍັງມີດິນເຊາະເຈື່ອນ ທີ່ເກີດໃນເຂດພູດອຍທາງພາກເໜືອ ແລະ ພາກໃຕ້ຂອງ ສປປ ລາວ. ບາງບ້ານປະສົບທັງສາມໄພ ຄື ນ້ຳຖ້ວມ, ແຫ້ງແລ້ງ ແລະ ດິນເຊາະເຈື່ອນ –ສ່ວນໃຫຍ່ຢູ່ເຂດພູດອຍ ທາງພາກຕາເວັນອອກຂອງແຂວງສາລະວັນ ແລະ ແຂວງເຊກອງ. ໄພພິບັດທັງ ສາມທີ່ເກີດຂຶ້ນໃນຂັ້ນບ້ານ ຍັງພົບເຫັນໃນເຂດພູດອຍທາງພາກເໜືອຂອງ ສປປ ລາວ, ໂດຍສະເພາະໃນ ເຂດພາກເໜືອຂອງແຂວງອຸດົມໄຊ. ເຂດພາກກາງຂອງ ສປປ ລາວ ມີຄວາມສ່ຽງຕໍ່ກັບໄພທຳມະຊາດ ໜ້ອຍກວ່າເຂດພາກໃຕ້ ແລະ ພາກຕາເວັນອອກສ່ຽງເໜືອຂອງປະເທດ.

ແຜນທີ່ນີ້ສະແດງໃຫ້ເຫັນເຖິງສະພາບໄພພິບັດຕ່າງໆ ໃນປີ 2011 ພ້ອມທັງສະແດງໃຫ້ເຫັນການກະຈາຍ ຂອງປະເພດໄພພິບັດຕ່າງໆ ທີ່ເກີດຂຶ້ນ. ໄພທຳມະຊາດ ມີຜົນກະທົບຢ່າງໜັກໜ່ວງຕໍ່ກັບຊີວິດການເປັນ ຢູ່ຂອງປະຊາຊົນ, ໂດຍສະເພາະໃນເຂດຊົນນະບົດ, ບ່ອນທີ່ຍັງຍຶດຖືການຜະລິດກະສິກຳແບບກຸ້ມກິນເປັນ ສ່ວນໃຫຍ່.

ເຂົ້ານານ້ຳຝົນແມ່ນ ກວມເອົາຫຼາຍກວ່າ 90% ຂອງເນື້ອທີ່ປູກເຂົ້າທົ່ວປະເທດ, ແຕ່ວ່າ ມີພຽງແຕ່ 6% ຂອງເນື້ອທີ່ປູກເຂົ້າມີຊົນລະປະທານຮອງຮັບ. ເພາະສະນັ້ນ ໄພແຫ້ງແລ້ງ ຈຶ່ງມີຜົນກະທົບຫຼາຍຕໍ່ຜົນຜະລິດ ເຂົ້ານາປີຂອງຊາວກະສິກອນຂະໜາດນ້ອຍ. ອີງຕາມ *Schiller et al.* (2006), ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມມັກ ສ້າງຄວາມເສຍຫາຍໃຫ້ແກ່ ການຜະລິດເຂົ້າ. ໄພແຫ້ງແລ້ງ, ຕາມທີ່ແຜນທີ່ສະແດງໃຫ້ເຫັນ, ສາມາດສົ່ງຜົນກະທົບຕໍ່ພື້ນທີ່ຂະໜາດກ້ວາງກວ່າໄພນ້ຳຖ້ວມ, ຍ້ອນວ່າໄພນ້ຳຖ້ວມ ເກີດຂຶ້ນເປັນ ສະເພາະເຂດ. ໄພແຫ້ງແລ້ງ ດັ່ງທີ່ຮູ້ຈັກກັນເກີດຂຶ້ນສອງຄັ້ງ ຄື: ຕົ້ນລະດູຝົນ ແລະ ທ້າຍລະດູຝົນ. ໃນໄລຍະທ້າຍລະດູຝົນ, ໄພແຫ້ງແລ້ງສາມາດສ້າງຜົນເສຍຫາຍໃຫ້ແກ່ຜົນລະປູກໄດ້ຫຼາຍທີ່ສຸດ. ນ້ຳຖ້ວມແບບສຸຖົ່ງ ມັກເກີດຂຶ້ນເລື້ອຍໆ ໃນເຂດທີ່ຄວາມປົກຫຸ້ມຂອງປ່າໄມ້ຖືກທຳລາຍໃນລະດັບຮຸນແຮງ ແລະ/ຫຼື ໄດ້ມີການບຸກເບີກໜ້າດິນຢ່າງໜັກໜ່ວງ, ເຊັ່ນໃນບັນດາພື້ນທີ່ສູງເຂດພູດອຍ.

ຜົນກະທົບຂອງໄພທຳມະຊາດ ມີລັກຊະນະຫຼາກຫຼາຍຕໍ່ກັບ ສປປ ລາວ. ຄວາມອ່ອນໄຫວຕໍ່ກັບ ໄພພິບັດ ທຳມະຊາດ ເກີດຈາກອິດທິພົນຂອງປັດໃຈຫຼາຍຢ່າງ ເຊັ່ນ: ເສັ້ນທາງເຂົ້າເຖິງ, ການກຽມພ້ອມທາງດ້ານ ການຈັດຕັ້ງ, ລະບົບເຕືອນໄພຂັ້ນຕົ້ນ, ແລະ ອື່ນໆ. ສ່ວນໃຫຍ່ແລ້ວໄພທຳມະຊາດກະທົບໃສ່ເຂດຫ່າງໄກ ສອກຫລີກເຮັດໃຫ້ເກີດຜົນເສຍຫາຍຫຼາຍທີ່ສຸດໂດຍສະເພາະດ້ານເສດຖະກິດ ແລະ ສັງຄົມ. ເຫດການນີ້ ໄດ້ເກີດຂຶ້ນກັບກໍລະນີໃນພາກຕາເວັນອອກຂອງແຂວງເຊກອງ ແລະ ແຂວງສາລະວັນ, ເຂດທີ່ໄດ້ຮັບ ຜົນກະທົບຈາກສາມປະເພດໄພທຳມະຊາດ ແລະ ເປັນເຂດທີ່ທຸກຍາກທີ່ສຸດຂອງປະເທດ. ປະຈຸບັນ ຂໍ້ມູນທີ່ໄດ້ມາຂາດຄວາມແມ້ນຢຳ ແລະ ຄວາມຖືກຕ້ອງ ເພື່ອຮັບປະກັນໃຫ້ແກ່ການວາງແຜນ ແລະ ການຕັດສິນໃຈທີ່ຖືກຕ້ອງ. ການເກັບກຳຂໍ້ມູນ ແລະ ການແລກປ່ຽນຂໍ້ມູນ ຄວນໄດ້ຮັບການປັບປຸງໃນອະນາຄົດ ເພື່ອສ້າງຍຸດທະສາດທີ່ດີກວ່າສຳລັບການຄຸ້ມຄອງໄພພິບັດ.

ຂ 9 ໄພພິບັດທາງທຳມະຊາດ: ນ້ຳຖ້ວມ, ແຫ້ງແລ້ງ ແລະ ດິນເຊາະເຈື່ອນ



ຂ 10 ການເຂົ້າເຖິງສິນເຊື່ອ ແລະ ການຂາຍຜົນຜະລິດກະສິກຳ

ເຖິງວ່າອັດຕາດອກເບັ້ຍສໍາລັບການກູ້ຢືມເງິນນອກລະບົບສູງເຖິງ 20% ຕໍ່ປີ, ແຕ່ອັດຕາດອກເບັ້ຍສິນເຊື່ອສໍາລັບຄອບຄົວຊາວກະສິກອນເພື່ອການຜະລິດກະສິກໍາແມ່ນຍັງຈໍາກັດຢູ່ທີ່ປະມານ 13% ຕໍ່ປີ ໃນ ສປປ ລາວ. ຢ່າງໃດກໍຕາມ, ແຫຼ່ງການສະໜອງສິນເຊື່ອໃຫ້ຊາວກະສິກອນແມ່ນມີຫຼາຍປະເພດ, ເຊິ່ງລວມມີ ທະນາຄານຂອງລັດ, ທະນາຄານຕ່າງປະເທດ, ທະນາຄານທຸລະກິດ ທີ່ຢູ່ພາຍໃນປະເທດ, ສະຖາບັນການເງິນຈຸລະພາກ ແລະ ກອງທຶນພັດທະນາບ້ານ. ໃນດ້ານການອໍານວຍຄວາມສະດວກຂອງການຕະຫຼາດກະສິກໍາ, ຊາວກະສິກອນມີການຈໍາໜ່າຍຜົນຜະລິດຂອງເຂົາເຈົ້າໂດຍຜ່ານຫຼາຍຊ່ອງທາງ ເຊັ່ນ: ການຂາຍໃນຕະຫຼາດທ້ອງຖິ່ນ, ການຊື້-ຂາຍໂດຍຜ່ານຮູບແບບສັນຍາ, ຂາຍໃຫ້ບໍລິສັດປຸງແຕ່ງ ແລະ ຂາຍໂດຍຜ່ານພໍ່ຄ້າຄົນກາງ ຫຼື ນາຍໜ້າ ທີ່ຢູ່ໃນບ້ານດຽວກັນ ຫຼື ບ້ານໃກ້ຄຽງ.

ໂດຍລວມແລ້ວ, 51% ຂອງບ້ານທັງໝົດໃນທົ່ວປະເທດ ໄດ້ມີການເຂົ້າເຖິງລະບົບສິນເຊື່ອ ໃນຮູບແບບຕ່າງໆ ດັ່ງທີ່ເຫັນໃນແຜນທີ່ຫຼັກ. ການເຂົ້າເຖິງສິນເຊື່ອຂອງບ້ານ ແມ່ນກະແຈກກະຈາຍ ໃນຂອບເຂດທົ່ວປະເທດ, ໂດຍບ້ານທີ່ມີການເຂົ້າເຖິງສິນເຊື່ອຫຼາຍ ແມ່ນໃນແຂວງພາກເໜືອ ກໍຄື ແຂວງອຸດົມໄຊ, ຫຼວງພະບາງ ແລະ ຊຽງຂວາງ ແລະ ໃນແຂວງພາກໃຕ້ ກໍຄື ແຂວງຈໍາປາສັກ. ບັນດາບ້ານດັ່ງກ່າວນີ້ ສ່ວນໃຫຍ່ ແມ່ນຕັ້ງຢູ່ໃນເຂດທີ່ມີການຄົມມະນາຄົມຂົນສົ່ງທີ່ດີ. ນະຄອນຫຼວງວຽງຈັນ ຖືໄດ້ວ່າເປັນແຂວງໜຶ່ງ ທີ່ມີການເຂົ້າເຖິງສິນເຊື່ອຫຼາຍທີ່ສຸດ ໃນ ສປປ ລາວ, ເຊິ່ງມີປະມານ 81% ຂອງຈໍານວນບ້ານທັງໝົດ ທີ່ສາມາດເຂົ້າເຖິງສິນເຊື່ອ. ນອກຈາກນີ້, 60% ຂອງບ້ານ ໃນແຂວງບໍ່ແກ້ວ ແລະ ໄຊຍະບູລີ ກໍໄດ້ມີການເຂົ້າເຖິງສິນເຊື່ອ. ກົງກັນຂ້າມ, ແຂວງຫົວພັນ ແລະ ສະຫວັນນະເຂດ, ເປັນແຂວງທີ່ມີບ້ານເຂົ້າເຖິງສິນເຊື່ອໜ້ອຍທີ່ສຸດ ເຊິ່ງມີພຽງແຕ່ 28% ແລະ 27% ຂອງຈໍານວນບ້ານທັງໝົດຕາມລໍາດັບ. ກອງທຶນພັດທະນາບ້ານ ຖືໄດ້ວ່າເປັນແຫຼ່ງທຶນສິນເຊື່ອຫຼັກ, ຊຶ່ງກອງທຶນດັ່ງກ່າວໄດ້ຖືກນໍາໃຊ້ສ່ວນຫຼາຍ ໂດຍບັນດາບ້ານໃນແຕ່ລະແຂວງ, ໂດຍສະເພາະ ນະຄອນຫຼວງວຽງຈັນ, ແຂວງໄຊຍະບູລີ, ບໍ່ແກ້ວ, ຫົວພັນ ແລະ ສະຫວັນນະເຂດ. ທະນາຄານຂອງລັດ ກໍ່ເປັນແຫຼ່ງທຶນສິນເຊື່ອຫຼັກອີກແຫຼ່ງໜຶ່ງ ຊຶ່ງຕາມການລາຍງານສ່ວນໃຫຍ່ໂດຍບັນດາບ້ານຂອງເກືອບທຸກແຂວງ. ການເງິນຈຸລະພາກ ກໍ່ເປັນອີກຊ່ອງທາງໜຶ່ງທີ່ສໍາຄັນ ຂອງການເຂົ້າເຖິງສິນເຊື່ອ ໂດຍສະເພາະບ້ານຢູ່ໃນ ແຂວງຫຼວງນໍ້າທາ, ໄຊຍະບູລີ ແລະ ອັດຕະປື.

ອີງຕາມແຜນທີ່ລຸ່ມຊ້າຍສະແດງໃຫ້ເຫັນເຖິງບ້ານທີ່ມີຊາວກະສິກອນດໍາເນີນການ ຊື້-ຂາຍຜະລິດຕະພັນກະສິກໍາ ແລະ ຍັງສະແດງໃຫ້ຮູ້ວ່າ ພວກເຂົາຂາຍຜົນຜະລິດຜ່ານຊ່ອງທາງໃດຢູ່ຂັ້ນແຂວງ. ປະມານ 88% ຂອງບ້ານທັງໝົດໃນ ສປປ ລາວ ທີ່ຊາວກະສິກອນໄດ້ຂາຍຜົນຜະລິດສ່ວນໜຶ່ງຈາກຜົນຜະລິດທັງໝົດ ແລະ ທີ່ເຫຼືອ 12% ຂອງບ້ານ ແມ່ນຜະລິດສະເພາະ ເພື່ອບໍລິໂພກພາຍໃນຄອບຄົວ ຫຼື ໃຊ້ໃນການແລກປ່ຽນເອົາສິນຄ້າຊະນິດອື່ນ. ດັ່ງທີ່ເຫັນໄດ້ໃນເສັ້ນສະແດງຢູ່ຂັ້ນແຂວງ, ການຂາຍໃຫ້ພໍ່ຄ້າຈາກໝູ່ບ້ານອື່ນເປັນທາງເລືອກການຕະຫຼາດຫຼັກ, ຮອງລົງມາແມ່ນການຂາຍໃຫ້ພໍ່ຄ້າພາຍໃນໝູ່ບ້ານດຽວກັນ. ການຂາຍຜ່ານການຜະລິດແບບມີສັນຍາຜູກພັນ, ການຂາຍໃຫ້ຜູ້ແປຮູບໂດຍກົງ, ແລະ ການຂາຍຢູ່ຕະຫຼາດພາຍໃນບ້ານແມ່ນປະກົດມີນ້ອຍກວ່າໃນຂັ້ນປະເທດ, ແຕ່ວ່າການຜະລິດແບບມີສັນຍາຜູກພັນແມ່ນພົບເຫັນຫຼາຍໃນເຂດພາກເໜືອ, ໂດຍສະເພາະໃນແຂວງຫົວພັນ, ທີ່ມີຫຼາຍກວ່າເຄິ່ງໜຶ່ງຂອງບ້ານທັງໝົດພາຍໃນແຂວງມີການຜະລິດແບບມີສັນຍາຜູກພັນ.

ເຖິງວ່າ ປະມານ 50% ຂອງບ້ານທັງໝົດ ໃນປະເທດລາວ ໄດ້ມີການເຂົ້າເຖິງລະບົບສິນເຊື່ອ, ແຕ່ກໍບໍ່ໝາຍຄວາມວ່າ ທຸກໆຄົນພາຍໃນຂັ້ນບ້ານ ໄດ້ມີການເຂົ້າເຖິງສິນເຊື່ອ. ການສໍາຫຼວດ ຂອງອົງການ GIZ ກ່ຽວກັບຜູ້ໃຫ້ບໍລິການທາງດ້ານສະຖາບັນການເງິນຈຸລະພາກທີ່ເປັນເຄິ່ງທາງການ ແລະ ເປັນທາງການ ໃນ ສປປ ລາວ ໄດ້ສະແດງໃຫ້ເຫັນວ່າ ສໍາລັບຜູ້ທຸກຍາກໃນເຂດຊົນນະບົດ ການເຂົ້າເຖິງການບໍລິການດ້ານການເງິນແມ່ນມີໜ້ອຍຫຼາຍ. ນີ້ເປັນສິ່ງທ້າທາຍໜຶ່ງທີ່ສໍາຄັນ ໃນ ສປປ ລາວ ເຖິງວ່າໃນໄລຍະຜ່ານມາໄດ້ມີການປັບປຸງໃນວຽກງານນີ້ຫຼາຍຂຶ້ນກໍ່ຕາມ. ການນໍາໃຊ້ຫຼາຍໆຮູບແບບໃນການຈໍາໜ່າຍຜົນຜະລິດ ກະສິກໍາເຊັ່ນ ການຜະລິດກະສິກໍາແບບມີສັນຍາ ຫຼື ການຂາຍໂດຍກົງໃຫ້ບໍລິສັດປຸງແຕ່ງສໍາເລັດຮູບ ສະແດງໃຫ້ເຫັນເຖິງລະດັບຂອງການຜະລິດກະສິກໍາເປັນສິນຄ້າ. ການເກີດມີການຜະລິດກະສິກໍາແບບມີສັນຍາດັ່ງທີ່ໄດ້ມີການແຜ່ຂະຫຍາຍຢ່າງກວ້າງຂວາງໃນເຂດພາກເໜືອໂດຍສະເພາະ ແຂວງຫົວພັນ, ຫຼວງນໍ້າທາ, ໄຊຍະບູລີ, ອຸດົມໄຊ ແລະ ບໍ່ແກ້ວ, ໂດຍຫຼັກແມ່ນຍ້ອນຜົນຂອງການຕິດຕໍ່ພົວພັນການຄ້າ ລະຫວ່າງແຂວງເຫຼົ່ານີ້ ກັບ ປະເທດເພື່ອນບ້ານທີ່ຕະຫຼາດມີຄວາມຕ້ອງການສູງ ໄດ້ແກ່ປະເທດ ຈີນ, ໄທ ແລະ ຫວຽດນາມ.

ການເຊື່ອມຈອດກັບເສັ້ນທາງ ແມ່ນປັດໄຈທີ່ສໍາຄັນ ຕໍ່ກັບ ການເຂົ້າເຖິງສິນເຊື່ອ ແລະ ການພັດທະນາດ້ານການຕະຫຼາດ. ເສັ້ນທາງ ແມ່ນຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການຂົນສົ່ງ ແລະ ສົ່ງເສີມໃຫ້ ການຄ້າຂາຍມີຄວາມສະດວກສະບາຍ ແລະ ກໍ່ຍັງເປັນການເສີມຂະຫຍາຍການເຊື່ອມຈອດກັບຕະຫຼາດ ແລະ ເພີ່ມຄວາມອາດສາມາດຂອງຄົວເຮືອນ ໃນການເພີ່ມມູນຄ່າຂອງທີ່ດິນ ແລະ ທີ່ຢູ່ອາໄສ ເຊິ່ງເປັນສິ່ງສໍາຄັນ ສໍາລັບໃຊ້ມັດຈໍາເພື່ອຂໍສິນເຊື່ອ.


0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ທອງດນາມ
ມຽນມາ
ໄທ
ກຳປູເຈຍ
ຂ. ຫົວພັນ
ນະຄອນຫລວງວຽງຈັນ
ຂ. ຈຳປາສັກ
ຂ. ອັດຕະປື
ການບໍລິການດ້ານສິນເຊື່ອຢູ່ໃນບ້ານ (8643)
ບໍ່ມີການບໍລິການດ້ານສິນເຊື່ອຢູ່ໃນບ້ານ (4263)
ມີການບໍລິການດ້ານສິນເຊື່ອຢູ່ໃນບ້ານ (4370)
ບໍ່ມີຄຳຕອບ (10)
ສ່ວນຮ້ອຍຂອງບ້ານທີ່ນຳໃຊ້ການບໍລິການທາງດ້ານສິນເຊື່ອ ແບ່ງຕາມປະເພດຂອງສະຖາບັນການເງິນໃນລະດັບແຂວງ
100%
80%
60%
40%
20%
ທະນາຄານທຸລະກິດຂອງລັດ
ທະນາຄານທຸລະກິດຕ່າງປະເທດ
ທະນາຄານທຸລະກິດເອກະຊົນ
ສະຖາບັນການເງິນຈຸລະພາກ
ກອງທຶນພັດທະນາບ້ານ
ການບໍລິການດ້ານສິນເຊື່ອອື່ນໆ
ຊະນິດທີ່ບໍ່ແມ່ນສິນເຊື່ອໂດຍສະເພາະ
ປະເພດຂອງການຂາຍໃນລະດັບແຂວງ
100%
60%
20%
ຂາຍຕາມສັນຍາຜູກພັນ
ຂາຍກົງໃຫ້ບໍລິສັດປຸງແຕ່ງ
ຂາຍໃຫ້ພໍ່ຄ້າມີກາງຢູ່ກັບທີ່
ຂາຍໃຫ້ພໍ່ຄ້າມີກາງບ້ານອື່ນ
ຂາຍຢູ່ຕະຫຼາດ/ຄົນໃນບ້ານ
ຂາຍແບບອື່ນໆ
ບໍ່ສະເພາະເຈາະຈົງ
ຊາວກະສິກອນທີ່ຂາຍຜະລິດຕະພັນກະສິກຳ ໃນລະດັບບ້ານ (8643)
ຊາວກະສິກອນທີ່ບໍ່ໄດ້ຂາຍ (1024)
ຊາວກະສິກອນທີ່ໄດ້ຂາຍ (7608)
ບໍ່ມີຄຳຕອບ (11)
0 100 200 300 km
0 50 100 150 km

ຜິດ

ຄ 1 ອັດຕາສ່ວນຂອງພືດຢືນຕົ້ນ ຕໍ່ ພືດລົ້ມລຸກລະດູຝົນ

ພາກສະເໜີ

ໂດຍລວມແລ້ວ 1.19 ລ້ານ ຮຕ ຫຼື 80% ຂອງເນື້ອທີ່ດິນກະສິກຳທັງໝົດໃນ ສປປ ລາວ (1.49 ລ້ານ ຮຕ) ແມ່ນໃຊ້ເຂົ້າໃນການປູກພືດລົ້ມລຸກ. ໃນນີ້, 0.94 ລ້ານ ຮຕ (79%) ແມ່ນນຳໃຊ້ເຂົ້າໃນການປູກເຂົ້າ. ອີກ 0.15 ລ້ານ ຮຕ (10%) ຂອງເນື້ອທີ່ດິນກະສິກຳ ແມ່ນນຳໃຊ້ເຂົ້າໃນການປູກພືດຢືນຕົ້ນ ແລະ ສ່ວນທີ່ເຫຼືອ 10% ຫຼື 0.14 ລ້ານ ຮຕ ແມ່ນໃຊ້ເປັນທົ່ງຫຍ້າລ້ຽງສັດ. ເສັ້ນສະແດງ 2 ສະແດງເນື້ອທີ່ປູກພືດຢືນຕົ້ນ, ພືດລົ້ມລຸກ ແລະ ດິນທົ່ງຫຍ້າ ໃນອັດຕາສ່ວນຂອງທີ່ດິນກະສິກຳທັງໝົດ.

ເສັ້ນສະແດງ 2: ອັດຕາສ່ວນຂອງເນື້ອທີ່ປູກພືດຢືນຕົ້ນ, ພືດລົ້ມລຸກ ແລະ ດິນທົ່ງຫຍ້າ ໃນ ສປປ ລາວ



ພືດລົ້ມລຸກສ່ວນຫຼາຍທີ່ປູກຢູ່ໃນ ສປປ ລາວ ແມ່ນປູກໃນພື້ນທີ່ຂະໜາດນ້ອຍ ແລະ ສ່ວນໃຫຍ່ແມ່ນເພື່ອການບໍລິໂພກໃນຄົວເຮືອນ; ຢ່າງໃດກໍຕາມ, ມີຈຳນວນພືດລົ້ມລຸກຫຼາຍຂຶ້ນ ເຊັ່ນ: ມັນຕົ້ນ, ສາລີແຂງ, ສາລີຫວານ, ແລະ ອ້ອຍ, ແມ່ນປູກໃນພື້ນທີ່ຂະໜາດໃຫຍ່ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດຕ່າງປະເທດ ແລະ ໂຮງງານປຸງແຕ່ງກະສິກຳພາຍໃນ. ກົງກັນຂ້າມ, ພືດຢືນຕົ້ນທີ່ປູກແມ່ນຈະຕິດພັນກັບການລົງທຶນຂະໜາດໃຫຍ່ ແລະ ຕາມປົກກະຕິໂດຍຊາວກະສິກອນຜູ້ທີ່ມີພື້ນທີ່ການຜະລິດ ແລະ ທຶນຮອນພຽງພໍ ຫຼື ໂດຍນັກລົງທຶນຕ່າງປະເທດ. ຈາກນະໂຍບາຍ ແລະ ແຜນພັດທະນາຕ່າງໆທັງພາຍໃນ ແລະ ສາກົນ ສະໜັບສະໜູນໃຫ້ມີການປູກພືດຢືນຕົ້ນຕ່າງໆເພື່ອການຄ້າເພີ່ມຂຶ້ນ, ໃນນັ້ນມີ ຢາງພາລາ ແລະ ກາເຟ (ຕົວຢ່າງ, ຜ່ານຍຸດທະສາດ "ການຫັນທີ່ດິນເປັນທຶນ" ທີ່ກະຕຸ້ນໃຫ້ມີການລົງທຶນໃນທີ່ດິນຫຼາຍຂຶ້ນ).

ການອະທິບາຍຮູບແບບ ໃນປີ 2011

ແຜນທີ່ທັງສອງສະບັບສະແດງເຖິງອັດຕາສ່ວນຂອງພືດຢືນຕົ້ນຕໍ່ພືດລົ້ມລຸກໃນລະດູຝົນປີ 2010 ໃນສາມລະດັບຂັ້ນການຄຸ້ມຄອງທີ່ແຕກຕ່າງກັນ. ໃນຫຼາຍເຂດສ່ວນໃຫຍ່ແລ້ວ, ສັດສ່ວນຂອງທີ່ດິນ ແມ່ນຈະເນັ້ນໃສ່ການປູກພືດລົ້ມລຸກຫຼາຍກວ່າປູກພືດຢືນຕົ້ນ. ແຕ່ວ່າ, ອັດຕາສ່ວນການປູກພືດຢືນຕົ້ນຕໍ່ພືດລົ້ມລຸກໃນແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ ແລະ ບໍ່ແກ້ວ ໃນເຂດພາກເໜືອ, ແລະ ກໍເຊັ່ນດຽວກັນໃນພາກໃຕ້ເຂດພູພຽງບໍລະເວນ, ຢູ່ແຂວງຈຳປາສັກ, ເຊກອງ ແລະ ສາລະວັນ ແມ່ນປະກົດເຫັນມີຫຼາຍກວ່າ ແຂວງອື່ນໆ. ຂໍ້ມູນເພີ່ມເຕີມກ່ຽວກັບການນຳໃຊ້ທີ່ດິນກະສິກຳທັງໝົດເປັນເຮັກຕາຕໍ່ແຂວງແມ່ນສະແດງໃຫ້ເຫັນໂດຍຂະໜາດຂອງວົງກົມທີ່ແຕກຕ່າງກັນ.

ລາຍລະອຽດເພີ່ມເຕີມ ສາມາດເຫັນໄດ້ໃນຂັ້ນເມືອງ, ມີພຽງແຕ່ 4 ເມືອງໃນຈຳນວນທັງໝົດ 143 ເມືອງໃນ ສປປ ລາວ ມີອັດຕາສ່ວນການປູກພືດຢືນຕົ້ນສູງກວ່າພືດລົ້ມລຸກ, ຄື ເມືອງປາກຊ່ອງ ໃນເຂດພູພຽງບໍລະເວນ, ເມືອງທ່າແຕງ ແຂວງເຊກອງ, ແລະ ເມືອງບຸນເໜືອ ແລະ ເມືອງຜົ້ງສາລີໃນເຂດທາງພາກເໜືອສຸດຂອງປະເທດ. ນອກຈາກນີ້ ໃນອີກ 6 ເມືອງ, ທີ່ຕັ້ງໃນສອງເຂດເຫຼົ່ານີ້, ມີປະລິມານທີ່ດິນເກືອບເທົ່າກັນທີ່ເນັ້ນທັງການປູກພືດຢືນຕົ້ນ ແລະ ພືດລົ້ມລຸກ.

ອັດຕາສ່ວນເນື້ອທີ່ການປູກພືດຢືນຕົ້ນ ແລະ ພືດລົ້ມລຸກ ສາມາດເຫັນໄດ້ລາຍລະອຽດທີ່ຈະແຈ້ງຂຶ້ນໃນຂັ້ນບ້ານ ແລະ ເຫັນໄດ້ຢ່າງພົ້ນເດັ່ນໃນເຂດພາກເໜືອສຸດຂອງ ສປປ ລາວ ທີ່ມີຊາຍແດນຕິດຈອດກັບປະເທດຈີນ ເຊັ່ນ: ແຂວງຫຼວງນ້ຳທາ ໄດ້ມີການລົງທຶນຫຼາຍໃສ່ໃນການປູກຢາງພາລາ (ເບິ່ງ ຄ20) ແລະ ຮອງລົງມາເປັນການປູກໝາກແໜ່ງ ແລະ ຊາ ໃນແຂວງຜົ້ງສາລີ (ເບິ່ງ ຄ23 ແລະ ຄ24), ສະນັ້ນອັດຕາສ່ວນຂອງເນື້ອທີ່ປູກພືດຢືນຕົ້ນໃນເຂດເຫຼົ່ານີ້ ຈຶ່ງສູງກວ່າ. ກິດຈະກຳການຜະລິດກະສິກຳ ໃນເຂດພູພຽງບໍລະເວນ ແມ່ນສຸມໃສ່ການປູກກາເຟຢ່າງກວ້າງຂວາງ (ເບິ່ງ ຄ21), ແຕ່ກໍມີການປູກໝາກແໜ່ງໃນບາງສ່ວນ ເຊັ່ນກັນ, ດັ່ງນັ້ນ ອັດຕາສ່ວນຂອງພື້ນທີ່ການປູກພືດຢືນຕົ້ນຈຶ່ງມີສູງເຊັ່ນດຽວກັນ.

ການອະທິບາຍຜົນຂອງຮູບແບບ

ເນື່ອງຈາກຊາວກະສິກອນຂະໜາດນ້ອຍມີພື້ນທີ່ດິນຖືຄອງ ແລະ ທຶນຮອນທີ່ຈຳກັດສ່ວນໃຫຍ່ຈະເລືອກປູກ ພືດລົ້ມລຸກຫຼາຍກວ່າພືດຢືນຕົ້ນເພື່ອຕອບສະໜອງຄວາມຕ້ອງການຊີວິດປະຈຳວັນຂອງພວກເຂົາ ແລະ ຫາລາຍຮັບເພີ່ມ. ພືດຢືນຕົ້ນປົກກະຕິຕ້ອງການການລົງທຶນທີ່ສູງກວ່າ, ຄວາມຮູ້ທາງດ້ານວິຊາການສະເພາະດ້ານ ແລະ ການຈັດການຄຸ້ມຄອງທີ່ແນ່ນອນ, ແລະ ການເຂົ້າເຖິງຕະຫຼາດ ເພື່ອຮັບປະກັນຜົນຕອບແທນທາງດ້ານການເງິນທີ່ເໝາະສົມ. ພືດຢືນຕົ້ນກໍຍັງຕ້ອງໃຊ້ໄລຍະເວລາປູກທີ່ຍາວນານກວ່າ , ເຊິ່ງເປັນການເພີ່ມຄວາມສ່ຽງ ເມື່ອສົມທຽບກັບພືດລົ້ມລຸກ.

ຄວາມຕ້ອງການສຳລັບພືດຢືນຕົ້ນຕ່າງໆ ແມ່ນເພີ່ມຂຶ້ນທັງໃນຕະຫຼາດພາຍໃນ ແລະ ຕ່າງປະເທດ. ຕົວຂັບເຄື່ອນສຳລັບການເພີ່ມຂຶ້ນຂອງຄວາມຕ້ອງການແມ່ນກ່ຽວພັນເຖິງນະໂຍບາຍພາຍໃນປະເທດ ແລະ ຕ່າງປະເທດ, ການຄ້າໂລກ, ການເຕີບໂຕຂອງປະຊາກອນ, ແລະ ການປ່ຽນແປງພຶດຕິກຳການບໍລິໂພກຂອງປະຊາກອນ. ຍ້ອນຂະບວນການ ເຫຼົ່ານີ້, ຄົວເຮືອນກະສິກຳໃນເຂດພາກເໜືອຂອງ ສປປ ລາວ ແລະເຂດພູພຽງບໍລະເວນໄດ້ຫັນເອົາທີ່ດິນທຳການຜະລິດຂອງເຂົາເຈົ້າມາປູກພືດຢືນຕົ້ນ, ໂດຍສະເພາະແມ່ນຢາງພາລາ ແລະ ກາເຟ, ຊຶ່ງຕະຫຼາດປະເທດເພື່ອນບ້ານມີຄວາມຕ້ອງການສູງ.

ຄ 1 ອັດຕາສ່ວນຂອງພືດຢືນຕົ້ນ ຕໍ່ ພືດລົ້ມລຸກລະດູຝົນ



ຄ 2 ເນື້ອທີ່ ແລະ ຈຳນວນຄົວເຮືອນທີ່ປູກພືດລົ້ມລຸກ ແລະ ພືດຢືນຕົ້ນ

ພາກສະເໜີ

ໃນທົດສະວັດທີ່ຜ່ານມາ, ລະບົບການປູກພືດຂອງຄົວເຮືອນໃນ ສປປ ລາວ ແມ່ນມີຄວາມຫຼາກຫຼາຍຂຶ້ນເລື້ອຍໆໂດຍທີ່ຊາວກະສິກອນໃນປະຈຸບັນໄດ້ປູກພືດຫຼາກຫຼາຍຊະນິດນອກຈາກເຂົ້າ. ຈາກ ປີ 1999 ເຖິງປີ 2011, ລາຄາພືດເສດຖະກິດບາງຊະນິດແມ່ນໄດ້ເພີ່ມຂຶ້ນ, ບາງຊະນິດກໍຄືງທີ່ ແລະ ບາງຊະນິດຫຼຸດລົງ, ແຕ່ໂດຍທົ່ວໄປ ແມ່ນມີການປູກພືດເສດຖະກິດ ທີ່ເພີ່ມຂຶ້ນ.

ໃນຂອບເຂດທົ່ວປະເທດພື້ນທີ່ການຜະລິດຂອງທັງພືດລົ້ມລຸກ ແລະ ພືດຢືນຕົ້ນ ແມ່ນມີການເພີ່ມຂຶ້ນຢ່າງຫຼວງຫຼາຍ ນັບຕັ້ງແຕ່ ປີ 1999 ເຖິງ 2011. ແລະ ໃນຂະນະທີ່ພືດຢືນຕົ້ນຫຼາຍຊະນິດໄດ້ມີການປູກເພີ່ມຂຶ້ນ, ແຕ່ເນື້ອທີ່ດິນກະສິກຳສ່ວນໃຫຍ່ຖືກນຳໃຊ້ປູກພືດລົ້ມລຸກທັງເພື່ອການບໍລິໂພກໃນຄອບຄົວ ແລະ ເພື່ອຂາຍ. ປະມານ 95% ຂອງຄົວເຮືອນກະສິກຳໃນ ສປປ ລາວ ໄດ້ປູກພືດລົ້ມລຸກໃນເນື້ອທີ່ປະມານ 1.19 ລ້ານ ຮຕ, ໃນນີ້ຈຳນວນ 0.94 ລ້ານ ຮຕ (ຫຼື 79%) ໄດ້ຖືກນຳໃຊ້ໃນການປູກເຂົ້າ. ປະມານ 47% ຂອງຄົວເຮືອນກະສິກຳ ປູກພືດຢືນຕົ້ນ ໃນເນື້ອທີ່ທັງໝົດ 0.15 ລ້ານ ຮຕ.

ການອະທິບາຍຮູບແບບ ໃນປີ 2011

ແຜນທີ່ I: ສະແດງຄົວເຮືອນກະສິກຳ ປູກພືດລົ້ມລຸກ ໃນລະດູຝົນ, ລະດູແລ້ງ ຫຼື ທັງສອງລະດູ. ຮູບເຄິ່ງວົງກົມ ໃນແຜນທີ່ສະແດງໃຫ້ເຫັນເຖິງຈຳນວນເນື້ອທີ່ປູກພືດລົ້ມລຸກໃນລະດູຝົນ ແລະ ລະດູແລ້ງ. ເນື້ອທີ່ປູກພືດລົ້ມລຸກທົ່ວປະເທດມີປະມານ 1,200,000 ຮຕ, ໃນນັ້ນຫຼາຍກວ່າ 1,100,000 ຮຕ ຖືກນຳໃຊ້ເຂົ້າໃນການປູກພືດໃນຊ່ວງລະດູຝົນ ປີ 2010 ແລະ ມີພຽງແຕ່ 100,000 ຮຕ ໃນລະດູແລ້ງ ປີ 2010/2011. ປະມານ 43% ຂອງຈຳນວນບ້ານທັງໝົດໃນ ສປປ ລາວ ໄດ້ນຳໃຊ້ທີ່ດິນກະກຳຂອງພວກເຂົາຫຼາຍກວ່າ 95% ເຂົ້າໃນການປູກພືດລົ້ມລຸກ. ຕົວຢ່າງ, ໃນແຂວງສະຫວັນນະເຂດ, 207,200 ຮຕ ຖືກນຳໃຊ້ເຂົ້າໃນການ ປູກພືດລົ້ມລຸກໃນລະດູຝົນ ແລະ 13,200 ຮຕ ໃນລະດູແລ້ງ.

ແຜນທີ່ II: ຕາມແຜນທີ່ໃຫຍ່ຂອງ ຂັ້ນບ້ານສະແດງໃຫ້ເຫັນ, ຫຼາຍກວ່າ 99% ຂອງຄົວເຮືອນທັງໝົດປູກພືດລົ້ມລຸກທັງສອງລະດູ. ກົງກັນຂ້າມ, 125 ບ້ານໃນພາກຕະເວັນອອກຂອງເມືອງປາກເຊ, ເຂດພູພຽງບໍລະເວນ, ທີ່ມີການປູກພືດຍືນຕົ້ນຫຼາຍ, ມີພຽງ 0–20% ຂອງຄົວເຮືອນປູກພືດລົ້ມລຸກທັງສອງລະດູ. ໃນຂອບເຂດທົ່ວປະເທດ, ມີເກືອບເຖິງ 727,000 ຄົວເຮືອນ ປູກພືດລົ້ມລຸກໃນລະດູຝົນປີ 2010 ແລະ ນອກຈາກນີ້ 302,000 ຄົວເຮືອນ ປູກໃນລະດູແລ້ງ 2010/2011. ຕົວຢ່າງ, ຢູ່ແຂວງຫຼວງພະບາງ ຈຳນວນ 56,000 ຄົວເຮືອນ ປູກພືດລົ້ມລຸກໃນລະດູຝົນ ແລະ 12,800 ຄົວເຮືອນປູກໃນລະດູແລ້ງ.

ແຜນທີ່ III: ໃນຂະນະທີ່ພືດຍືນຕົ້ນ ຖືກປູກໃນຂອບເຂດທົ່ວປະເທດ, ແຕ່ມີພືດຢືນຕົ້ນເສດຖະກິດພຽງ 2–3 ຊະນິດ (ໂດຍສະເພາະ ຢາງພາລາ ແລະ ກາເຟ) ທີ່ປູກຫຼາຍສະເພາະໃນເຂດໃດໜຶ່ງຂອງປະເທດ. ມີອັດຕາສ່ວນສູງຂອງຄົວເຮືອນທີ່ປູກພືດຢືນຕົ້ນທີ່ພົບເຫັນຢູ່ໃນເຂດລຽບຕາມຊາຍແດນກັບ ສປ ຈີນ ແລະ ເຂດພູພຽງບໍລະເວນ. ຕົວຢ່າງ, ໃນເຂດທາງໃຕ້ສຸດກໍ່ຄື ແຂວງຈຳປາສັກມີເນື້ອທີ່ປູກພືດຢືນຕົ້ນ 33,900 ຮຕ (ສ່ວນໃຫຍ່ແມ່ນປູກກາເຟ), ສ່ວນເນື້ອທີ່ 15,900 ຮຕ ທີ່ປູກຢາງພາລາ, ໝາກແໜ່ງ ແລະ ຊາ ແມ່ນປູກຢູ່ແຂວງຜົ້ງສາລີ, ແລະ ຢາງພາລາ 18,500 ຮຕ ແມ່ນປູກຢູ່ແຂວງຫຼວງນ້ຳທາ. ສ່ວນໃຫຍ່ບ້ານໄດ້ຮັກສາດິນເພື່ອປູກພືດຢືນຕົ້ນໃນສັດສ່ວນທີ່ຂອນຂ້າງຕ່ຳ. ລວມແລ້ວມີທັງໝົດ 6,046 ບ້ານທີ່ມີສັດສ່ວນກວມເຖິງ 5% ຂອງເນື້ອທີ່ດິນກະສິກຳຂອງພວກເຂົາ ໄດ້ໃຊ້ເຂົ້າໃນການປູກພືດຢືນຕົ້ນ. ກົງກັນຂ້າມ, ມີ 55 ບ້ານ, ສ່ວນໃຫຍ່ ແມ່ນຢູ່ເຂດພູພຽງບໍລະເວນ ແລະ ເຂດພາກເໜືອລຽບຕາມເຂດຊາຍແດນ ສປ ຈີນ, ໄດ້ນຳໃຊ້ທີ່ດິນກະສິກຳ ຫຼາຍກວ່າ 95% ໃນການປູກພືດຢືນຕົ້ນ.

ແຜນທີ່ IV: ມີຮູບແບບຄ້າຍຄືກັນໃນສັດສ່ວນຂອງຄົວເຮືອນ ທີ່ປູກພືດຢືນຕົ້ນ. ໂດຍສະເລ່ຍ, ໃນທົ່ວທຸກແຂວງ ປະມານ 47% ຂອງຄົວເຮືອນທັງໝົດທີ່ທຳການຜະລິດກະສິກຳໄດ້ປູກພືດຢືນຕົ້ນ. ຕົວຢ່າງ, ໃນແຂວງ ບໍລິຄຳໄຊ ມີພຽງ 6,400 ຄົວເຮືອນ ປູກພືດຢືນຕົ້ນ, ກວມເອົາພຽງແຕ່ 18% ຂອງຄົວເຮືອນກະສິກຳທັງໝົດ. ກົງກັນຂ້າມ ໃນແຂວງຈຳປາສັກ, ມີ 45,300 ຄົວເຮືອນ ກ່ຽວພັນກັບການປູກພືດຢືນຕົ້ນ, ເຊິ່ງປະກອບດ້ວຍ 60% ຂອງຄົວເຮືອນກະສິກຳທັງໝົດ ພາຍໃນແຂວງ.

ການອະທິບາຍຜົນຂອງຮູບແບບ

ໂດຍທົ່ວໄປແລ້ວ ພືດລົ້ມລຸກ ໃນ ສປປ ລາວ ແມ່ນປູກໃນຊ່ວງລະດູຝົນໃນເນື້ອທີ່ຮັບນ້ຳຝົນ, ແຕ່ວ່າມີຫຼາຍພື້ນທີ່ ທີ່ມີເຖື່ອນໄຂເຂົ້າເຖິງລະບົບຊົນລະປະທານ ສາມາດທຳການຜະລິດໄດ້ໃນຊ່ວງລະດູແລ້ງ. ປົກກະຕິແລ້ວ ການປູກພືດລົ້ມລຸກ ແມ່ນປູກໃນເນື້ອທີ່ຂະໜາດນ້ອຍ, ສ່ວນໜຶ່ງແມ່ນນຳໃຊ້ບໍລິໂພກພາຍໃນຄົວເຮືອນ ແລະ ສ່ວນທີ່ເຫຼືອ ແມ່ນຂາຍ. ໃນຊ່ວງຫຼາຍປີຜ່ານມາ, ຢ່າງໃດກໍຕາມ, ພືດລົ້ມລຸກຫຼາຍຊະນິດ (ເຊັ່ນ: ສາລີ ແລະ ມັນຕົ້ນ) ໄດ້ປູກໃນເນື້ອທີ່ຂະໜາດໃຫຍ່ຮອງຮັບເສດຖະກິດຕະຫຼາດ ແລະ ຕອບສະໜອງຄວາມຕ້ອງການຂອງຕະຫຼາດທີ່ເພີ່ມຂຶ້ນ.

ການປູກພືດຢືນຕົ້ນໃນ ສປປ ລາວ ປົກກະຕິແລ້ວແມ່ນກ່ຽວພັນກັບການລົງທຶນຂະໜາດໃຫຍ່, ດັ່ງນັ້ນ ການປູກພືດເຫຼົ່ານີ້ສ່ວນໃຫຍ່ຈຶ່ງຖືກລົງທຶນໂດຍຄົວເຮືອນກະສິກຳທີ່ມີທີ່ດິນ ແລະ ຕົ້ນທຶນພໍພຽງ ລວມທັງນັກລົງທຶນຈາກຕ່າງປະເທດ (ຫຼັກໆຄື ບໍລິສັດຄົນຈີນ, ຫວຽດນາມ ແລະ ໄທ). ຢ່າງໃດກໍຕາມ, ຂໍ້ມູນຈາກການສຳຫຼວດນີ້ກວມພຽງແຕ່ຄົວເຮືອນກະສິກຳຂອງລາວເທົ່ານັ້ນ, ດັ່ງນັ້ນ ການລົງທຶນຂະໜາດໃຫຍ່ ແລະ ສວນປູກຂອງບໍລິສັດນັ້ນແມ່ນບໍ່ໄດ້ເກັບກຳ.

ຄ 2 ເນື້ອທີ່ ແລະ ຈຳນວນຄົວເຮືອນທີ່ປູກພືດລົ້ມລຸກ ແລະ ພືດຢືນຕົ້ນ









ຄ 3 ຄວາມຫຼາກຫຼາຍຂອງພືດ

ພາກສະເໜີ

ສປປ ລາວ ມີຊັບພະຍາກອນດ້ານຊີວະນາໆພັນກະສິກຳທີ່ອຸດົມສົມບູນທີ່ສຸດແຫ່ງໜຶ່ງຂອງໂລກ ຊຶ່ງມີພືດ ແລະ ສັດ ຫຼາຍກວ່າ 100 ສາຍພັນ ທີ່ກຳລັງມີການຖືກນຳໃຊ້ ແລະ ລະຫວ່າງ 1,000–2,000 ສາຍພັນພືດ ແລະ ສັດ ກຳລັງຖືກເກັບຮັກສາເພື່ອເປັນອາຫານ ແລະ ເພື່ອຈຸດປະສົງອື່ນໆ. ສປປ ລາວ ຍັງອຸດົມໄປດ້ວຍຊີວະນາໆພັນຈຳນວນຫຼາຍ ລວມມີ 8,000–11,000 ສາຍພັນພືດໃຫ້ດອກ ແລະ ເປັນຄັງສະສົມຂອງແນວພັນເຂົ້າໜຽວຫຼາຍທີ່ສຸດແຫ່ງໜຶ່ງໃນທະວີບອາຊີລວມທັງສາຍພັນເຊື້ອເຫັດຊະນິດຕ່າງໆທີ່ບໍ່ສາມາດກຳນົດຈຳນວນໄດ້. ຊາວກະສິກອນລາວ ປູກພືດລົ້ມລຸກ ແລະ ພືດຢືນຕົ້ນ ຕອບສະໜອງຕໍ່ການເຊື່ອມຈອດກັບຕະຫຼາດທ້ອງຖິ່ນ ແລະ ສາກົນ. ການສຳຫຼວດສະຖິຕິກະສິກຳ ສົກປີ 2010/11 ສະແດງໃຫ້ເຫັນວ່າລວມແລ້ວ ໃນ ສປປ ລາວ ໄດ້ມີການຜະລິດພືດລົ້ມລຸກຫຼາຍກວ່າ 100 ຊະນິດ ແລະ ພືດຢືນຕົ້ນຫຼາຍກວ່າ 80 ຊະນິດ. ພືດລົ້ມລຸກຫຼັກທີ່ປູກແມ່ນ ເຂົ້າ, ພືດອາຫານສັດ (ສ່ວນໃຫຍ່ແມ່ນສາລີແຂງ), ສາລີຫວານ, ມັນຕົ້ນ, ໝາກເຜັດ, ໝາກເດືອຍ, ຜັກກາດ, ຖົ່ວເຫຼືອງ, ໝາກງາ, ໝາກແຕງ ແລະ ໝາກອຶ, ອ້ອຍ, ຢາສູບ, ຖົ່ວດິນ, ແລະ ໝາກໂມ. ພືດຢືນຕົ້ນສຳຄັນທີ່ປູກ ແມ່ນໝາກມ່ວງ, ຢາງພາລາ, ກ້ວຍ, ໝາກພ້າວ, ກາເຟ, ຊາ, ໝາກຂາມ, ໝາກນັດ, ໝາກແໜ່ງ, ໝາກໝັ້ນ, ໝາກກ້ຽງນ້ອຍ ແລະ ໝາກກ້ຽງໃຫຍ່, ໝາກມີ້, ແລະ ໝາກເຍົາ. ເສັ້ນສະແດງ 3 ສະແດງເນື້ອທີ່ປູກພືດລົ້ມລຸກທັງໝົດ (ຍົກເວັ້ນເຂົ້າ) ແລະ ເນື້ອທີ່ປູກພືດຢືນຕົ້ນທັງໝົດ ແລະ ສ່ວນແບ່ງຂອງພືດລົ້ມລຸກ ແລະ ພືດຢືນຕົ້ນ.

ການອະທິບາຍຮູບແບບ ໃນປີ 2011

ພົນລະເມືອງຂອງ ສປປ ລາວ ສ່ວນໃຫຍ່ ປະກອບດ້ວຍຫຼາຍກຸ່ມຊົນເຜົ່າ–ພາສາທີ່ມີຄວາມຫຼາກຫຼາຍດ້ານວິຖີການດຳລົງຊີວິດ ແລະ ລະບົບການຜະລິດກະສິກຳທີ່ແຕກຕ່າງກັນ. ດັ່ງທີ່ເຫັນໄດ້ໃນແຜນທີ່ໃຫຍ່, ມີຄວາມແຕກຕ່າງກັນຫຼາຍຂອງປະເພດພືດຕ່າງໆ (ສະແດງໂດຍຈຸດສີດຳໃນຂະໜາດຕ່າງກັນ) ທີ່ປູກຢູ່ຂັ້ນບ້ານ ໃນຂອບເຂດທົ່ວປະເທດ – ຈຳນວນພືດທີ່ປູກຫຼາຍທີ່ສຸດໃນໜຶ່ງບ້ານມີເຖິງ 87 ຊະນິດ. ມີ 78% ຂອງບ້ານທັງໝົດ (6,744 ບ້ານ) ທີ່ປູກພືດໃນຈຳນວນໜ້ອຍກວ່າ 30 ຊະນິດ ແຕ່ໃນຂະນະດຽວກັນ ມີ 22% ຂອງບ້ານທັງໝົດ (1,869 ບ້ານ) ທີ່ປູກພືດຫຼາຍກວ່າ 30 ຊະນິດ. ດັ່ງທີ່ແຜນທີ່ໄດ້ສະແດງໃຫ້ເຫັນ, ຄົວເຮືອນສ່ວນໃຫຍ່ປູກພືດບໍ່ເກີນ 5 ຊະນິດ ແຕ່ ໃນບາງບ້ານ ຊາວກະສິກອນ ປູກພືດເຖິງ 25 ຊະນິດ ໂດຍສະເລ່ຍ.

ແຜນທີ່ນ້ອຍ ສະແດງຈຳນວນພືດສະເລ່ຍຕໍ່ຄົວເຮືອນໃນລະດັບເມືອງ. ພື້ນທີ່ຢູ່ເຂດໄກສຸດຂອງພາກຕະເວັນອອກສ່ຽງໃຕ້ ແລະ ພາກເໜືອສຸດຂອງ ສປປ ລາວ ແມ່ນເຂດທີ່ມີຊີວະນາໆພັນກະສິກຳ ຫຼາກຫຼາຍ ແລະ ປູກພືດໂດຍສະເລ່ຍ 8 ຊະນິດ ຫຼື ຫຼາຍກວ່າ ຕໍ່ຄົວເຮືອນ. ຕົວຢ່າງ, ໃນແຂວງອັດຕະປື ໂດຍສະເລ່ຍປະມານ 20% ຂອງທັງໝົດ 150 ບ້ານ ຢູ່ໃນແຂວງ ມີການປູກ 1–30 ຊະນິດພືດທີ່ແຕກຕ່າງກັນ, 70% ມີການປູກ 31–60 ຊະນິດພືດ ແລະ 10% ມີການປູກ 61–87 ຊະນິດພືດ. ອີກຕົວຢ່າງໜຶ່ງ, ຄືໃນແຂວງຫົວພັນ ທີ່ເກືອບທັງໝົດ 98% ຂອງບ້ານຢູ່ໃນແຂວງ ມີການປູກ 1–30 ຊະນິດພືດ ແລະ ສ່ວນທີ່ເຫຼືອ 2% ມີການປູກ 31–60 ຊະນິດພືດທີ່ແຕກຕ່າງກັນ.

ການອະທິບາຍຜົນຂອງຮູບແບບ

ເຖິງວ່າຈະມີການປ່ຽນແປງດ້ານເສດຖະກິດທີ່ສຳຄັນ ໃນຫຼາຍທົດສະວັດທີ່ຜ່ານມາ ສປປ ລາວ ຍັງເປັນສັງຄົມທີ່ອາໄສການຜະລິດກະສິກຳເພື່ອກຸ້ມກິນເປັນຫຼັກ ເຖິງວ່າມີການ ພັດທະນາເສດຖະກິດທີ່ພົ້ນເດັ່ນໃນໄລຍະ 2 ທົດສະວັດທີ່ຜ່ານມາ. ປະຊາຊົນ ໃນເຂດຊົນນະບົດ ຍັງອາໄສແຫຼ່ງຊັບພະຍາກອນຊີວະນາໆພັນກະສິກຳ ສຳລັບການດຳລົງຊີວິດຂອງເຂົາເຈົ້າ. ດັ່ງທີ່ອະທິບາຍມາຂ້າງເທິງນັ້ນ ແລະ ພາບປະກອບໃນແຜນທີ່, ສ່ວນໃຫຍ່ຂອງຄົວເຮືອນກະສິກຳ ຍັງຄົງໃຊ້ຈຳນວນພືດຫຼາຍຊະນິດ ໃນກິດຈະກຳການກະເສດເພື່ອຮັບປະກັນດ້ານສະບຽງອາຫານ, ການບໍລິໂພກອາຫານທີ່ຫຼາກຫຼາຍ ແລະ ເພີ່ມຄຸນຄ່າດ້ານໂພສະນາການ ພ້ອມທັ້ງ ເພີ່ມລາຍຮັບຂອງເຂົາເຈົ້າ. ດັ່ງນັ້ນ, ຊີວະນາໆພັນກະສິກຳແມ່ນມີຄວາມສຳຄັນຍິ່ງ ສຳລັບຄົນທຸກຍາກ ແລະ ມີບົດບາດສຳຄັນ ໃນການຫຼຸດຜ່ອນຄວາມທຸກຍາກ. ຢ່າງໃດກໍຕາມ, ແນວໂນ້ມຂອງລະບົບການປູກແບບ ປູກພືດຊະນິດດຽວ ເພື່ອການຜະລິດເປັນສິນຄ້າໃນບາງເຂດ ໄດ້ສົ່ງຜົນໃຫ້ ຄວາມຫຼາກຫຼາຍ ຂອງການປູກພືດ (ໂດຍສະເພາະພືດຢືນຕົ້ນ) ໄດ້ຫຼຸດລົງ ແລະ ເພີ່ມຜົນກະທົບດ້ານລົບ ໃນໄລຍະຍາວ ຂອງການຜະລິດກະສິກຳ ຕໍ່ລະບົບນິເວດ ແລະ ຊັບພະຍາກອນດິນ ແລະ ປ່າໄມ້.

ເສັ້ນສະແດງ 3: ການກະຈາຍຂອງປະເພດພືດລົ້ມລຸກ ແລະ ພືດຢືນຕົ້ນຫຼັກ



ຄ 3 ຄວາມຫຼາກຫຼາຍຂອງພືດ



ຄ 4 ເຂົ້າໄຮ່

ພາກສະເໜີ

ເຂົ້າໄຮ່ ແມ່ນພືດຫຼັກທີ່ປູກຢູ່ໃນເຂດທາງພາກເໜືອ ແລະ ຢູ່ລຽບຕາມຊາຍແດນປະເທດຫວຽດນາມ, ຂະນະທີ່ເນື້ອທີ່ເຂົ້າໄຮ່ຢູ່ທາງພາກກາງ ແລະ ພາກໃຕ້ຂອງລາວແມ່ນປູກຂ້ອນຂ້າງໜ້ອຍ. ເຂົ້າໄຮ່ ເປັນ ພືດທີ່ປູກຢູ່ໃນເຂດພື້ນທີ່ຄ້ອຍຊັນ ແລະ ໂດຍສ່ວນຫຼາຍແລ້ວຈະປູກໃນລະດູຝົນເທົ່ານັ້ນ. ຕາມປົກກະຕິ ຊາວກະສິກອນສ່ວນຫຼາຍປູກເຂົ້າໄຮ່ເພື່ອບໍລິໂພກກຸ້ມຕົນເອງ. ເຂົ້າໄຮ່ແມ່ນປູກແບບແບບເລື່ອນລອຍ ຫຼື ແບບໝູນວຽນແບບດັ້ງເດີມ ແລະ ສາມາດປູກປະສົມປະສານຮ່ວມກັບພືດຫຼາຍຊະນິດເພື່ອບໍລິໂພກ ພາຍໃນຄອບຄົວ ແລະ ສະໜອງໃຫ້ຕະຫຼາດ.

ເຂົ້າໄຮ່ ແມ່ນການປູກແບບເລື່ອນລອຍ, ປົກກະຕິແລ້ວໃນຮູບແບບໝູນວຽນໂດຍເລີ່ມຈາກການຖາງ ແລະ ຈູດ, ຢອດເມັດພັນເຂົ້າ, ເສຍຫຍ້າ ແລະ ຂັ້ນຕອນສຸດທ້າຍແມ່ນການເກັບກ່ຽວ (ການນຳໃຊ້ດິນຕອນໜຶ່ງ ປູກເຂົ້າປີດຽວເອີ້ນວ່າ “ໄຮ່ເລົ່າ” ຫຼື ການນຳໃຊ້ຕອນດິນໜຶ່ງປູກເຂົ້າສອງປີຕິດຕໍ່ກັນ: ປີທຳອິດເອີ້ນວ່າ: “ໄຮ່ເລົ່າ” ແລະ ປີທີສອງ ເອີ້ນວ່າ: “ໄຮ່ລືກ”), ຕາມດ້ວຍການປະເປັນປ່າເລົ່າໄລຍະໜຶ່ງ ຊຶ່ງຂຶ້ນກັບຄວາມສາມາດ ໃນການຟື້ນຟູຂອງຊີວະມວນ, ຄວາມອຸດົມສົມບູນຂອງດິນ ແລະ ຍັງຂຶ້ນກັບພື້ນທີ່ດິນທີ່ມີຢູ່ໃນເຂດນັ້ນໆ. ຕາມທີ່ເຄີຍປະຕິບັດໃນການປູກເຂົ້າໄຮ່ແມ່ນເລີ່ມຈາກການກະກຽມດິນຢູ່ໃນຊ່ວງເດືອນມັງກອນ ຫາ ເດືອນເມສາ, ການປູກລະຫວ່າງກາງເດືອນເມສາ ຫາເດືອນພຶດສະພາ, ການເສຍຫຍ້າໄຮ່ ຢູ່ລະຫວ່າງ ຊ່ວງເດືອນມິຖຸນາ ຫາ ເດືອນສິງຫາ ແລະ ການເກັບກ່ຽວແມ່ນໃນຊ່ວງເດືອນກັນຍາ ຫາ ເດືອນຕຸລາ, ໂດຍ ຂຶ້ນກັບໄລຍະເວລາຂອງການຈະເລີນເຕີບໂຕຂອງແນວພັນເຂົ້າໄຮ່. ການເສຍຫຍ້າໄຮ່ ແມ່ນເປັນໜ້າວຽກ ທີ່ລຳບາກທີ່ສຸດ ແລະ ທັງເປັນວຽກທີ່ໃຊ້ແຮງງານຫຼາຍໃນການປູກເຂົ້າໄຮ່. ປົກກະຕິແລ້ວຈະແມ່ນຜູ້ຍິງ ແລະ ເດັກນ້ອຍເປັນຜູ້ເສຍຫຍ້າໄຮ່ ລະຫວ່າງ 3 ຫາ 5 ເທື່ອ ຊຶ່ງຂຶ້ນກັບໄລຍະເວລາຂອງການປະເນື້ອທີ່ ເປັນປ່າເລົ່າຜ່ານມາ (*Linquist et al.*, 2006).

ການອະທິບາຍຮູບແບບ ໃນປີ 2011

ເນື້ອທີ່ປູກເຂົ້າໄຮ່ທັງໝົດໃນ ສປປ ລາວ ມີປະມານ 210,000 ຮຕ. ຢ່າງໃດກໍຕາມ, ຍັງມີບັນຫາດ້ານ ວິທີການໃນການປະເມີນເນື້ອທີ່ທີ່ແທ້ຈິງຂອງການເຮັດໄຮ່ແບບເລື່ອນລອຍ (*Messerli et al.*, 2009). ເນື່ອງຈາກວ່າ ເຂົ້າໄຮ່ ແມ່ນປູກໃນລະບົບໝູນວຽນ ເຊິ່ງລວມທັງພື້ນທີ່ປ່າເລົ່າ, ເນື້ອທີ່ປູກເຂົ້າໄຮ່ ທັງໝົດນີ້, ຂຶ້ນກັບໄລຍະເວລາຂອງປ່າເລົ່າ, ອາດຈະສູງກວ່າ 8 ຫາ 9 ເທື່ອ ຂອງເນື້ອທີ່ທັງໝົດ ທີ່ໄດ້ກ່າວມາຂ້າງເທິງນັ້ນ (ຂຶ້ນກັບໄລຍະເວລາການປະເປັນປ່າເລົ່າ).

ແຜນທີ່ຫຼັກສະແດງໃຫ້ເຫັນວ່າ ເມືອງທີ່ມີເນື້ອທີ່ປູກເຂົ້າໄຮ່ສູງສຸດແມ່ນ: ເມືອງຜາອຸດົມ ແຂວງບໍ່ແກ້ວ (5,600 ຮຕ), ເມືອງໄຊ ແຂວງອຸດົມໄຊ (4,700 ຮຕ) ແລະ ເມືອງ ນໍ້າບາກ ແຂວງຫຼວງພະບາງ (4,600 ຮຕ). ເຂົ້າໄຮ່ທີ່ປຸກໜ້ອຍກວ່າ ແມ່ນຢູ່ນອກເຂດພູດອຍເຊັ່ນ: ເຂດອ້ອມຂ້າງນະຄອນຫຼວງວຽງຈັນ ແລະ ລຽບຕາມແຄມແມ່ນໍ້າຂອງ ຈົນເຖິງພາກໃຕ້.

ແຜນທີ່ຫຼັກຍັງໄດ້ສະແດງໃຫ້ເຫັນສັດສ່ວນຂອງທີ່ດິນກະສິກຳທີ່ປູກເຂົ້າໄຮ່ຢູ່ຂັ້ນບ້ານ. ໃນປີ 2011 ມີຈຳນວນ 4,326 ບ້ານ ຫຼື ກວມເອົາເຄິ່ງໜຶ່ງຂອງຈຳນວນບ້ານທັງໝົດ ໃນ ສປປ ລາວ, ປູກເຂົ້າໄຮ່. ໂດຍສະເພາະ ຢູ່ເມືອງຜາອຸດົມ, ທີ່ມີຫຼາຍບ້ານໄດ້ນຳໃຊ້ພື້ນທີ່ຫຼາຍກວ່າ 75% ຂອງທີ່ດິນກະສິກຳທັງໝົດ ຂອງພວກເຂົາ ປູກເຂົ້າໄຮ່.

ມີ 240,000 ຄົວເຮືອນ ທີ່ປູກເຂົ້າໄຮ່ ເຊິ່ງກວມເອົາ 30% ຂອງ 781,600 ຄົວເຮືອນ ທັງໝົດທີ່ປະກອບ ອາຊີບກະສິກຳໃນທົ່ວປະເທດ. ແຂວງອຸດົມໄຊ ເປັນແຂວງທີ່ປູກເຂົ້າໄຮ່ຫຼາຍກວ່າໝູ່ ໂດຍມີ 25,507 ຄົວເຮືອນ ສ່ວນນະຄອນຫຼວງວຽງຈັນທີ່ເປັນເຂດຕົວເມືອງໃຫຍ່ທີ່ສຸດໃນສປປ ລາວ, ມີພຽງ 767 ຄົວເຮືອນ ກະສິກຳທີ່ປູກເຂົ້າໄຮ່ – ເປັນເຂດທີ່ມີຈຳນວນຄົວເຮືອນປູກເຂົ້າໄຮ່ຕໍ່າກ່ວາໝູ່.

ແຜນທີ່ໃນລະດັບເມືອງສະແດງໃຫ້ເຫັນເນື້ອທີ່ປູກເຂົ້າໄຮ່ສະເລ່ຍຕໍ່ຄົວເຮືອນ. ຢູ່ໃນສອງເມືອງ ຂອງນະຄອນຫຼວງວຽງຈັນ, ແລະ ຄົວເຮືອນ ຢູ່ເມືອງໄຊຍະບູລີ ໃນແຂວງສະຫວັນນະເຂດບໍ່ໄດ້ປູກ ເຂົ້າໄຮ່. ກົງກັນຂ້າມ, 7 ເມືອງມີເນື້ອທີ່ເຂົ້າໄຮ່ສະເລັ່ຍຫຼາຍກວ່າ 1.0 ຮຕ ຕໍ່ຄົວເຮືອນ, ຊຶ່ງທັງໝົດ ແມ່ນຢູ່ໃນພາກຕາເວັນຕົກ ສ່ຽງເໜືອ ຂອງ ສປປ ລາວ, ລວມທັງເມືອງຜາອຸດົມ ແຂວງບໍ່ແກ້ວ ທີ່ມີເນື້ອທີ່ ເຂົ້າໄຮ່ທັງໝົດກວ້າງທີ່ສຸດ ຄື 5,600 ຮັຕ. ເມືອງທີ່ມີເນື້ອທີ່ປູກເຂົ້າໄຮ່ ສະເລ່ຍຕໍ່ຄົວເຮືອນໜ້ອຍທີ່ສຸດ ສ່ວນໃຫຍ່ແມ່ນຕັ້ງຢູ່ໃນເຂດທົ່ງພຽງນັບແຕ່ນະຄອນຫຼວງວຽງຈັນລຽບສາຍແມ່ນໍ້າຂອງ, ລົງໄປຮອດ ທາງພາກໃຕ້.

ການອະທິບາຍສາຍເຫດທີ່ກໍ່ໃຫ້ມີການປ່ຽນແປງ

ການທີ່ມີການປູກເຂົ້າໄຮ່ຫຼາຍໃນເຂດພາກເໜືອ ແມ່ນເນື່ອງຈາກວ່າ ພູມສັນຖານໃນເຂດນັ້ນ ໂດຍສ່ວນໃຫຍ່ ແມ່ນເປັນພູສູງຊັນ ແລະ ພູດອຍ ຊຶ່ງມີເຂດທົ່ງພຽງໜ້ອຍທີ່ເໝາະສົມແກ່ການປູກເຂົ້ານາ ແລະ ມີທ່າແຮງຕໍ່າ ສຳລັບການພັດທະນາຊົນລະປະທານ. ກົງກັນຂ້າມ, ເນື່ອງຈາກມີຂໍ້ໄດ້ປຽບທີ່ມີພື້ນທີ່ ຮາບພຽງຫຼາຍກວ່າ ເໝາະສົມສຳລັບການປູກເຂົ້ານາທີ່ໃຊ້ນໍ້າຝົນ ແລະ ເຂົ້ານາທີ່ໃຊ້ນໍ້າຊົນລະປະທານ ໃນເຂດພາກກາງ ແລະ ພາກໃຕ້, ເຮັດໃຫ້ມີສັດສ່ວນຂອງການນຳໃຊ້ທີ່ດິນກະສິກຳ ເພື່ອປູກເຂົ້າໄຮ່ ຂ້ອນຂ້າງຕໍ່າ ໃນເຂດເຫຼົ່ານັ້ນ.

ຈຳນວນເນື້ອທີ່ປູກເຂົ້າໄຮ່ ໄດ້ເພີ່ມຂຶ້ນໜ້ອຍໜຶ່ງໃນທົ່ວ ສປປ ລາວ ຈາກ 199,197 ຮຕ ໃນປີ 1999 ເປັນ 212,009 ຮຕ ໃນປີ 2011. ຢ່າງໃດກໍຕາມ ຈຳນວນຂອງຄົວເຮືອນທີ່ປູກເຂົ້າໄຮ່ ແມ່ນໄດ້ຫຼຸດລົງຈາກ 260,000 ຄົວເຮືອນ ເປັນ 240,000 ຄົວເຮືອນ.

ສະຫຼຸບແລ້ວ, ຄວາມຖືກຕ້ອງຂອງການວັດແທກຕົວເລກສະຖິຕິກ່ຽວກັບເຂົ້າໄຮ່ເຫຼົ່ານີ້ອາດຈະໄດ້ຮັບຜົນ ກະທົບນັບຕັ້ງແຕ່ຄວາມພະຍາຍາມຂອງພາກລັດໃນຫຼາຍທົດສະວັດທີ່ຜ່ານມາໃນການທີ່ບໍ່ສົ່ງເສີມການປູກ ເຂົ້າໄຮ່ແບບເລື່ອນລອຍ, ຊຶ່ງມັນເປັນຫົວຂໍ້ທີ່ລະອຽດອ່ອນໃນການສຳພາດຄົວເຮືອນ. ໃນຊຸມປີ 1990 ລັດຖະບານລາວໂດຍໄດ້ຮັບການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາໄດ້ເລີ່ມຈັດຕັ້ງປະຕິບັດແຜນງານລຶບລ້າງການເຮັດໄຮ່ແບບເລື່ອນລອຍ. ການເຮັດໄຮ່ເລື່ອນລອຍແມ່ນໄດ້ຖືກພິຈາລະນາວ່າເປັນ ຮູບແບບການຜະລິດກະສິກຳທີ່ເກົ່າແກ່ຫຼ້າຫຼັງ ແລະ ເປັນການກີດຂວາງການພັດທະນາຂອງປະເທດ. ໃນຫຼາຍຂົງເຂດ, ເນື້ອທີ່ປູກເຂົ້າໄຮ່ ແມ່ນໄດ້ຖືກປ່ຽນແທນໂດຍການປູກພືດເສດຖະກິດ ເຊັ່ນ: ສາລີ, ຢາງພາລາ, ໝາກເດືອຍ, ກ້ວຍ ຫຼື ມັນຕົ້ນ ໃນຫຼາຍແຂວງພາກເໜືອ. ການປູກ ໂດຍໃຊ້ລະບົບໝູນວຽນດິນ 3 ຕອນ ແມ່ນໄດ້ຖືກນຳ ສະເໜີເຊັ່ນດຽວກັນ ແຕ່ວ່າລະບົບດັ່ງກ່າວນີ້ ໄດ້ເຮັດໃຫ້ຮອບວຽນປ່າເລົ່າ ສັ້ນລົງ, ມັນສົ່ງຜົນເຮັດໃຫ້ດິນ ເຊື່ອມໂຊມ, ເຊາະເຈື່ອນ ແລະ ເກີດມີວັດສະພືດ ແລະ ສັດຕູພືດ. ໃນປະຈຸບັນ ຄຳວ່າ “ການລຶບລ້າງ” ແມ່ນໄດ້ຖືກປ່ຽນແທນໂດຍຄຳວ່າ “ການເຮັດໃຫ້ຄົງທີ່” ເພື່ອສະທ້ອນເຖິງ ການປ່ຽນແປງໃນຫຼັກການ ຂອງລັດຖະບານ. ຢ່າງໃດກໍຕາມ, ການຄໍ້າປະກັນຄວາມໝັ້ນຄົງດ້ານສະບຽງ ອາຫານແມ່ນໜຶ່ງໃນນະໂຍບາຍທີ່ສຳຄັນຂອງລັດຖະບານ, ໂດຍສະເພາະ ຢູ່ໃນເຂດເນີນສູງ, ແລະ ເນື່ອງຈາກ ຂາດແຄນທາງເລືອກ, ການປູກຝັງແບບໝູນວຽນ ຍັງພໍອະນຸຍາດໃຫ້ໄດ້. ປະຈຸບັນ ຈຸດສຸມຂອງລັດຖະບານ ແມ່ນແນ່ໃສ່ປັບປຸງລະບົບການປູກເຂົ້າໄຮ່ໃຫ້ມີຄວາມຍືນຍົງ ແລະ ແທດເໝາະກັບສະພາບແວດລ້ອມ ຢູ່ໃນເຂດເນີນສູງ.



ສັດສ່ວນຂອງດິນກະສິກຳທີ່ປູກເຂົ້າໄຮ່
ໃນລະດັບບ້ານ (8643)
0 (4317)
> 0 - 10 % (1425)
> 10 - 25 % (864)
> 25 - 50 % (1007)
> 50 - 75 % (588)
> 75 - 95 % (334)
> 95 - 100 % (108)
ເນື້ອທີ່ປູກເຂົ້າໄຮ່ທັງໝົດ (ຂະໜາດ)
ຈຳນວນຄົວເຮືອນທັງໝົດແບ່ງຕາມ (ສີ)
ໃນລະດັບເມືອງ
5000 ຮຕ
2000 ຮຕ
1000 ຮຕ
ບໍ່ສະແດງ < 500 ຮຕ
> 100 - 500 ຄຮ
> 500 - 1000 ຄຮ
> 1000 - 2500 ຄຮ
> 2500 - 5084 ຄຮ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
0 50 100 150 km
ຄ່າສະເລ່ຍຂອງເນື້ອທີ່ຕໍ່ຄົວເຮືອນທີ່ປູກເຂົ້າໄຮ່
ໃນລະດັບເມືອງ (143)
0.0 ຮຕ / ຄຮ (3)
> 0.0 - 0.5 ຮຕ / ຄຮ (4)
> 0.5 - 1.0 ຮຕ / ຄຮ (85)
> 1.0 - 2.0 ຮຕ / ຄຮ (38)
> 2.0 - 3.0 ຮຕ / ຄຮ (9)
> 3.0 - 5.0 ຮຕ / ຄຮ (4)
0 100 200 300 km
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
2400000N
2200000N
2000000N
1800000N
1600000N

ຄ 5 ເຂົ້ານາປີ

ພາກສະເໜີ

ເຂົ້ານາປີ, ຫຼື ເອີ້ນອີກຢ່າງວ່າ ເຂົ້ານາທີ່ອາໄສນ້ຳຝົນ, ແມ່ນປູກຕາມທົ່ງນາທີ່ມີນ້ຳຖ້ວມຂັງ, ສ່ວນໃຫຍ່ແມ່ນຢູ່ໃນຂົງເຂດທົ່ງພຽງທີ່ລຽບຕາມແຄມແມ່ນ້ຳຂອງ ແຕ່ກໍມີຕາມຮ່ອມພູຕ່າງໆ, ພື້ນທີ່ຫຼຸບ ແລະ ເຂດທົ່ງພຽງໃນເຂດເນີນສູງ. ການປູກເຂົ້ານາປີ ປົກກະຕິແລ້ວ ແມ່ນເລີ່ມໃນຊ່ວງຕົ້ນຂອງລະດູຝົນ, ໂດຍມີການກຽມດິນ 2 ຄັ້ງ: ທຳອິດແມ່ນການໄຖຮຸດ ແລະ ຕາມດ້ວຍການໄຖຄາດ ຫຼື ໄຖດຳ. ການກຽມດິນສ່ວນໃຫຍ່ ແມ່ນໃຊ້ລົດໄຖນາເດີນຕາມ (ຕ໋ອກຕ໋ອກ), ຊຶ່ງໃຊ້ຢ່າງແຜ່ຫຼາຍແທນແຮງງານຄວາຍຢູ່ໃນຫຼາຍເຂດ. ເມັດພັນເຂົ້າ ແມ່ນໄດ້ປູກເພາະໄວ້ໃນໜານກ້າ, ຫຼັງຈາກນັ້ນຕົ້ນກ້າອ່ອນ ກໍຖືກຫຼົກອອກ ແລະ ຍ້າຍມາດຳໃນທົ່ງນາ, ຢ່າງໃດກໍດີ ການດຳ ອາດຈະມີການຊັກຊ້າອອກໄປ ຖ້າຫາກວ່າຝົນຕົກຊ້າ. ໄລຍະການເກັບກ່ຽວປົກກະຕິແມ່ນໃນລະຫວ່າງ ເດືອນຕຸລາ ຫາ ພະຈິກ, ຂຶ້ນກັບໄລະຍະການເຕີບໂຕຂອງແນວພັນທີ່ປູກ. ທົ່ງນາໃນເຂດທີ່ມີລະບົບຊົນລະປະທານແມ່ນຍັງໄດ້ນຳໃຊ້ນ້ຳຊົນລະປະທານເສີມໃນຊ່ວງແລ້ງຂອງລະດູຝົນ. ຫຼັງຈາກເກັບກ່ຽວເຂົ້ານາປີແລ້ວ, ໃນລະຫວ່າງລະດູແລ້ງ, ທົ່ງນາໃນເຂດທີ່ບໍ່ມີຊົນລະປະທານແມ່ນຖືກປະຖິ້ມໄວ້ໂດຍບໍ່ມີການເພາະປູກໃດໆ ແລະ ຖືກໃຊ້ເປັນບ່ອນລ້ຽງສັດແທນ, ໃນຂະນະທີ່ທົ່ງນາທີ່ຢູ່ໃນເຂດທີ່ມີຊົນລະປະທານແມ່ນຈະໃຊ້ປູກເຂົ້າ ຫຼື ພືດອື່ນໆ (ເຊັ່ນ ຢາສູບ).

ການອະທິບາຍຮູບແບບ ໃນປີ 2011

ເນື້ອທີ່ປູກເຂົ້ານາປີທັງໝົດມີປະມານ 735,000 ຮຕ, ແລະ ແຜນທີ່ຫຼັກ ສະແດງໃຫ້ເຫັນ, ສັດສ່ວນ ສ່ວນໃຫຍ່ແມ່ນປູກຢູ່ເຂດທົ່ງພຽງພາກກາງ ແລະ ທາງພາກໃຕ້ ຂອງ ສປປ ລາວ. ຈຸດ 4 ຫຼ່ຽມສີຂຽວແມ່ນບອກເຖິງເນື້ອທີ່ຂອງເຂົ້ານາປີ ຕໍ່ເມືອງ. ເມືອງຈຳພອນ, ແຂວງສະຫວັນນະເຂດ, ມີເນື້ອທີ່ຫຼາຍກວ່າໝູ່ເຖິງ 26,400 ຮຕ, ກວມເອົາເກືອບ ¼ ຂອງພື້ນທີ່ທັງໝົດຂອງເມືອງ (ເນື້ອທີ່ດິນຂອງເມືອງ ມີ 106,500 ຮຕ). ແຂວງສະຫວັນນະເຂດ ຂຶ້ນຊື່ເປັນແຂວງທີ່ປູກເຂົ້າຫຼາຍທີ່ສຸດຂອງ ສປປ ລາວ, ລວມທັງໝົດມີເກືອບຮອດ 200,000 ຮຕ (ກວມເອົາ 27% ຂອງເນື້ອທີ່ເຂົ້ານາປີ ທັງໝົດ). ສຳລັບບັນດາເມືອງໃນແຂວງອື່ນໆທີ່ຢູ່ອ້ອມຂ້າງແຂວງສະຫວັນນະເຂດ ກໍມີເນື້ອທີ່ປູກເຂົ້ານາປີທີ່ກວ້າງຂວາງເຊັ່ນດຽວກັນ, ຍົກເວັ້ນ ເມືອງປາກຊ່ອງ ໃນເຂດພູພຽງບໍລະເວນ ຂອງແຂວງຈຳປາສັກ (ທີ່ປູກກາເຟເປັນສ່ວນໃຫຍ່) ແລະ ຕາມບໍລິເວນເຂດພູສູງຢູ່ທາງພາກຕາເວັນອອກ, ໂດຍສະເພາະ ແຂວງເຊກອງ.

ມີສັດສ່ວນຂອງຄົວເຮືອນຕ່າງກັນທີ່ປູກເຂົ້ານາປີ ໃນເຂດພື້ນທີ່ຕ່າງໆໃນຂອບເຂດທົ່ວປະເທດ. ຍົກຕົວຢ່າງ, ໃນເມືອງຈຳພອນ ແຂວງສະຫວັນະເຂດ ມີຫຼາຍກວ່າ 10,000 ຄົວເຮືອນ ທີ່ປູກເຂົ້ານາປີ. ທັງໝົດແລ້ວ ລວມມີ 569,765 ຄົວເຮືອນ ຫຼື 70% ຂອງຈຳນວນຄົວເຮືອນກະສິກຳທັງໝົດທົ່ວປະເທດທີ່ປູກເຂົ້ານາປີໃນລະດູຝົນ. ສະເພາະ ແຂວງສະຫວັນນະເຂດ ລວມມີທັງໝົດ 98,635 ຄົວເຮືອນ, ຊຶ່ງກວມເອົາ 17% ຂອງຈຳນວນຄົວເຮືອນທັງໝົດຂອງ ສປປ ລາວ ທີ່ປູກເຂົ້ານາປີໃນຊ່ວງລະດູຝົນ.

ໃນຂະນະທີ່ 430 ບ້ານ ຫຼື 5% ໃນທົ່ວປະເທດ ບໍ່ໄດ້ປູກເຂົ້ານາເລີຍ. ບ້ານດັ່ງກ່າວ ສ່ວນຫຼາຍ ແມ່ນຕັ້ງຢູ່ເຂດພາກເໜືອສຸດ, ຍ້ອນຄວາມຄ້ອຍຊັນ, ບໍ່ມີພື້ນທີ່ເໝາະສົມສຳລັບ ປູກເຂົ້ານາ, ຫຼື ຢູ່ໃນເຂດໃຈກາງຂອງນະຄອນຫຼວງວຽງຈັນ, ເປັນເຂດຕົວເມືອງໃຫຍ່ທີ່ສຸດໃນ ສປປ ລາວ ທີ່ໂດຍລວມມີການຜະລິດກະສິກຳໜ້ອຍ. ສຳລັບບັນດາບ້ານອື່ນໆ (ກວມເອົາ 95% ຂອງປະເທດ) ຢ່າງໜ້ອຍໄດ້ມີການປູກເຂົ້ານາປີ, ແລະ ປະມານເຄິ່ງໜຶ່ງຂອງບັນດາບ້ານເຫຼົ່ານັ້ນ ໄດ້ໃຊ້ດິນກະສິກຳຂອງເຂົາເຈົ້າ ຫຼາຍກວ່າ 50% ເຂົ້າໃສ່ການປູກເຂົ້ານາປີ.

ແຜນທີ່ຂັ້ນເມືອງ ສະແດງເຖິງເນື້ອທີ່ສະເລ່ຍຕໍ່ຄົວເຮືອນທີ່ປູກເຂົ້ານາປີ. 8 ເມືອງ ແມ່ນມີຄ່າສະເລ່ຍສູງກວ່າ 2.0 ຮຕ ຕໍ່ຄົວເຮືອນ, ຄົວເຮືອນເຫຼົ່ານັ້ນ ແມ່ນຕັ້ງຢູ່ລຽບຕາມແຄມແມ່ນ້ຳຂອງ ໃນເຂດພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ. ຄົວເຮືອນຢູ່ໃນເຂດພູດອຍຂອງປະເທດ ແມ່ນມີເນື້ອທີ່ສະເລ່ຍທີ່ຂ້ອນຂ້າງຕ່ຳກວ່າ.

ການອະທິບາຍຜົນຂອງຮູບແບບ

ການ ປູກເຂົ້ານາປີ ຢ່າງຫຼວງຫຼາຍຢູ່ໃນເຂດພາກກາງ ແລະ ພາກໃຕ້ ໂດຍຫຼັກແມ່ນເນື່ອງມາຈາກ ທີ່ຕັ້ງພູມສັນຖານຂອງດິນ. ທົ່ງພຽງໃຫຍ່ຫຼາຍແຫ່ງຕັ້ງຢູ່ລຽບຕາມແມ່ນ້ຳຂອງ ເໝາະສົມສຳລັບການປູກເຂົ້ານາໄດ້ນອນໃນເຂດດັ່ງກ່າວນີ້. ກົງກັນຂ້າມ, ແຂວງພາກເໜືອ ສ່ວນໃຫຍ່ແມ່ນປົກຫຸ້ມດ້ວຍພື້ນທີ່ຄ້ອຍຊັນສູງເຊິ່ງຂາດພື້ນທີ່ຮາບພຽງທີ່ເໝາະສົມສຳລັບການເຮັດນາ. ນອກຈາກນັ້ນ, ຊາວກະສິກອນຈຳນວນຫຼາຍໃນເຂດທົ່ງພຽງທາງພາກ ເໜືອ ກໍນິຍົມປູກພືດເສດຖະກິດອື່ນ ທີ່ໃຫ້ຜົນຕອບແທນທາງດ້ານເສດຖະກິດສູງກວ່າເຂົ້ານາ. ໃນຈຳພວກພືດເຫຼົ່ານັ້ນແມ່ນໝາກໂມ, ຖົ່ວຂຽວ, ໝາກເຜັດ ແລະ ຜັກປະເພດຕ່າງໆ.

ການຄ້ຳປະກັນດ້ານສະບຽງອາຫານແຫ່ງຊາດ ແລະ ການປູກເຂົ້າເປັນສິນຄ້າ ໂດຍເພີ່ມຜົນຜະລິດເຂົ້າໃນບັນດາເຂດທົ່ງພຽງ, ໂດຍສະເພາະໃນຊ່ວງລະດູຝົນ, ເປັນໜຶ່ງໃນແຜນບູລິມະສິດຂອງລັດຖະບານລາວ (ກປ 2015). ບາງແຜນງານດ້ານການພັດທະນາ ແມ່ນໄດ້ເນັ້ນໃສ່ການສະໜັບສະໜູນວະລະຂອງລັດຖະບານ ໂດຍສູມໃສ່ການຊຸກຍູ້ ແລະ ສົ່ງເສີມການປູກເຂົ້າຢູ່ໃນເຂດທົ່ງພຽງ. ແຜນງານເຫຼົ່ານີ້ລວມມີໂຄງການກໍ່ສ້າງຊົນລະປະທານຂະໜາດໃຫຍ່ ນັບຕັ້ງແຕ່ຊຸມປີ 1990, ແລະ ການປັບປຸງແນວພັນເຂົ້າໃຫ້ມີຄວາມທົນທານຕໍ່ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ ເພື່ອເຮັດໃຫ້ມີການຈະເລີນເຕີບໂຕທີ່ໄວຂຶ້ນ.



ສັດສ່ວນຂອງດິນກະສິກຳທີ່ປູກເຂົ້ານາປີ ໃນລະດັບບ້ານ (8643)
> 0 - 10 % (1166)
> 10 - 25 % (1190)
> 25 - 50 % (1644)
> 50 - 75 % (1426)
> 75 - 95 % (1574)
> 95 - 100 % (1213)
ເນື້ອທີ່ປູກເຂົ້ານາປີທັງໝົດ (ຂະໜາດ) ຈຳນວນຄົວເຮືອນທັງໝົດແບ່ງຕາມ (ສີ) ໃນລະດັບເມືອງ
20000 ຮຕ
10000 ຮຕ
5000 ຮຕ
ບໍ່ສະແດງ < 2000 ຮຕ
> 1806 - 2500 ຄຮ
> 2500 - 5000 ຄຮ
> 5000 - 7500 ຄຮ
> 7500 - 10000 ຄຮ
> 10000 - 12530 ຄຮ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
0 50 100 150 km
ຄ່າສະເລ່ຍຂອງເນື້ອທີ່ຕໍ່ຄົວເຮືອນທີ່ປູກເຂົ້ານາປີ ໃນລະດັບເມືອງ (143)
> 0.39 - 0.50 ຮຕ / ຄຮ (2)
> 0.50 - 1.00 ຮຕ / ຄຮ (76)
> 1.00 - 1.50 ຮຕ / ຄຮ (36)
> 1.50 - 2.00 ຮຕ / ຄຮ (20)
> 2.00 - 2.50 ຮຕ / ຄຮ (4)
> 2.50 - 2.97 ຮຕ / ຄຮ (4)
0 100 200 300 km

ຄ 6 ເຂົ້ານາແຊງ

ພາກສະເໜີ

ໃນເຂດທີ່ມີລະບົບຊົນລະປະທານ, ປົກກະຕິແມ່ນໃນເຂດທົ່ງພຽງ, ຊາວກະສິກອນ ຍັງສາມາດປູກເຂົ້າໄດ້ໃນລະດູແລ້ງ. ຢ່າງໃດກໍ່ຕາມ, ການປູກເຂົ້ານາແຊງ ຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງບົວລະບັດຫຼາຍກວ່າເຂົ້ານາປີ, ເພາະວ່າຕ້ອງມີການຄຸ້ມຄອງການສະໜອງນໍ້າຊົນລະປະທານ, ການໃສ່ຝຸ່ນ, ແລະ ການຄວບຄຸມແມງໄມ້ ແລະ ຫຍ້າ ແມ່ນຫຼາຍກວ່າໃນລະດູແລ້ງ (*Linquist et al.*, 2006).

ວົງຈອນການຜະລິດ ແລະ ການຈັດການ ສໍາລັບການປູກເຂົ້ານາແຊງ ໂດຍທົ່ວໄປ ແມ່ນມີລັກສະນະຄ້າຍຄືກັນກັບການປູກເຂົ້ານາປີ, ຊຶ່ງການປູກເຂົ້າທັງສອງລະດູແມ່ນປູກໃນທົ່ງນາທີ່ມີນໍ້າຖ້ວມຂັງ. ຫຼັງຈາກການເກັບກ່ຽວເຂົ້ານາປີ, ກໍ່ໄດ້ມີການເອົານໍ້າຊົນລະປະທານເຂົ້າທົ່ງນາ ແລະ ເລີ່ມກະກຽມພື້ນທີ່. ການກຽມໝານກ້າ ແມ່ນເລີ່ມໃນຊ່ວງເດືອນທັນວາ ແລະ ການປັກດໍາຕົ້ນກ້າອ່ອນໃນຕົ້ນເດືອນມັງກອນ. ການເກັບກ່ຽວເຂົ້າແມ່ນເລີ່ມໃນເດືອນເມສາ ຫຼື ພຶດສະພາ, ຂຶ້ນກັບປະເພດ ຫຼື ອາຍຸເກັບກ່ຽວຂອງແນວພັນທີ່ແຕກຕ່າງກັນ.

ການອະທິບາຍຮູບແບບ ໃນປີ 2011

ມີການປູກເຂົ້ານາແຊງໜ້ອຍກວ່າເຂົ້ານາປີຫຼາຍ, ຕາມຫຼັກແລ້ວ ແມ່ນຍ້ອນການຂາດແຄນລະບົບຊົນລະປະທານ. ໃນປີ 2011 ເນື້ອທີ່ປູກເຂົ້ານາແຊງໃນ ສປປ ລາວ ມີທັງໝົດ 52,500 ຮຕ, ຊຶ່ງກວມພຽງແຕ່ 7% ຂອງເນື້ອທີ່ປູກເຂົ້ານາທັງໝົດ. ຄືກັນກັບການປູກເຂົ້ານາປີ, ການປູກເຂົ້ານາແຊງແມ່ນສຸມໃສ່ຫຼາຍຢູ່ ເຂດລຽບແມ່ນໍ້າຂອງ, ຊຶ່ງແມ່ນໍ້າຂອງນີ້ເອງ ແລະ ສາຂາຍ່ອຍຂອງມັນ ທີ່ສະໜອງນໍ້າໃຫ້ແກ່ລະບົບຊົນລະປະທານ.

ດັ່ງທີ່ໄດ້ສະແດງໃນແຜນທີ່ຫຼັກ, ເຂດທີ່ມີການປູກເຂົ້ານາແຊງ ສ່ວນໃຫຍ່ແມ່ນຢູ່ເຂດນະຄອນຫຼວງວຽງຈັນ, ບັນດາເມືອງອ້ອມຂ້າງ ແຂວງວຽງຈັນ, ແລະ ບາງເຂດລຽບແມ່ນໍ້າຂອງ. ບັນດາເມືອງທີ່ຢູ່ຕອນໃຕ້ຂອງເມືອງທ່າແຂກ, ແຂວງຄໍາມ່ວນ ກໍເປັນເຂດທີ່ມີການປູກເຂົ້ານາແຊງຫຼາຍ, ຊຶ່ງກໍຄື ເມືອງໜອງບົກ (2,000 ຮຕ, 2,277 ຄົວເຮືອນ), ແລະ ເມືອງໄຊບູລີ (2,900 ຮຕ, 3,800 ຄົວເຮືອນ). ເມືອງທີ່ຢູ່ພາກໃຕ້ສຸດຂອງ ສປປ ລາວ ກໍຄື ເມືອງໂຂງ ມີເນື້ອທີ່ນາແຊງ 1,700 ຮຕ, ສ່ວນ ເມືອງສາລາວັນ, ຕັ້ງຢູ່ລຽບແມ່ນໍ້າເຊໂດນ ມີເນື້ອທີ່ປູກເຂົ້ານາແຊງ 2,000 ຮຕ ແລະ ເຂດອ້ອມຕົວເມືອງອັດຕະປື, ລຽບແມ່ນໍ້າເຊກອງ, ກໍມີເນື້ອທີ່ປູກເຂົ້ານາແຊງທີ່ສໍາຄັນ. ເມືອງຈໍາພອນ, ແຂວງສະຫວັນນະເຂດເປັນເຂດທີ່ມີເນື້ອທີ່ການປູກເຂົ້ານາປີ ແລະ ນາແຊງໃຫຍ່ທີ່ສຸດໃນປະເທດ ກໍຄື 4,100 ຮຕ. ເນື້ອທີ່ເຫຼົ່ານີ້ໃນເມືອງຈໍາພອນມີສິ່ງອໍານວຍຄວາມສະດວກພື້ນຖານໃນການປູກເຂົ້ານາປີ, ແລະ ລວມເຖິງ ພື້ນທີ່ດິນທາມ ເຊຈໍາພອນ ຊຶ່ງເປັນດິນທາມທີ່ໃຫຍ່ເປັນອັນດັບສອງຂອງ ສປປ ລາວ ແລະ ຍັງເປັນແຫຼ່ງສະໜອງນໍ້າຫຼັກ ໃຫ້ແກ່ລະບົບນໍ້າຊົນລະປະທານໃນເຂດນີ້.

ທັງໝົດແລ້ວ, 5,534 ບ້ານ ຫຼື 64% ຂອງບ້ານທັງໝົດ ໃນ ສປປ ລາວ ບໍ່ໄດ້ມີການປູກເຂົ້ານາແຊງເລີຍ. ຈໍານວນ 2,052 ບ້ານ ໄດ້ນໍາໃຊ້ດິນກະສິກໍາຂອງພວກເຂົາພຽງແຕ່ 10% ເທົ່ານັ້ນ ເພື່ອປູກເຂົ້ານາແຊງ. ບ້ານເຫຼົ່ານັ້ນ ແມ່ນຢູ່ກະແຈກກະຈາຍໃນທົ່ວປະເທດ ຍົກເວັ້ນແຂວງຊຽງຂວາງ, ທິດຕາເວັນຕົກຂອງແຂວງຫົວພັນ, ທິດຕາເວັນອອກ ຂອງແຂວງຫຼວງພະບາງ, ຜົ້ງສາລີ ແລະ ສະຫວັນນະເຂດ.

ແຜນທີ່ນ້ອຍ ສະແດງໃຫ້ເຫັນເນື້ອທີ່ສະເລ່ຍຂອງການປູກເຂົ້ານາແຊງ ຕໍ່ຄົວເຮືອນຜູ້ຜະລິດ ໃນລະດູແລ້ງໃນຂັ້ນເມືອງ. ເນື້ອທີ່ສະເລ່ຍປູກເຂົ້ານາແຊງໃນຂອບເຂດທົ່ວປະເທດແມ່ນ 0.6 ຮຕ ຕໍ່ຄົວເຮືອນ, ແຕ່ບາງເມືອງໃນທິດຕາເວັນຕົກຂອງແຂວງສະຫວັນນະເຂດ, ນະຄອນຫຼວງວຽງຈັນ, ແລະ ຈໍາປາສັກ ມີເນື້ອທີ່ສະເລ່ຍສູງກວ່ານັ້ນ. ສ່ວນແຂວງຊຽງຂວາງ ແລະ ຫົວພັນ ມີເນື້ອທີ່ປູກເຂົ້ານາແຊງ ສະເລ່ຍຕໍ່ຄົວເຮືອນ ຕໍ່າກວ່າ 0.25 ຮຕ. ນອກຈາກນັ້ນ, ແຜນທີ່ນ້ອຍທີ່ຄັດຕິດໄດ້ສະແດງໃຫ້ເຫັນເນື້ອທີ່ຂອງການປູກເຂົ້ານາທັງໝົດ (ທັງສອງລະດູ) ທີ່ນໍາໃຊ້ນໍ້າ ແລະ ບໍ່ນໍາໃຊ້ນໍ້າຊົນລະປະທານ. ຕົວຢ່າງ ຢູ່ແຂວງສະຫວັນນະເຂດ ເນື້ອທີ່ປູກເຂົ້ານາ ມີຫຼາຍກວ່າ 200,000 ຮຕ ແຕ່ໜ້ອຍກວ່າ 10% ຂອງເນື້ອທີ່ດັ່ງກ່າວທີ່ໄດ້ນໍາໃຊ້ນໍ້າຊົນລະປະທານ, ສ່ວນໃນແຂວງຫົວພັນ ມີເນື້ອທີ່ປູກເຂົ້ານາພຽງແຕ່ 13,500 ຮຕ ແຕ່ພັດຫຼາຍກວ່າ 80% ໄດ້ນໍາໃຊ້ນໍ້າຊົນລະປະທານ.

ການແປຄວາມໝາຍຂອງຮູບແບບ

ເຖິງວ່າ ລັດຖະບານລາວ ໄດ້ລົງທຶນຢ່າງຫຼວງຫຼາຍໃສ່ການການພັດທະນາລະບົບຊົນລະປະທານ ນັບແຕ່ປີ 1996, ແຕ່ຍັງມີຫຼາຍເຂດ ທີ່ບໍ່ສາມາດເຂົ້າເຖິງຊົນລະປະທານ. ປະສິດທິພາບຂອງສະຖານີຈັກສູບນໍ້າຕໍ່າ (ສ່ວນໃຫຍ່ ແມ່ນການນໍາໃຊ້ເຕັກໂນໂລຊີທີ່ເກົ່າແກ່ ແລະ ໃຊ້ພະລັງງານທີ່ສູງ) ບວກກັບ ຂາດການບໍາລຸງຮັກສາລະບົບຊົນລະປະທານທີ່ມີຢູ່, ໂດຍສະເພາະ ຄອງເໝືອງຫຼັກ ແລະ ຄອງຂັ້ນສອງ, ໄດ້ພາໃຫ້ຕົ້ນທຶນການປູກເຂົ້າສູງຂຶ້ນ ແລະ ຕໍ່ມາເຮັດໃຫ້ລະບົບຊົນລະປະທານຫຼາຍບ່ອນຖືກປະຮ້າງ ແລະ ບໍ່ຖືກນໍາໃຊ້.

ການລົງທຶນໃສ່ການກໍ່ສ້າງໃໝ່ ແລະ ການຟື້ນຟູ ລະບົບຊົນລະປະທານທີ່ເປ່ເພເສຍຫານ ຫຼື ຫຼ້າສະໄໝ ຄວນດໍາເນີນໄປຄຽງຄູ່ກັບການຈັດການທີ່ເໝາະສົມ ແລະ ການບໍາລຸງຮັກສາລະບົບຊົນລະປະທານທີ່ມີຢູ່. ການ ສະໜັບສະໜູນທຶນໃຫ້ແກ່ການຄຸ້ມຄອງບໍລິຫານເຊັ່ນ: ຄ່າໄຟຟ້າ ແລະ ຄ່ານໍ້າ ແມ່ນນອນໃນແຜນງານຂອງລັດຖະບານລາວ ເພື່ອຮັບປະກັນການຄໍ້າປະກັນສະບຽງອາຫານລະດັບຊາດ ແລະ ການປູກເຂົ້າເພື່ອເປັນສິນຄ້າ (ກປ 2015). ນອກຈາກໂຄງການຊົນລະປະທານຂະໜາດໃຫຍ່, ໃນໄລຍະໃໝ່ນີ້ ລັດຖະບານຍັງໄດ້ສົ່ງເສີມການສ້າງຊົນລະປະທານຂະໜາດນ້ອຍແບບລະບົບແຮງໂນ້ມຖ່ວງ ລວມທັງການນໍາໃຊ້ແຫຼ່ງນໍ້າບາດານຢູ່ຂັ້ນບ້ານ ເພື່ອຊ່ວຍຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ເພີ່ມຜົນຜະລິດເຂົ້າ ໃນລະດູແລ້ງ.


0E
200000E
400000E
600000E
ຈີນ
ທອງດົນານ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ສັດສ່ວນຂອງດິນກະສິກຳທັງໝົດທີ່ປູກເຂົ້ານາແຊງ ໃນລະດັບບ້ານ (8643)
0 % (5534)
> 0 - 10 % (2052)
> 10 - 25 % (575)
> 25 - 50 % (324)
> 50 - 75 % (117)
> 75 - 95 % (33)
> 95 - 100 % (8)
ເນື້ອທີ່ປູກເຂົ້ານາແຊງທັງໝົດ (ຂະໜາດ) ຈຳນວນຄົວເຮືອນທັງໝົດແບ່ງຕາມ (ສີ) ໃນລະດັບເມືອງ
4000 ຮຕ
2500 ຮຕ
1000 ຮຕ
ບໍ່ສະແດງ < 100 ຮຕ
100 - 500 ຄຮ
500 - 1000 ຄຮ
1000 - 2500 ຄຮ
2500 - 4652 ຄຮ
ສັດສ່ວນຂອງພື້ນທີ່ນາປີທີ່ມີຊົນລະປະທານ ທາ ບໍ່ມີຊົນລະປະທານ (ສີ) ແລະເນື້ອທີ່ຈຳນວນຖ້ວນ (ຂະໜາດ) ໃນລະດັບແຂວງ
200000 ຮຕ
50000 ຮຕ
5600 ຮຕ
ພື້ນທີ່ ທີ່ມີຊົນລະປະທານ
ພື້ນທີ່ ທີ່ບໍ່ມີຊົນລະປະທານ
ຄ່າສະເລ່ຍຂອງເນື້ອທີ່ຕໍ່ຄົວເຮືອນທີ່ປູກເຂົ້ານາແຊງ ໃນລະດັບເມືອງ (143)
> 0.00 - 0.25 ຮຕ / ຄຮ (17)
> 0.25 - 0.50 ຮຕ / ຄຮ (42)
> 0.50 - 0.75 ຮຕ / ຄຮ (58)
> 0.75 - 1.00 ຮຕ / ຄຮ (20)
> 1.00 - 1.49 ຮຕ / ຄຮ (5)
0 100 200 300 km
0 50 100 150 km
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
2400000N
2200000N
2000000N
1800000N
1600000N

ຄ 7 ການຂະຫຍາຍເນື້ອທີ່ການປູກເຂົ້າ

ພາກສະເໜີ

ເຂົ້າແມ່ນພືດອາຫານທີ່ສຳຄັນທີ່ສຸດ ຢູ່ ສປປ ລາວ ແລະ ການປູກເຂົ້າ ກໍເປັນກິດຈະກຳຫຼັກຂອງການກະສິກຳ, ກວມເອົາປະມານ 63% ຂອງເນື້ອທີ່ການຜະລິດກະສິກຳທັງໝົດ ໃນທົ່ວປະເທດ. ການປູກເຂົ້າຢູ່ ສປປ ລາວ ແບ່ງເປັນ 3 ລະບົບນິເວດກະສິກຳຫຼັກ ຄື ນາປີ (ເຂົ້າທົ່ງພຽງລະດູຝົນ), ນາແຊງ (ເຂົ້າທົ່ງພຽງລະດູແລ້ງ), ແລະ ໄຮ່ເນີນສູງ (ເຂົ້າໄຮ່ເຂດເນີນສູງໃນລະດູຝົນ). ເຂົ້ານາປີ ແມ່ນປູກໃນພື້ນທີ່ນໍ້າຂັງຢ່າງນ້ອຍໃນ ໄລຍະໜຶ່ງຂອງລະດູ ແລະ ໃຊ້ນໍ້າຝົນທຳມະຊາດ. ເຂົ້ານາແຊງ ແມ່ນປູກໃນພື້ນທີ່ນໍ້າຂັງຢ່າງນ້ອຍໃນໄລຍະໜຶ່ງຂອງລະດູ ແລະ ໃຊ້ນໍ້າຊົນລະປະທານ. ເຂົ້າໄຮ່ ແມ່ນປູກໃນພື້ນທີ່ບໍ່ມີນໍ້າຂັງໃນເຂດດິນຄ້ອຍຊັນແບບໄຮ່ເລື່ອນລອຍ ແລະ ອີງໃສ່ນໍ້າຝົນ (*Linquist et al.*, 2006).

ການອະທິບາຍຮູບແບບ ໃນປີ 2011

ເນື້ອທີ່ການປູກເຂົ້າທັງໝົດ ໃນ ສປປ ລາວ ມີປະມານ 1 ລ້ານ ຮຕ. ເຂົ້ານາປີ ແມ່ນ ການປູກເຂົ້າຫຼັກ ແລະ ກວມເອົາ 72% (735,000 ຮຕ) ຂອງເນື້ອທີ່ການປູກເຂົ້າທັງໝົດ, ສ່ວນເຂົ້ານາແຊງ ແລະ ເຂົ້າໄຮ່ ກວມເອົາພຽງແຕ່ 6% (52,500 ຮຕ) ແລະ 17% (210,000 ຮຕ, ໂດຍບໍ່ລວມເນື້ອທີ່ປ່າເລົ່າ) ຂອງເນື້ອທີ່ປູກເຂົ້າທັງໝົດຕາມລຳດັບ. ເຂົ້ານາປີ ສ່ວນໃຫຍ່ແມ່ນປູກໃນເຂດທົ່ງພຽງຢູ່ແຂວງພາກກາງ ແລະ ພາກໃຕ້, ແຕ່ກໍຍັງປູກໃນເຂດດິນພຽງ, ລຽບຕາມແມ່ນໍ້າ, ຫຼື ເປັນນາຂັ້ນໄດໃນພື້ນທີ່ຄ້ອຍຊັນຂອງເຂດພູດອຍພາກເໜືອ ແລະ ພາກຕະວັນອອກສຸດ ຂອງ ສປປ ລາວ ລຽບຕາມຊາຍແດນ ຫວຽດນາມ. ແຂວງສະຫວັນນະເຂດ ແລະ ຈຳປາສັກ ກວມເອົາປະມານ 30% ຂອງເນື້ອທີ່ປູກເຂົ້ານາປີທັງໝົດ. ການປູກເຂົ້າໄຮ່ເຂດເນີນສູງແມ່ນມີຫຼາຍກວ່າໃນເຂດພູດອຍພາກເໜືອ ແລະ ພາກຕະວັນ ອອກສຸດຂອງປະເທດ. ເຂົ້ານາແຊງ ສ່ວນໃຫຍ່ແມ່ນປູກ ຢູ່ນະຄອນຫຼວງວຽງຈັນ ແລະ ລຽບຕາມແມ່ນໍ້າຂອງ ໃນແຂວງພາກກາງ ແລະ ພາກໃຕ້. ເສັ້ນສະແດງ 4 ສະແດງເນື້ອທີ່ປູກເຂົ້າໄຮ່, ເຂົ້ານາປີ ແລະ ເຂົ້ານາແຊງ ທັງໝົດໃນແຕ່ລະແຂວງ.

ການອະທິບາຍການປ່ຽນແປງ 1999–2011

ໃນ ສປປ ລາວ, ລະຫວ່າງປີ 1999 ແລະ 2011 ເນື້ອທີ່ການຜະລິດເຂົ້າທັງໝົດ ໄດ້ເພີ່ມຂຶ້ນຫຼາຍກວ່າ 200,000 ຮຕ ຈາກ 738,187 ຮຕ ເປັນ 997,500 ຮຕ – ເພີ່ມຂຶ້ນ 35%. ການປູກເຂົ້າໃນແຕ່ລະລະບົບນິເວດກະສິກຳ ຕໍ່ກັບເນື້ອທີ່ການປູກເຂົ້າ ທັງໝົດ, ລະຫວ່າງປີ 1999 ແລະ 2011, ເຫັນວ່າເຂົ້ານາປີຍັງໄດ້ສືບຕໍ່ເປັນການປູກເຂົ້າຫຼັກໆ ແລະ ກວມເອົາເນື້ອທີ່ການປູກຫຼາຍທີ່ສຸດ (72% ຂອງເນື້ອທີ່ປູກເຂົ້າທັງໝົດ ໃນປີ 2011), ຊຶ່ງເພີ່ມຂຶ້ນ ຈາກ 65% ໃນປີ 1999. ສ່ວນແບ່ງຂອງ ເນື້ອທີ່ປູກເຂົ້ານາລະດູແລ້ງໄດ້ຫຼຸດລົງໜ້ອຍໜຶ່ງ ຈາກ 8% ໃນປີ 1999 ມາເປັນ 6% ໃນປີ 2011. ສ່ວນເຂົ້າໄຮ່ເຂດເນີນສູງໄດ້ຫຼຸດລົງຈາກ 27% ໃນປີ 1999 ມາເປັນ 22% ໃນປີ 2011.

ແຂວງທີ່ມີເນື້ອທີ່ການປູກເຂົ້າຫຼາຍທີ່ສຸດ ທັງປີ 1999 ແລະ 2011 ແມ່ນ ແຂວງສະຫວັນນະເຂດ ແລະ ຈຳປາສັກ. ຢ່າງໃດກໍຕາມ, ຕະຫຼອດທົດສະຫວັດທີ່ຜ່ານມາ, ເນື້ອທີ່ປູກເຂົ້າທັງໝົດເພີ່ມຂຶ້ນຫຼາຍທີ່ສຸດແມ່ນຢູ່ແຂວງສະຫວັນນະເຂດ ຊຶ່ງກວມເອົາ 107,000 ຮຕ (94% ຫຼື ເກືອບເທົ່າຕົວ). ຮອງລົງມາແມ່ນແຂວງຄຳມ່ວນ ແລະ ສາລະວັນ ມີເນື້ອທີ່ເພີ່ມຂຶ້ນ 37,082 ຮຕ (83%) ແລະ 22,043 ຮຕ (37%) ຕາມລຳດັບ. ແຂວງຈຳປາສັກ ແມ່ນມີເນື້ອທີ່ເພີ່ມຂຶ້ນປານກາງ ປະມານ 6,887 ຮຕ (15%). ຢ່າງໃດກໍຕາມ, ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ ເນື້ອທີ່ການປູກເຂົ້າທັງໝົດໄດ້ຫຼຸດລົງ 7,279 ຮຕ (11%) ແລະ 1,045 ຮຕ (2%) ຕາມລະດັບ. ປະມານ 75% ຂອງ 143 ເມືອງ ໄດ້ມີເນື້ອທີ່ການປູກເຂົ້າເພີ່ມຂຶ້ນ.

ເນື້ອທີ່ການປູກເຂົ້ານາປີ ໃນ ສປປ ລາວ ໄດ້ເພີ່ມຂຶ້ນເກືອບ 150%, ຈາກ 483,360 ຮຕ ໃນປີ 1999 ມາເປັນ 714,353 ຮຕ ໃນປີ 2011. ດັ່ງທີ່ ແຜນທີ່ຢູ່ເບື້ອງເທິງຊ້າຍສຸດສະແດງໃຫ້ເຫັນ, ເນື້ອທີ່ປູກເຂົ້ານາປີໄດ້ເພີ່ມຂຶ້ນ ໂດຍສະເພາະໃນເຂດຕະເວັນຕົກຂອງພາກກາງ. ເກືອບທຸກໆເມືອງ ເລີ່ມຈາກເມືອງປາກກະດິງໃນແຂວງບໍລິຄຳໄຊ ຈົນຮອດເມືອງຄົງເຊໂດນ ໃນແຂວງສາລະວັນ ປະກົດເຫັນມີການເພີ່ມຂຶ້ນຂອງເນື້ອທີ່ເຂົ້ານາປີ – ທັງສອງເມືອງ ມີເນື້ອທີ່ ປູກເຂົ້ານາປີ ເພີ່ມຂຶ້ນຫຼາຍກວ່າ 5,000 ຮຕ. ເນື້ອທີ່ປູກເຂົ້ານາປີໃນເຂດອື່ນໆ ຂອງ ສປປ ລາວ ໄດ້ປ່ຽນແປງພຽງເລັກນ້ອຍເທົ່ານັ້ນ ຫຼື ບໍ່ມີການປ່ຽນແປງເລີຍ.

ຕ່າງກັບນາປີ, ເນື້ອທີ່ປຸກເຂົ້ານາແຊງ ໃນ ສປປ ລາວ ແມ່ນເກືອບຄືງທີ່ ຫຼື ປ່ຽນແປງເລັກນ້ອຍ ຄື 55,630 ຮຕ ໃນປີ 1999 ແລະ 56,769 ຮຕ ໃນປີ 2011. ດັ່ງທີ່ສະແດງໃນແຜນທີ່ຢູ່ເບື້ອງລຸ່ມຊ້າຍສຸດ ເຫັນໄດ້ວ່າມີການປ່ຽນແປງເລັກນ້ອຍໃນເກືອບທຸກພາກ. ເມືອງຫາດຊາຍຟອງ ໃນນະຄອນຫຼວງວຽງຈັນເນື້ອທີ່ການປູກ ໄດ້ຫຼຸດລົງຫຼາຍທີ່ສຸດ. ເນື້ອທີ່ນາຊົນລະປະທານ ຢູ່ນະຄອນຫຼວງວຽງຈັນໄດ້ຫຼຸດລົງເກືອບເຖິງ 2,000 ຮຕ ຍ້ອນການເພີ່ມຂຶ້ນ ຂອງປະຊາກອນໃນຕົວເມືອງ ແລະ ຜົນຂອງການຂະຫຍາຍຕົວເມືອງ. ເນື້ອທີ່ນາຊົນລະປະທານ ເມືອງຈຳພອນ ຂອງແຂວງສະຫວັນນະເຂດ ທີ່ມີທົ່ງພຽງຂະໜາດໃຫຍ່ໄດ້ເພີ່ມຂຶ້ນຫຼາຍທີ່ສຸດ.

ເຂົ້າໄຮ່ເຂດເນີນສູງ ໄດ້ເພີ່ມຂຶ້ນເລັກນ້ອຍຈາກ 199,197 ຮຕ ໃນປີ 1999 ເປັນ 212,009 ຮຕ ໃນປີ 2011. ດັ່ງທີ່ເຫັນໄດ້ໃນແຜນທີ່ຢູ່ເບື້ອງຂວາເທິງສຸດ, ໂດຍທົ່ວໄປ, ການປ່ຽນແປງແມ່ນກະຈາຍທົ່ວທຸກເມືອງ ຂອງປະເທດ. ທີ່ພົ້ນເດັ່ນກວ່າໝູ່ ແມ່ນໃນບັນດາເມືອງ ຢູ່ພາກໃຕ້ ຂອງແຂວງໄຊຍະບູລີ ເນື້ອທີ່ເຂົ້າໄຮ່ເຂດເນີນສູງໄດ້ຫຼຸດລົງ ສອງ ຫາ ສາມຮ້ອຍ ຮຕ, ແລະ ກົງກັນຂ້າມ ເຂດຕອນເໜືອຂອງແຂວງໄຊຍະບູລີ ເນື້ອທີ່ເຂົ້າໄຮ່ພັດເພີ່ມຂຶ້ນຫຼາຍຮ້ອຍເຮັກຕາ. ສະຫຼຸບແລ້ວ, ເນື້ອທີ່ປູກເຂົ້າໄຮ່ທັງໝົດໃນທົ່ວປະເທດ ແມ່ນຂ້ອນຂ້າງຄົງທີ່.


ພື້ນທີ່ປູກເຂົ້ານາປີ
1999 2011
200000 ຮຕ
50000 ຮຕ
10000 ຮຕ
2000 ຮຕ
ການເພີ່ມຂຶ້ນ ແລະ ຫຼຸດລົງ ໃນລະຫວ່າງປີ 1999 ແລະ 2011 ຈຳນວນລວມເປັນ ເຮັກຕາ (143)
< -1000 - -3050 ຮຕ (5)
< -500 - -1000 ຮຕ (7)
< -10 - -500 ຮຕ (10)
ບໍ່ມີການປ່ຽນແປງ (3)
> 10 - 500 ຮຕ (40)
> 500 - 1000 ຮຕ (20)
> 1000 - 5000 ຮຕ (45)
> 5000 - 17700 ຮຕ (13)


ພື້ນທີ່ປູກເຂົ້າໄຮ່
1999 2011
35000 ຮຕ
10000 ຮຕ
2000 ຮຕ
ການເພີ່ມຂຶ້ນ ແລະ ຫຼຸດລົງ ໃນລະຫວ່າງປີ 1999 ແລະ 2011 ຈຳນວນລວມເປັນ ເຮັກຕາ (143)
< -1000 - -3900 ຮຕ (9)
< -500 - -1000 ຮຕ (14)
< -10 - -500 ຮຕ (37)
ບໍ່ມີການປ່ຽນແປງ (12)
> 10 - 500 ຮຕ (39)
> 500 - 1000 ຮຕ (14)
> 1000 - 3400 ຮຕ (18)


ພື້ນທີ່ປູກເຂົ້ານາແຊງ
1999 2011
12000 ຮຕ
2000 ຮຕ
ການເພີ່ມຂຶ້ນ ແລະ ຫຼຸດລົງ ໃນລະຫວ່າງປີ 1999 ແລະ 2011 ຈຳນວນລວມເປັນ ເຮັກຕາ (143)
-1955 ຮຕ (1)
< -500 - -1000 ຮຕ (7)
< -10 - -500 ຮຕ (54)
ບໍ່ມີການປ່ຽນແປງ (22)
> 10 - 500 ຮຕ (49)
> 500 - 1000 ຮຕ (7)
> 1000 - 1730 ຮຕ (3)


ສົມທຽບພື້ນທີ່ປູກເຂົ້າລວມ ໃນລະຫວ່າງປີ 1999 ແລະ 2011
ປະເພດການປູກເຂົ້າ ແລະ ລະດູການ
1999 2011
ເຂົ້ານາປີ
ເຂົ້າໄຮ່
ເຂົ້ານາແຊງ
ພື້ນທີ່ລວມຕໍ່ແຂວງ
100000 ຮຕ
50000 ຮຕ
10000 ຮຕ
ການເພີ່ມຂຶ້ນ ແລະ ຫຼຸດລົງ ໃນລະຫວ່າງປີ 1999 ແລະ 2011 ຈຳນວນລວມເປັນ ເຮັກຕາ (143)
< -1000 - -4400 ຮຕ (12)
< -500 - -1000 ຮຕ (12)
< -10 - -500 ຮຕ (11)
ບໍ່ມີການປ່ຽນແປງ (2)
> 10 - 500 ຮຕ (15)
> 500 - 1000 ຮຕ (17)
> 1000 - 5000 ຮຕ (58)
> 5000 - 17600 ຮຕ (16)
0 100 200 300 km

ການອະທິບາຍສາຍເຫດທີ່ກໍ່ໃຫ້ມີການປ່ຽນແປງ

ການຂະຫຍາຍໂຕທີ່ຕໍ່ເນື່ອງ ຂອງຂະແໜງການຜະລິດເຂົ້າ ຂອງລາວ ຈາກປີ 1999 ເຖິງປີ 2011 ໂດຍຫຼັກແລ້ວແມ່ນຍ້ອນການນໍາໃຊ້ເຕັກໂນໂລຊີການປູກເຂົ້າແບບໃໝ່ ລວມມີ ແນວພັນປັບປຸງ, ຝຸ່ນວິທະຍາສາດ, ແລະ ການຈັດການແບບໃໝ່.

ການເພີ່ມຂຶ້ນຫຼາຍທີ່ສຸດຂອງເນື້ອທີ່ປູກເຂົ້າທັງໝົດ, ຊຶ່ງເກີດຂຶ້ນທີ່ແຂວງສະຫວັນນະເຂດ ແລະ ຄໍາມ່ວນ, ໂດຍຫຼັກແລ້ວ ແມ່ນຍ້ອນນະໂຍບາຍຕ່າງໆຂອງລັດຖະບານ ທີ່ແນໃສ່ການຄໍ້າປະກັນສະບຽງອາຫານ, ການ ສົ່ງເສີມການປູກເຂົ້າເປັນສິນຄ້າ, ແລະ ການເພີ່ມລາຍຮັບຂອງຊາວກະສິກອນ. ບັນດາໂຄງການຊົນລະປະທານ ທີ່ລົງທຶນໂດຍລັດຖະບານ ເພື່ອສະໜັບສະໜູນບູລິມະສິດເຫຼົ່ານັ້ນ ໄດ້ກໍສ້າງຂຶ້ນໃນສອງແຂວງດັ່ງກ່າວ, ໄດ້ປະກອບສ່ວນເຮັດໃຫ້ເນື້ອທີ່ການປູກເຂົ້ານາປີເພີ່ມຂຶ້ນ ໂດຍສະເພາະໃນຊຸມປີທີ່ແຫ້ງແລ້ງ ຫຼາຍກວ່າ ການເພີ່ມຂຶ້ນຂອງເນື້ອທີ່ປູກເຂົ້ານາແຊງ. ການຫຼຸດລົງຂອງເນື້ອທີ່ປູກເຂົ້າໃນນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ ໂດຍຫຼັກແລ້ວ ແມ່ນຍ້ອນການຂະຫຍາຍຕົວຢ່າງໄວວາຂອງຕົວເມືອງ; ເນື້ອທີ່ປູກເຂົ້າຫຼາຍ ບ່ອນ ໄດ້ຖືກທົດແທນໂດຍອາຄານບ້ານເຮືອນ, ຖະໜົນຫົນທາງ ແລະ ສະຖານທີ່ພັກຜ່ອນຕ່າງໆ. ໃນເຂດພາກເໜືອຂອງ ສປປ ລາວ ເນື້ອທີ່ທີ່ງພຽງມີຈໍາກັດສໍາລັບການຂະຫຍາຍການປູກເຂົ້າ ແລະ ໃນບາງເຂດທົ່ງພຽງ ກໍມີການປູກພືດເສດຖະກິດອື່ນເປັນຕົ້ນແມ່ນໝາກໂມ, ຖົ່ວຂຽວ, ແລະ ຜັກປະເພດຕ່າງໆ ຊຶ່ງພືດຜັກເຫຼົ່ານັ້ນແມ່ນຕ້ອງການນໍ້າໜ້ອຍກວ່າ ແລະ ມີຕ້ອງການຂອງຕະຫຼາດສູງ.

ເນື້ອທີ່ປູກເຂົ້ານາແຊງ ໄດ້ເພີ່ມຂຶ້ນພຽງເລັກນ້ອຍເທົ່ານັ້ນ. ນີ້ແມ່ນຍ້ອນຈາກຕົ້ນທຶນການປູກເຂົ້ານາແຊງທີ່ສູງຂຶ້ນ (ຄ່ານໍ້າຊົນລະປະທານແພງ, ປະສິດທິພາບຂອງສະຖານີສູບນໍ້າຕໍ່າ, ການບໍາລຸງຮັກສາລະບົບຊົນລະປະທານບໍ່ມີປະສິດທິຜົນ, ອັດຕາຄ່າຈ້າງແຮງງານສູງຂຶ້ນ ອັນເນື່ອງມາຈາກການເຄື່ອນຍ້າຍແຮງງານອອກຈາກເຂດຊົນນະບົດ). ນີ້ສາມາດປຽບທຽບໃສ່ການປູກເຂົ້ານາປີທີ່ຫຼຸດລົງຍ້ອນລາຄາເຂົ້າເປືອກຕົກຕໍ່າ, ໂດຍສະເພາະໃນປີ 1999, ແລະ ມັນໄດ້ບັ່ນທອນຊາວກະສິກອນ ໃນການຂະຫຍາຍການປູກເຂົ້ານາແຊງຂອງເຂົາເຈົ້າ. ຊົນລະປະທານຫຼາຍແຫ່ງ ບໍ່ຖືກນໍາໃຊ້ ແລະ ຊາວກະສິກອນກໍໄດ້ຫັນປ່ຽນ ຈາກການປູກເຂົ້າ ມາປູກພືດເສດຖະກິດອື່ນແທນທີ່ໃຫ້ຜົນຕອບແທນດ້ານເສດຖະກິດສູງກວ່າ.

ເນື້ອທີ່ປູກເຂົ້າໄຮ່ ແມ່ນຄົງທີ່ ລະຫວ່າງປີ 1999 ແລະ 2011. ຊາວກະສິກອນ ໃນເຂດເນີນສູງ ໄດ້ສືບຕໍ່ປູກເຂົ້າໄຮ່ແບບເລື່ອນລອຍ ເປັນກິດຈະກໍາຫຼັກ ໃນການດໍາລົງຊີວິດຂອງເຂົາເຈົ້າ. ວິທີການເຮັດໄຮ່ແບບຄົງທີ່ໂດຍຜ່ານການສົ່ງເສີມການຜະລິດແບບໝູນວຽນ ສາມາດຊ່ວຍໃຫ້ຊາວກະສິກອນປູກເຂົ້າໄຮ່ເປັນລະບົບທີ່ຊັດເຈນຫຼາຍຂຶ້ນ ຊຶ່ງກໍຍັງອາດຈະຊ່ວຍຫຼຸດຜ່ອນຜົນກະທົບຕໍ່ປ່າໄມ້ໄດ້.

ເສັ້ນສະແດງ 4: ເນື້ອທີ່ປູກເຂົ້າໄຮ່, ເຂົ້ານາປີ ແລະ ເຂົ້ານາແຊງ ທັງໝົດໃນປີ 2010/11 ໃນແຕ່ລະແຂວງ



ຄ 8 ການພັດທະນາແນວພັນເຂົ້າ

ພາກສະເໜີ

ໃນ ສປປ ລາວ ມີເນື້ອທີ່ການປູກເຂົ້າໜຽວ ກວມເຖິງ 90% ຂອງເນື້ອທີ່ການປູກເຂົ້າທັງໝົດ. ການນຳໃຊ້ເຕັກໂນໂລຊີໃໝ່ (ຕົວຢ່າງ: ແນວພັນເຂົ້າປັບປຸງ, ຝຸ່ນເຄມີ, ແລະ ການຈັດການ) ຊ່ວຍເພີ່ມຜົນຜະລິດເຂົ້າ. ໃນບັນດາເຕັກໂນໂລຊີເຫຼົ່ານັ້ນ, ການຍອມຮັບນຳໃຊ້ແນວພັນເຂົ້າປັບປຸງ ຕັ້ງແຕ່ຊຸ່ມປີ 1990 ເປັນປັດໃຈໜຶ່ງທີ່ສຳຄັນຍິ່ງ ຕໍ່ກັບການເພີ່ມສະມັດຕະພາບຜົນຜະລິດ.

ກ່ອນໄລຍະຕົ້ນຊຸມປີ 1990, ຊາວກະສິກອນ ໄດ້ປູກເຂົ້າແນວພັນທ້ອງຖິ່ນ ແລະ ພື້ນບ້ານເປັນຕົ້ນຕໍ. ແນວພັນເຂົ້າປັບປຸງ ທີ່ໄດ້ແນະນຳໃຫ້ຊາວກະສິກອນປູກ ສ່ວນໃຫຍ່ນຳມາຈາກປະເທດໄທ ແລະ ຫວຽດນາມ ແລະ ໄດ້ເລີ່ມປູກໃນເນື້ອທີ່ຂະໜາດນ້ອຍຕາມທົ່ງພຽງ ລຽບຕາມສາຍແມ່ນ້ຳຂອງ ໃນຕົ້ນຊຸມປີ 1990. ໃນຊ່ວງເວລາດຽວກັນນັ້ນ, ໂດຍມີການການຮ່ວມມືກັບສະຖາບັນຄົ້ນຄວ້າເຂົ້າສາກົນ (IRRI), ແຜນງານຄົ້ນຄວ້າເຂົ້າແຫ່ງຊາດລາວ ໄດ້ພັດທະນາ ແລະ ຜະລິດແນວພັນເຂົ້າໜຽວປັບປຸງຂອງລາວຈຳນວນໜຶ່ງ ທີ່ເໝາະສົມ ສະເພາະກັບເຂດທົ່ງພຽງ. ຫຼັງຈາກນັ້ນ, ສູນຄົ້ນຄວ້າ ແລະ ຜະລິດແນວພັນເຂົ້າປະຈຳຢູ່ເຂດຕ່າງໆ ກໍສາມາດຜະລິດແນວພັນເຂົ້າໜຽວ ປັບປຸງຂອງລາວອອກມາຕື່ມອີກໃນຂອບເຂດທົ່ວປະເທດຢ່າງຕໍ່ເນື່ອງ (*Inthapanya et al.*, 2006).

ຊາວກະສິກອນລາວ ໄດ້ຫັນປ່ຽນເທື່ອລະກ້າວຈາກການປູກແນວພັນເຂົ້າທ້ອງຖິ່ນ ຫຼື ພື້ນບ້ານມາປູກແນວພັນເຂົ້າປັບປຸງ ເພື່ອເພີ່ມສະມັດຕະພາບຜົນຜະລິດເຂົ້າ ແລະ ຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດທີ່ເພີ່ມຂຶ້ນ. ຢ່າງໃດກໍຕາມ, ຄຽງຄູ່ກັບການນຳໃຊ້ແນວພັນເຂົ້າໃໝ່, ຊາວກະສິກອນ ຍັງສືບຕໍ່ປູກແນວພັນເຂົ້າພື້ນບ້ານ, ສ່ວນໃຫຍ່ກໍເພື່ອໄວ້ບໍລິໂພກເອງໃນຄອບຄົວ.

ການອະທິບາຍຮູບແບບ ໃນປີ 2011

ໄດ້ມີການນຳໃຊ້ແນວພັນເຂົ້າປັບປຸງຢ່າງກວ້າງຂວາງ ໃນເຂດພາກກາງ ແລະ ພາກໃຕ້, ສ່ວນຊາວກະສິກອນໃນເຂດພາກເໜືອ ຍັງປູກເຂົ້າແນວພັນເຂົ້າໄຮ່ທ້ອງຖິ່ນເປັນຫຼັກ. ແນວພັນເຂົ້າປັບປຸງໃນປະຈຸບັນກວມເອົາ 70–80% ຂອງເນື້ອທີ່ປູກເຂົ້າ ໃນເຂດທົ່ງພຽງ ເກືອບທຸກໆແຂວງທີ່ລຽບຕາມສາຍແມ່ນ້ຳຂອງ. ກົງກັນຂ້າມ, ເນື້ອທີ່ປູກເຂົ້າໄຮ່ເກືອບທັງໝົດຍັງນຳໃຊ້ແນວພັນເຂົ້າທ້ອງຖິ່ນຢູ່.

ດັ່ງທີ່ແຜນທີ່ລຸ່ມສຸດເບື້ອງຊ້າຍ ສະແດງໃຫ້ເຫັນວ່າ ຊາວກະສິກອນ ຢູ່ເຂດພາກເໜືອ ປູກແນວພັນເຂົ້າງັນກວມເກືອບເຄິ່ງໜຶ່ງຂອງເນື້ອທີ່ປູກເຂົ້າໜຽວທັງໝົດ, ສ່ວນຊາວກະສິກອນ ຢູ່ພາກອື່ນໆ ປູກແນວພັນເຂົ້າດໍ ແລະ ກາງ. ໂດຍສະເລ່ຍ 87% ຂອງເນື້ອທີ່ປູກເຂົ້າ ໃນພາກໃຕ້ ແລະ 75% ຂອງເນື້ອທີ່ປູກເຂົ້າໃນພາກກາງ ແມ່ນໃຊ້ແນວພັນເຂົ້າດໍ ແລະ ເຂົ້າກາງ.

ການອະທິບາຍການປ່ຽນແປງ 1999–2011

ໂດຍທົ່ວໄປ, ເນື້ອທີ່ປູກເຂົ້າໜຽວ ໄດ້ເພີ່ມຂຶ້ນໃນທົ່ວ ສປປ ລາວ ລະຫວ່າງປີ 1999 ເຖິງ 2011 ຈາກ 627,544 ຮຕ ເປັນ 848,079 ຮຕ. ເນື້ອທີ່ເພີ່ມຂຶ້ນຫຼາຍທີ່ສຸດແມ່ນຢູ່ ແຂວງສະຫວັນນະເຂດ (106,000 ຮຕ). ກົງກັນຂ້າມ, ນະຄອນຫຼວງວຽງຈັນ ພັດມີເນື້ອທີ່ປູກເຂົ້າໜຽວ ຫຼຸດລົງປະມານ 6,328 ຮຕ (ຈາກ 51,900 ຮຕ ໃນປີ 1999 ເປັນ 45,572 ຮຕ ໃນປີ 2011).

ເນື້ອທີ່ປູກແນວພັນເຂົ້າປັບປຸງ ໃນທົ່ວປະເທດ ໄດ້ເພີ່ມຂຶ້ນຈາກ 19% ໃນປີ 1999 ມາເປັນ ປະມານ 31% ໃນປີ 2011. ໂດຍສະເພາະ ໃນບັນດາແຂວງພາກໃຕ້ ການນຳໃຊ້ແນວພັນເຂົ້າປັບປຸງ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ຂະນະທີ່ແຂວງຈຳປາສັກ ການນຳໃຊ້ແນວພັນເຂົ້າທ້ອງຖິ່ນໄດ້ຫຼຸດລົງຫຼາຍ. ຊາວກະສິກອນໃນແຂວງພາກເໜືອຍັງສືບຕໍ່ນຳໃຊ້ແນວພັນເຂົ້າທ້ອງຖິ່ນເປັນສ່ວນໃຫຍ່ເພື່ອການບໍລິໂພກພາຍໃນຄົວເຮືອນເປັນຫຼັກແທນທີ່ຈະເພື່ອການຂາຍເຂົ້າຕະຫຼາດ. ຍົກເວັ້ນບາງເຂດທົ່ງພຽງເທົ່ານັ້ນ ທີ່ເໝາະສົມແກ່ການນປູກເຂົ້າເຊັ່ນຢູ່ແຂວງໄຊຍະບູລີ ແລະ ແຂວງບໍ່ແກ້ວ.

ການອະທິບາຍສາຍເຫດທີ່ເຮັດໃຫ້ມີການປ່ຽນແປງ

ການນິຍົມນຳໃຊ້ແນວພັນເຂົ້າປັບປຸງຫຼາຍຂຶ້ນໃນບັນດາເຂດທົ່ງພຽງ ໃນພາກກາງ ແລະ ພາກໃຕ້ຂອງ ສປປ ລາວ ສ່ວນໃຫຍ່ແມ່ນຍ້ອນເຂດເຫຼົ່ານີ້ມີຄວາມສະດວກໃນການເຂົ້າເຖິງແນວພັນທີ່ອອກ ໃໝ່ໄດ້ຫຼາຍກວ່າ. ເຂດເຫຼົ່ານີ້ແມ່ນຢູ່ໃກ້ກັບບັນດາສູນຄົ້ນຄວ້າ ແລະ ຜະລິດແນວພັນເຂົ້າ ເຊັ່ນ: ສູນ ຄົ້ນຄວ້ານາພອກຢູ່ນະຄອນຫຼວງວຽງຈັນ, ສູນຄົ້ນຄວ້າທ່າສະໂນ ຢູ່ແຂວງສະຫວັນນະເຂດ, ແລະ ສູນຄົ້ນຄວ້າໂພນງາມຢູ່ແຂວງຈຳປາສັກ. ການສົ່ງເສີມໂດຍພາກລັດ ແລະ ໂຄງການຜູ້ໃຫ້ທຶນຕ່າງໆ ໃຫ້ແກ່ບັນດາສູນຄົ້ນຄວ້າເຫຼົ່ານີ້ໄດ້ມີບົດບາດສຳຄັນຫຼາຍທີ່ຊ່ວຍໃຫ້ຊາວກະສິກອນລາວ ໄດ້ນຳໃຊ້ແນວພັນເຂົ້າໃໝ່. ມີພຽງບາງເຂດເທົ່ານັ້ນ ທີ່ເນື້ອທີ່ປູກເຂົ້າໜຽວໄດ້ຫຼຸດລົງ, ເຊັ່ນ ນະຄອນຫຼວງວຽງຈັນ ຊຶ່ງປະເຊີນກັບການພັດທະນາເປັນຕົວເມືອງຢ່າງໄວວາ ລະຫວ່າງປີ 1999 ແລະ 2011.

ສະຫຼຸບແລ້ວ, ໃນທ້າຍທົດສະວັດທີ່ຜ່ານມາ, ມີການຫັນປ່ຽນຈາກການປູກແນວພັນເຂົ້າໜຽວມາເປັນການປູກແນວພັນເຂົ້າຈ້າວຫຼາຍຂຶ້ນຢ່າງຈະແຈ້ງ. ຊາວກະສິກອນກຳລັງຫັນປ່ຽນມາປູກແນວພັນເຂົ້າຈ້າວຫຼາຍຂຶ້ນເທື່ອລະກ້າວເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດທີ່ເພີ່ມຂຶ້ນ ແລະ ຈາກການເພີ່ມສູງຂຶ້ນຂອງລາຄາເຂົ້າ. ການປ່ຽນມາປູກແນວພັນເຂົ້າຈ້າວເພີ່ມຂຶ້ນແມ່ນໄດ້ກຳນົດໄວ້ໃນຍຸດທະສາດການພັດທະນາກະສິກຳ ແລະ ປ່າໄມ້ ຮອດປີ 2025, ຊຶ່ງລວມທັງແຜນເພື່ອເພີ່ມອັດຕາສ່ວນຜົນຜະລິດເຂົ້າຈ້າວໃຫ້ຮອດ 30% ຂອງເນື້ອທີ່ປູກເຂົ້າທັງໝົດໃນທົ່ວປະເທດ (ກປ, 2015).


ພັດທະນາການຂອງແນວພັນເຂົ້າໜຽວ
ໃນລະດູຝົນປີ 1999 ແລະ 2011
ເປີເຊັນຂອງແນວພັນເຂົ້າໜຽວ
ແບ່ງຕາມເວລາທີ່ເຂົ້າສຸກ
1999 2011
ເຂົ້າດໍ
ເຂົ້າກາງ
ເຂົ້າປີ
ເນື້ອທີ່ປູກເຂົ້າໜຽວລວມ
ໃນລະດູຝົນຕໍ່ແຂວງ
200000 ຮຕ
100000 ຮຕ
10000 ຮຕ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໄຊຍະບູລີ
ໂພນສະຫວັນ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການເພີ່ມຂຶ້ນ ແລະ ຫຼຸດລົງ ໃນລະຫວ່າງປີ
1999 ແລະ 2011 ຈຳນວນລວມເປັນ ເຮັກຕາ
(17)
> -6500 - -500 ຮຕ (3)
ປ່ຽນແປງເລັກນ້ອຍ (0)
> 500 - 5000 ຮຕ (4)
> 5000 - 15000 ຮຕ (7)
> 15000 - 25000 ຮຕ (1)
> 25000 - 35000 ຮຕ (1)
106000 ຮຕ (1)


ພັດທະນາການຂອງແນວພັນເຂົ້າປັບປຸງ
ທັງສອງລະດູປີ 1999 ແລະ 2011
ເປີເຊັນຂອງແນວພັນເຂົ້າໜຽວ ແບ່ງຕາມ
ຊະນິດເມັດພັນພື້ນເມືອງ ແລະ ພັນປັບປຸງ
1999 2011
ເຂົ້ານາປີ-ພັນປັບປຸງ
ເຂົ້ານາປີ-ພັນພື້ນເມືອງ
ເຂົ້າໄຮ່-ພັນພື້ນເມືອງ
ບໍ່ສະແດງ: ເຂົ້ານາປີ-ພັນປັບປຸງ < 1 %
ເນື້ອທີ່ປູກເຂົ້າໜຽວລວມ
ທັງສອງລະດູຝົນຕໍ່ແຂວງ
200000 ຮຕ
100000 ຮຕ
10000 ຮຕ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໄຊຍະບູລີ
ໂພນສະຫວັນ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການເພີ່ມຂຶ້ນ ແລະ ຫຼຸດລົງ ໃນລະຫວ່າງປີ
1999 ແລະ 2011 ຈຳນວນລວມເປັນ ເຮັກຕາ
(17)
> -4100 - -500 ຮຕ (1)
ປ່ຽນແປງເລັກນ້ອຍ (4)
> 500 - 5000 ຮຕ (4)
> 5000 - 15000 ຮຕ (4)
> 15000 - 25000 ຮຕ (1)
> 25000 - 50000 ຮຕ (1)
> 50000 - 106000 ຮຕ (2)

ຄ 9 ພືດລົ້ມລຸກຕົ້ນຕໍ

ພາກສະເໜີ

80% ຂອງດິນກະສິກຳທັງໝົດໃນ ສປປ ລາວ ໄດ້ຖືກນຳໃຊ້ເຂົ້າໃນການປູກພືດລົ້ມລຸກ (1.19 ລ້ານ ຮຕ). ສ່ວນຫຼາຍເນື້ອທີ່ດັ່ງກ່າວ ໄດ້ຖືກນຳໃຊ້ເຂົ້າໃນການປູກເຂົ້າ, ຊຶ່ງເປັນພືດອາຫານຫຼັກ. ຢ່າງໃດກໍຕາມ, ກຳລັງມີການຜະລິດກະສິກຳທີ່ມີຄວາມຫຼາກຫຼາຍ ແລະ ເພື່ອການຜະລິດເປັນສິນຄ້າ ຫຼາຍຂຶ້ນໃນ ສປປ ລາວ. ຈຳນວນຊາວກະສິກອນທີ່ປູກພືດຊະນິດອື່ນທີ່ບໍ່ແມ່ນເຂົ້າຕາມສວນຄົວຂອງພວກເຂົາ ແລະ ລຽບຕາມແຄມແມ່ນ້ຳ, ໂດຍສະເພາະ ລຽບຕາມແມ່ນ້ຳຂອງ ຫຼື ສາຂາຂອງແມ່ນ້ຳຂອງ, ໄດ້ຄ່ອຍໆເພີ່ມຂຶ້ນ. ຊາວກະສິກອນຈຳນວນໜຶ່ງທີ່ຢູ່ໃນເຂດຊົນລະປະທານນຳໃຊ້ພື້ນທີ່ປູກເຂົ້າຂອງພວກເຂົາ ສ່ວນໜຶ່ງ ປູກພືດຊະນິດອື່ນໃນຊ່ວງລະດູແລ້ງແທນການປູກເຂົ້າ. ການປູກພືດຫຼາກຫຼາຍຊະນິດບໍ່ພຽງແຕ່ຊ່ວຍປັບປຸງການຄ້ຳປະກັນສະບຽງອາຫານ ແລະ ເພີ່ມຄຸນຄ່າທາງໂພສະນາການໃນລະດັບຄົວເຮືອນເທົ່ານັ້ນ, ແຕ່ຍັງມີຜົນຜະລິດສ່ວນເກີນເອົາໄວ້ຂາຍໃນຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດອີກດ້ວຍ.

ການອະທິບາຍຮູບແບບ ໃນປີ 2011

ຫຼາຍກວ່າ 100 ຊະນິດ ຂອງພືດລົ້ມລຸກ ທີ່ມີການປູກໃນ ສປປ ລາວ ໃນປີ 2011, ໂດຍລວມແມ່ນຕົກໃນປະເພດຂອງ (ກ) ພືດປະເພດເມັດ, (ຂ) ພືດໃຫ້ສານກະຕຸ້ນ, (ຄ) ພືດກາກໃຍ, (ງ) ດອກໄມ້, (ຈ) ພືດອາຫານສັດ, (ສ) ຜັກກິນໃບ ແລະ ລຳຕົ້ນ, (ຊ) ພືດຕະກູນຖົ່ວ, (ຍ) ພືດປະເພດນ້ຳມັນ, (ດ) ຮາກ, ເຫງົ້າ ແລະ ຜັກທີ່ເປັນຫົວ, (ຕ) ເຄື່ອງເທດ, (ຖ) ພືດປະເພດໃຫ້ນ້ຳຕານ, (ທ) ພືດຜັກທີ່ໃຫ້ໝາກ, (ນ) ພືດເປັນຢາ, ແລະ (ບ) ອື່ນໆ. ໃນຄວາມເປັນຈິງ, ຊະນິດພືດລົ້ມລຸກທີ່ປູກ ມີຫຼາຍກວ່ານີ້, ເນື່ອງຈາກວ່າການສຳຫຼວດຂໍ້ມູນກະສິກຳນີ້ ລາຍງານສະເພາະຂໍ້ມູນພືດທີ່ປູກໃນພື້ນທີ່ຫຼາຍກວ່າ 100 ຕາແມັດ ເທົ່ານັ້ນ.

ແຜນທີ່ສະແດງ ເນື້ອທີ່ການປູກພືດລົ້ມລຸກ ຫຼັກ (ນອກຈາກເຂົ້າ) ທີ່ປູກຢູ່ແຕ່ລະບ້ານ ໃນຂອບເຂດ ທົ່ວ ສປປ ລາວ. ມີຫຼາຍບ້ານທີ່ປູກ ບັນດາພືດລົ້ມລຸກ ເຊັ່ນ ພືດອາຫານສັດ, ສາລີຫວານ ແລະ ມັນຕົ້ນ (17%, 16%, ແລະ 11% ຂອງບ້ານທັງໝົດ ຕາມລຳດັບ; ເບິ່ງເສັ້ນສະແດງ 5). ພືດລົ້ມລຸກຫຼັກປະເພດອື່ນທີ່ນິຍົມກັນປູກ ແມ່ນ ໝາກເຜັດ (7%), ໝາກເດືອຍ (6%), ກະລ່ຳປີ (6%), ຫົວຫອມ (5%), ໝາກງາ (4.5%), ໝາກແຕງ ແລະ ໝາກອຶ (4%), ອ້ອຍ (3%), ຢາສູບ (2.5%), ຖົ່ວດິນ (2.5%), ແລະ ໝາກໂມ (2%) ແລະ ອື່ນໆ (13.5%).

ເສັ້ນສະແດງ 5: ສັດສ່ວນຂອງບ້ານທີ່ປູກພືດລົ້ມລຸກຫຼັກ (ບໍ່ແມ່ນເຂົ້າ) ໃນບ້ານ



ສ່ວນໃຫຍ່ແລ້ວ ຊາວກະສິກອນລາວ ໃຫ້ອາຫານສັດລ້ຽງຂອງພວກເຂົາ ດ້ວຍພືດປະເພດເມັດເປັນອາຫານສັດ (ເຊັ່ນ: ສາລີ) ແລະ ຫຍ້າຕາມທົ່ງຫຍ້າທຳມະຊາດ ຫຼື ເສດເຫຼືອຈາກຜົນຜະລິດພືດ (ເຊັ່ນ: ເຟືອງ). ໜ້ອຍກວ່າ 1% ຂອງບ້ານ ທີ່ໃຊ້ຫຍ້າທີ່ພວກເຂົາປູກຕາມທົ່ງຫຍ້າ ເປັນອາຫານສັດລ້ຽງຂອງພວກເຂົາ. ເປັນທີ່ຮູ້ຈັກດີວ່າ ແຂວງຊຽງຂວາງ ເປັນເຂດທີ່ມີທົ່ງຫຍ້າທຳມະຊາດສຳລັບການລ້ຽງສັດໃຫຍ່. ພືດອາຫານສັດ ແມ່ນໄດ້ປູກຢ່າງກວ້າງຫຼາຍໃນບັນດາແຂວງພາກເໜືອ. ແຂວງໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ແລະ ຫົວພັນ ທັງໝົດນັ້ນ ເປັນແຂວງທີ່ມີຊື່ສຽງໃນການປູກສາລີຢ່າງກວ້າງຂວາງ, ເຊິ່ງເປັນວັດຖຸດິບຫຼັກສຳລັບປູກເປັນອາຫານສັດ. ຫວຽດນາມ, ໄທ ແລະ ຈີນ ເປັນຕະຫຼາດຫຼັກ ສຳລັບສາລີທີ່ປູກໃນແຂວງເຫຼົ່ານີ້.

ສາລີຫວານ ເປັນພືດທີ່ປູກທັງເພື່ອການບໍລິໂພກພາຍໃນຄົວເຮືອນ ແລະ ເພື່ອຂາຍ. ການປູກເພື່ອການບໍລິໂພກພາຍໃນຄົວເຮືອນ ສ່ວນໃຫຍ່ໄດ້ພົບເຫັນຢູ່ພາກເໜືອແຕ່ຍັງພົບຢູ່ພາກຕະເວັນອອກ ແລະ ພາກກາງຂອງສປປລາວ. ຢ່າງໃດກໍຕາມ, ການປູກສາລີຫວານໄດ້ຖືກພັດທະນາເຖິງລະດັບເປັນສິນຄ້າໃນແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ, ໂດຍສະເພາະໃນເຂດອ້ອມຂ້າງບໍລິສັດອຸດສະຫາກຳ-ກະສິກຳລາວ. ບໍລິສັດນີ້ມີໂຮງງານໃນເມືອງທຸລະຄົມ, ແຂວງວຽງຈັນໄດ້ໃຊ້ສາລີຫວານເພື່ອຜະລິດເປັນນ້ຳນົມສາລີຫວານ, ສາລີອ່ອນ ແລະ ຜັກບັນຈຸກະປ໋ອງ ແລະ ອື່ນໆເພື່ອຂາຍຢູ່ຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດ.

ການປູກມັນຕົ້ນ ໄດ້ຂະຫຍາຍຕົວຢ່າງໄວເຊັ່ນກັນ. ປະມານ 10% ຂອງບ້ານທີ່ເຮັດການຜະລິດກະສິກຳ (ຈຳນວນ 939 ບ້ານ) ທົ່ວ ສປປ ລາວ ໄດ້ປູກມັນຕົ້ນເປັນພືດຫຼັກຂອງເຂົາເຈົ້າ, ຮອງຈາກເຂົ້າ. ໃນຊຸມປີຜ່ານມາ, ການຜະລິດມັນຕົ້ນໄດ້ຂະຫຍາຍຕົວເຖິງລະດັບເປັນສິນຄ້າ. ເນື່ອງຈາກຢູ່ໃກ້ກັບໂຮງງານຜະລິດແປ້ງມັນຕົ້ນອິນໂດໄຊນາ, ເຊິ່ງຕັ້ງຢູ່ເຂດຊານເມືອງຂອງນະຄອນຫຼວງວຽງຈັນ, ມັນຕົ້ນ ຈຶ່ງຖືກປູກຢ່າງກວ້າງຂວາງຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ບໍລິຄຳໄຊ. ຜູ້ທີ່ປູກມັນຕົ້ນຍັງສົ່ງອອກຜົນຜະລິດຂອງເຂົາເຈົ້າໃນຮູບແບບຫົວມັນດິບ ຫຼື ມັນຝານຕາກແຫ້ງໄປສູ່ປະເທດໃກ້ຄຽງ ຄື ປະເທດໄທ ແລະ ຫວຽດນາມ.

ຈຳນວນບ້ານ ຫຼາຍກວ່າ 500 ບ້ານ ໄດ້ປູກໝາກເຜັດໃນສວນຄົວຂອງພວກເຂົາ ເຊິ່ງເປັນພືດລົ້ມລຸກຫຼັກເພື່ອບໍລິໂພກ ແລະ ຂາຍ, ແຕ່ການຜະລິດເພື່ອເປັນສິນຄ້າໄດ້ພົບເຫັນໃນຫຼາຍຂຸມຊົນໃນທົ່ວປະເທດ. ໝາກເຜັດສົດ ແລະ ແຫ້ງ ສ່ວນຫຼາຍ ໄດ້ຖືກສົ່ງອອກໄປປະເທດໄທ ແຕ່ກໍ່ຍັງມີການຊົມໃຊ້ຢູ່ພາຍໃນເຊັ່ນດຽວກັນ, ໂດຍສະເພາະ ໃນຮູບແບບແຈ່ວ (ນ້ຳຊອສ ຫຼື ແຈ່ວຂຸ້ນໜຽວ), ເຊັ່ນ: ແຈ່ວບອງ ຫຼວງພະບາງ, ແຈ່ວນ້ຳຜັກສາລະວັນ ຫຼື ແຈ່ວປາບ້ຳຊຳເໜືອ.

ແຜນທີ່ ຍັງສະແດງເຖິງເຂດທີ່ມີການປູກໝາກເດືອຍທີ່ພົ້ນເດັ່ນຢູ່ພາຍໃນ ແລະ ອ້ອມຂ້າງ ແຂວງໄຊຍະບູລີ (ສີສົ້ມ), ຢາສູບ ຢູ່ແຂວງບໍລິຄຳໄຊ ແລະ ຄຳມ່ວນ (ສີນ້ຳຕານ), ອ້ອຍ ຢູ່ພາກຕະເວັນຕົກສ່ຽງເໜືອຂອງແຂວງສະຫວັນນະເຂດ, ພາກເໜືອຂອງແຂວງຫຼວງນ້ຳທາ ແລະ ພາກຕະເວັນຕົກ ຂອງແຂວງຜົ້ງສາລີ (ສີເຫຼືອງ), ຂ່າ ຢູ່ເຂດຊາຍແດນຂອງແຂວງຜົ້ງສາລີ, ອຸດົມໄຊ ແລະ ຫຼວງພະບາງ (ສີແດງ), ແລະ ໃນອີກຫຼາຍໆເຂດ.

ການອະທິບາຍສາຍເຫດທີ່ເຮັດໃຫ້ເກີດຮູບແບບ

ການປູກພືດລົ້ມລຸກ ໃນ ສປປ ລາວ ສ່ວນຫຼາຍ ຍັງແມ່ນຂະໜາດນ້ອຍ ແລະ ເພື່ອການບໍລິໂພກພາຍໃນຄົວເຮືອນ. ຢ່າງໃດກໍດີ, ມີພືດລົ້ມລຸກຫຼາຍຊະນິດ ທີ່ປູກໃນເນື້ອທີ່ໃຫຍ່ກວ່າ ແລະ ມີທ່າອ່ຽງເພີ່ມຂຶ້ນ ເຊັ່ນ: ມັນຕົ້ນ, ສາລີ, ແລະ ສາລີຫວານ, ແລະ "ເຂົ້າໄກ່ນ້ອຍ" ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດສາກົນຄຽງຄູ່ກັບການຂາຍໃຫ້ແກ່ໂຮງງານປຸງແຕ່ງກະສິກຳ ແລະ ຕະຫຼາດພາຍໃນ. ການນຳໃຊ້ປັດໃຈການຜະລິດຕ່ຳ, ຄ່າແຮງງານຕ່ຳ ແລະ ການປູກແບບອິນຊີ ເຂົ້າໃນການປູກພືດລົ້ມລຸກ ໃນ ສປປ ລາວ ເຮັດໃຫ້ມີຄວາມຕ້ອງການຜະລິດຕະພັນກະສິກຳຂອງລາວເປັນພິເສດຈາກບັນດາປະເທດເພື່ອນບ້ານ. ເພື່ອສືບຕໍ່ຍາດແຍ່ງຂໍ້ໄດ້ປຽບຈາກຄວາມຕ້ອງການພິເສດຂອງຕະຫຼາດໃນອະນາຄົດ, ຕົວຊີ້ວັດທາງພູມີສາດ (GI) ຢູ່ລະຫວ່າງການພັດທະນາ, ຕົວຢ່າງ: ສຳລັບ "ເຂົ້າໄກ່ນ້ອຍ" ທີ່ປູກໂດຍຊາວກະສິກອນຢູ່ ແຂວງຊຽງຂວາງ ແລະ ແຂວງຫົວພັນ.


ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ພືດລົ້ມລຸກທີ່ສຳຄັນ (ທີ່ບໍ່ແມ່ນເຂົ້າ) ໃນລະດັບບ້ານ
ພືດທັນຍາຫານ
ສາລີຫວານ (1308)
ໝາກເດືອຍ (429)
ເຄື່ອງດື່ມ ແລະ ຢາສູບ
ຢາສູບ (207)
ພືດທີ່ເປັນເສັ້ນໃຍ
ຝ້າຍ (12)
ດອກໄມ້
ຜັກບົ້ງ (17)
ພືດອາຫານສັດ
ຫຍ້າ (22)
ພືດອາຫານສັດປະເພດເມັດ (1437)
ຜັກກິນໃບ
ຜັກສະລັດ (53)
ຜັກກະລ່ຳປີ (487)
ພືດຈຳພວກຖົ່ວເປັນຝັກ
ຖົ່ວຂຽວ (49)
ຖົ່ວດຳ, ຖົ່ວແດງ, ຖົ່ວຝັກຍາວ (37)
ຖົ່ວຕ່າງໆ (145)
ພືດໃຫ້ນ້ຳມັນ
ຖົ່ວເຫຼືອງ (32)
ໝາກງາ (351)
ຖົ່ວດິນ (196)
ຜັກ ແລະ ພືດກິນຫົວ
ມັນຝຣັ່ງ (80)
ຫົວຜັກບົ່ວ (392)
ຫົວຜັກທຽມ (41)
ມັນຕົ້ນ (939)
ມັນດ້າງ/ເຜືອກ (23)
ເຄື່ອງເທດ
ຫົວຂ່າ (114)
ໝາກເຜັດ (536)
ພືດໃຫ້ນ້ຳຕານ
ອ້ອຍ (226)
ຜັກ ແລະ ພືດກິນໝາກ
ໝາກໂມ (184)
ໝາກເຂືອ (62)
ໝາກແຕງ/ໝາກອຶ (338)
ພືດສະໝູນໄພ
ຫອມລາບ (100)
ຫອມປ້ອມ (28)
ອື່ນໆ
ພືດລົ້ມລຸກອື່ນໆ (10)
0 50 100 150 km
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E

ຄ 10 ພືດລົ້ມລຸກ ຈັດເປັນກຸ່ມ

ພາກສະເໜີ

ໃນ ສປປ ລາວ, ປະມານ 80% ຂອງເນື້ອທີ່ດິນກະສິກໍາໄດ້ຖືກນໍາໃຊ້ເຂົ້າໃສ່ການປູກພືດລົ້ມລຸກ. ໃນຈໍາພວກພືດລົ້ມລຸກທີ່ສໍາຄັນທີ່ສຸດ (ນອກຈາກເຂົ້າ) ແມ່ນ ພືດປະເພດເມັດທີ່ໃຫ້ທາດແປ້ງ (ສ່ວນໃຫຍ່ແມ່ນສາລີ), ສາລີຫວານ, ມັນຕົ້ນ, ອ້ອຍ, ຖົ່ວເຫຼືອງ, ໝາກເດືອຍ, ຖົ່ວດິນ, ໝາກຖົ່ວຍາວ, ຢາສູບ, ຂ່າ, ໝາກງາ ແລະ ຫອມບົວລະພາ. ພືດລົ້ມລຸກເຫຼົ່ານັ້ນ ແມ່ນປູກເພື່ອເປັນສິນຄ້າ, ຢູ່ໃກ້ກັບ ຕະຫຼາດ ຫຼື ຕິດກັບຊາຍແດນ (ມີການຂົນສົ່ງເຊື່ອມຕໍ່ກັບຕະຫຼາດປະເທດໃກ້ຄຽງ) ແລະ ສ່ວນໃຫຍ່ ເປັນເຂດທີ່ມີ ຄົວເຮືອນຈໍານວນຫຼາຍປູກພືດຊະນິດດຽວກັນ.

ການອະທິບາຍສະພາບການ/ຮູບແບບ ໃນປີ 2011

ແຜນທີ່ຫຼັກສະແດງເຖິງສ່ວນແບ່ງຂອງເນື້ອທີ່ປູກພືດລົ້ມລຸກສະເພາະພືດຫຼັກຈໍານວນໜຶ່ງຕໍ່ເນື້ອທີ່ພືດລົ້ມລຸກທັງໝົດ. ການປູກພືດຫຼັກຈໍານວນໜຶ່ງໃນເຂດດຽວກັນຈໍານວນຫຼາຍ, ໝາຍເຖິງເຂດກຸ່ມພືດ. ແຜນທີ່ນ້ອຍທີ່ແນບແຜນທີ່ຫຼັກສະແດງລາຍລະອຽດກ່ຽວກັບຮູບແບບການປູກພືດແບບເປັນເຂດກຸ່ມພືດລົ້ມລຸກ.

ຂ່າ ເປັນພືດພື້ນເມືອງລາວ ທີ່ໃຊ້ເປັນສ່ວນປະສົມໃນອາຫານລາວຫຼາຍຊະນິດ ແລະ ຍັງໃຊ້ເປັນສ່ວນປະກອບໃນຜະລິດຕະພັນຢາຫຼາຍຊະນິດ. ປະມານ 91% ຂອງການປູກຂ່າ ແມ່ນປູກຢູ່ໃນເຂດ ຊາຍແດນຮ່ວມຂອງແຂວງຜົ້ງສາລີ, ອຸດົມໄຊ, ແລະ ຫຼວງພະບາງ ເຊິ່ງສົ່ງຂາຍໄປຕະຫຼາດຈີນ. ບ້ານທີ່ປູກຂ່າສ່ວນໃຫຍ່ນໍາໃຊ້ອັດຕາສ່ວນຂອງເນື້ອທີ່ດິນກະສິກໍາຂອງພວກເຂົາພຽງເລັກນ້ອຍໃນການປູກ, ທັງໆທີ່ ການປູກຂ່າ ໃນບາງບ້ານໄດ້ກວມເອົາເນື້ອທີ່ເຖິງ 25% ຫາ ເກືອບ 47%. ຢ່າງໃດກໍຕາມ, ໂດຍທົ່ວໄປ, ເນື້ອທີ່ດິນກະສິກໍາທັງໝົດຂອງການປູກພືດລົ້ມລຸກໃນທົ່ວປະເທດຖືກນໍາໃຊ້ເຂົ້າໃນການປູກຂ່າຍັງບໍ່ຮອດ 1% (ບໍ່ລວມເຂົ້າ).

ການປູກໝາກງາ (ທັງງາດໍາ ແລະ ງາຂາວ) ສ່ວນຫຼາຍໃນແຂວງພາກເໜືອ, ໂດຍສະເພາະແຂວງຫຼວງພະບາງ, ອຸດົມໄຊ ແລະ ໄຊຍະບູລີ. ເນື້ອທີ່ການປູກໝາກງາໃນ 3 ແຂວງທີ່ກ່າວມານັ້ນກວມເຖິງ 84% ຂອງເນື້ອທີ່ປູກໝາກງາທັງໝົດຂອງປະເທດ. ໝາກງາ ແມ່ນປູກທັງເພື່ອການບໍລິໂພກພາຍໃນທ້ອງຖິ່ນ ແລະ ເພື່ອການສົ່ງອອກ, ໂດຍສະເພາະ ສປ ຈີນ ຊຶ່ງເປັນບ່ອນສະກັດເອົານໍ້າມັນໝາກງາ. ປົກກະຕິຊາວກະສິກອນລາວ ປູກໝາກງາ ແຊມ ສັບຫວ່າງກັບພືດຊະນິດອື່ນ ແລະ ປູກຕາມສວນຄົວ. ໂດຍທົ່ວໄປ, ເນື້ອທີ່ປູກໝາກງາກວມເອົາ 4% ຂອງດິນກະສິກໍາທີ່ໃຊ້ປູກພືດລົ້ມລຸກ (ບໍ່ລວມເຂົ້າ).

ການປູກພືດປະເພດເມັດທີ່ໃຫ້ທາດແປ້ງ (ຫຼັກໆແມ່ນສາລີ) ແມ່ນມີຂຶ້ນຢູ່ໃນ 2 ເຂດການຜະລິດຫຼັກ. ແຂວງຊຽງຂວາງ ແລະ ຫົວພັນ ກວມເອົາປະມານ 23% ຂອງເນື້ອທີ່ປູກພືດປະເພດເມັດທີ່ໃຫ້ທາດແປ້ງ ທັງໝົດໃນ ສປປ ລາວ. ຖັດມາແມ່ນແຂວງໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ແລະ ຫຼວງພະບາງ, ກວມເອົາ 61% ຂອງເນື້ອທີ່ປູກພືດປະເພດເມັດທີ່ໃຫ້ທາດແປ້ງທັງໝົດ. ບ້ານຈໍານວນໜຶ່ງປູກພືດປະເພດເມັດທີ່ໃຫ້ທາດແປ້ງໂດຍໄດ້ນໍາໃຊ້ເນື້ອທີ່ດິນກະສິກໍາຂອງພວກເຂົາເຖິງ 96%, ໂດຍສະເພາະຢູ່ພາກໃຕ້ຂອງແຂວງໄຊຍະບູລີ. ແຕ່ໂດຍທົ່ວໄປ, ການປູກພືດປະເພດເມັດທີ່ໃຫ້ທາດແປ້ງໄດ້ກວມເອົາປະມານ 40% ຂອງດິນກະສິກໍາທີ່ໃຊ້ປູກພືດລົ້ມລຸກ (ບໍ່ລວມເຂົ້າ).

ເນື້ອທີ່ການປູກໝາກເດືອຍທັງໝົດຫຼາຍກວ່າ 67% ຢູ່ແຂວງໄຊຍະບູລີ ແລະ ເຂດອ້ອມແອ້ມແຂວງ. ບາງບ້ານ ໄດ້ນໍາໃຊ້ທີ່ດິນກະສິກໍາຂອງພວກເຂົາຫຼາຍກວ່າ 78% ປູກໝາກເດືອຍ. ການປູກໝາກເດືອຍເກີດຂຶ້ນສະເພາະໃນຊ່ວງລະດູຝົນ, ຊຶ່ງເປັນພືດເນີນສູງທີ່ອາໃສນໍ້າຝົນເປັນສ່ວນໃຫຍ່. ໂດຍທົ່ວໄປ, ເນື້ອທີ່ການປູກໝາກເດືອຍໄດ້ກວມເອົາດິນກະສິກໍາທີ່ໃຊ້ປູກພືດລົ້ມລຸກ ເຖິງ 15%. (ບໍ່ລວມເຂົ້າ)

ການປູກຖົ່ວດິນ ຂ້ອນຂ້າງກະຈາຍໄປທົ່ວ ສປປ ລາວ, ແຕ່ກໍມີການປູກຢ່າງຫຼວງຫຼາຍ ໃນ 2 ກຸ່ມເຂດພູມີສາດ. ແຂວງໄຊຍະບູລີ ມີເນື້ອທີ່ປູກຖົ່ວດິນ ກວມເຖິງ 21% ແລະ ເນື້ອທີ່ຢູ່ລະຫວ່າງ ແຂວງສາລະວັນ ແລະ ຈໍາປາສັກ ກວມເຖິງ 22% ຂອງເນື້ອທີ່ປູກຖົ່ວດິນຂອງປະເທດ. ບັນດາບ້ານໃນ 2 ເຂດດັ່ງກ່າວນັ້ນນໍາໃຊ້ດິນກະສິກໍາຂອງພວກເຂົາເຖິງ 38% ເຂົ້າໃນການປູກຖົ່ວດິນ. ແຕ່ໂດຍທົ່ວໄປ, ການປູກຖົ່ວດິນໄດ້ນໍາໃຊ້ດິນກະສິກໍາປູກພືດລົ້ມລຸກ (ບໍ່ລວມເຂົ້າ) ພຽງແຕ່ 3–4%.

ການປູກຢາສູບ ຂ້ອນຂ້າງກະຈາຍໄປທົ່ວ ສປປ ລາວ ເຊັ່ນດຽວກັນ, ແຕ່ວ່າ ແຂວງບໍລິຄໍາໄຊ ແລະ ແຂວງຄໍາມ່ວນເປັນກຸ່ມເຂດປູກຢາສູບທີ່ມີສ່ວນແບ່ງສູງສຸດກວມເຖິງ 28% ຂອງເນື້ອທີ່ປູກຢາສູບ. ສ່ວນໃຫຍ່ບັນດາບ້ານໃນເຂດດັ່ງກ່າວໄດ້ນໍາໃຊ້ດິນກະສິກໍາຂອງພວກເຂົາ ໃນອັດຕາສ່ວນທີ່ຕໍ່າເທົ່ານັ້ນ, ແຕ່ກໍ່ຍັງມີບາງບ້ານໄດ້ນໍາໃຊ້ທີ່ດິນກະສິກໍາຂອງພວກເຂົາເພື່ອປູກຢາສູບເຖິງ 51%. ໂດຍພື້ນຖານແລ້ວ ການປູກຢາສູບມີຂຶ້ນໃນຊ່ວງລະດູແລ້ງ ແລະ ມັກພົບເຫັນບົນຜືນນາແຫ້ງ. ໂດຍທົ່ວໄປ, ການປູກຢາສູບ ໄດ້ໃຊ້ທີ່ດິນກະສິກໍາຂອງພືດລົ້ມລຸກ (ບໍ່ລວມເຂົ້າ) ປະມານ 1–2%.

ໝາກຖົ່ວຍາວ ສ່ວນຫຼາຍແມ່ນປູກ ຢູ່ພາກໃຕ້ຂອງແຂວງໄຊຍະບູລີ, ກວມເອົາຫຼາຍກວ່າ 50% ຂອງເນື້ອທີ່ປູກໝາກຖົ່ວຍາວທັງໝົດໃນ ສປປ ລາວ. ຕາມປົກກະຕິຊາວກະສິກອນໄດ້ນໍາໃຊ້ດິນກະສິກໍາຂອງບ້ານພຽງບາງສ່ວນເຂົ້າໃນການປູກ. ໂດຍທົ່ວໄປ, ເນື້ອທີ່ດິນກະສິກໍາຂອງພືດລົ້ມລຸກ (ບໍ່ລວມເຂົ້າ) ຕໍ່າກວ່າ 1% ໄດ້ຖືກນໍາໃຊ້ເຂົ້າໃນການປູກໝາກຖົ່ວຍາວ.

ແຂວງສາລະວັນ, ເຊກອງ, ຈໍາປາສັກ, ແລະ ອັດຕະປື ລວມກັນ ກວມເອົາ 41% ຂອງເນື້ອທີ່ປູກຫອມບົວລະພາທັງໝົດໃນທົ່ວປະເທດ. ຫອມບົວລະພາ ເປັນພືດທີ່ນິຍົມໃຊ້ ໃນ ສປປ ລາວ ແລະ ເປັນສ່ວນປະກອບສໍາຄັນຂອງອາຫານລາວຫຼາຍເຍື່ອງ. ໂດຍທົ່ວໄປ, ການປູກຫອມບົວລະພາໄດ້ນໍາໃຊ້ດິນກະສິກໍາຂອງພືດລົ້ມລຸກ (ບໍ່ລວມເຂົ້າ) ຕໍ່າກວ່າ 0.1%.

ການອະທິບາຍສາຍເຫດທີ່ເຮັດໃຫ້ເກີດຮູບແບບ

ການປູກພືດລົ້ມລຸກ ເພື່ອຈຸດປະສົງທາງການຄ້າ (ຫຼື ເອີ້ນວ່າ ພືດເສດຖະກິດ) ໃນ ສປປ ລາວ ແມ່ນມີການເພີ່ມຂຶ້ນໃນໄລຍະຫຼາຍປີຜ່ານມາ. ອັນສະທ້ອນໃຫ້ເຫັນເຖິງການຫັນປ່ຽນທີ່ກໍາລັງເກີດຂຶ້ນໃນປະເທດໃນປະຈຸບັນ, ໂດຍທີ່ການກະສິກໍາກໍາລັງກາຍມາເປັນການຜະລິດເພື່ອການຄ້າຫຼາຍຂຶ້ນ ແລະ ຊາວກະສິກອນປູກພືດຫຼາກຫຼາຍຊະນິດໃນເນື້ອທີ່ຂະໜາດໃຫຍ່ເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການຂອງຕະຫຼາດ ທີ່ກໍາລັງເປີດກວ້າງ. ສັດສ່ວນຂອງຄົວເຮືອນກະສິກໍາ ທີ່ເນັ້ນການຜະລິດພືດເປັນສິນຄ້າແທນການຜະລິດ ເພື່ອຊົມໃຊ້ພາຍໃນຄົວເຮືອນ ໄດ້ເພີ່ມຂຶ້ນຈາກປະມານ 6% ໃນປີ 1999 ມາເປັນເກືອບ 33% ໃນປີ 2011 (ເບິ່ງ B6).

ການເຕົ້າໂຮມການຜະລິດເພື່ອເປັນສິນຄ້າ ໂດຍສະເພາະ ພືດລົ້ມລຸກໃນບາງເຂດ ໄດ້ມີສ່ວນກ່ຽວພັນກັບການເຂົ້າເຖິງຕະຫຼາດ, ການເຂົ້າເຖິງເສັ້ນທາງ ແລະ ລະບົບຊົນລະປະທານ. ພືດລົ້ມລຸກຫຼາຍຊະນິດໄດ້ປູກຢ່າງໜາແໜ້ນຢູ່ເຂດພື້ນທີ່ດັ່ງທີ່ກ່າວ ໃນປີ 2011. ສັດສ່ວນສູງສຸດຂອງຄົວເຮືອນກະສິກໍາທີ່ເນັ້ນການປູກພືດເປັນສິນຄ້າອາໃສໃນບັນດາແຂວງຕໍ່ໄປນີ້ ຄື: ແຂວງໄຊຍະບູລີ (50%), ຫຼວງພະບາງ (45%), ຫຼວງນໍ້າທາ (40%), ຈໍາປາສັກ (40%), ແລະ ອຸດົມໄຊ (30%).

ຄ 10 ພືດລົ້ມລຸກ ຈັດເປັນກຸ່ມ



ຄ 11 ສາລີ

ພາກສະເໜີ

ສາລີ (Zea mays) ແມ່ນພືດທັນຍາຫານປະຈຳປີ ຈາກ ອາເມຣິກາກາງ ທີ່ໄດ້ມີການເພາະປູກຫຼາຍພັນປີ ໃນປະຫວັດສາດຂອງມວນມະນຸດ ແລະ ສາລີຖືກນຳໃຊ້ເປັນອາຫານຄົນ, ອາຫານສັດ, ແລະ ວັດຖຸດິບ ໃນການຜະລິດນ້ຳມັນພືດ.

ໃນຫຼາຍໆປີ ເມື່ອບໍ່ດົນມານີ້, ການປູກສາລີເປັນສິນຄ້າເພື່ອການຕະຫຼາດແມ່ນໄດ້ຮັບການສົ່ງເສີມ. ສາລີ ເປັນພືດບູລິມະສິດຂອງປະເທດ ທີ່ມີຄວາມຕ້ອງການສູງ ທັງຕະຫຼາດທ້ອງຖິ່ນ ແລະ ສາກົນ. ການປູກສາລີ ສ່ວນຫຼາຍແມ່ນປູກເພື່ອຂາຍເປັນພືດອາຫານສັດ, ແລະ ປູກເພື່ອສົ່ງອອກໃຫ້ແກ່ຜູ້ຊື້ຢູ່ຫວຽດນາມ, ໄທ ແລະ ສປ ຈີນ. ເນື້ອທີ່ການປູກສາລີ ຢູ່ ສປປ ລາວ ໄດ້ເພີ່ມຂຶ້ນຢ່າງໄວໃນທົດສະວັດທີ່ຜ່ານມາ ແລະ ໃນ ປະຈຸບັນມັນໄດ້ຖືກຈັດລຽງເປັນພືດອັນດັບທີສອງຮອງຈາກເຂົ້າ ອີງຕາມເນື້ອທີ່ການຜະລິດ.

ສະພາບການປູກສາລີ ໃນປີ 2011

ຢູ່ ສປປ ລາວ, ສາລີ ສ່ວນໃຫຍ່ແມ່ນໄດ້ປູກຢູ່ໃນພື້ນທີ່ເຂດນອກຊົນລະປະທານໃນຊ່ວງລະດູຝົນ. ເນື້ອທີ່ສາລີທັງໝົດ, 93 ສ່ວນຮ້ອຍ ແມ່ນໄດ້ປູກຢູ່ໃນຊ່ວງລະດູຝົນ ແລະ 7 ສ່ວນຮ້ອຍ ແມ່ນ ໄດ້ປູກຢູ່ໃນຊ່ວງລະດູແລ້ງ. ເນື້ອທີ່ປູກສາລີມີເຖິງ 101,630 ຮຕ. ໃນນັ້ນເກືອບເຄິ່ງໜຶ່ງ (48,509 ຮຕ) ໄດ້ປູກຢູ່ແຂວງ ໄຊຍະບູລີ ໂດຍສະເພາະ ເມືອງແກ່ນທ້າວ ແລະ ປາກລາຍ ລວມມີ 18,680 ຮຕ ແລະ 20,420 ຮຕ ຕາມລຳດັບ. ເຂດຂອງການປູກສາລີດັ່ງກ່າວ ມີລະບົບການຂົນສົ່ງທີ່ດີ ແລະ ສາມາດເຂົ້າ ເຖິງຕະຫຼາດປະເທດໄທໄດ້ສະດວກ.

ກຸ່ມການປູກສາລີອື່ນໆ ແມ່ນຢູ່ເຂດລະຫວ່າງ ເມືອງໂພນສະຫວັນ (ເທດສະບານແຂວງຊຽງຂວາງ) ແລະ ເມືອງ ຊຳເໜືອ (ເທດສະບານແຂວງຫົວພັນ) ແລະ ຢູ່ໃນ 3 ຕົວເມືອງທາງພາກເໜືອຂອງແຂວງຫົວພັນ. ເຂດພື້ນທີ່ດັ່ງກ່າວ ມີຄວາມສະດວກໃນການເຂົ້າເຖິງ ສສ ຫວຽດນາມ, ຊຶ່ງເປັນໜຶ່ງໃນບັນດາຕະຫຼາດບຫຼັກ ຂອງ ສາລີທີ່ປູກ ໃນ ສປປ ລາວ. ໂດຍລວມ ມີປະມານ 22,000 ຮຕ ທີ່ໄດ້ປູກຢູ່ເຂດດັ່ງກ່າວ.

ດັ່ງທີ່ແຜນທີ່ໄດ້ສະແດງ, ກຸ່ມພື້ນທີ່ການປູກສາລີອັນດັບທີສາມ ແມ່ນຢູ່ແຂວງ ອຸດົມໄຊ ແລະ ອີກຈຳນວນນ້ອຍໜຶ່ງ ຢູ່ແຂວງ ບໍ່ແກ້ວ. ມີປະມານ 22,000 ຮຕ ທີ່ໄດ້ປູກໃນສອງເຂດດັ່ງກ່າວ, ໃນນັ້ນມີ 5,000 ຮຕ ແມ່ນໄດ້ປູກຊ່ວງລະດູແລ້ງ ຊຶ່ງກວມເອົາ 75 ສ່ວນຮ້ອຍຂອງເນື້ອທີ່ການປູກສາລີ ໃນ ສ ປປ ລາວ.

ລວມທັງໝົດ ມີ 2,977 ບ້ານ ທີ່ປູກສາລີ ໃນ ສ ປ ລາວ. ສ່ວນຫຼາຍແມ່ນບັນດາບ້ານຢູ່ທາງພາກເໜືອ ຂອງປະເທດ. ໃນຂະນະທີ່ 81 ສ່ວນຮ້ອຍ ຂອງຈຳນວນບ້ານເຫຼົ່ານັ້ນ ໄດ້ນຳໃຊ້ພື້ນທີ່ດິນກະສິກຳຂອງ ພວກເຂົາຕ່ຳກວ່າ 25 ສ່ວນຮ້ອຍ ໃນການປູກສາລີ, ດັ່ງທີ່ໄດ້ສະເໜີຂ້າງເທິງ ກ່ຽວກັບສາມກຸ່ມພື້ນທີ່ ການປູກສາລີ, ໃນນັ້ນ ມີຫຼາຍໆບ້ານໄດ້ນຳໃຊ້ພື້ນທີ່ກະສິກຳຂອງພວກເຂົາ 50 ສ່ວນຮ້ອຍ ຫຼື ຫຼາຍກວ່າ ເພື່ອປູກສາລີ (ເບິ່ງ ຄ10).

ມີຫຼາຍກວ່າ 80,000 ຄົວເຮືອນກະສິກຳ ທີ່ປູກສາລີ ໃນເນື້ອທີ່ທັງໝົດ 101,630 ຮຕ, ໂດຍສະເລ່ຍ ທົ່ວປະເທດປະມານ 1.3 ຮຕ ຕໍ່ຄົວເຮືອນ ປູກສາລີ. ດັ່ງທີ່ສະແດງຢູ່ແຜນທີ່ນ້ອຍ, ສະເລ່ຍເນື້ອທີ່ການ ປູກສາລີຕໍ່ຄົວເຮືອນຢູ່ກຸ່ມພື້ນທີ່ທີ່ມີເງື່ອນໄຂແມ່ນສູງກວ່າເຂດການຜະລິດອື່ນໆ ໃນ ສປປ ລາວ. ມີພຽງ ໜຶ່ງເມືອງ ທີ່ມີເນື້ອທີ່ປູກສາລີສະເລ່ຍຕໍ່ຄົວເຮືອນຫຼາຍກວ່າ 5 ຮຕ ແລະ ສູງສຸດເຖິງ 15.8 ຮຕ ຕໍ່ຄົວເຮືອນ, ເມືອງດັ່ງກ່າວແມ່ນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ມັນອາດເປັນໄປໄດ້ເພາະວ່າຄົນຢູ່ໃນເຂດຕົວ ເມືອງໄດ້ຫັນໄປປູກສາລີຢູ່ເຂດອື່ນໆ ຂອງປະເທດ.


ສ່ວນຮ້ອຍຂອງເນື້ອທີ່ ທີ່ໃຊ້ປູກສາລີ ໃນລະດັບບ້ານ (8643)
0 % (5665)
> 0 - 25 % (2407)
> 25 - 50 % (367)
> 50 - 75 % (146)
> 75 - 96 % (57)
ຈຳນວນຂອງຄົວເຮືອນທັງໝົດ (ສີ) ເນື້ອທີ່ປູກສາລີ ທັງໝົດ (ຂະໜາດ) ໃນລະດັບເມືອງ
ລະດູຝົນ
ລະດູແລ້ງ
15000 ຮຕ
7500 ຮຕ
3000 ຮຕ
1000 ຮຕ
ບໍ່ສະແດງ < 100 ຮຕ
ໃຊ້ສັນຍາລັກ > 1000 ຮຕ
> 1 - 50 ຄົວເຮືອນ
> 50 - 500 ຄົວເຮືອນ
> 500 - 5000 ຄົວເຮືອນ
> 5000 - 7502 ຄົວເຮືອນ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
1450ha
780ha
1710ha
1450ha
2620ha
7650ha
1560ha
1300ha
1660ha
1890ha
20420ha
1030ha
18680ha
2400ha
1560ha
2410ha
1160ha
1920ha
6230ha
4380ha
0 50 100 150 km
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
2400000N
2200000N
2000000N
1800000N
1600000N
ເນື້ອທີ່ປູກສາລີສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.0 ຮຕ/ ຄຮ (3)
> 0.0 - 0.5 ຮຕ/ ຄຮ (80)
> 0.5 - 1.0 ຮຕ/ ຄຮ (37)
> 1.0 - 2.5 ຮຕ/ ຄຮ (17)
> 2.5 - 5.0 ຮຕ/ ຄຮ (5)
> 5.0 - 15.8 ຮຕ/ ຄຮ (1)
0 100 200 300 km

ການປ່ຽນແປງສະພາບການຜະລິດສາລີ ລະຫວ່າງ 1999 ແລະ 2011

ສະພາບການປູກສາລີ ໄດ້ມີການປ່ຽນແປງຢ່າງຈະແຈ້ງ, ໂດຍສະເພາະພື້ນທີ່ການປູກໃນລະດູຝົນ. ເນື້ອທີ່ປູກສາລີທັງໝົດ ຢູ່ ສປປ ລາວ ໃນປະຈຸບັນ ມີທ່າອ່ຽງເພີ່ມຂຶ້ນຫຼາຍກວ່າ 20 ສ່ວນຮ້ອຍ ທຽບໃສ່ປີ 1999 ແມ່ນມີພຽງ 78,850 ຮຕ.

ຢູ່ແຂວງຫຼວງພະບາງ, ເນື້ອທີ່ການປູກສາລີຫຼຸດລົງຈາກ 27,740 ຮຕ ໃນປີ 1999 ເຫຼືອພຽງແຕ່ 2,040 ຮຕ ໃນປີ 2011 ໝາຍຄວາມວ່າ ເນື້ອທີ່ຫຼຸດລົງເຖິງ 93 ສ່ວນຮ້ອຍ. ການປູກສາລີໄດ້ຫຼຸດລົງເຊັ່ນດຽວກັນ ຢູ່ພາກກາງ ຂອງແຂວງຫົວພັນ, ພາກຕາເວັນອອກສຽງໃຕ້ ຂອງແຂວງຊຽງຂວາງ, ທິດຕາເວັນອອກ ຂອງແຂວງບໍລິຄໍາໄຊ ແລະ ເກືອບທັງໝົດໃນເຂດພາກໃຕ້ຂອງ ສປປ ລາວ. ການເພີ່ມຂຶ້ນຂອງການປູກສາລີ ແມ່ນມີຢ່າງຈໍາກັດໃນເຂດຕອນໃຕ້ຂອງແຂວງໄຊຍະບູລີ, ຕາເວັນອອກສຽງເໜືອຂອງແຂວງຊຽງຂວາງ, ທາງເໜືອຂອງແຂວງຫົວພັນ ແລະ ພາກກາງຂອງແຂວງອຸດົມໄຊ.

ເຫດຜົນການປ່ຽນແປງ

ສາລີໄດ້ກາຍມາເປັນພືດເສດຖະກິດຫຼັກ ຢູ່ພາກເໜືອຂອງ ສປປ ລາວ ໃນໄລຍະຫຼາຍປີຜ່ານທີ່ມານີ້. ປັດໃຈຫຼັກທີ່ເຮັດໃຫ້ມີການຂະຫຍາຍເນື້ອທີ່ປູກສາລີແມ່ນເກີດຈາກຄວາມຕ້ອງການສູງຈາກບັນດາປະເທດເພື່ອນບ້ານໂດຍສະເພາະປະເທດໄທ, ສສ ຫວຽດນາມ ແລະ ສປ ຈີນ, ທີ່ມີການຂະຫຍາຍ ຕົວທາງດ້ານເສດຖະກິດຢ່າງວ່ອງໄວ ແລະ ການເພີ່ມຂຶ້ນຂອງຈໍານວນປະຊາກອນເປັນສອງເທົ່າເຮັດໃຫ້ການບໍລິໂພກຊີ້ນສູງຂຶ້ນ ເຊິ່ງມັນຈໍາຕ້ອງເພີ່ມການລ້ຽງສັດ ດັ່ງນັ້ນຈຶ່ງເຮັດໃຫ້ຄວາມຕ້ອງການພືດອາຫານສັດໃນຂະແໜງອຸດສະຫະກໍາເພີ່ມຫຼາຍຂຶ້ນ (*Newby*, 2016). ເຫັນໄດ້ວ່າ ຜົນປະໂຫຍດຈາກການເພີ່ມຂຶ້ນຂອງລາຄາສິ່ງຜົນຕໍ່ຊາວກະສິກອນທີ່ອາໃສຢູ່ລຽບຕາມຊາຍແດນຂອງສາມປະເທດເຫຼົ່ານັ້ນ ໄດ້ຂະຫຍາຍພື້ນທີ່ການປູກສາລີຢ່າງວ່ອງໄວ ແລະ ກວ້າງຂວາງໃນ ສປປ ລາວ.

ສິ່ງທີ່ເປັນຕົວຂັບເຄື່ອນສໍາຄັນ ທີ່ສະໜັບສະໜູນໃຫ້ມີການຫຍາຍຕົວຂອງການປູກສາລີ ໃນ ສປປ ລາວ ແມ່ນນະໂຍບາຍຂອງລັດຖະບານໄທໂດຍສະເພາະແມ່ນການຍົກເວັ້ນພາສີ ພາຍໃຕ້ຍຸດທະສາດການຮ່ວມມືເສດຖະກິດແມ່ນ້ຳອິຣະວະດີ-ແມ່ນນ້ຳເຈົ້າພະຍາ-ແມ່ນ້ຳຂອງ. ຍຸດທະສາດນີ້ ສ້າງຂຶ້ນປີ 2003 ໄດ້ອໍານວຍຄວາມສະດວກໃຫ້ແກ່ ການສົ່ງອອກສາລີຈາກລາວໄປປະເທດໄທ. ອີກໜຶ່ງປັດໃຈເພີ່ມເຕີມແມ່ນການສະໜອງທຶນເພື່ອຊື້ແນວພັນ ແລະ ຝຸ່ນ (ປັດໃຈການຜະລິດຫຼັກຂອງການປູກສາລີ) ໃຫ້ຊາວກະສິກອນຜູ້ທີ່ປູກ ໂດຍນັກລົງທຶນໄທ ຢູ່ ແຂວງໄຊຍະບູລີ, ນັກລົງທຶນຈີນ ຢູ່ແຂວງອຸດົມໄຊ ແລະ ນັກລົງທຶນຫວຽດນາມ ຢູ່ແຂວງ ຫົວພັນ. ປັດໃຈສຸດທ້າຍ ແມ່ນ ການສ້າງຕັ້ງໂຮງງານປຸງແຕ່ງ ຫຼັງການເກັບກ່ຽວ (ໂຮງອົບແຫ້ງ) ຢູ່ທົ່ວແຂວງອຸດົມໄຊ ກາຍເປັນປັດໃຈສະໜັບສະໜູນໜຶ່ງໃຫ້ແກ່ການປູກສາລີ.






8000000E
8200000E
8400000E
2000000N
1800000N
1600000N
1400000N
22°00'N
20°00'N
18°00'N
16°00'N
14°00'N
100°00'E
102°00'E
104°00'E
106°00'E
108°00'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການປ່ຽນແປງຂອງເນື້ອທີ່ປູກສາລີ
ລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 2500 - 3380 ຮຕ
> 1000 - 2500 ຮຕ
> 250 - 1000 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.05 - 25 ຮຕ
ເນື້ອທີ່ເທົ່າເດີມ
< -0.05 - -25 ຮຕ
< -25 - -50 ຮຕ
< -50 - -250 ຮຕ
< -250 - -1000 ຮຕ
< -1000 - -1860 ຮຕ
ຢຸດເຊົາປູກ
ບໍ່ມີສາລີ
ບໍ່ມີບ້ານ
ເພີ່ມຂື້ນ
ຫຼຸດລົງ
0 50 100 150 km
0 100 200 300 km
ເນື້ອທີ່ປູກສາລີທັງໝົດ
ໃນລະດັບແຂວງ
ປີ 1999 ປີ 2011
30000 ຮຕ
10000 ຮຕ
5000 ຮຕ
1240 1200
690 1540
5510 5500
3170 17340
27740 2040
12890 9700
5560 11880
10640 48510
2000 1520
1260 620
2220 300
2040 140
1470 370
260 430
510 60
1100 470
550 30
ການປ່ຽນແປງຂອງເນື້ອທີ່ປູກສາລີ
ໃນລະດັບແຂວງ (17)
> 15000 - 37875 ຮຕ (1)
> 5000 - 15000 ຮຕ (2)
> 250 - 1000 ຮຕ (1)
> 0 - 250 ຮຕ (1)
< 0 - -250 ຮຕ (2)
< -250 - -1000 ຮຕ (5)
< -1000 - -2500 ຮຕ (3)
< -2500 - -5000 ຮຕ (1)
< -5000 - -25700 ຮຕ (1)

ຄ 12 ໝາກເດືອຍ

ພາກສະເໜີ

ໝາກເດືອຍ (*Coix lacryma-jobi L.*) ຖືກຈັດເຂົ້າຢູ່ໃນຕະກຸນຂອງສາລີ "Maydae" ຈຳພວກສາຍພັນຫຍ້າ, ແລະ ເອີ້ນກັນໂດຍທົ່ວໄປວ່າ ໝາກເດືອຍ ຫຼື ແກ່ນ *croix* (*Chaisiricharoenkul et al.*, 2011). ໝາກເດືອຍ ສ່ວນຫຼາຍແມ່ນປູກຢູ່ອາຊີຕາເວັນອອກ ແລະ ຕາເວັນອອກສຽງໃຕ້ ລວມມີ ຍີ່ປຸ່ນ, ສປ ຈີນ, ຟີລິບປິນ, ມຽນມາ, ລາວ ແລະ ໄທ (Burnette, 2012). ໝາກເດືອຍເປັນພືດປະເພດເມັດມີອົງປະກອບສານອາຫານປະເພດໄຂມັນ ແລະ ໂປຼຕີນ ຫຼາຍກວ່າເຂົ້າສາລີ ແລະ ເຂົ້າ, ແລະ ຍັງຖືກໃຊ້ເປັນຢາພື້ນເມືອງ ຢູ່ ສປ ຈີນ ແລະ ປະເພດອາຫານ ແລະ ເຄື່ອງດື່ມເພື່ອສຸຂະພາບ.

ໃນ ສປປ ລາວ, ໝາກເດືອຍ ເປັນພືດພັນພື້ນເມືອງຊະນິດໜຶ່ງ, ປູກໂດຍກຸ່ມຊົນເຜົ່າພື້ນເມືອງ, ໂດຍສະເພາະ ຂະມຸ ແລະ ມົ້ງ ເພື່ອບໍລິໂພກພາຍໃນຄົວເຮືອນ ແລະ ເປັນອາຫານສັດ. ໃນຊ່ວງໄລຍະ ທີ່ຂາດເຂົ້າກິນ, ໝາກເດືອຍ ໄດ້ກາຍເປັນພືດທົດແທນທາດແປ້ງໃຫ້ແກ່ຜູ້ຜະລິດລາວ. ຕາມປົກກະຕິແລ້ວ, ປະຊາຊົນປູກໝາກເດືອຍຢູ່ໄຮ່ ຮ່ວມກັບເຂົ້າໄຮ່, ໝາກງາ ແລະ ປະເພດພືດໄຮ່ອື່ນໆ ນອກຈາກເຂດພູດອຍແລ້ວ ໝາກເດືອຍ ຍັງໄດ້ປູກຢູ່ເຂດທົ່ງພຽງເລາະລຽບຕາມແຄມແມ່ນ້ຳຂອງ. ໝາກເດືອຍ ແມ່ນປູກເພື່ອເປັນການລ້ຽງຊີບ ແລະ ທັງເປັນພືດເສດຖະກິດ, ເມື່ອທຽບກັບມັນຕົ້ນ (ຄ13) ຫຼື ສາລີ (ຄ11), ໝາກເດືອຍ ບໍ່ແມ່ນພືດທີ່ນິຍົມສູງສຳລັບການຜະລິດເປັນສິນຄ້າ.

ການຜະລິດໝາກເດືອຍ ປີ 2011

ໃນປີ 2011 ມີເນື້ອທີ່ ຜະລິດໝາກເດືອຍທັງໝົດ 37,812 ເຮັກຕາ ໃນ ສປປ ລາວ ໂດຍສະເພາະຢູ່ ທາງພາກຕາເວັນຕົກຂອງແຂວງ ວຽງຈັນ (14,884 ຮຕ), ໄຊຍະບູລີ (12,799 ຮຕ), ພາກຕາເວັນຕົກສຽງໃຕ້ຂອງແຂວງຫຼວງພະບາງ (7,303 ຮຕ), ພາກຕາເວັນຕົກສຽງໃຕ້ຂອງແຂວງອຸດົມໄຊ (1,590 ຮຕ), ແລະ ຕອນໃຕ້ຂອງແຂວງບໍ່ແກ້ວ (1,084 ຮຕ). ຢ່າງໃດກໍ່ຕາມ, 7,423 ບ້ານ (86 ສ່ວນຮ້ອຍ) ຂອງຈຳນວນບ້ານທັງໝົດ ບໍ່ໄດ້ປູກໝາກເດືອຍ, ໃນຂະນະທີ່ 1,220 ບ້ານ (ຫຼື 14 ສ່ວນຮ້ອຍ) ປູກໝາກເດືອຍໃນເນື້ອທີ່ນ້ອຍ. ນອກນັ້ນຍັງມີບ້ານຈຳນວນໜຶ່ງນຳໃຊ້ທີ່ດິນກະສິກຳ 30 ຫາ 78 ສ່ວນຮ້ອຍຂອງເນື້ອທີ່ດິນກະສິກຳເພື່ອການປູກພືດ.

ໝາກເດືອຍ ໂດຍທົ່ວໄປແລ້ວ ແມ່ນພືດລະດູຝົນ, ແລະ ເມືອງທີ່ມີເນື້ອທີ່ກວ້າງທີ່ສຸດແມ່ນ ເມືອງຊະນາຄາມ ແຂວງວຽງຈັນ ລວມມີ 10,310 ຮຕ. ໃນລະດູຝົນ. ເນື້ອທີ່ໝາກເດືອຍກວມເອົາ 11 ສ່ວນຮ້ອຍ ຂອງເນື້ອທີ່ດິນກະສິກຳທັງໝົດ ຢູ່ແຂວງວຽງຈັນ, 8 ສ່ວນຮ້ອຍ ໃນແຂວງໄຊຍະບູລີ ແລະ 6 ສ່ວນຮ້ອຍ ທີ່ແຂວງຫຼວງພະບາງ. ຕາຕະລາງ 2 ສະແດງຂໍ້ມູນລະອຽດ ກ່ຽວກັບເນື້ອທີ່ ແລະ ອັດຕາສ່ວນ ຂອງໝາກເດືອຍໃນລະດູຝົນ, ລະດູແລ້ງ ແລະ ທັງສອງລະດູ ໃນປີ 2010/11 ຕໍ່ແຂວງ ແຜນທີ່ນ້ອຍດ້ານຂ້າງສະແດງເນື້ອທີ່ປູກໝາກເດືອຍສະເລ່ຍຕໍ່ຄົວເຮືອນໃນລະດັບເມືອງ. ສະເລ່ຍເນື້ອທີ່ຕໍ່ຄົວເຮືອນຜູ້ປູກໝາກເດືອຍແມ່ນ 6 ຮຕ ຢູ່ເມືອງທຸລະຄົມ ແຂວງວຽງຈັນ. ຢູ່ບັນດາເມືອງອື່ນໆ ສະເລ່ຍສູງສຸດ ແມ່ນ 2 ຮຕ ຕໍ່ຄົວເຮືອນປູກໝາກເດືອຍ. ລວມທັງໝົດ ມີ 38,964 ຄົວເຮືອນ ທີ່ຜະລິດໝາກເດືອຍ, ໃນນັ້ນ ຫຼາຍກວ່າ 1/3 ຢູ່ແຂວງໄຊຍະບູລີ (14,045 ຄົວເຮືອນ), ປະມານ 1/4 ຢູ່ແຂວງຫຼວງພະບາງ (10,063 ຄົວເຮືອນ) ແລະ ອີກ 1/4 ຢູ່ແຂວງວຽງຈັນ (9,909 ຄົວເຮືອນ).

ໂອກາດ ແລະ ຂໍ້ຈຳກັດ ສຳລັບການຜະລິດ ໝາກເດືອຍ

ໝາກເດືອຍ ແມ່ນພືດທີ່ມີຄວາມສາມາດປັບຕົວເຂົ້າກັບສະພາບດິນທີ່ມີຄວາມອຸດົມສົມບູນຕ່ຳໃນບາງບ່ອນ ຍັງພົບເຫັນມີການໃຊ້ມູນສັດປັບປຸງຜົນຜະລິດ. ນອກຈາກນັ້ນ ການຜະລິດໝາກເດືອຍ ຕ້ອງການແຮງງານຕ່ຳໂດຍສະເພາະຖ້າປຽບທຽບກັບການຜະລິດເຂົ້າ, ໄດ້ມີການເສຍຫຍ້າ ພຽງແຕ່ຄັ້ງດຽວ ຫຼື 2 ຄັ້ງ ຫຼັງການປູກ. ຜົນຜະລິດໝາກເດືອຍຕໍ່ 1 ຮຕ ແມ່ນ ສູງກວ່າ ຜົນຜະລິດເຂົ້າ 57 ສ່ວນຮ້ອຍ ແລະ ໄລຍະເວລາຕັ້ງແຕ່ການປູກເຖິງການເກັບກູ້ແມ່ນສັ້ນກວ່າ (*Rouw et al.*, 2002).

ຄວາມຕ້ອງການຂອງຕະຫຼາດໝາກເດືອຍ ໂດຍສະເພາະແມ່ນມາຈາກ ສປ ຈີນ, ໄຕ້ຫວັນ ແລະ ປະເທດໄທ (Burnette, 2012). ຢ່າງໃດກໍ່ຕາມ, ຄວາມຕ້ອງການໝາກເດືອຍ ພັດທະນາຢ່າງຊ້າໆ ເມື່ອທຽບກັບຄວາມຕ້ອງການສາລີ (ຄ11), ມັນຕົ້ນ (ຄ13) ແລະ ພືດເສດຖະກິດອື່ນໆ. ການຜັນປ່ຽນເລື້ອຍໆຂອງຕະຫຼາດໝາກເດືອຍສົ່ງຜົນໃຫ້ເກີດຄວາມບໍ່ປອດໄພຕໍ່ກັບຊາວກະສິກອນລາວ.ນອກຈາກການເຂົ້າເຖິງຕະຫລາດ, ການຜັນຜວນກ້ານລາຄາໃນຕະຫຼາດ ແລະ ຂໍ້ຈຳກັດດ້ານຕະຫຼາດ ເປັນອຸປະສັກທີ່ສຳຄັນຕໍ່ການພັດທະນາກະສິກຳ ໃນ ສປປ ລາວ. ນອກນັ້ນ, ໝາກເດືອຍ ບໍ່ໄດ້ເປັນໜຶ່ງໃນບັນດາພືດບໍລິມະສິດການຜະລິດເປັນສິນຄ້າ ຂອງກະຊວງກະສິກຳ ແລະ ປ່າໄມ້ ດັ່ງນັ້ນ, ການຜະລິດໝາກເດືອຍຈຶ່ງບໍ່ມີການສົ່ງເສີມ ແລະ ຍັງຄົງຖືກຈຳກັດຢູ່ບາງຂົງເຂດ.

ຕາຕະລາງ 2: ເນື້ອທີ່ ແລະ ອັດຕາສ່ວນຂອງໝາກເດືອຍໃນລະດູຝົນ, ລະດູແລ້ງ ແລະທັງສອງລະດູ ໃນປີ 2010/11 ຕໍ່ແຂວງ

ແຂວງ	ເນື້ອທີ່ໝາກເດືອຍ ທັງໝົດ (ຮຕ) 2010 ລະດູຝົນ	ອັດຕາສ່ວນ ໝາກເດືອຍ 2010 ລະດູຝົນ	ເນື້ອທີ່ໝາກເດືອຍ ທັງໝົດ (ຮຕ) 2011 ລະດູແລ້ງ	ອັດຕາສ່ວນ ໝາກເດືອຍ 2011 ລະດູແລ້ງ	ເນື້ອທີ່ໝາກເດືອຍ ທັງໝົດ (ຮຕ) 2010/11 ສອງລະດູ	ອັດຕາສ່ວນ ໝາກເດືອຍ 2010/11 ທັງສອງລະດູ
ນະຄອນຫຼວງວຽງຈັນ	113.9	100.0	0.0	0.0	113.9	0.3
ຜົ້ງສາລີ	3.1	100.0	0.0	0.0	3.1	0.0
ຫຼວງນ້ຳທາ	1.3	99.6	0.0	0.4	1.3	0.0
ອຸດົມໄຊ	1,575.3	99.0	15.1	1.0	1,590.4	4.2
ບໍ່ແກ້ວ	1,081.0	99.7	3.0	0.3	1,084.0	2.9
ຫຼວງພະບາງ	7,296.5	99.9	7.0	0.1	7,303.5	19.3
ຫົວພັນ	25.5	100.0	0.0	0.0	25.5	0.1
ໄຊຍະບູລີ	12,798.2	100.0	0.7	0.0	12,798.9	33.8
ຊຽງຂວາງ	1.8	85.7	0.3	14.3	2.1	0.0
ວຽງຈັນ	14,876.8	99.9	7.5	0.1	14,884.3	39.4
ບໍລິຄຳໄຊ	0.0	0.0	0.6	100.0	0.6	0.0
ຄຳມ່ວນ	1.7	99.4	0.0	0.6	1.7	0.0
ສະຫວັນນະເຂດ	0.5	99.0	0.0	1.0	0.5	0.0
ສະລາວັນ	0.0	66.7	0.0	33.3	0.1	0.0
ເຊກອງ	0.0	66.7	0.0	33.3	0.0	0.0
ຈຳປາສັກ	2.0	98.5	0.0	1.5	2.0	0.0
ອັດຕະປື	0.0	55.6	0.0	44.4	0.0	0.0
ລວມທັງໝົດ	**37,777.8**	**99.9**	**34.3**	**0.1**	**37,812.1**	**100.0**



0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ສັດສ່ວນຂອງເນື້ອທີ່ປູກໝາກເດືອຍ
ໃນລະດັບບ້ານ (8643)
0 % (7423)
> 0 - 1 % (474)
> 1 - 5 % (272)
> 5 - 10 % (100)
> 10 - 30 % (193)
> 30 - 78 % (181)
ຈຳນວນຄົວເຮືອນທັງໝົດ (ສີ) ເນື້ອທີ່ປູກທັງໝົດ
(ຂະໜາດ) ຂອງໝາກເດືອຍ ໃນລະດັບເມືອງ
ລະດູຝົນ
ລະດູແລ້ງ
10000 ຮຕ
5000 ຮຕ
2000 ຮຕ
500 ຮຕ
ບໍ່ສະແດງ < 10 ຮຕ
ໃສ່ສັນຍາລັກ > 500 ຮຕ
> 1 - 5 ຄົວເຮືອນ
> 5 - 100 ຄົວເຮືອນ
> 100 - 1000 ຄົວເຮືອນ
> 1000 - 2000 ຄົວເຮືອນ
> 2000 - 5159 ຄົວເຮືອນ
550ha
1050ha
990ha
3100ha
2360ha
820ha
1340ha
950ha
1260ha
3390ha
1110ha
1030ha
1720ha
1890ha
2640ha
0
50
100
150 km
ເນື້ອທີ່ປູກໝາກເດືອຍສະເລ່ຍຕໍ່ຄົວເຮືອນ
ໃນລະດັບເມືອງ (143)
0.0 ຮຕ/ ຄຮ (59)
> 0.0 - 0.1 ຮຕ/ ຄຮ (37)
> 0.1 - 0.5 ຮຕ/ ຄຮ (20)
> 0.5 - 1.0 ຮຕ/ ຄຮ (18)
> 1.0 - 2.0 ຮຕ/ ຄຮ (8)
> 2.0 - 6.0 ຮຕ/ ຄຮ (1)
0
100
200
300 km

ຄ 13 ມັນຕົ້ນ

ພາກສະເໜີ

ແປ້ງມັນຕົ້ນ (*Manihot esculenta*) ເປັນຜະລິດຕະພັນໜຶ່ງທີ່ມີການຄ້າຂາຍຢ່າງກວ້າງຂວາງທີ່ສຸດໃນໂລກ ແລະ ມັນມີຫຼາຍໆບົດບາດທີ່ສໍາຄັນ ໂດຍສະເພາະແມ່ນເປັນວັດຖຸດິບໃຫ້ແກ່ການຜະລິດທັງສອງຜະລິດຕະພັນອາຫານ ແລະ ບໍ່ແມ່ນອາຫານ. ແປ້ງມັນຕົ້ນ ໄດ້ຖືກນໍາໃຊ້ເຂົ້າໃນຫຼາຍໆຜະລິດຕະພັນ ລວມມີ ເຈ້ຍ, ຢາ, ແຜ່ນແພ, ຢາງຊີວະພາບ ແລະ ອາຫານສັດ. ນອກຈາກຄຸນປະໂຫຍດຕ່າງໆຂອງແປ້ງມັນຕົ້ນແລ້ວ, ແຜ່ນມັນຕົ້ນຝານທີ່ຖືກຕາກແຫ້ງແລ້ວ ແມ່ນຖືກນໍາໃຊ້ເປັນວັດຖຸດິບອາຫານສັດ ແລະ ເປັນວັດຖຸດິບໃນການຜະລິດເຫຼົ້າເອທານອນ (ethanol). ແປ້ງມັນຕົ້ນ ແມ່ນໄດ້ມາຈາກຫົວມັນຕົ້ນ ທີ່ປູກໂດຍຊາວກະສິກອນຂະໜາດນ້ອຍຢູ່ອາຊີຕາເວັນອອກສຽງໃຕ້. ທ້າຍສຸດ, ມັນຕົ້ນ ຍັງແມ່ນ ພືດອາຫານທີ່ສໍາຄັນ ສໍາລັບຫຼາຍຊຸມຊົນຂະໜາດນ້ອຍຢູ່ອາຊີຕາເວັນອອກສຽງໃຕ້. ດ້ວຍຄຸນສົມບັດທີ່ຫຼາກຫຼາຍຂອງມັນຈຶ່ງເຮັດໃຫ້ຄວາມຕ້ອງການມັນຕົ້ນຢູ່ໃນອານາຄົດມີແນວໂນ້ມສູງຂຶ້ນ.

ໃນຫຼາຍປີເມື່ອບໍ່ດົນມານີ້, ມັນຕົ້ນ ໄດ້ຖືກສົ່ງເສີມໃຫ້ເປັນພືດເສກຖະກິດໃນລາວໂດຍພໍ່ຄ້າທີ່ມາຈາກບັນດາປະເທດເພື່ອນບ້ານ. ໃນປະຈຸບັນ, ມັນຕົ້ນ ແມ່ນພືດຫົວ ທີ່ສໍາຄັນທີ່ສຸດ ແລະ ຖືກຈັດຢູ່ໃນອັນດັບທີ 3 ຮອງຈາກ ເຂົ້າ ແລະ ສາລີ ອີງຕາມເນື້ອທີ່ການຜະລິດທັງໝົດທົ່ວປະເທດ (*FAO*, 2014).

ການຜະລິດມັນຕົ້ນ ໃນປີ 2011

ມີເນື້ອທີ່ມັນຕົ້ນທັງໝົດ 18,950 ຮຕ, ປູກເພື່ອເສດຖະກິດ ແລະ ພືດອາຫານ ໃນ ສປປ ລາວ. ມີທັງໝົດ 3,196 ບ້ານ ທີ່ໄດ້ປູກມັນຕົ້ນ ກວມເອົາ 37 ສ່ວນຮ້ອຍຂອງຈໍານວນບ້ານທັງໝົດ. ທົ່ວປະເທດ, ບ້ານທີ່ປູກມັນຕົ້ນ ສ່ວນຫຼາຍ ຍັງປູກພຽງແຕ່ຈໍານວນນ້ອຍ ໃນພື້ນທີ່ດິນກະສິກໍາທັງໝົດຂອງພວກເຂົາ. ແຕ່ກໍ່ເຫັນວ່າ, ມີ 2,814 ບ້ານ ຫຼື 88 ສ່ວນຮ້ອຍ ຂອງຈໍານວນບ້ານທັງໝົດ ແມ່ນປູກມັນຕົ້ນຕໍ່າກວ່າ 10 ສ່ວນຮ້ອຍຂອງເນື້ອທີ່ດິນກະສິກໍາຂອງພວກເຂົາ. ນອກນັ້ນ ຍັງມີ 382 ບ້ານ (ຈໍານວນ 12 ສ່ວນຮ້ອຍຂອງບ້ານປູກມັນຕົ້ນທັງໝົດ) ທີ່ໃຊ້ທີ່ດິນກະສິກໍາຂອງພວກເຂົາ ສໍາລັບສ່ວນຫຼາຍເພື່ອການປູກມັນຕົ້ນ ບັນດາບ້ານເຫຼົ່ານັ້ນແມ່ນ ຕັ້ງຢູ່ທາງຕາເວັນອອກ ລຽບຕາມຊາຍແດນຫວຽດນາມ.

ມັນຕົ້ນ ແມ່ນປູກທັງລະດູຝົນນ ແລະ ລະດູແລ້ງ. ເນື້ອທີ່ມັນຕົ້ນປູກໃນລະດູຝົນກວມເອົາ 73 ສ່ວນຮ້ອຍ ແລະ ໃນລະດູແລ້ງ ແມ່ນພຽງແຕ່ 27 ສ່ວນຮ້ອຍ. ບັນດາເມືອງທີ່ປູກມັນຕົ້ນໃນລະດູແລ້ງ ແມ່ນຕັ້ງຢູ່ລຽບແຄມແມ່ນໍ້າຂອງລະຫວ່າງ ວຽງຈັນ ແລະ ບໍລິຄໍາໄຊ. ນະຄອນຫຼວງວຽງຈັນ, ແມ່ນໜຶ່ງຂອງທັງໝົດ 17 ແຂວງ ທີ່ມີພື້ນທີ່ການຜະລິດມັນຕົ້ນໃນລະດູແລ້ງກວ້າງກວ່າເນື້ອທີ່ການຜະລິດໃນລະດູຝົນ ຕາມລໍາດັບມີຄື 1,949 ຮຕ ແລະ 1,895 ຮຕ.

ຢູ່ນະຄອນຫຼວງວຽງຈັນ, ເນື້ອທີ່ປູກມັນຕົ້ນທັງໝົດ 3,844 ຮຕ ທີ່ປູກດ້ອຍຄົວເຮືອນພຽງແຕ່ 896 ຄົວເຮືອນ (ສະເລ່ຍຂອງເນື້ອທີຜະລິດມັນຕົ້ນຕໍ່ຄົວເຮືອນແມ່ນ 4.2 ຮຕ) ຍ້ອນແນວນັ້ນຈຶ່ງມີຈໍານວນຄົວເຮືອນ ປູກມັນຕົ້ນໜ້ອຍຫຼາຍ ຖ້າທຽບກັບບັນດາແຂວງອື່ນໆ. ຢູ່ແຂວງສະຫວັນນະເຂດ, ແມ່ນກົງກັນຂ້າມ ມີພຽງ 232 ຮຕ ທີ່ປູກໂດຍ 1,760 ຄົວເຮືອນ ເຮັດໃຫ້ຄ່າສະເລ່ຍເນື້ອທີ່ຜະລິດຕໍ່ຄົວເຮືອນ ຢູ່ພຽງ 0.1 ຮຕ. ແຂວງ ບໍລິຄໍາໄຊ ມີເນື້ອທີ່ປູກມັນຕົ້ນ 4,377 ຮຕ ກວມເອົາ 23 ສ່ວນຮ້ອຍຂອງເນື້ອທີ່ປູກມັນຕົ້ນທົ່ວປະ ເທດ ສະເລ່ຍເນື້ອທີ່ ຕໍ່ຄົວເຮືອນ ແມ່ນ 0.84 ຮຕ.

ຕາມການສັງເກດ, ມັນຕົ້ນ ກໍ່ຄືກັບພືດອື່ນໆ ເຊັ່ນ ຖົ່ວດິນ ຫຼື ອ້ອຍ (ແຜນທີ່ ຄ14 ແລະ ແຜນທີ່ ຄ16), ສະເລ່ຍ ເນື້ອທີ່ການຜະລິດຕໍ່ຄົວເຮືອນຢູ່ແຂວງ ຜົ້ງສາລີ ແມ່ນຕໍ່າກວ່າ ແຂວງອື່ນໆ. ແຂວງຜົ້ງສາລີ ມີເນື້ອທີ່ປູກມັນຕົ້ນທັງໝົດ 700 ຮຕ, ແຕ່ວ່າຈໍານວນຄົວເຮືອນຜູ້ປູກມັນຕົ້ນທັງລະດູຝົນ ແລະ ລະດູແລ້ງມີເຖິງ 5,339 ຄົວເຮືອນ ຖືວ່າ ສູງຫຼາຍ ເມື່ອທຽບກັບບັນດາແຂວງອື່ນໆ.

ຄ 13 ມັນຕົ້ນ



ສັດສ່ວນຂອງເນື້ອທີ່ປູກມັນຕົ້ນ ໃນລະດັບບ້ານ (8643)
0.0 % (5447)
> 0.0 - 0.5 % (1540)
> 0.5 - 10.0 % (1274)
> 10.0 - 50.0 % (368)
> 50.0 - 97.5 % (14)
ຈຳນວນຄົວເຮືອນທັງໝົດ (ສີ) ແລະ ເນື້ອທີ່ປູກທັງໝົດ (ຂະໜາດ) ຂອງມັນຕົ້ນໃນລະດັບເມືອງ
ລະດູຝົນ
ລະດູແລ້ງ
1500 ຮຕ
750 ຮຕ
300 ຮຕ
100 ຮຕ
ບໍ່ສະແດງ < 10 ຮຕ
ສັນຍາລັກ > 300 ຮຕ
> 1 - 50 ຄົວເຮືອນ
> 50 - 500 ຄົວເຮືອນ
> 500 - 1000 ຄົວເຮືອນ
> 1000 - 2000 ຄົວເຮືອນ
> 2000 - 2440 ຄົວເຮືອນ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
500ha
680ha
320ha
580ha
320ha
310ha
400ha
340ha
670ha
1260ha
680ha
300ha
390ha
1010ha
1040ha
330ha
700ha
ເນື້ອທີ່ປູກມັນຕົ້ນສະເລ່ຍຕໍ່ຄອບຄົວ ໃນລະດັບເມືອງ (143)
0.0 ຮຕ / ຄຮ (3)
> 0.0 - 0.1 ຮຕ / ຄຮ (46)
> 0.1 - 0.5 ຮຕ / ຄຮ (55)
> 0.5 - 1.0 ຮຕ / ຄຮ (17)
> 1.0 - 15.5 ຮຕ / ຄຮ (21)
> 15.5 - 236.6 ຮຕ / ຄຮ (1)
0 100 200 300 km
0 50 100 150 km
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
2400000N
2200000N
2000000N
1800000N
1600000N

ການປ່ຽນແປງສະພາບການຜະລິດມັນຕົ້ນ ລະຫວ່າງປີ 1999 ແລະ 2011

ເນື້ອທີ່ການປູກມັນຕົ້ນທັງໝົດໄດ້ຫຼຸດລົງ ຈາກ 24,800 ຮຕ ມາເປັນ 18,950 ຮຕ ລະຫວ່າງປີ 1999 ແລະ 2011. ແຂວງຫົວພັນ ແມ່ນແຂວງທີ່ປະເຊີນກັບເນື້ອທີ່ມັນຕົ້ນຫຼຸດລົງຫຼາຍ ເນື່ອງຈາກວ່າ ເນື້ອທີ່ດັ່ງກ່າວໄດ້ຖືກຫັນໄປໃຊ້ເຂົ້າໃນການປູກສາລີ (ເບິ່ງ ຄ11). ສ່ວນໃຫຍ່ ແມ່ນຍ້ອນຄວາມຕ້ອງການສາລີ ຈຳນວນຫຼາຍຈາກຕະຫຼາດ ສສ ຫວຽດນາມ. ພໍ່ຄ້າຊາວຫວຽດນາມ ສະໜອງ ສິນເຊື່ອໃຫ້ແກ່ຊາວກະສິກອນເພື່ອຊື້ແນວພັນສາລີ ແລະ ປັດໃຈການຜະລິດອື່ນໆ ແລະ ຫັກຕົ້ນທຶນສິນເຊື່ອ ໃນເວລາທີ່ພວກເຂົາເກັບຊື້ຜົນຜະລິດສາລີຈາກຊາວກະສິກອນ. ດັ່ງນັ້ນ, ຈຶ່ງເປັນສິ່ງທີ່ບໍ່ໜ້າແປກໃຈ ເນື້ອທີ່ການປູກມັນຕົ້ນຢູ່ແຂວງຫົວພັນ ໄດ້ຫຼຸດລົງເຖິງ 90 ສ່ວນຮ້ອຍ ຈາກ 11,120 ຮຕ ໃນປີ 1999 ມາເປັນ 1,120 ຮຕ ໃນປີ 2011. ແນວໂນ້ມການຫຼຸດລົງ ໄດ້ພົບເຊັ່ນດຽວກັນ ຢູ່ ແຂວງຫຼວງພະບາງ ແລະ ເຊກອງ, ແຕ່ບໍ່ຮ້າຍແຮງຄືດັ່ງແຂວງຫົວພັນ. ຢູ່ ແຂວງຫຼວງພະບາງ, ພື້ນທີ່ມັນຕົ້ນໄດ້ຫຼຸດລົງຈາກ 6,230 ຮຕ ໃນປີ 1999 ມາເປັນ 1,800 ຮຕ ໃນປີ 2011. ໃນໄລຍະດຽວກັນ, ປະມານເຄິ່ງໜຶ່ງຂອງເນື້ອທີ່ມັນຕົ້ນ ໄດ້ຖືກປະເຮືອຢູ່ໃນແຂວງເຊກອງ. ນອກນັ້ນ, ເນື້ອທີ່ປູກມັນຕົ້ນຢູ່ເຂດອື່ນໆ ກໍຖືກທົດແທນດ້ວຍການຜະລິດກາເຟ (ເບິ່ງ ຄ21).

ໃນທາງກົງກັນຂ້າມ, ຢູ່ບັນດາແຂວງອື່ນໆ ທີ່ມີຄວາມຕ້ອງການຕະຫຼາດສູງ ເນື້ອທີ່ການປູກມັນຕົ້ນແມ່ນເພີ່ມຂຶ້ນຢ່າງວ່ອງໄວ ເຊິ່ງລວມມີ ນະຄອນຫຼວງວຽງຈັນ, ແຂວງບໍລິຄຳໄຊ ແລະ ສາລະວັນ. ຢູ່ນະຄອນຫຼວງວຽງຈັນ ເນື້ອທີ່ການປູກມັນຕົ້ນ ເພີ່ມຂຶ້ນຈາກ 50 ຮຕ ໃນປີ 1999 ມາເປັນ 3,844 ຮຕ ໃນປີ 2011; ຈາກ 1,840 ຮຕ ມາເປັນ 4,380 ຮຕ ຢູ່ແຂວງ ບໍລິຄຳໄຊ ແລະ ຈາກ 460 ຮຕ ມາເປັນ 2,470 ຮຕ ຢູ່ ສາລະວັນ ໃນຊ່ວງໄລຍະດຽວກັນ.

ເຫດຜົນຂອງການປ່ຽນແປງ

ມັນຕົ້ນທີ່ປູກຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ບໍລິຄຳໄຊ ແມ່ນສ່ວນໃຫຍ່ຂາຍໃຫ້ໂຮງງານແປ້ງມັນຕົ້ນ ລາວ-ອິນໂດໄຊນາ ທີ່ຕັ້ງຢູ່ເຂດຊານເມືອງຂອງນະຄອນຫຼວງວຽງຈັນ. ສຳລັບແຂວງອື່ນໆ ແມ່ນສົ່ງອອກແຜ່ນມັນຕົ້ນຝານແຫ້ງໄປປະເທດໄທ ແລະ ປະເທດຫວຽດນາມ. ປັດໃຈທີ່ຍູ້ໝູນໃຫ້ເກີດມີຄວາມຕ້ອງການຂອງຕະຫຼາດມັນຕົ້ນຈາກ ສປປ ລາວ ແມ່ນກ່ຽວພັນເຖິງ: ລາຄາສູງ ໂດຍການສະເໜີຈາກຕະຫຼາດຈີນ, ໄທ ແລະ ຫວຽດນາມ ແລະ ການເພີ່ມຂຶ້ນຂອງບັນດາໂຮງງານປຸງແຕ່ງມັນຕົ້ນແຫ້ງພາຍໃນປະເທດຕ້ອງການແຜ່ນມັນຕົ້ນຝານແຫ້ງ ເພື່ອນຳໃຊ້ເຂົ້າໃນການຜະລິດອາຫານສັດ. ໂຮງງານຜະລິດອາຫານສັດທີ່ໃຫຍ່ກວ່າໝູ່ໃນປະເທດແມ່ນ ບໍລິສັດ CP ລາວ, ສາຂາຂອງ CP ແຫ່ງປະເທດໄທ ຊຶ່ງເປັນຜູ້ຜະລິດອາຫານສັດທີ່ໃຫຍ່ທີ່ສຸດໃນອາຊີ. ບໍລິສັດ CP ໄດ້ສຳປະທານເອົາ ໂຮງງານຜະລິດອາຫານສັດທ່າງ່ອນໃນປີ 2009. ໂຮງງານຕ້ອງການມັນຕົ້ນແຫ້ງຫຼາຍກວ່າ 4,000 ໂຕນ ຕໍ່ປີ ເພື່ອດຳເນີນການຜະລິດໃຫ້ໄດ້ເຕັມຕາມຄວາມສາມາດ ຫຼື ກຳລັງການຜະລິດ, ແຕ່ເຫັນວ່າ ໂຮງງານ ໄດ້ປະເຊີນກັບຄວາມຫຍຸ້ງຍາກໃນການສະໜອງມັນຕົ້ນແຫ້ງຢ່າງພຽງພໍ ຕາມຄວາມຕ້ອງໃນປີ 2011.

ຄວາມບໍ່ແນ່ນອນຂອງຕະຫຼາດມັນຕົ້ນໃນຫຼາຍທົດສະວັດທີ່ຜ່ານມາ ໄດ້ສ້າງຄວາມວິຕົກ ແລະ ຜົນກະທົບຕໍ່ການດຳລົງຊີວິດຂອງຊາວກະສິກອນຂະໜາດນ້ອຍ ຢູ່ລາວ ແລະ ຢູ່ຫຼາຍໆປະເທດ ໃນອາຊີອາຄະເນ. ໜຶ່ງໃນບັນດາປັດໃຈຕ່າງໆ ທີ່ເປັນຜົນກະທົບ ຕໍ່ກັບຕ່ອງໂສ້ການປູກມັນຕົ້ນ ແມ່ນການດຳເນີນນະໂຍບາຍປົກປ້ອງຊາວກະສິກອນ ຢູ່ບັນດາປະເທດເພື່ອນບ້ານ ໂດຍສະເພາະ ແມ່ນການປົກປ້ອງຜູ້ປູກມັນຕົ້ນຂອງພວກເຂົາ ເຊັ່ນ: ການສະໜັບສະໜູນດ້ານລາຄາ ຢູ່ພາຍໃນຈີນ ແລະ ການຄວບຄຸມຄຸນນະພາບ ແລະ ກັກກັນພືດ ໂດຍລັດຖະບານໄທ. ສິ່ງເຫຼົ່ານີ້ ເຮັດໃຫ້ ຫຼຸດຜ່ອນຄວາມຕ້ອງການຜະລິດຕະພັນມັນຕົ້ນ ແລະ ເຮັດໃຫ້ລາຄາຫົວມັນຕົ້ນຫຼຸດລົງເຊັ່ນດຽວກັນ. ບັນຫາສຸດທ້າຍ ຄື ຊາວກະສິກອນຢູ່ລາວໄດ້ແບກຫາບລາຄາຜົນຜະລິດຢູ່ສວນຕໍ່າຍ້ອນວ່າຄ່າຂົນສົ່ງສູງ.




ການປ່ຽນແປງຂອງເນື້ອທີ່ປູກມັນຕົ້ນ ລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 1000 - 1800 ຮຕ
> 250 - 1000 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.05 - 25 ຮຕ
ເນື້ອທີ່ເທົ່າເດີມ
< -0.05 - -25 ຮຕ
< -25 - -50 ຮຕ
< -50 - -250 ຮຕ
< -250 - -1000 ຮຕ
< -1000 - -1550 ຮຕ
ຢຸດເຊົາປູກ
ບໍ່ໄດ້ປູກມັນຕົ້ນ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
ຈີນ
ມຽນມາ
ຫວຽດນາມ
ໄທ
ກຳປູເຈຍ
ນະຄອນຫລວງວຽງຈັນ
8000000E
8200000E
8400000E
2000000N
1800000N
1600000N
1400000N
22°00'N
20°00'N
18°00'N
16°00'N
14°00'N
100°00'E
102°00'E
104°00'E
106°00'E
108°00'E
0
50
100
150 km
0
100
200
300 km
ຈຳນວນເນື້ອທີ່ປູກມັນຕົ້ນທັງໝົດໃນລະດັບແຂວງ
ປີ 1999
ປີ 2011
6200 ຮຕ
3000 ຮຕ
1000 ຮຕ
230 700
30 290
150 40
210 160
6230 1800
11120 1120
1200 830
120 240
970 1640
1840 4380
50 3840
230 140
660 230
460 2470
1170 590
20 380
120 100
ການປ່ຽນແປງຂອງເນື້ອທີ່ປູກມັນຕົ້ນ ໃນລະດັບແຂວງ (17)
> 1000 - 5000 ຮຕ (3)
> 500 - 1000 ຮຕ (1)
> 50 - 500 ຮຕ (4)
> 0 - 100 ຮຕ (0)
< 0 - -100 ຮຕ (3)
< -100 - -500 ຮຕ (3)
< -500 - -1000 ຮຕ (1)
< -1000 - -5000 ຮຕ (1)
< -5000 - -10000 ຮຕ (1)

ຄ 14 ໝາກຖົ່ວດິນ

ພາກສະເໜີ

ໝາກຖົ່ວດິນ (*Arachis hypogaea L.*) ເປັນທີ່ຮູ້ກັນຄື ຖົ່ວດິນ ເປັນພືດຈຳພວກປະເພດຖົ່ວ ແລະ ຖືກຈັດຢູ່ໃນຕະກູນດຽວກັນກັບ Papilionaceae. ຖົ່ວດິນ ຖືກນິຍົມປູກ ໃນເຂດອາກາດຮ້ອນ ແລະ ເຂດເຄິ່ງຮ້ອນ ເພື່ອການບໍລິໂພກ ພາຍໃນທ້ອງຖິ່ນ ແລະ ການປູກເປັນສິນຄ້າ. ຜົນຜະລິດຖົ່ວດິນທົ່ວໂລກ ໃນປີ 2011 ມີເຖິງ 35.9 ລ້ານໂຕນ, ໃນຈຳນວນດັ່ງກ່າວ ການປູກຢູ່ ສປ ຈີນ ກວມເອົາ 45 ສ່ວນຮ້ອຍ ແລະ ອິນເດຍ ກວມເອົາ 16 ສ່ວນຮ້ອຍ.

ຖົ່ວດິນ ຖືກໃຊ້ບໍລິໂພກໂດຍກົງ ໃນຮູບແບບຂອງອາຫານຫຼັກ ແລະ ອາຫານຫວ່າງ ແລະ ແປຮູບເປັນນ້ຳມັນພືດ. ການປູກຖົ່ວດິນ ຂ້ອນຂ້າງຍັງຢູ່ໃນລະດັບຂະໜາດນ້ອຍ ສ່ວນຫຼາຍແມ່ນເພື່ອບໍລິໂພກພາຍໃນຄົວເຮືອນ ແລະ ຂາຍພາຍໃນຕະຫຼາດທ້ອງຖິ່ນ. ຊາວກະສິກອນສ່ວຍຫຼາຍໃຊ້ແນວພັນຖົ່ວດິນພື້ນບ້ານທີ່ໃຫ້ຜົນຜະລິດ ຂ້ອນຂ້າງຕ່ຳ ຖ້າທຽບໃສ່ແນວພັນປັບປຸງໃໝ່. ຖົ່ວດິນ ມີຂາຍທົ່ວໄປໃນຕະຫຼາດທ້ອງຖິ່ນທົ່ວປະເທດ, ສ່ວນຫຼາຍໃນປະລິມານໜ້ອຍ ແລະ ຂາຍເປັນເມັດຖົ່ວດິນສົດ, ຖົ່ວດິນບົດ, ຖົ່ວດິນແຫ້ງ ແລະ ຖົ່ວດິນແກະເມັດ ໂດຍບໍ່ມີການຄວບຄຸມຄຸນນະພາບແຕ່ຢ່າງໃດ. ຖົ່ວດິນທີ່ປູກເພື່ອສົ່ງອອກ ສ່ວນໃຫຍ່ຈະສົ່ງໄປຂາຍ ຢູ່ຕະຫຼາດ ຈີນ, ຫວຽດນາມ ແລະ ໄທ.

ສະພາບການປູກໝາກຖົ່ວດິນ ໃນປີ 2011

ມີ 1,708 ບ້ານ ທີ່ປູກຖົ່ວດິນໃນ ສປປ ລາວ (20 ສ່ວນຮ້ອຍ ຂອງບ້ານເຮັດການຜະລິດກະສິກຳ ທັງໝົດ), ແລະ ມີຫຼາຍກວ່າ 30,000 ຄົວເຮືອນ ທີ່ປູກຖົ່ວດິນ. ພຽງແຕ່ 238 ບ້ານ (3 ສ່ວນຮ້ອຍ) ນຳໃຊ້ທີ່ດິນກະສິກຳຂອງພວກເຂົາ ເພື່ອປູກຖົ່ວດິນຫຼາຍກວ່າ 50 ສ່ວນຮ້ອຍ, ໃນຂະນະທີ່ 461 ບ້ານ (5 ສ່ວນຮ້ອຍ) ນຳໃຊ້ 10 ຫາ 50 ສ່ວນຮ້ອຍຂອງເນື້ອທີ່ດິນກະສິກຳເພື່ອປູກຖົ່ວດິນ. ເນື້ອທີ່ການປູກຖົ່ວດິນທັງໝົດ ມີ 8,300 ຮຕ, ໃນນັ້ນຫຼາຍກວ່າເຄິ່ງໜຶ່ງ ແມ່ນປູກຢູ່ບັນດາແຂວງພາກໃຕ້, ແຂວງສາລາວັນ, ເຊກອງ, ຈຳປາສັກ ແລະ ອັດຕະປື. ຢູ່ພາກເໜືອ, ເນື້ອທີ່ການປູກຖົ່ວດິນມີ 2,552 ຮຕ ແລະ ຢູ່ພາກກາງຂອງປະເທດ ແມ່ນມີນ້ອຍ (ພຽງ 984 ຮຕ).

ການປູກຖົ່ວດິນ ແມ່ນຍັງຄົງເຫັນໃນບາງເມືອງເຊັ່ນ: ເມືອງເລົ່າງາມ ແລະ ບາຈຽງ ຈະເລີນສຸກ, ຕັ້ງຢູ່ທາງເຂດເໜືອຂອງພູພຽງບໍລິເວນ ລະຫວ່າງ ປາກເຊ ແລະ ເທດສະບານແຂວງສາລະວັນ. (ເມືອງເລົ່າງາມ ມີເນື້ອທີ່ 2,190 ຮຕ ແລະ ເມືອງ ບາຈຽງ ຈະເລີນສຸກ ມີເນື້ອທີ່ 1,510 ຮຕ) ກວມເອົາເກືອບເຄິ່ງໜຶ່ງ ຂອງ ເນື້ອທີ່ການປູກຖົ່ວດິນທັງໝົດໃນປີ 2011.

ກຸ່ມທີ່ມີເງື່ອນໄຂການປູກຖົ່ວດິນ ແມ່ນກຸ່ມພື້ນທີ່ຕອນໃຕ້ຂອງ ແຂວງໄຊຍະບູລີ ທີ່ຕິດກັບຊາຍແດນໄທ. ຢູ່ກຸ່ມດັ່ງກ່າວມີເນື້ອທີ່ຫຼາຍກວ່າ 1,000 ຮຕ ລວມມີ 3 ເມືອງ (ບໍ່ແຕນ, ແກ່ນທ້າວ ແລະ ປາກລາຍ), ເກືອບທັງໝົດແມ່ນປູກຢູ່ໃນລະດູຝົນ (ເບິ່ງ ຄ10). ແຂວງຊຽງຂວາງ ກໍປູກຖົ່ວດິນເຊັ່ນກັນ ໂດຍສະເພາະຢູ່ເມືອງພູກູດ ໄປທາງຕາເວັນຕົກຂອງເທດສະບານເມືອງໂພນສະຫວັນ ຊຶ່ງມີຫຼາຍບ້ານທີ່ນຳໃຊ້ດິນກະສິກຳຂອງພວກເຂົາ ປູກຖົ່ວດິນ.

ແຜນທີ່ນ້ອຍ ສະແດງການສະເລ່ຍເນື້ອທີ່ການປູກໝາກຖົ່ວດິນຕໍ່ຄົວເຮືອນ ໃນຂັ້ນເມືອງ. ຢູ່ຕອນໃຕ້ຂອງແຂວງສາລະວັນ, ທາງເໜືອຂອງ ແຂວງຈຳປາສັກ ແລະ ຕອນໃຕ້ຂອງແຂວງບໍລິຄຳໄຊ, ສະເລ່ຍເນື້ອທີ່ຕໍ່ຄົວເຮືອນ ແມ່ນຢູ່ລະຫວ່າງ 0.50 ແລະ 0.89 ຮຕ. ເປັນທີ່ໜ້າສົນໃຈ, ການປູກໝາກຖົ່ວດິນຢູ່ແຂວງຜົ້ງສາລີ ກວມເອົາ ພຽງແຕ່ 1–2 ສ່ວນຮ້ອຍ ຂອງເນື້ອທີ່ປູກຖົ່ວດິນ ທັງໝົດໃນ ສປປ ລາວ, ແຕ່ວ່າມີເຖິງ 15 ສ່ວນຮ້ອຍ ຂອງຄົວເຮືອນ ຢູ່ແຂວງຜົ້ງສາລີ ທີ່ປູກໝາກຖົ່ວດິນ (ເບິ່ງ ຄ13, ຄ16 ແລະ ຄ17).

ຄ 14 ໝາກຖົ່ວດິນ



0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ທອງດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຄຳ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
240ha
220ha
110ha
300ha
180ha
270ha
450ha
100ha
200ha
400ha
2190ha
1510ha
ສັດສ່ວນຂອງເນື້ອທີ່ປູກຖົ່ວດິນ
ໃນລະດັບບ້ານ (8643)
0 % (6935)
> 0 - 1 % (222)
> 1 - 2 % (266)
> 2 - 10 % (521)
> 10 - 50 % (461)
> 50 - 100 % (238)
ຈຳນວນຄົວເຮືອນທັງໝົດ (ສີ) ເນື້ອທີ່ປູກທັງໝົດ
(ຂະໜາດ) ຂອງຖົ່ວດິນ ໃນລະດັບເມືອງ
ລະດູຝົນ
ລະດູແລ້ງ
900 ຮຕ
450 ຮຕ
200 ຮຕ
50 ຮຕ
ບໍ່ສະແດງ < 50 ຮຕ
ໃຊ້ສັນຍາລັກ > 100 ຮຕ
> 1 - 100 ຄົວເຮືອນ
> 100 - 200 ຄົວເຮືອນ
> 200 - 500 ຄົວເຮືອນ
> 500 - 1000 ຄົວເຮືອນ
> 1000 - 4060 ຄົວເຮືອນ
0
50
100
150 km
ເນື້ອທີ່ປູກຖົ່ວດິນສະເລ່ຍຕໍ່ຄອບຄົວ
ໃນລະດັບເມືອງ (143)
0.00 ຮຕ/ ຄຮ (9)
> 0.00 - 0.05 ຮຕ/ ຄຮ (53)
> 0.05 - 0.10 ຮຕ/ ຄຮ (16)
> 0.10 - 0.50 ຮຕ/ ຄຮ (57)
> 0.50 - 0.89 ຮຕ/ ຄຮ (7)
0
100
200
300 km

ການປ່ຽນແປງສະພາບການປູກຖົ່ວດິນ ລະຫວ່າງ ປີ 1999 ແລະ ປີ 2011

ເນື້ອທີ່ຂອງການປູກຖົ່ວດິນໃນຂອບເຂດທົ່ວປະເທດໃນລະຫວ່າງ ປີ 1999 ແລະ ປີ 2011 ແມ່ນຫຼຸດລົງຫຼາຍກວ່າ 7,600 ຮຕ (92 ສ່ວນຮ້ອຍ) ຈາກເມື່ອກ່ອນ 15,973 ຮຕ ເປັນ 8,300 ຮຕ. ເນື້ອທີ່ຂອງການປູກຖົ່ວດິນ ໄດ້ຫຼຸດລົງ ທັງສອງລະດູ ຈາກ 10,542 ຮຕ ເປັນ 6,942 ຮຕ ໃນລະດູຝົນ ແລະ ຈາກ 5,433 ຮຕ ເປັນ 4,075 ຮຕ ໃນລະດູແລ້ງ. ແຂວງຫຼວງພະບາງ ແລະ ໄຊຍະບູລີ ພົບກັບການຫຼຸດລົງຂອງພື້ນທີ່ການປູກຖົ່ວດິນ 5,837 ຮຕ ແລະ 2,969 ຮຕ ຕາມລໍາດັບ.

ແຜນທີ່ຫຼັກສະແດງໃຫ້ເຫັນວ່າ, ເຂດຕາເວັນຕົກສ່ຽງໃຕ້ ຂອງແຂວງຫຼວງພະບາງ ແລະ ຕອນໃຕ້ຂອງແຂວງໄຊຍະບູລີ, ພື້ນທີ່ການປູກຖົ່ວດິນໄດ້ຫຼຸດລົງຢ່າງຈະແຈ້ງ. ໃນທາງກົງກັນຂ້າມ, ທາງເໜືອຂອງພູພຽງບໍລິເວນເນື້ອທີ່ການປູກພັດເພີ່ມຂຶ້ນ. ນອກນັ້ນ, ເມືອງຄໍາເກີດ ແຂວງບໍລິຄໍາໄຊ ເນື້ອທີ່ການປູກຖົ່ວດິນເພີ່ມຂຶ້ນ ຈາກ 100 ຮຕ ໃນປີ 1999 ເປັນ ຫຼາຍກວ່າ 300 ຮຕ ໃນປີ 2011 ເນື້ອທີ່ດັ່ງກ່າວ ແມ່ນປູກຢູ່ໃນລະດູແລ້ງ. ຢູ່ພື້ນທີ່ອື່ນໆໃນຂອບເຂດທົ່ວປະເທດ ແມ່ນບໍ່ມີການປ່ຽນແປງຫຼາຍ.

ນອກຈາກການຫຼຸດລົງຂອງເນື້ອທີ່ການປູກຖົ່ວດິນຢ່າງຈະແຈ້ງ ລະຫວ່າງ ປີ 1999 ແລະ ປີ 2011, ໂດຍທົ່ວໄປ, ຈໍານວນຄົວເຮືອນທີ່ປູກ ໃນລະດູຝົນ ເພີ່ມຂຶ້ນລຽນຕິດ. ໃນປີ 1999 ມີຊາວກະສິກອນຈໍານວນ 23,981 ຄົວເຮືອນ ປູກຖົ່ວດິນ ແລະ ປີ 2011 ໄດ້ເພີ່ມເປັນ 24,084 ຄົວເຮືອນ. ໃນລະດູແລ້ງ, ຈໍານວນຄົວເຮືອນຊາວກະສິກອນຜູ້ປູກຖົ່ວດິນ ໄດ້ຫຼຸດລົງ ຈາກ 10,233 ຄົວເຮືອນ ເປັນ 5,963 ຄົວເຮືອນ.

ເຫດຜົນການປ່ຽນແປງ

ມີຫຼາຍປັດໃຈທີ່ສົ່ງຜົນໃຫ້ການຫຼຸດລົງຂອງພື້ນທີ່ການປູກຖົ່ວດິນ ຢູ່ ສປປ ລາວ ລະຫວ່າງ ປີ 1999 ແລະ ປີ 2011. ປັດໃຈໜຶ່ງຄື, ອໍານາດການປົກຄອງ ແຂວງຫຼວງພະບາງ ໄດ້ຍຶດເອົາການປູກຖົ່ວດິນເພື່ອສົ່ງເສີມເອົາເປັນທາງເລືອກໜຶ່ງ ເຂົ້າໃນການລຶບລ້າງການຖາງປ່າເຮັດໄຮ່. ແຕ່ກໍ່ເຫັນວ່າ ມີຫຼາຍບ່ອນໄດ້ມີການຂະຫຍາຍພື້ນທີ່ປູກຖົ່ວດິນກວ້າງອອກ ແຕ່ຂາດການສຶກສາຄວາມເໝາະສົມຂອງດິນ ແລະ ການເຂົ້າເຖິງຕະຫຼາດ. ເມື່ອເປັນແນວນັ້ນ ຊາວກະສິກອນຈຶ່ງຄິດວ່າ ຖົ່ວດິນບໍ່ແມ່ນທາງເລືອກທີ່ດີທີ່ສຸດ ສໍາລັບການສ້າງລາຍຮັບ, ພວກເຂົາຈຶ່ງຊອກຫາພືດອື່ນໆ ທີ່ເໝາະສົມກັບຕະຫຼາດ ແລະ ມີມູນຄ່າສູງຢູ່ທ້ອງຕະຫຼາດ ແທນການປູກຖົ່ວດິນ.

ປັດໃຈທີສອງ ຄືມີຖົ່ວດິນຈາກ ສປ ຈີນ ແລະ ສສ ຫວຽດນາມ ໄດ້ນໍາເຂົ້າສູ່ຕະຫຼາດຂອງລາວທີ່ມີລາຄາຕໍ່າກວ່າ ແລະ ທັງສະໜອງໄດ້ຕາມປະລິມານທີ່ຕ້ອງການ. ລະດັບຄວາມຮູ້ຄວາມສາມາດ ແລະ ປະສົບການຂອງຊາວກະສິກອນລາວ ໄດ້ມີບົດບາດໃຫ້ຫຼາຍໆເຂດມີການຂະຫຍາຍ ແລະ ປະສົບຜົນສໍາເລັດໃນການປູກຖົ່ວດິນ. ຍົກຕົວຢ່າງເຊັ່ນ, ຢູ່ເຂດລະຫວ່າງ ປາກເຊ ແລະ ເທດສະບານແຂວງສາລະວັນ, ເປັນເຂດທີ່ມີມູນເຊື້ອໃນການປູກຖົ່ວດິນ ເປັນເວລາຍາວນານ, ມີເງື່ອນໄຂທີ່ເໝາະສົມດ້ານຖະໜົນຫົນທາງ, ຄຸນນະພາບດິນອຸດົມສົມບູນ ແລະ ເຂົ້າເຖິງຕະຫຼາດສະດວກ, ສະພາບເງື່ອນໄຂການຜະລິດດີກວ່າ ບັນດາແຂວງພາກເໜືອ ແລະ ແຂວງພາກກາງ.





ຄ 14 ໝາກຖົ່ວດິນ



8000000E
8200000E
8400000E
ຈີນ
ມຽນມາ
ຫວຽດນາມ
ໄທ
ກໍາປູເຈຍ
ການປ່ຽນແປງຂອງເນື້ອທີ່ປູກຖົ່ວດິນ ລະຫວ່າງ ປີ 1999 ແລະ 2011
ເລີ່ມຕົ້ນປູກ
> 250 - 890 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.05 - 25 ຮຕ
ເນື້ອທີ່ປູກເທົ່າເດີມ
< -0.05 - -25 ຮຕ
< -25 - -50 ຮຕ
< -50 - -250 ຮຕ
< -250 - -1000 ຮຕ
< -1000 - -2500 ຮຕ
ຢຸດເຊົາປູກ
ບໍ່ມີຖົ່ວດິນ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
0 100 200 300 km
ເນື້ອທີ່ປູກຖົ່ວດິນທັງໝົດ ໃນລະດັບແຂວງ
ປີ 1999 ປີ2011
5000 ຮຕ
2000 ຮຕ
500 ຮຕ
40 120
20 70
350 70
510 280
6060 220
80 20
60 190
4740 1770
850 270
10
110 350
280
630 170
640 2790
20 70
1570 1900
ການປ່ຽນແປງຂອງເນື້ອທີ່ປູກຖົ່ວດິນ ໃນລະດັບແຂວງ (17)
> 1000 - 2225 ຮຕ (1)
> 500 - 1000 ຮຕ (0)
> 100 - 500 ຮຕ (3)
> 0 - 100 ຮຕ (3)
< 0 - 100 ຮຕ (3)
< -100 - -500 ຮຕ (4)
< -500 - -1000 ຮຕ (1)
< -1000 - -2500 ຮຕ (0)
< -2500 - -5800 ຮຕ (2)
0 50 100 150 km
100°00'E
102°00'E
104°00'E
106°00'E
108°00'E
22°00'N
20°00'N
18°00'N
16°00'N
14°00'N
2000000N
1800000N
1600000N
1400000N

ຄ 15 ຖົ່ວເຫຼືອງ

ພາກສະເໜີ

ຖົ່ວເຫຼືອງ (*Glycine max L.*) ເປັນພືດຕະກຸນຖົ່ວຊະນິດໜຶ່ງຂອງ ອາຊີ, ຖືກປູກຢ່າງແຜ່ຫຼາຍ ເພື່ອການບໍລິໂພກໂດຍກົງສໍາລັບຄົນ ແຕ່ ມັນກໍ່ຍັງສາມາດປູກ ແລະ ເຮັດເປັນຫຼາຍຜະລິດຕະພັນ. ເມັດຖົ່ວເຫຼືອງປະກອບດ້ວຍ ໂປຼຕີນສູງ ທີ່ຈໍາເປັນ ສໍາລັບຄົນ ແລະ ສັດ ແລະ ສິ່ງເສດເຫຼືອ ຈາກການຜະລິດນໍ້າມັນຖົ່ວເຫຼືອງ ຫຼື ທີ່ເອີ້ນກັນວ່າ ກາກ ຫຼື ຂີ້ຖົ່ວເຫຼືອງ ຍັງປະກອບມີ ໂປຼຕີນ ທີ່ໃຫ້ພະລັງງານສູງ ແລະ ມີ ທາດກົດອາມີໂນ. ຖົ່ວເຫຼືອງ ຖືກປູກ ແລະ ບໍລິໂພກ ຢູ່ ຈີນ ມາແລ້ວຫຼາຍກວ່າ 5,000 ປີ. ປະຈຸບັນ, ຖົ່ວເຫຼືອງ ຖືກປູກໃນພື້ນທີ່ຂະໜາດໃຫຍ່ ແບບການປູກພືດຊະນິດດຽວ ທີ່ໃຊ້ປັດໃຈການຜະລິດນໍາເຂົ້າ ແລະ ການນໍາໃຊ້ກົນຈັກສູງ ສ່ວນໃຫຍ່ ໃນອາເມລິກາເໜືອ ແລະ ໃຕ້.

ບາງປະເທດໃນອາຊີ ໄດ້ມີມູນເຊື້ອການປູກຖົ່ວເຫຼືອງ ມາເປັນເວລາຍາວນານແລ້ວ ແຕ່ ການປູກຖົ່ວເຫຼືອງໃນລາວໄດ້ເກີດຂຶ້ນ ເມື່ອບໍ່ດົນມານີ້. ການປູກຖົ່ວເຫຼືອງ ສາມາດເປັນແຫຼ່ງລາຍຮັບ ສໍາລັບຊາວຊົນນະບົດ, ຜູ້ທີ່ຄ່ອຍໆຫັນປ່ຽນລະບົບການປູກແບບດັ້ງເດີມ ເພື່ອຄວາມຕ້ອງການໃນຄົວເຮືອນໄປສູ່ການປູກຕາມຄວາມຕ້ອງຂອງຕະຫຼາດ.

ຕາຕະລາງ 3: ເນື້ອທີ່ທັງໝົດ ແລະ ການປ່ຽນແປງຂອງການປູກຖົ່ວເຫຼືອງ ລະຫວ່າງ ປີ 1999 ແລະ 2011

ແຂວງ	ເນື້ອທີ່ຖົ່ວເຫຼືອງ (ຮຕ) 1999	ເນື້ອທີ່ຖົ່ວເຫຼືອງ (ຮຕ) 2011	ການປ່ຽນແປງ 1999 ຫາ 2011
ນະຄອນຫຼວງວຽງຈັນ	8.2	2.8	-5.4
ຜົ້ງສາລີ	1,691.2	148.6	-1,542.6
ຫຼວງນໍ້າທາ	9.2	21.0	11.8
ອຸດົມໄຊ	166.0	468.8	302.8
ບໍ່ແກ້ວ	192.3	35.5	-156.8
ຫຼວງພະບາງ	974.7	417.6	-557.1
ຫົວພັນ	3,662.7	190.8	-3,471.9
ໄຊຍະບູລີ	59.1	4.3	-54.8
ຊຽງຂວາງ	342.3	49.7	-292.6
ວຽງຈັນ	67.3	2.9	-64.4
ບໍລິຄໍາໄຊ	13.8	0.9	-12.9
ຄໍາມ່ວນ	0.0	0.0	0.0
ສະຫວັນນະເຂດ	9.1	0.9	-8.2
ສະລາວັນ	331.5	122.3	-209.2
ເຊກອງ	9.0	0.0	-9.0
ຈໍາປາສັກ	728.0	439.8	-288.2
ອັດຕະປື	24.7	0.0	-24.7
ລວມທັງໝົດ	**8,289.0**	**1,906.0**	**-6,383.0**

ສະພາບການປູກຖົ່ວເຫຼືອງ ໃນປີ 2011

ຢູ່ ສປປ ລາວ ມີເນື້ອທີ່ການປູກຖົ່ວເຫຼືອງ 1,906 ຮຕ ກວມເອົາ 516 ບ້ານ ທົ່ວປະເທດ. ເກືອບທັງໝົດຂອງຈໍານວນບ້ານດັ່ງກ່າວ ນໍາໃຊ້ດິນກະສິກໍາຂອງພວກເຂົາເພື່ອປູກຖົ່ວເຫຼືອງ ພຽງໜ້ອຍດຽວ, ພຽງແຕ່ 30 ບ້ານເທົ່ານັ້ນທີ່ໃຊ້ດິນຂອງພວກເຂົາຫຼາຍກ່ວາ 10 ສ່ວນຮ້ອຍ, ແລະ ສັດສ່ວນສູງສຸດ ທີ່ໄດ້ນໍາໃຊ້ທີ່ດິນກະສິກໍາຂອງບ້ານເພື່ອປູກຖົ່ວເຫຼືອງ ແມ່ນ 46.2 ສ່ວນຮ້ອຍ. ຈຶ່ງຖືວ່າ, ຖົ່ວເຫຼືອງ ຍັງຄົງເປັນພືດລົ້ມລຸກທີ່ຂ້ອນຂ້າງ ບໍ່ໄດ້ຮັບການພັດທະນາ ຢູ່ໃນ ສປປ ລາວ.

ມີການປູກຖົ່ວເຫຼືອງໃນລະດູຝົນປະມານ 1,500 ຮຕ ຖົ່ວເຫຼືອງ ໃນພື້ນທີ່ຮາບພຽງ ແລະ ປະມານ 450 ຮຕ ໃນລະດູແລ້ງ ຢູ່ເຂດພື້ນທີ່ຊຸ່ມລະປະທານ, ໂດຍສະເພາະ ຕາມແຄມແມ່ນໍ້າສາຍຕ່າງໆ. ພື້ນທີ່ປູກຖົ່ວເຫຼືອງມີລັກສະນະກະແຈກກະຈາຍ, ເຖິງວ່າ ບ້ານທີ່ປູກຖົ່ວເຫຼືອງ ສ່ວນຫຼາຍ ຢູ່ທາງພາກເໜືອ ຂອງ ສປປ ລາວ ແຕ່ກໍ່ ມີບາງບ້ານເທົ່ານັ້ນ ທີ່ໃຊ້ພື້ນທີ່ດິນກະສິກໍາຂອງພວກເຂົາ ຫຼາຍກວ່າ 10 ສ່ວນຮ້ອຍ ເພື່ອປູກຖົ່ວເຫຼືອງ ແລະ ບ້ານດັ່ງກ່າວ ແມ່ນຢູ່ເຂດເໜືອສຸດ ຂອງແຂວງຜົ້ງສາລີ ແລະ ຫົວພັນ, ເຂດຕອນກາງຂອງແຂວງອຸດົມໄຊ, ເມືອງ ຊຽງເງິນ ຢູ່ທາງຕອນໃຕ້ ຂອງແຂວງ ຫຼວງພະບາງ ແລະ ຢູ່ເຂດລະຫວ່າງ ປາກເຊ ແລະ ເທດສະບານແຂວງ ສາລະວັນ.

ຮູບເຄິ່ງວົງມົນໃນແຜນທີ່ສະແດງເນື້ອທີ່ປູກຖົ່ວເຫຼືອງທັງໝົດ ແລະຈໍານວນຄົວເຮືອນທີ່ປູກ ໃນຂັ້ນເມືອງ, ສໍາລັບ ສີຟ້າ ສະແດງ ຂະໜາດຂອງເນື້ອທີ່ການປູກໃນລະດູຝົນ ແລະ ສີສົ້ມ ແມ່ນເນື້ອທີ່ໃນລະດູແລ້ງ. ຢູ່ ແຂວງ ອຸດົມໄຊ ມີເມືອງແບ່ງ ແລະ ເມືອງຮຸນ ເຂດລຽບຕາມແຄມນໍ້າແບ່ງ ປູກຖົ່ວເຫຼືອງທັງໝົດ 210 ຮຕ ໃນລະດູຝົນ ແລະ 160 ຮຕ ໃນລະດູແລ້ງ. ເມືອງແບ່ງ ມີ 493 ຄົວເຮືອນ ປູກຖົ່ວເຫຼືອງໃນລະດູແລ້ງ (ໂດຍສະເລ່ຍ 0.42 ຮຕ ຕໍ່ຄົວເຮືອນ), ສໍາລັບ ເມືອງ ຮຸນ ມີ 582 ຄົວເຮືອນ ໄດ້ປູກຖົ່ວເຫຼືອງ ໃນລະດູແລ້ງ (ສະເລ່ຍ 0.27 ຮຕ ຕໍ່ຄົວເຮືອນ). ໃນລະດູຝົນ, ມີພຽງ 40 ຮຕ ແລະ 60 ຮຕ ທີ່ໄດ້ປູກ ຢູ່ເມືອງ ແບ່ງ ແລະ ເມືອງ ຮຸນ ຕາມລໍາດັບ.

ຈໍານວນຜູ້ປູກຖົ່ວເຫຼືອງທັງໝົດ, ມີ 6,856 ຄົວເຮືອນ ຊຶ່ງ ຕໍ່າກວ່າ 1 ສ່ວນຮ້ອຍ ຂອງຈໍານວນຄົວເຮືອນກະສິກໍາທັງໝົດ ໃນ ສປປ ລາວ. ມີພຽງແຕ່ 9 ເມືອງ ທີ່ມີເນື້ອທີ່ການປູກຖົ່ວເຫຼືອງ ສະເລ່ຍ ຕໍ່ຄົວເຮືອນຫຼາຍກວ່າ 0.5 ຮຕ, ແຕ່ ສະເລ່ຍໃສ່ ເນື້ອທີ່ທົ່ວປະເທດ ແມ່ນພຽງແຕ່ 0.3 ຮຕ ຕໍ່ຄົວເຮືອນ.


ສັດສ່ວນຂອງດິນກະສິກຳທັງໝົດທີ່ໃຊ້ປູກກາເຟ ໃນລະດັບບ້ານ (8643)
0 % (7825)
> 0 - 10 % (499)
> 10 - 50 % (179)
> 50 - 75 % (63)
> 75 - 95 % (40)
> 95 - 100 % (37)
ຈຳນວນຄົວເຮືອນທີ່ປູກກາເຟທັງໝົດ (ສີ) ແລະ ພື້ນທີ່ປູກກາເຟທັງໝົດ (ຂະໜາດ) ໃນລະດັບເມືອງ
1 - 5 ຄຮ
> 5 - 100 ຄຮ
> 100 - 500 ຄຮ
> 500 - 6000 ຄຮ
> 6000 - 11000 ຄຮ
26421 ຮຕ
9000 ຮຕ
1000 ຮຕ
ຈີນ
ທອງດນາມ
ມຽນມາ
ໄທ
ກຳປູເຈຍ
ຫຼວງນ້ຳທາ
ຜົ້ງສາລີ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໄຊຍະບູລີ
ໂພນສະຫວັນ
ວຽງຄຳ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
0 50 100 150 km
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
ເນື້ອທີ່ປູກກາເຟສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.0 ຮຕ / ຄຮ (42)
> 0.0 - 0.5 ຮຕ / ຄຮ (67)
> 0.5 - 1.0 ຮຕ / ຄຮ (9)
> 1.0 - 2.0 ຮຕ / ຄຮ (17)
> 2.0 - 10.5 ຮຕ / ຄຮ (7)
> 10.5 - 70.5 ຮຕ / ຄຮ (1)
0 100 200 300 km

ການປ່ຽນແປງສະພາບການປູກຖົ່ວເຫຼືອງ ລະຫວ່າງ 1999 ແລະ 2011

ພື້ນທີ່ການປູກຖົ່ວເຫຼືອງໄດ້ຫຼຸດລົງໃນທົ່ວປະເທດ ລະຫວ່າງ ປີ 1999 ແລະ ປີ 2011, ເຂດທີ່ມີເນື້ອທີ່ຫຼຸດລົງຢ່າງຈະແຈ້ງແມ່ນຢູ່ບັນດາແຂວງພາກເໜືອຂອງລາວ. ເນື້ອທີ່ ໄດ້ຫຼຸດລົງ 77 ສ່ວນຮ້ອຍ ໃນຮອບ 10 ປີ ຄື ຈາກ 8,289 ຮຕ ໃນປີ 1999 ເຫຼືອພຽງ 1,906 ຮຕ ໃນປີ 2011. ໃນປີ 1999, ແຂວງຫົວພັນ ມີເນື້ອການປູກຖົ່ວເຫຼືອງຫຼາຍສຸດຂອງປະເທດ, ໂດຍສະເພາະບັນດາບ້ານຢູ່ເຂດຕາເວັນອອກສ່ຽງເໜືອລຽບຕາມຊາຍແດນ ສສ ຫວຽດນາມ (ເມືອງແອດ ແລະ ຊຽງຄໍ້). ຈົນເຖິງ ປີ 2011 ເນື້ອທີ່ການປູກຖົ່ວເຫຼືອງ ໄດ້ຫຼຸດລົງ 3,472 ຮຕ ນອກນັ້ນ ຍັງມີຫຼາຍໆເຂດ ໃນແຂວງຫົວພັນ ຢຸດຕິການປູກ.ໃນຊ່ວງໄລຍະເວລາດຽວກັນ ເນື້ອທີ່ການປູກ ໄດ້ຫຼຸດລົງ ທັງໝົດ 1,543 ຮຕ ຢູ່ແຂວງຜົ້ງສາລີ. ການຫຼຸດລົງຂອງເນື້ອທີ່ການປູກແມ່ນເກີດຂຶ້ນຢູ່ທົ່ວປະເທດ ຍົກເວັ້ນ ແຂວງ ອຸດົມໄຊ ແລະ ຫຼວງນໍ້າທາ. ເນື້ອທີ່ການປູກຖົ່ວເຫຼືອງຢູ່ເມືອງແບ່ງ ແລະ ເມືອງຮຸນ ແຂວງອຸດົມໄຊ ໄດ້ເພີ່ມຂຶ້ນ ເກືອບສາມເທົ່າ, ຈາກ 166 ຮຕ ເປັນ 469 ຮຕ. ຕາຕະລາງ 3 ສະແດງຂໍ້ມູນລະອຽດ ຂອງເນື້ອທີ່ການປູກຖົ່ວເຫຼືອງ ແລະ ການປ່ຽນແປງລະຫວ່າງ ປີ 1999 ແລະ 2011 ຢູ່ຂັ້ນແຂວງ.

ການຫຼຸດລົງຂອງເນື້ອທີ່ການປູກໃນລະດູຝົນແມ່ນຫຼຸດຫຼາຍ (ໂຕເລກທຽບຖານ ແລະ ເດັດຖານ) ກວ່າເນື້ອທີ່ການປູກໃນລະດູແລ້ງ. ເນື້ອທີ່ການປູກໃນລະດູຝົນ ໄດ້ຫຼຸດລົງຫຼາຍກວ່າ 6,000 ຮຕ ແລະ ໃນລະດູແລ້ງ ໄດ້ຫຼຸດລົງຫຼາຍກວ່າ 200 ຮຕ. ເຂດທີ່ມີການຫຼຸດລົງຫຼາຍ ໂດຍສະເພາະແມ່ນເຂດພູດອຍທາງພາກເໜືອ ລຽບຕາມຊາຍແດນ ສສ ຫວຽດນາມ ແລະ ສປ ຈີນ.

ເຫດຜົນການປ່ຽນແປງ

ນະໂຍບາຍຂອງລັດຖະບານລາວ ມີບົດບາດສຳຄັນໃນການປ່ຽນແປງເຫຼົ່ານັ້ນ. ເພື່ອສຸມໃສ່ລົບລ້າງການປູກຝິ່ນ ແລະ ຫັນການເຮັດໄຮ່ເລື່ອນລອຍ ເປັນການເຮັດໄຮ່ ແບບຄົງທີ່ ຢູ່ເຂດພາກເໜືອຂອງ ສປປ ລາວ, ຖົ່ວເຫຼືອງກາຍ ເປັນໜຶ່ງ ໃນບັນດາພືດເສດຖະກິດໄດ້ຮັບການສົ່ງເສີມເປັນພືດທາງເລືອກທີ່ສາມາດເພີ່ມ ແລະ ເປັນແຫຼ່ງລາຍຮັບທີ່ຫຼາກຫຼາຍໃຫ້ແກ່ຊາວກະສິກອນ.

ການເໜັງຕີງດ້ານລາຄາໃນທ້ອງຕະຫຼາດ, ຄວາມບໍ່ແນ່ນອນຂອງຄວາມຕ້ອງການຂອງຕະຫຼາດ, ແລະ ຂໍ້ຈຳກັດ ດ້ານຄວາມຮູ້ໃນການປູກຖົ່ວເຫຼືອງ ຂອງຊາວກະສິກອນ ເປັນປັດໃຈເຮັດໃຫ້ເນື້ອທີ່ການປູກ ຫຼຸດລົງ. ຕະຫຼາດທີ່ມີຄວາມຕ້ອງການຖົ່ວເຫຼືອງສູງຄື ປະເທດໄທ ຕັ້ງແຕ່ຊຸມປີ 2000, ແຕ່ມີຫຼາຍສິ່ງກີດຂວາງທີ່ກະທົບຕໍ່ຖົ່ວເຫຼືອງຂອງລາວ. ຂະໜາດການປູກໃນ ສປປ ລາວ ຢູ່ໃນລະດັບນ້ອຍຫຼາຍ ບໍ່ສາມາດເປັນຄູ່ຄ້າໄດ້, ຄ່າຂົນສົ່ງ ສູງຫຼາຍ ແລະ ຜະລິດຕະພາບ ຕໍ່ຫົວໜ່ວຍພື້ນທີ່ ກໍຕໍ່າ ຍ້ອນການນຳໃຊ້ແນວພັນພື້ນເມືອງ ແລະ ບໍ່ສາມາດຄາດຄະເນການປ່ຽນແປງຂອງສະພາບດິນຟ້າອາກາດໄດ້. ດ້ວຍເຫດນັ້ນ, ຊາວກະສິກອນລາວບໍ່ສາມາດແຂ່ງຂັນກັບການປູກຖົ່ງເຫຼືອງ ແບບອຸສາຫະກຳຂະໜາດໃຫຍ່ຂອງປະເທດບຣາຊິນ ແລະ ອາເມລິກາໄດ້.





8000000E
8200000E
8400000E
22°00'N
20°00'N
18°00'N
16°00'N
14°00'N
2000000N
1800000N
1600000N
1400000N
100°00'E
102°00'E
104°00'E
106°00'E
108°00'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການປ່ຽນແປງຂອງເນື້ອທີ່ປູກຖົ່ວເຫຼືອງ
ລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 125 - 175 ຮຕ
> 50 - 125 ຮຕ
> 25 - 50 ຮຕ
> 1 - 25 ຮຕ
> 0.5 - 1 ຮຕ
ເນື້ອທີ່ເທົ່າເດີມ
< -0.5 - -1 ຮຕ
< -1 - -25 ຮຕ
< -25 - -50 ຮຕ
< -50 - -125 ຮຕ
< -125 - -250 ຮຕ
< -250 - -655 ຮຕ
ຢຸດເຊົາປູກ
ບໍ່ມີຖົ່ວເຫຼືອງ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
0 50 100 150 km
0 100 200 300 km
ເນື້ອທີ່ປູກຖົ່ວເຫຼືອງທັງໝົດ
ໃນລະດັບແຂວງ
ປີ 1999 ປີ 2011
1500 ຮຕ
1000 ຮຕ
500 ຮຕ
1690
150
20
190
40
170
470
970
420
3660
190
340
50
60
70
10
330
120
730
440
20
ການປ່ຽນແປງຂອງເນື້ອທີ່ປູກຖົ່ວເຫຼືອງ
ໃນລະດັບແຂວງ (17)
> 100 - 300 ຮຕ (1)
> 0 - 100 ຮຕ (1)
ບໍ່ປ່ຽນແປງ (1)
< 0 - -100 ຮຕ (7)
< -100 - -500 ຮຕ (4)
< -500 - -1500 ຮຕ (1)
< -1500 - -3470 ຮຕ (2)

ຄ 16 ອ້ອຍ

ພາກສະເໜີ

ອ້ອຍ ແມ່ນຊື່ທົ່ວໄປຂອງບັນດາພືດຊະນິດ Saccharum ແລະ ຢູ່ໃນຕະກູນຂອງ *Gramineae* or *Poaceae*. ພືດສາຍພັນ Saccharum ມີ 5 ຊະນິດສໍາຄັນ ລວມມີ *officinarum, S. sinense, S. barberi, S. robustum and S. spontaneum.* ຊະນິດທີ 1 ເຖິງ 3 ແມ່ນຊະນິດທີ່ນໍາໃຊ້ສໍາລັບການເພາະປູກ ແລະ ຊະນິດທີ 4 ແລະ 5 ແມ່ນຊະນິດປ່າ. ອ້ອຍ ເປັນພືດທ້ອງຖິ່ນຂອງອິນເດຍ ແລະ ມັນເປັນພືດເຂດຮ້ອນ ທີ່ຕ້ອງການອາກາດຮ້ອນ. ຢ່າງໃດກໍຕາມ, ການປູກອ້ອຍ ກໍສາມາດປູກໄດ້ດີເຊັ່ນກັນຢູ່ສະພາບອາກາດໄກ້ຄຽງອາກາດຮ້ອນທີ່ມີອຸນຫະພູມຢູ່ລະຫວ່າງ 20 ຫາ 35˚ ອົງສາເຊ. ອ້ອຍ ແມ່ນພືດເສດຖະກິດໜຶ່ງຂ້ອນຂ້າງໃໝ່ທີ່ຖືກນໍາເຂົ້າມາລາວຈາກບັນດາປະເທດເພື່ອນບ້ານ ທີ່ຫວັງຊອກຫາແຫຼ່ງສະໜອງວັດຖຸດິບໃຫ້ແກ່ບັນດາໂຮງງານຜະລິດນໍ້າຕານທີ່ກໍາລັງເຕີບໂຕຂອງພວກເຂົາ. ໃນປະຈຸບັນ, ແຂວງສະຫວັນນາເຂດ ມີ ອຸດສາຫະກໍາອ້ອຍ ຊຶ່ງເປັນໜຶ່ງໃນບັນດາຂະແໜງອຸດສາຫະກໍາທີ່ສໍາຄັນ ໃນ ສປປ ລາວ ມີເນື້ອທີ່ການປູກຂະໜາດໃຫຍ່ ແລະ ນໍາໃຊ້ກົນຈັກ ແລະ ເຕັກໂນໂລຢີທີ່ທັນສະໃໝ (*IUCN and NERI*, 2011).

ສະພາບການປູກອ້ອຍ ໃນປີ 2011

ການປູກອ້ອຍ ຢູ່ເຂດພື້ນທີ່ຮາບພຽງ ແລະ ຢູ່ເຂດພື້ນທີ່ເນີນສູງ ຂອງ ສປປ ລາວ ໄດ້ທັງສອງລະດູ, ລະດູຝົນ ແລະ ລະດູແລ້ງ. ເນື້ອທີ່ປູກອ້ອຍທັງໝົດ ມີ 6,449 ຮຕ ໃນນັ້ນ 3,155 ຮຕ ແມ່ນປູກໃນລະດູຝົນ ແລະ 3,294 ຮຕ ແມ່ນປູກຢູ່ໃນລະດູແລ້ງ. ໃນຈໍານວນ 1,877 ບ້ານ ທີ່ປູກອ້ອຍ ມີພຽງແຕ່ 108 ບ້ານ ທີ່ໃຊ້ທີ່ດິນກະສິກໍາເພື່ອປູກອ້ອຍ ຫຼາຍກວ່າ 10 ສ່ວນຮ້ອຍ ແລະ 14 ບ້ານ ໃຊ້ພື້ນທີ່ຫຼາຍກວ່າ 50 ສ່ວນຮ້ອຍຂອງເນື້ອທີ່ດິນກະສິກໍາທັງໝົດຂອງພວກເຂົາ. ມີສອງເຂດທີ່ມີເງື່ອນໄຂເໝາະສົມໃນການປູກອ້ອຍ: ເຂດລຽບຕາມຊາຍແດນກັບ ສປ ຈີນ ຢູ່ແຂວງຫຼວງນໍ້າທາ, ຜົ້ງສາລີ ແລະ ແຂວງສະຫວັນນະເຂດລຽບຕາມຊາຍແດນຕິດກັບປະເທດໄທ.

ການປູກອ້ອຍ ໃນພື້ນທີ່ຂະໜາດໃຫຍ່ ຢູ່ເມືອງສິງ ແຂວງຫຼວງນໍ້າທາມີເຖິງ 1,350 ຮຕ ໂດຍ 1,705 ຄົວເຮືອນ. ເນື້ອທີ່ປູກອ້ອຍ ຢູ່ເມືອງນາໝໍ້ ແຂວງອຸດົມໄຊ ເຖິງວ່າຈະນ້ອຍ ແຕ່ກໍຖືເປັນເຂດປູກອ້ອຍທີ່ສໍາຄັນແຫ່ງໜຶ່ງ ມີ 562 ຄົວເຮືອນ ປູກອ້ອຍ 260 ຮຕໃນລະດູຝົນ. ນອກນັ້ນ, ຢູ່ເມືອງບຸນເໜືອ ແຂວງຜົ້ງສາລີ ມີຈໍານວນ 1,403 ຄົວເຮືອນ ປູກອ້ອຍ 1,150 ຮຕ ໃນລະດູແລ້ງ, ໂດຍສະເພາະຢູ່ລຽບຕາມແຄມແມ່ນໍ້າ (ເຊັ່ນ ນໍ້າບຸນ, ນໍ້ານູ ຫຼື ນໍ້າຫ້ວຍ) ເຂດທີ່ມີນໍ້າພຽງພໍ. ເມືອງຍອດອູ, ເມືອງເໜືອສຸດຂອງແຂວງຜົ້ງສາລີ ມີ 740 ຄົວເຮືອນ ປູກອ້ອຍ 410 ຮຕ ໃນລະດູຝົນ.

ກຸ່ມທີ່ມີການປູກອ້ອຍຫຼາຍອັນດັບທີສອງ ແມ່ນຢູ່ພາກຕາເວັນຕົກສ່ຽງເໜືອ ຂອງ ແຂວງສະຫວັນນະເຂດ ຊຶ່ງເປັນເຂດທີ່ປູກອ້ອຍ ໂດຍສະເພາະ ໃນລະດູແລ້ງ. ມີ 260 ຄົວເຮືອນ ໃນເມືອງໄຊບູລີ ປູກອ້ອຍໃນເນື້ອທີ່ 1,440 ຮຕ ແລະ 13 ຄົວເຮືອນ ໃນເມືອງໄກສອນ ພົມວິຫານ ປູກອ້ອຍ 280 ຮຕ. ນອກຈາກລະດູແລ້ງແລ້ວ, ໃນລະດູຝົນ ກໍມີ 59 ຄົວເຮືອນ ໃນເມືອງ ໄຊບູລີ ປູກອ້ອຍ 160 ຮຕ ແລະ 56 ຄົວເຮືອນ ໃນເມືອງອຸທຸມພອນ ປູກອ້ອຍທັງໝົດ 210 ຮຕ.

ແຜນທີ່ນ້ອຍສະແດງໃຫ້ເຫັນພື້ນທີ່ປູກອ້ອຍຂະໜາດໃຫຍ່ ຢູ່ທາງພາກຕາເວັນຕົກສ່ຽງເໜືອ ຂອງແຂວງສະຫວັນນະເຂດ. ຢູ່ເມືອງໄກສອນ ພົມວິຫານ, ສະເລ່ຍເນື້ອທີ່ປູກຕໍ່ຄົວເຮືອນ ແມ່ນ 18.6 ຮຕ, ແລະ ຢູ່ 4 ເມືອງໄກ້ຄຽງ ທາງພາກຕາເວັນອອກສ່ຽງເໜືອມີເນື້ອທີ່ປູກອ້ອຍສະເລ່ຍຕໍ່ຄົວເຮືອນ ແມ່ນຢູ່ລະຫວ່າງ 1 ຫາ 6 ຮຕ. ໃນທາງກົງກັນຂ້າມ, ໃນແຂວງຜົ້ງສາລີ ແລະ ຫຼວງນໍ້າທາ ເນື້ອທີ່ປູກອ້ອຍສະເລ່ຍຕໍ່ຄົວເຮືອນແມ່ນຕໍ່າກວ່າ 1 ຮຕ.


0E
200000E
400000E
600000E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
410ha
1150ha
ຜົ້ງສາລີ
1350ha
ຫຼວງນ້ຳທາ
260ha
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ປາກຊັນ
ວຽງຈັນ
ທ່າແຂກ
160ha
1440ha
210ha
280ha
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ສັດສ່ວນຂອງເນື້ອທີ່ປູກອ້ອຍ
ໃນລະດັບບ້ານ (8643)
0.0 % (6766)
> 0.0 - 0.1 % (1071)
> 0.1 - 1.0 % (479)
> 1.0 - 10.0 % (219)
> 10.0 - 50.0 % (94)
> 50.0 - 99.3 % (14)
ຈຳນວນຄົວເຮືອນທັງໝົດ (ສີ) ເນື້ອທີ່ປູກທັງໝົດ
(ຂະໜາດ) ຂອງອ້ອຍ ໃນລະດັບເມືອງ
ລະດູຝົນ
ລະດູແລ້ງ
1000 ຮຕ
500 ຮຕ
200 ຮຕ
50 ຮຕ
ບໍ່ສະແດງ < 10 ຮຕ
ໃຊ້ສັນຍາລັກ > 100 ຮຕ
> 8 - 50 ຄົວເຮືອນ
> 50 - 100 ຄົວເຮືອນ
> 100 - 500 ຄົວເຮືອນ
> 500 - 1000 ຄົວເຮືອນ
> 1000 - 1705 ຄົວເຮືອນ
22°0'N
20°0'N
18°0'N
16°0'N
14°0'N
2400000N
2200000N
2000000N
1800000N
1600000N
102°0'E
104°0'E
106°0'E
0
50
100
150 km
ເນື້ອທີ່ປູກອ້ອຍສະເລ່ຍຕໍ່ຄອບຄົວ
ໃນລະດັບເມືອງ (143)
0.0 ຮຕ/ ຄຮ (3)
> 0.0 - 0.1 ຮຕ/ ຄຮ (70)
> 0.1 - 0.5 ຮຕ/ ຄຮ (52)
> 0.5 - 1.0 ຮຕ/ ຄຮ (12)
> 1.0 - 6.0 ຮຕ/ ຄຮ (5)
> 6.0 - 18.6 ຮຕ/ ຄຮ (1)
0
100
200
300 km

ການປ່ຽນແປງສະພາບການປູກອ້ອຍ ລະຫວ່າງ 1999 ແລະ 2011

ລະຫວ່າງປີ 1999 ແລະ 2011 ເນື້ອທີ່ປູກອ້ອຍ ໄດ້ຫຼຸດລົງພຽງເລັກນ້ອຍ ແຕ່ກໍ່ເຫັນວ່າມີການປ່ຽນແປງພຽງຊົ່ວຄາວໃນບາງໄລຍະ.

ການປ່ຽນແປງພຽງຊົ່ວຄາວສ່ວນຫຼາຍ ເກີດຈາກການປ່ຽນແປງຂອງການປູກໃນແຕ່ລະດູ. ໃນປີ 1999, ເນື້ອທີ່ປູກອ້ອຍ ໃນລະດູຝົນ ມີ 6,057 ຮຕ ທຽບກັບເນື້ອທີ່ໃນລະດູແລ້ງ ມີພຽງ 977 ຮຕ, ໃນຂະນະທີ່ເນື້ອທີປູກອ້ອຍໃນປີ 2011 ທັງສອງລະດູ ແມ່ນເກືອບເທົ່າໆກັນ (3,155 ຮຕ ໃນລະດູຝົນ ແລະ 3,294 ຮຕ ໃນລະດູແລ້ງ). ຍິ່ງໄປກ່ວານັ້ນ, ການປູກອ້ອຍແບບກະແຈກກະຈາຍ ໄດ້ຫຼຸດລົງໃນລະຫວ່າງປີ 1999 ຫາ 2011 ໂດຍສະເພາະແມ່ນຢູ່ ແຂວງບໍລິຄໍາໄຊ ແລະ ເນື້ອທີ່ການປູກໄດ້ຫຼຸດລົງເລັກນ້ອຍ ຢູ່ແຂວງຄໍາມ່ວນ ແລະ ຈໍາປາສັກ. ໃນທາງກັບກັນ, ເນື້ອທີ່ປູກອ້ອຍຢູ່ແຂວງຫຼວງນໍ້າທາ, ຜົ້ງສາລີ ແລະ ສະຫວັນນະເຂດ ແມ່ນເພີ່ມຂຶ້ນ. ຈໍານວນຄົວເຮືອນຜູ້ປູກອ້ອຍທົ່ວປະເທດ ແມ່ນເພີ່ມຂຶ້ນເຖິງ 7,438 ຄົວເຮືອນ (ຈາກ 5,715 ເປັນ 13,153 ຄົວເຮືອນ) ໃນລະຫວ່າງປີ 1999 ແລະ 2011, ເຂດທີ່ມີເນື້ອທີ່ເພີ່ມຂຶ້ນຫຼາຍ ແມ່ນຢູ່ເຂດພາກເໜືອຂອງລາວ.

ເຫດຜົນການປ່ຽນແປງ

ການຫຼຸດລົງຂອງເນື້ອທີ່ປູກອ້ອຍຢູ່ແຂວງບໍລິຄໍາໄຊ ລະຫວ່າງປີ 1999 ແລະ 2011 ແມ່ນເກີດຈາກປະລິມານຄວາມຕ້ອງການມັນຕົ້ນທີ່ສູງຂຶ້ນ ຢູ່ຕະຫຼາດ ສປ ຈີນ, ຍູ້ໃຫ້ລາຄາສູງຂຶ້ນ. ເນື້ອທີ່ປູກອ້ອຍຈໍານວນຫຼາຍໄດ້ຖືກປ່ຽນແທນເປັນພື້ນທີ່ປູກມັນຕົ້ນ ຫຼື ສາລີ (ເບິ່ງ ຄ11 ແລະ ຄ13), ສ່ວນໜຶ່ງກໍ່ຍ້ອນວ່າ ມັນຕົ້ນ ໄດ້ຮັບການສົ່ງເສີມໂດຍ ບໍລິສັດຜະລິດແປ້ງມັນ ອິນໂດໄຊນາ ທີ່ຕັ້ງຢູ່ເມືອງປາກງື່ມ ເຂດຊານເມືອງຂອງນະຄອນຫຼວງວຽງຈັນ. ການຫຼຸດລົງຂອງການປູກອ້ອຍຢູ່ແຂວງຈໍາປາສັກ ກໍ່ຄ້າຍຄືກັນ ອັນເນື່ອງມາຈາກ ການຂະຫຍາຍພື້ນທີ່ປູກກາເຟ (ເບິ່ງ ຄ21), ພືດຜັກຕ່າງໆ ແລະ ພືດອື່ນໆ.

ໃນປີ 2008, ໂຮງງານນໍ້າຕານ ໄດ້ຖືກສ້າງຕັ້ງຂຶ້ນ ຢູ່ແຂວງສະຫວັນນາເຂດ ໂດຍບໍລິສັດນໍ້າຕານ ມິດລາວ. ບໍລິສັດ ໄດ້ໃຊ້ຮູບແບບການລົງທຶນ 2+3, ຊຶ່ງເປັນຮູບແບບ ສັນຍາການຜະລິດ ທີ່ຊາວກະສິກອນເປັນຜູ້ສະໜອງດິນ ແລະ ແຮງງານ (ປະກອບສ່ວນ 2 ຢ່າງ ໃນ 2+3) ແລະ ບໍລິສັດເປັນ ຜູ້ສະໜອງປັດໃຈການຜະລິດ, ແນະນໍາເຕັກນິກວິຊາການ ແລະ ການເຂົ້າເຖິງຕະຫຼາດ (ປະກອບສ່ວນ 3 ຢ່າງ ໃນ 2+3), ແຂວງສະຫວັນນະເຂດ, ອ້ອຍໄດ້ກາຍເປັນແຫຼ່ງລາຍຮັບໃໝ່ ສໍາລັບຊາວກະສິກອນ *(IUCN and NERI*, 2011).

ຮູບແບບສັນຍາທີ່ຄ້າຍຄືກັນ ກໍ່ໄດ້ຖືກຈັດຕັ້ງປະຕິບັດເຊັ່ນດຽວກັນ ຢູ່ເມືອງສິງ ແຂວງຫຼວງນໍ້າທາ ໂດຍໂຮງງານນໍ້າຕານ ສປ ຈີນ (ໂດຍບໍລິສັດນໍ້າຕານ YingMao ເປັນເຈົ້າຂອງ). ໂຮງງານໄດ້ສະໜອງດ້ານການເງິນ ແລະ ເຕັກນິກ ໃຫ້ແກ່ຊາວກະສິກອນ ພາຍໃຕ້ການຮ່ວມມືກັບອໍານາດການປົກຄອງເມືອງສິງ. ອໍານາດການປົກຄອງເມືອງສິງ ໄດ້ຊຸກຍູ້ໃຫ້ຊາວກະສິກອນປູກອ້ອຍ ແລະ ພາຍໃນປີ 2008, ເມືອງສິງສາມາດສົ່ງອອກອ້ອຍ 70,550 ໂຕນ ໄປຈີນ ເປັນມູນຄ່າທັງໝົດ 1.6 ລ້ານໂດລາສະຫະລັດ ຫຼື ປະມານ 8.7 ສ່ວນຮ້ອຍ ຂອງມູນຄ່າການສົ່ງອອກທັງໝົດຂອງເມືອງ (*Leebouapao and Voladeth*, 2011). ການເລືອກເອົາ ພື້ນທີ່ດັ່ງກ່າວເພື່ອປູກອ້ອຍ ກໍ່ຍ້ອນວ່າ ຢາກຫັນພື້ນທີ່ຂະໜາດໃຫຍ່ຂອງການເ ຮັດໄຮ່ເລື່ອນລອຍໃນເມື່ອກ່ອນ ທີ່ຖືກປະເຮືອ ໃຫ້ເປັນດິນກະສິກໍາຢ່າງຖາວອນ.




ການປ່ຽນແປງຂອງເນື້ອທີ່ປູກອ້ອຍ
ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 250 - 547 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.5 - 25 ຮຕ
ເນື້ອທີ່ບໍ່ປ່ຽນແປງ
< -0.5 - -25 ຮຕ
< -25 - -50 ຮຕ
< -50 - -250 ຮຕ
< -250 - -1000 ຮຕ
< -1000 - -1375 ຮຕ
ຢຸດເຊົາປູກ
ບໍ່ມີອ້ອຍ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
ຈີນ
ມຽນມາ
ຫວຽດນາມ
ໄທ
ກຳປູເຈຍ
ຫຼວງນ້ຳທາ
ຜົ້ງສາລີ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຄຳ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
8000000E
8200000E
8400000E
2000000N
1800000N
1600000N
1400000N
22°00'N
20°00'N
18°00'N
16°00'N
14°00'N
100°00'E
102°00'E
104°00'E
106°00'E
108°00'E
0 50 100 150 km
0 100 200 300 km
ເນື້ອທີ່ປູກອ້ອຍທັງໝົດ
ໃນລະດັບແຂວງ
ປີ 1999 ປີ 2011
2000 ຮຕ
1000 ຮຕ
500 ຮຕ
250 ຮຕ
680 1580
400 1510
300 280
60
340 50
330 30
260 70
220 40
170 160
2120 150
390 120
760 40
20 2250
20 60
70 40
820 40
70 10
ການປ່ຽນແປງຂອງເນື້ອທີ່ປູກອ້ອຍ
ໃນລະດັບແຂວງ (17)
> 1000 - 2225 ຮຕ (2)
> 500 - 1000 ຮຕ (1)
> 100 - 500 ຮຕ (0)
> 0 - 100 ຮຕ (1)
< 0 - 100 ຮຕ (5)
< -100 - -500 ຮຕ (5)
< -500 - -1000 ຮຕ (2)
< -1000 - -1966 ຮຕ (1)

ຄ 17 ສາລີຫວານ

ພາກສະເໜີ

ສາລີຫວານ (*Zea mays convar. Saccharata var. rugosa*), ຫຼື ເອີ້ນວ່າ ສາລີນໍ້າຕານ, ເປັນສາຍພັນໜຶ່ງຂອງສາລີທີ່ມີນໍ້າຕານສູງ. ສາລີຫວານ ຖືກໃຊ້ເພື່ອສາມຈຸດປະສົງຫຼັກຄື: ເພື່ອເປັນອາຫານໃຫ້ຄົນບໍລິໂພກ, ເປັນອາຫານສັດ ແລະ ເປັນຜະລິດຕະພັນອຸດສະຫະກໍາ (*Kaiser and Ernst*, 2010). ຄວາມແຕກຕ່າງຂອງຊະນິດສາລີຫວານຂຶ້ນຢູ່ກັບສີຂອງເມັດສາລີ, ຈາກສີເຫຼືອງ ໄປເຖິງ ສີຂາວ ແລະ ສີປະສົມ. ສາລີຫວານ ມີສອງຊະນິດ, ຊະນິດຫວານປົກກະຕິ ແລະ ຊະນິດຫວານພິເສດ, ທັງສອງຊະນິດນີ້ ຖືກຈັດເປັນພືດທີ່ມີມູນຄ່າສູງ. ສາລີຫວານ ຍັງສາມາດຈໍາແນກໂດຍສີ, ທີ່ປະກົດຂຶ້ນເປັນສີເຫຼືອງ, ສີຂາວ ແລະ ປະສົມສີທັງສອງ. ສາລີຫວານ ເປັນທີ່ນິຍົມໃນຕະຫຼາດພືດຜັກສົດ ທີ່ຖືກເກັບກ່ຽວເມື່ອສາລີຍັງອ່ອນ (ຕອນເປັນນໍ້ານົມ) ແລະ ບໍລິໂພກເປັນຝັກສົດແທນການບໍລິໂພກເປັນຝັກແກ່. ສາລີຫວານສາມາດຂາຍແບບ ສາລີສົດ, ສາລີກະປ໋ອງ ແລະ ສາລີແຊ່ແຂງ.

ໃນ ສປປ ລາວ, ສາລີ ຖືກແບ່ງອອກເປັນ 2 ກຸ່ມ ທີ່ແຕກຕ່າງກັນ. ກຸ່ມທີໜຶ່ງແມ່ນ ສາລີ ສໍາລັບການບໍລິໂພກຂອງຄົນລວມມີ ສາລີຫວານ ແລະ ສາລີໜຽວ (ແນວພັນພື້ນບ້ານ) ແລະ ກຸ່ມທີສອງ ແມ່ນ ສາລີແຂງ ຫຼື ສາລີອາຫານສັດຊຶ່ງໃຊ້ເປັນອາຫານໃຫ້ສັດປີກ, ໝູ ແລະ ງົວ (ເບິ່ງ ຄ11).

ສະພາບການປູກສາລີ ປີ 2011

ໃນປີ 2011, ເນື້ອທີ່ການປູກສາລີຫວານໃນ ສປປ ລາວ ມີທັງໝົດ 29,648 ຮຕ ໃນນັ້ນມີ 29,648 ຮຕ ທີ່ປູກໃນລະດູຝົນ. 62 ສ່ວນຮ້ອຍ ຂອງຈໍານວນບ້ານທັງໝົດ ຢູ່ ສປປ ລາວ ໄດ້ປູກສາລີຫວານ, ຫຼາຍກວ່າໝູ່ ແມ່ນຢູ່ເຂດພູດອຍ. ໃນຈໍານວນທັງໝົດ, 44 ບ້ານ ໄດ້ປູກສາລີຫວານ ຫຼາຍກວ່າ 50 ສ່ວນຮ້ອຍ ຂອງເນື້ອທີ່ດິນກະສິກໍາຂອງບ້ານ. ບາງເມືອງຂອງແຂວງ ອຸດົມໄຊ, ໄຊຍະບູລີ ແລະ ຊຽງຂວາງ ໄດ້ມີເນື້ອທີ່ການປູກສາລີຫວານ ທີ່ກວ້າງໃຫຍ່ (8,070 ຮຕ, 6,482 ຮຕ ແລະ 4,209 ຮຕ ຕາມລໍາດັບ), ສາມແຂວງດັ່ງກ່າວກວມເອົາ 57 ສ່ວນຮ້ອຍ ຂອງເນື້ອທີ່ປູກສາລີຫວານທັງໝົດ. ຕາຕະລາງ 4 ໄດ້ອະທິບາຍ ລາຍລະອຽດກ່ຽວກັບເນື້ອທີ່ການປູກສາລີຫວານ ຂອງທຸກໆແຂວງ.

ລວມມີ 108,105 ຄົວເຮືອນ ທີ່ປູກສາລີຫວານ ໃນເນື້ອທີ່ທັງໝົດ 33,100 ຮຕ. ສະເລ່ຍ ແມ່ນ 0.3 ຮຕ ສາລີຫວານ ຕໍ່ຄົວເຮືອນ, ດັ່ງທີ່ ແຜນທີ່ນ້ອຍ ໄດ້ສະແດງໃຫ້ເຫັນຄວາມແຕກຕ່າງຢ່າງຈະແຈ້ງຂອງເນື້ອການປູກສາລີຫວານ ສະເລ່ຍ ຕໍ່ຄົວເຮືອນ. ຢູ່ແຂວງຜົ້ງສາລີ ມີ 12,693 ຄົວເຮືອນ ປູກສາລີຫວານ ຊຶ່ງເປັນແຂວງ ທີ່ມີອັດຕາສ່ວນສູງສຸດ ຂອງຄົວເຮືອນປູກສາລີຫວານຂອງປະເທດ (12 ສ່ວນຮ້ອຍ). ແຕ່ ເນື້ອທີ່ສາລີຫວານ ຢູ່ແຂວງ ຜົ້ງສາລີ ຂ້ອນຂ້າງ ຕໍ່າ ແລະ ທັງໝົດມີພຽງແຕ່ 2,281 ຮຕ ເທົ່ານັ້ນ ເພາະວ່າ ສະເລ່ຍເນື້ອທີ່ປູກສາລີຫວານ ຕໍ່ຄົວເຮືອພຽງແຕ່ 0.2 ຮຕ (ທຽບກັບ ຄ13, ຄ14 ແລະ ຄ16). ໃນທາງກົງກັນຂ້າມ, ຢູ່ແຂວງໄຊຍະບູລີ ມີ 6,588 ຄົວເຮືອນ ທີ່ປູກສາລີຫວານ ໃນເນື້ອທີ່ທັງໝົດ 6,482 ຮຕ ສະເລ່ຍແລ້ວ 1 ຮຕ ຕໍ່ຄົວເຮືອນ. ເມືອງ ແກ່ນທ້າວ ແຂວງໄຊຍະບູລີ ເປັນເມືອງ ທີ່ມີເນື້ອທີ່ປູກສາລີຫວານ ສະເລ່ຍຕໍ່ຄົວເຮືອນທີ່ກວ້າງທີ່ສຸດ ຄື 3.2 ຮຕ ຕໍ່ຄົວເຮືອນ.

ຂີດຄວາມສາມາດ ແລະ ຂໍ້ຈໍາກັດ ສໍາລັບການປູກສາລີຫວານ

ການສຶກສາທີ່ຜ່ານມາໄດ້ຊີ້ໃຫ້ເຫັນວ່າ ບາງເຂດຮາບພຽງທີ່ມີລະບົບຊົນລະປະທານ ໄດ້ຫັນປ່ຽນຈາກການເຮັດນາຊົນລະປະທານ ມາເປັນການປູກສາລີຫວານ ແທນ. ການປູກສາລີຫວານ ໂດຍໃຊ້ນໍ້າຊົນລະປະທານໄດ້ໃຫ້ຜົນຕອບແທນດ້ານເສດຖະກິດແກ່ຊາວກະສິກອນດີກວ່າ ແລະ ໃຊ້ນໍ້າ ໜ້ອຍກວ່າ ເມື່ອທຽບກັບການເຮັດນາປີທີ່ໃຊ້ນໍ້າຊົນລະປະທານ (*Sourideth et al.*, 2011). ຄວາມຕ້ອງການດ້ານແຮງງານໃນການປູກສາລີຫວານ ກໍຂ້ອນຂ້າງຕໍ່າກວ່າ ການປູກເຂົ້າ. ດ້ວຍເຫດນັ້ນ, ຊາວກະສິກອນໃນຫຼາຍໆພື້ນທີ່ເຊັ່ນບ້ານເກີນ ແຂວງ ວຽງຈັນ ແລະ ບ້ານກົກເດື່ອ ແຂວງ ຈໍາປາສັກ ໄດ້ຢຸດເຊົາການເຮັດນາແຊງຫັນມາປູກສາລີຫວານແທນ (*Sourideth et al.*, 2011).

ການປູກສາລີຫວານ ມີຄວາມເໝາະສົມກັບຄອບຄົວທີ່ຂາດເຂີນແຮງງານ, ແຕ່ ບໍ່ເປັນທາງເລືອກທີ່ເໝາະສົມສໍາລັບຄົວເຮືອນທີ່ຂາດເຂີນດ້ານທຶນຮອນ. ອີກຢ່າງໜຶ່ງ, ການປູກສາລີຫວານຕ້ອງໄດ້ໃຊ້ຝຸ່ນຫຼາຍກວ່າການປູກເຂົ້າ ແລະ ອາດເຮັດໃຫ້ຄຸນນະພາບຂອງດິນເຊື່ອມລົງ. ການປູກສາລີຫວານໄດ້ບັນລຸເຖິງລະດັບເປັນສິນຄ້າ ຢູ່ແຂວງວຽງຈັນ ແລະ ນະຄອນຫຼວງ ໂດຍສະເພາະຢູ່ບັນດາບ້ານ ທີ່ໃກ້ກັບບໍລິສັດອຸດສະຫະກໍາກະສິກໍາລາວຢູ່ເມືອງທຸລາຄົມ ແຂວງວຽງຈັນ ໃກ້ກັບໂຮງງານຜະລິດນໍ້ານົມສາລີ, ສາລີຫວານ ແລະ ຜະລິດຕະພັນກະປ໋ອງສໍາລັບຕະຫຼາດພາຍໃນ ແລະ ສາກົນ.

ຕາຕະລາງ 4: ເນື້ອທີ່ທັງໝົດ ແລະ ອັດຕາສ່ວນ ສາລີຫວານໃນລະດູຝົນ, ລະດູແລ້ງ ແລະ ທັງສອງລະດູ ໃນປີ 2010/11

ແຂວງ	ລວມເນື້ອທີ່ ສາລີໝາວ ລະດູຝົນ (ຮຕ) 2010	ສາລີຫວານ ປູກລະດູຝົນ (% ຂອງທັງໝົດ) 2010	ລວມເນື້ອທີ່ ສາລີຫວານລະດູແລ້ງ (ຮຕ) 2011	ສາລີຫວານ ປູກລະດູແລ້ງ (% ຂອງທັງໝົດ) 2011	ລວມເນື້ອທີ ສາລີໝາວ (ຮຕ) ສອງລະດູ 2010/2011	ສັດຕາສ່ວນ ສາລີຫວານ ສອງລະດູ 2010/2011
ນະຄອນຫຼວງວຽງຈັນ	232.1	77.3	68.1	22.7	300.1	0.9
ຜົ້ງສາລີ	2,164.2	94.9	116.7	5.1	2,280.9	6.9
ຫຼວງນໍ້າທາ	384.2	84.9	68.3	15.1	452.4	1.4
ອຸດົມໄຊ	6,883.5	85.3	1,186.4	14.7	8,069.9	24.4
ບໍ່ແກ້ວ	418.1	59.1	289.6	40.9	707.7	2.1
ຫຼວງພະບາງ	2,610.4	98.3	46.1	1.7	2,656.5	8.0
ຫົວພັນ	2,586.6	97.5	65.9	2.5	2,652.5	8.0
ໄຊຍະບູລີ	6,411.7	98.9	70.4	1.1	6,482.1	19.6
ຊຽງຂວາງ	4,110.6	97.7	98.8	2.3	4,209.4	12.7
ວຽງຈັນ	2,208.3	78.5	606.5	21.5	2,814.8	8.5
ບໍລິຄໍາໄຊ	497.9	57.7	365.7	42.3	863.6	2.6
ຄໍາມ່ວນ	175.3	61.1	111.6	38.9	286.9	0.9
ສະຫວັນນະເຂດ	128.8	40.1	192.1	59.9	320.9	1.0
ສະລາວັນ	438.2	89.6	51.1	10.4	489.3	1.5
ເຊກອງ	121.3	92.3	10.1	7.7	131.3	0.4
ຈໍາປາສັກ	194.2	67.5	93.4	32.5	287.7	0.9
ອັດຕະປື	82.9	88.7	10.6	11.3	93.5	0.3
ລວມທັງໝົດ	**29,648.2**	**89.6**	**3,451.4**	**10.4**	**33,099.6**	**100.0**



0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ສັດສ່ວນຂອງເນື້ອທີ່ ທີ່ໃຊ້ປູກສາລີຫວານ ໃນລະດັບບ້ານ (8643)
0.0 % (3299)
> 0.0 - 0.5 % (2624)
> 0.5 - 2.0 % (1090)
> 2.0 - 10.0 % (1042)
> 10.0 - 50.0 % (544)
> 50.0 - 96.8 % (44)
ຈຳນວນຄົວເຮືອນທັງໝົດ (ສີ) ເນື້ອທີ່ປູກທັງໝົດ (ຂະໜາດ) ຂອງສາລີຫວານ ໃນລະດັບເມືອງ
ລະດູຝົນ
ລະດູແລ້ງ
3000 ຮຕ
1750 ຮຕ
500 ຮຕ
250 ຮຕ
ບໍ່ສະແດງ < 100 ຮຕ
ໃຊ້ສັນຍາລັກ > 500 ຮຕ
> 50 - 250 ຄົວເຮືອນ
> 250 - 1000 ຄົວເຮືອນ
> 1000 - 2000 ຄົວເຮືອນ
> 2000 - 3222 ຄົວເຮືອນ
890ha
1300ha
1100ha
610ha
590ha
3560ha
700ha
730ha
1950ha
1340ha
660ha
2200ha
700ha
1530ha
740ha
0 50 100 150 km
ເນື້ອທີ່ປູກສາລີຫວານສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.0 ຮຕ/ ຄຮ (2)
> 0.0 - 0.1 ຮຕ/ ຄຮ (54)
> 0.1 - 0.5 ຮຕ/ ຄຮ (58)
> 0.5 - 1.0 ຮຕ/ ຄຮ (16)
> 1.0 - 2.0 ຮຕ/ ຄຮ (12)
> 2.0 - 3.2 ຮຕ/ ຄຮ (1)
0 100 200 300 km

ຄ 18 ພືດຢືນຕົ້ນ ຕົ້ນຕໍ

ພາກສະເໜີ

ໃນຊຸມປີຜ່ານມາ ເຖິງວ່າ ທີ່ດິນກະສິກຳເກືອບທັງໝົດໃນ ສປປ ລາວ ຈະເນັ້ນໃສ່ການປູກພືດລົ້ມລຸກ, ແຕ່ກໍຍັງເຫັນມີການເພີ່ມຂຶ້ນ ຂອງເນື້ອທີ່ປູກພືດຢືນຕົ້ນໄດ້ຢ່າງຈະແຈ້ງ. ພືດຢືນຕົ້ນ (ຫຼື ພືດຖາວອນ) ແມ່ນພືດທີ່ມີການຜະລິດໃນຮອບວຽນຫຼາຍກວ່າໜຶ່ງປີ ເຊັ່ນ: ໝາກໄມ້ ແລະ ໝາກຖົ່ວ, ກ້ວຍ, ກາເຟ, ຊາ, ໝາກແໜ່ງ ແລະ ຢາງພາລາທຳມະຊາດ. ເນື້ອທີ່ປູກພືດຢືນຕົ້ນ ໃນ ສປປ ລາວ ມີປະມານ 151,000 ຮຕ, ກວມເອົາ 10% ຂອງດິນກະສິກຳທັງໝົດ. ຢ່າງໃດກໍຕາມ, ເນື້ອທີ່ປູກພືດຢືນຕົ້ນ ໄດ້ເພີ່ມຂຶ້ນຫຼາຍກວ່າສອງເທົ່າໃນຊ່ວງ ທົດສະວັດ 1999 ຫາ 2011.

ການເພີ່ມຂຶ້ນທີ່ສຳຄັນ ຂອງເນື້ອທີ່ປູກພືດຢືນຕົ້ນ ໄດ້ປະກົດໃຫ້ເຫັນ ໃນທຸກພາກຂອງ ສປປ ລາວ, ແຕ່ວ່າ ເດັ່ນທີ່ສຸດ ແມ່ນຢູ່ບັນດາແຂວງທາງພາກເໜືອ. ອັນນີ້ ເປັນຜົນຂອງບັນດາແຜນງານທີ່ພາກລັດ ແລະ ຜູ້ໃຫ້ທຶນຕ່າງປະເທດ ໄດ້ໃຫ້ການສະໜັບສະໜູນ ເຊິ່ງຖືວ່າ ການສົ່ງເສີມການປູກພືດຢືນຕົ້ນເປັນທາງເລືອກ ແທນການເຮັດໄຮ່ແບບເລື່ອນລອຍໄດ້. ໂດຍທົ່ວໄປ ຊາວກະສິກອນ ມັກປູກໝາກນັດ ແລະ ພືດອື່ນໆ ສັບຫວ່າງຕົ້ນໄມ້ໃຫ້ໝາກ ຫຼື ຕົ້ນໄມ້ອຸດສະຫາກຳ ໃນຊ່ວງປີເລີ່ມຕົ້ນ ໂດຍມີຈຸດປະສົງຫຼັກເພື່ອຮັບປະກັນການດຳລົງຊີວິດ ໃນໄລຍະທີ່ລໍຖ້າຜົນເກັບກ່ຽວຈາກຕົ້ນໄມ້ເຫຼົ່ານັ້ນ. ຕັ້ງແຕ່ ປີ 1999, ການປູກພືດຢືນຕົ້ນ ໄດ້ເພີ່ມຂຶ້ນພຽງເລັກນ້ອຍຢູ່ພາກໃຕ້. ທີ່ເປັນໜ້າສັງເກດ ຄົວເຮືອນຂະໜາດໃຫຍ່ມີແນວໂນ້ມປູກພືດຢືນຕົ້ນທີ່ຕະຫຼາດມີຄວາມຕ້ອງການຫຼາຍກວ່າຄົວເຮືອນຂະໜາດນ້ອຍ. ຊາວກະສິກອນທີ່ຄອບຄອງດິນຜືນນ້ອຍ ແລະ ມີຂໍ້ຈຳກັດທາງດ້ານການເງິນມີແນວໂນ້ມປູກພືດທີ່ຈຳເປັນ ຕໍ່ການບໍລິໂພກພາຍໃນຄົວເຮືອນຫຼາຍກວ່າ ການລົງທຶນໃສ່ການປູກພືດຢືນຕົ້ນ.

ການອະທິບາຍຮູບແບບ ໃນປີ 2011

ການສຳຫຼວດກະສິກຳ ປີ 2010/11 ລະບຸວ່າ ພືດຢືນຕົ້ນ ຢູ່ ສປປ ລາວ ມີຫຼາຍກວ່າ 80 ຊະນິດທີ່ແຕກຕ່າງກັນ, ຊຶ່ງນອນຢູ່ໃນປະເພດຂອງ (ກ) ພືດໃຫ້ນ້ຳ ແລະ ສານກະຕຸ້ນ, (ຂ) ພືດກາກໃຍ, (ຄ) ດອກໄມ້, (ງ) ພືດອາຫານສັດ, (ຈ) ໝາກໄມ້, (ສ) ສະໝຸນໄພ, (ຊ) ພືດອຸດສາຫະກຳ, (ຍ) ພືດຕະກູນຖົ່ວ, (ດ) ພືດໃຫ້ນ້ຳມັນ, (ຕ) ເຄື່ອງເທດ, (ຖ) ຕົ້ນໄມ້ ແລະ ປາມ, ແລະ (ທ) ພືດຢືນຕົ້ນອື່ນໆ. ເປັນທີ່ສັງເກດວ່າ ຊະນິດພືດຢືນຕົ້ນ ທີ່ປູກຢູ່ ສປປ ລາວ ອາດຈະມີຫຼາຍກວ່າ ທີ່ການສຳຫຼວດໄດ້ລາຍງານ.

ແຜນທີ່ສະແດງໃຫ້ເຫັນ ເນື້ອທີ່ພືດຢືນຕົ້ນຫຼັກ ທີ່ປູກໃນຂັ້ນບ້ານ ຢູ່ ສປປ ລາວ. ຈຳນວນ 7,821 ບ້ານ ຫຼື 90% ຂອງບ້ານທັງໝົດໃນ ສປປ ລາວ ໄດ້ປູກພືດຢືນຕົ້ນ. ພືດທີ່ບ້ານຕ່າງໆ ນິຍົມປູກພືດຢືນຕົ້ນຫຼັກຫຼາຍທີ່ສຸດແມ່ນ ໝາກມ່ວງ, ຢາງພາລາ ແລະ ກ້ວຍ ຊຶ່ງກວມເອົາ 26%, 21%, ແລະ 17% ຂອງບ້ານທັງໝົດທີ່ປູກພືດດັ່ງກ່າວ ຕາມລຳດັບ (ເບິ່ງເສັ້ນສະແດງ 6). ພືດຢືນຕົ້ນຊະນິດອື່ນໆ ທີ່ປູກ ຢ່າງແຜ່ຫຼາຍ ລວມມີ ໝາກພ້າວ (7%), ກາເຟ (5%), ໝາກຂາມ (2.6%), ໝາກນັດ (2.5%), ໝາກແໜ່ງ (2%), ໝາກໝັ້ນ (1.9%), ໝາກກ້ຽງໃຫຍ່ ແລະ ໝາກກ້ຽງທົ່ວໄປ (1.8%), ໝາກມີ້ (1.7%), ຊາ (1.4%), ໝາກເຍົາ (1.3%) ແລະ ອື່ນໆ (10.6%). ດັ່ງທີ່ເຫັນເລື້ອຍໆ ການປູກຕົ້ນໄມ້ໃຫ້ໝາກ ສ່ວນໃຫຍ່ມີລັກສະນະກະແຈກກະຈາຍ ເນັ້ນການບໍລິໂພກພາຍໃນຄົວເຮືອນ, ແທນທີ່ການປູກແບບຜືນໃຫຍ່, ເຊິ່ງອາດຈະມີຜົນຕໍ່ການສະແດງຕົ້ນໄມ້ໃຫ້ໝາກ ໃນແຜນທີ່ດັ່ງກ່າວນີ້ໄດ້.

ເກືອບ ¼ ຂອງຈຳນວນບ້ານທັງໝົດ ໄດ້ປູກໝາກມ່ວງເປັນພືດຢືນຕົ້ນຫຼັກ, ແຕ່ຍັງໜ້ອຍກວ່າໃນເຂດທີ່ມີການປູກພືດອຸດສາຫະກຳ. ເນື້ອທີ່ການຜະລິດໝາກມ່ວງໃນ ສປປ ລາວ ແມ່ນ 4,000 ຮຕ ໃນປີ 2011.

ເສັ້ນສະແດງ 6: ສັດສ່ວນຂອງບ້ານທີ່ປູກພືດຢືນຕົ້ນຫຼັກ ໃນບ້ານ



ໃນທົດສະວັດທີ່ຜ່ານມາ, ການປູກຢາງພາລາໄດ້ຂະຫຍາຍຕົວຢ່າງກວ້າງຂວາງ ໃນ ສປປ ລາວ. ໃນປີ 2011 ມີ 49,000 ຄົວເຮືອນໄດ້ປູກຢາງພາລາ ແລະ ເນື້ອທີ່ປູກຢາງພາລາ ມີ 66,500 ຮຕ. ການປູກຢາງພາລາໄດ້ແຜ່ຫຼາຍ ຢູ່ພາກຕະເວັນຕົກສ່ຽງເໜືອ ຂອງ ສປປ ລາວ, ໂດຍສະເພາະ ຢູ່ແຂວງຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ແລະ ຜົ້ງສາລີ, ແລະ ຍັງປູກ ຢູ່ພາກກາງຂອງ ສປປ ລາວ ເຊັ່ນ ແຂວງວຽງຈັນ, ບໍລິຄຳໄຊ, ແລະ ຄຳມ່ວນ. ແຜນທີ່ສະແດງໃຫ້ເຫັນວ່າ ໃນບັນດາແຂວງທາງພາກ ຕະເວັນຕົກສ່ຽງເໜືອ, ແລະ ບາງແຂວງໃນພາກກາງ, ຢາງພາລາ ໄດ້ກາຍມາເປັນພືດຢືນຕົ້ນ ຫຼັກ ຂອງຫຼາຍໆບ້ານ. ເປັນທີ່ສັງເກດວ່າ ມີການປູກຢາງພາລາຂ້ອນຂ້າງຫຼາຍ ໃນເຂດພາກໃຕ້ຂອງ ສປປ ລາວ ເຊັ່ນດຽວກັນ ແຕ່ວ່າ ມັນເປັນການປູກໂດຍບໍລິສັດຕ່າງປະເທດ ໃນຮູບແບບອຸດສາຫະກຳ ແລະ ດັ່ງນັ້ນ ຈຶ່ງບໍ່ໄດ້ລວມເປັນຂໍ້ມູນ.

ກ້ວຍ ເປັນພືດຢືນຕົ້ນພື້ນເມືອງທີ່ປູກໃນທົ່ວປະເທດເພື່ອບໍລິໂພກພາຍໃນຄົວເຮືອນ ແລະ ເພື່ອຂາຍ. ເນື້ອທີ່ການປູກກ້ວຍທັງໝົດ ມີ 9,500 ຮຕ ໃນປີ 2011 ແລະ ມີ 70,000 ຄົວເຮືອນ ທີ່ປູກກ້ວຍ. ການປູກກ້ວຍໄດ້ມີຂຶ້ນໃນທົ່ວປະເທດ, ແຕ່ມີຫຼາຍໃນເຂດພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ. ກ້ວຍສິດ, ກ້ວຍຈົ໋ນ ແລະ ກ້ວຍປີ້ງ ເປັນທີ່ນິຍົມ ແລະ ບໍລິໂພກຢ່າງກວ້າງຂວາງໃນ ສປປ ລາວ. ນອກນັ້ນ, ປະລິມານກ້ວຍຈຳນວນຫຼາຍຖືກສົ່ງອອກໄປປະເທດເພື່ອນບ້ານ, ໂດຍສະເພາະ ຈີນ, ໄທ ແລະ ຫວຽດນາມ.

ຕົ້ນພ້າວ ແມ່ນປູກມາແຕ່ດົນນານ ໃນ ສປປ ລາວ ທັງເພື່ອການບໍລິໂພກພາຍໃນຄົວເຮືອນ ແລະ ເພື່ອຂາຍ, ມັນເປັນຕົ້ນໄມ້ໃຫ້ໝາກທີ່ຢູ່ກັບຄົນເຮົາມາຫຼາຍລຸ້ນຄົນ. ໝາກພ້າວແມ່ນພືດຢືນຕົ້ນຫຼັກທີ່ປູກໃນ 540 ບ້ານ, ສ່ວນໃຫຍ່ ຢູ່ແຂວງສະຫວັນນະເຂດ ແລະ ເຂດພາກໃຕ້ຂອງແຂວງຈຳປາສັກ ແລະ ເປັນພື້ນທີ່ຕ່ຳ ແລະ ມີອາກາດອົບອຸ່ນ.

ກາເຟ ແມ່ນປູກຢູ່ຫຼາຍກວ່າ 400 ບ້ານ ໃນເນື້ອທີ່ການປູກທັງໝົດປະມານ 46,000 ຮຕ, ໃນນັ້ນ 99% ຢູ່ 4 ແຂວງພາກໃຕ້, ແລະ ຕາມເຂດພູພຽງບໍລະເວນ. ເກືອບ 95% ຂອງການປູກກາເຟທັງໝົດຢູ່ ສປປ ລາວ ເປັນການປູກເພື່ອຂາຍໃຫ້ຕະຫຼາດສາກົນ, ໃນຂະນະທີ່ ມີພຽງແຕ່ສັດສ່ວນນ້ອຍ (5%) ເທົ່ານັ້ນ ທີ່ປູກເພື່ອການບໍລິໂພກພາຍໃນປະເທດ. ກາເຟເປັນ 1 ໃນ 5 ຜະລິດຕະພັນສົ່ງອອກ ທີ່ໃຫຍ່ທີ່ສຸດ ຂອງ ສປປ ລາວ, ເຊິ່ງຈັດຢູ່ໃນອັນດັບ 3 ຂອງການປູກກາເຟ ໃນກຸ່ມປະເທດອາຊຽນ, ເປັນຮອງພຽງແຕ່ ຫວຽດນາມ ແລະ ອິນໂດເນເຊຍ, ແຕ່ ຍັງຖືວ່າປູກ ຕ່ຳກວ່າ 1% ຂອງການປູກກາເຟ ໃນທົ່ວໂລກ.

ແຜນທີ່ຍັງໄດ້ບອກເຖິງສະຖານທີ່ການປູກໝາກແໜ່ງ, ໂດຍສ່ວນໃຫຍ່ຢູ່ ແຂວງຜົ້ງສາລີ ແລະ ທາງເຂດພາກເໜືອຂອງພູພຽງບໍລະເວນ, ມີການປູກຊາ ທີ່ແຂວງຜົ້ງສາລີ, ອຸດົມໄຊ ແລະ ເຂດຕະເວັນຕົກຂອງເມືອງໄຊຍະບູລີ, ປູກໝາກກ້ຽງໃຫຍ່, ໝາກກ້ຽງສົ້ມແດງ ແລະ ໝາກກ້ຽງທົ່ວໄປ ຢູ່ເຂດເມືອງວັງວຽງ, ປູກໝາກມ່ວງຫິມມະພານຢູ່ພາກຕະເວັນຕົກສ່ຽງເໜືອຂອງປາກເຊ ແລະ ປູກໝາກຂາມຢູ່ພາກໃຕ້ຂອງແຂວງໄຊຍະບູລີ ແລະ ອັດຕະປື, ນອກນັ້ນ ພືດຢືນຕົ້ນຊະນິດອື່ນໆ ບໍ່ຄ່ອຍໄດ້ປູກຢ່າງແຜ່ຫຼາຍ.

ການອະທິບາຍສາຍເຫດທີ່ເຮັດໃຫ້ເກີດຮູບແບບ

ສປປ ລາວ ຢູ່ທ່າມກາງໄລຍະການປ່ຽນແປງທາງດ້ານເສດຖະກິດ ແລະ ໄລຍະການປ່ຽນແປງທາງພາກກະສິກຳທີ່ສຳຄັນໃນທົດສະວັດທີ່ຜ່ານມາ. ການປູກພືດຢືນຕົ້ນເຊັ່ນ: ຢາງພາລາ ແລະ ກາເຟ ບໍ່ແມ່ນເພື່ອເປັນແຫຼ່ງອາຫານແຕ່ເພື່ອເປັນປັດໃຈການຜະລິດໃຫ້ແກ່ອຸດສະຫາກຳ. ດັ່ງນັ້ນ, ຊາວກະສິກອນທີ່ປູກພືດຢືນຕົ້ນຈຶ່ງຂຶ້ນຢູ່ກັບລາຄາ ຕະຫຼາດໂລກຫຼາຍຂຶ້ນ. ດ້ານໜຶ່ງມັນເປັນທ່າແຮງເຮັດໃຫ້ມີລາຍຮັບເພີ່ມຂຶ້ນ ແລະ ຫຼຸດຜ່ອນຄວາມທຸກຍາກເວລາຕະຫຼາດມີຄວາມຕ້ອງການແຕ່ອີກດ້ານໜຶ່ງມັນກໍ່ມີຄວາມສ່ຽງສູງເຮັດໃຫ້ຜູ້ຜະລິດຂາດທຶນເມື່ອລາຄາຕະຫຼາດຕົກຕ່ຳ. ຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ກໍອາດຈະເກີດຂຶ້ນໄດ້ເຊັ່ນດຽວກັນ.

ຈຳນວນໂຮງງານແປຮູບ ໝາກໄມ້ ໄດ້ເພີ່ມຂຶ້ນ ໃນ ສປປ ລາວ ຊຶ່ງຊ່ວຍໃຫ້ຜູ້ປະກອບການລາວ ສາມາດສ້າງມູນຄ່າເພີ່ມ ແລະ ປັບປຸງຄຸນນະພາບຜະລິດຕະພັນຂອງພວກເຂົາໄດ້. ບັນດາໂຮງງານເຫຼົ່ານີ້ສ້າງໃຫ້ເກີດການຜະລິດພາຍໃນ ຈຶ່ງເປັນການຫຼຸດຜ່ອນການນຳເຂົ້າ. ນອກຈາກນັ້ນ, ໂຮງງານເຫຼົ່ານີ້ ຍັງໄດ້ສ້າງວຽກເຮັດງານທຳໃຫ້ແກ່ແຮງງານທ້ອງຖິ່ນ ແລະ ມີການປະກອບສ່ວນຊ່ວຍໃນການຫຼຸດຜ່ອນການເຄື່ອນຍ້າຍແຮງງານອອກນອກປະເທດ.

ສປປ ລາວ ມີທ່າແຮງໃນການເຂົ້າເຖິງຕະຫຼາດສົ່ງອອກຫຼາຍຂຶ້ນ ສຳລັບຜະລິດຕະພັນທີ່ມາຈາກພືດຢືນຕົ້ນ, ຕົວຢ່າງ ໂດຍຜ່ານລະບົບການຢັ້ງຢືນ (ເຊັ່ນ: ອິນຊີ, ສະພາບໍລິຫານຄຸ້ມຄອງປ່າໄມ້, ການຄ້າທີ່ເປັນທຳ) ຫຼື ການຜະລິດທີ່ເປັນເອກະລັກທາງພູມສັນຖານ (GI). ຕັ້ງແຕ່ປີ 2009, ບາງຜະລິດຕະພັນກາເຟຂອງເຂດພູພຽງບໍລະເວນໄດ້ຮັບການຢັ້ງຢືນ ດ້ານການຄ້າທີ່ເປັນທຳ ແລະ ອິນຊີ, ແລະ ພາກ ສ່ວນທີ່ກ່ຽວຂ້ອງກັບຕ່ອງໂສ້ການປູກກາເຟ ໄດ້ເຮັດວຽກຮ່ວມກັນ ເພື່ອຊ່ວຍພັດທະນາໃຫ້ກາຍເປັນຜະລິດຕະພັນທຳອິດ ທີ່ມີເອກະລັກທາງພູມສັນຖານ ຂອງ ສປປ ລາວ. ເຊັ່ນດຽວກັນ, ຊາວກະສິກອນທີ່ປູກຊາ ຂະໜາດນ້ອຍຈຳນວນໜຶ່ງ ຢູ່ເຂດພູພຽງບໍລະເວນ ກໍ່ໄດ້ມີການ ຮັບຮອງໃຫ້ເປັນການປູກ ແບບອິນຊີ.



0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
0 50 100 150 km
ພືດຍືນຕົ້ນທີ່ສຳຄັນໃນລະດັບບ້ານ
ເຄື່ອງດື່ມ ແລະ ຢາສູບ
ກາເຟ (402)
ຊາ (112)
ໝາກຄ້ຽວ (8)
ພືດທີ່ເປັນເສັ້ນໃຍ
ຕົ້ນງິ້ວ (23)
ດອກໄມ້
ດອກໄມ້ຕ່າງໆ (13)
ພືດອາຫານສັດ
ປູກມອນລ້ຽງມ້ອນ (2)
ໝາກໄມ້
ໝາກມ່ວງ (2054)
ໝາກກ້ວຍ (1340)
ໝາກຂາມ (201)
ໝາກມັດ (197)
ໝາກໝັ້ນ (149)
ໝາກມີ້ (135)
ໝາກລຳໃຍ (61)
ໝາກກ້ຽງນ້ອຍ/ໝາກກ້ຽງ (141)
ໝາກນາວ (56)
ໝາກຈອງ (50)
ໝາກຄາຍ (45)
ໝາກຫຸ່ງ (26)
ໝາກອະໂວກາໂດ້ (19)
ໝາກໄມ້ປູກອື່ນໆ (100)
ພືດສະໝຸນໄພ
ຫົວສີໄຄ (29)
ພືດອຸດສາຫະກຳ
ໝາກເຍົາ (98)
ໝາກໄມ້ຊະນິດກິນແກ່ນ
ໝາກມ່ວງຫິມະພານ (24)
ພືດໃຫ້ນ້ຳມັນ
ພືດໃຫ້ນ້ຳມັນຕ່າງໆ (18)
ເຄື່ອງເທດ
ໝາກແໜ່ງ (155)
ຂີງ (43)
ໝາກພິກໄທ (3)
ຕົ້ນໄມ້ ແລະ ປຣາມ
ໝາກພ້າວ (542)
ຢາງພາລາ (1641)
ອື່ນໆ
ພືດຢືນຕົ້ນອື່ນໆ (134)

ຄ 19 ພືດຢືນຕົ້ນ ຈັດເປັນກຸ່ມ

ພາກສະເໜີ

ພືດຢືນຕົ້ນຫຼາຍຊະນິດ ທີ່ປູກໃນໃນເນື້ອທີ່ 151,000 ຮຕ ຢູ່ຕາມເຂດຕ່າງໆຂອງ ສປປ ລາວ ເທົ່າກັບ 10% ຂອງເນື້ອທີ່ດິນກະສິກຳທັງໝົດ. ພືດຢືນຕົ້ນບາງປະເພດຖືກປູກເປັນກຸ່ມເຂດ ເຊັ່ນ: ຢາງພາລາ, ໝາກແໜ່ງ, ຊາ, ໝາກຈອງ, ໝາກຄາຍ, ໝາກມ່ວງຫິມະພານ ແລະ ກາເຟ. ພືດເຫຼົ່ານີ້ ສ່ວນໃຫຍ່ເປັນພືດສິນຄ້າເພື່ອຕອບສະໜອງທັງຕະຫຼາດພາຍໃນ ແລະ ຕ່າງປະເທດ.

ການອະທິບາຍຮູບແບບ ໃນປີ 2011

ແຜນທີ່ຫຼັກ ສະແດງໃຫ້ເຫັນເຖິງສ່ວນແບ່ງຂອງເນື້ອທີ່ພືດຢືນຕົ້ນບາງຊະນິດ ທຽບກັບເນື້ອທີ່ພືດຢືນຕົ້ນທັງໝົດ, ໄດ້ບົ່ງບອກເຖິງລະດັບການປູກພືດທີ່ໂຮມໃນສະເພາະເຂດ ສູງຫຼາຍ. ເຂດທີ່ຕິດກັບປະເທດຈີນ ແລະ ເຂດພູພຽງບໍລະເວນ ເປັນເຂດສະເພາະທີ່ມີອັດຕາສ່ວນການປູກພືດຢືນຕົ້ນ ສູງ. ແຜນທີ່ນ້ອຍສະແດງເຖິງລາຍລະອຽດເພີ່ມເຕີມກ່ຽວກັບພື້ນທີ່ ຂອງບັນດາເຂດພືດຢືນຕົ້ນ.

ຕົວຢ່າງ, ຢາງພາລາ ໄດ້ຂະຫຍາຍຕົວຢ່າງໄວວາ ໃນ ສປປ ລາວ ຈາກການລົງທຶນຂອງບໍລິສັດຕ່າງປະເທດ, ຄົນທ້ອງຖິ່ນທີ່ມີຖານະເສດຖະກິດດີ ແລະ ຊາວກະສິກອນລາຍບຸກຄົນ. ການເພີ່ມຂຶ້ນຢ່າງຫຼວງຫຼາຍຂອງການປູກຢາງພາລາ ໄດ້ຖືກບັນທຶກໄວ້ໃນລະຫວ່າງປີ 1999 ແລະ 2011, ຊຶ່ງໃນໄລຍະເວລາດັ່ງກ່າວເນື້ອທີ່ທັງໝົດໄດ້ເພີ່ມຂຶ້ນຈາກ ພຽງແຕ່ 200-300 ຮຕ ມາເປັນ 66,500 ຮຕ ໃນທົ່ວປະເທດ. ແຜນທີ່ເທິງສຸດ ກ້ຳຂວາສະແດງໃຫ້ເຫັນວ່າ 68% ຂອງເນື້ອທີ່ປູກຢາງພາລາທົ່ວປະເທດ ໂຮມຢູ່ເຂດພາກເໜືອ ແລະ ພາກຕະເວັນຕົກສ່ຽງເໜືອ ຂອງ ສປປ ລາວ, ໂດຍສະເພາະ ຢູ່ແຂວງຫຼວງນ້ຳທາ. ເຂດທີ່ສອງ ແມ່ນ ເຂດລະຫວ່າງແຂວງວຽງຈັນ ແລະ ຄຳມ່ວນ ແຕ່ວ່າເຂດດັ່ງກ່າວ ໄດ້ກວມພຽງແຕ່ 12% ຂອງເນື້ອທີ່ປູກຢາງພາລາເທົ່ານັ້ນ. ໂດຍລວມແລ້ວ, ຢາງພາລາ ກວມເອົາເກືອບເຖິງ 44% ຂອງດິນກະສິກຳທີ່ຖືກນຳໃຊ້ເຂົ້າໃນການປູກພືດຢືນຕົ້ນທັງໝົດ ໃນ ສປປ ລາວ.

ມີປະມານ 8% ຂອງບ້ານທີ່ເຮັດການຜະລິດກະສິກຳ ໃນ ສປປ ລາວ ໄດ້ປູກໝາກແໜ່ງ. ຢູ່ໃນສອງພື້ນທີ່ຫຼັກທີ່ມີການປູກໝາກແໜ່ງ ແມ່ນ: ຢູ່ພາກຕະເວັນຕົກ ແຂວງຜົ້ງສາລີ ຕິດກັບ ຊາຍແດນຈີນ ກວມເຖິງ 58% ແລະ ຢູ່ເຂດພູພຽງບໍລະເວນ ກວມເຖິງ 22% ຂອງເນື້ອທີ່ໝາກແໜ່ງທັງໝົດ ໃນທົ່ວປະເທດ. ໂດຍລວມແລ້ວ, ເນື້ອທີ່ໝາກແໜ່ງ ມີເຖິງ 4% ຂອງດິນກະສິກຳ ທີ່ໃຊ້ໃນການປູກພືດຢືນຕົ້ນທັງໝົດ ໃນ ສປປ ລາວ.

ຂະແໜງຊາຂອງລາວ ຂ້ອນຂ້າງ ມີການພັດທະນາຊ້າ ແຕ່ກໍມີທ່າແຮງທີ່ດີ. ຊາ ທີ່ປູກ ຢູ່ ສປປ ລາວ ສ່ວນຫຼາຍໄດ້ສົ່ງອອກໄປປະເທດຈີນ ເນື່ອງຈາກ ໃບຊາລາວ ມີມູນຄ່າສູງ ໃນຕະຫຼາດຈີນ. ຊາລາວບາງສ່ວນຖືກປຸງແຕ່ງ ເປັນຊາປູເອີ້, ເຊິ່ງເປັນຜະລິດຕະພັນພິເສດ ທີ່ຜະລິດຢູ່ແຂວງຢຸ່ນໜານ ປະເທດຈີນທີ່ມີຊາຍແດນຕິດກັບ ສປປ ລາວ. ຫຼາຍກວ່າ 80% ຂອງເນື້ອທີ່ປູກຊາທັງໝົດ ໄດ້ພົບເຫັນຢູ່ແຂວງຜົ້ງສາລີ, ອຸດົມໄຊ ແລະ ໄຊຍະບູລີ. ເນື້ອທີ່ປູກຊາ ຢູ່ແຂວງ ຜົ້ງສາລີ ພຽງແຂວງດຽວກວມເຖິງ 62%, ຂະນະທີ່ ແຂວງ ອຸດົມໄຊ ແລະ ໄຊຍະບູລີ ກວມເອົາ 19% ຂອງ ເນື້ອທີ່ປູກຊາທັງໝົດ ໃນ ສປປ ລາວ.

ຫຼາຍກວ່າ 25,000 ຄົວເຮືອນກະສິກຳ ໄດ້ປູກກາເຟໃນເນື້ອທີ່ປະມານ 46,000 ຮຕ, ເນື້ອທີ່ກາເຟທັງໝົດຂອງປະເທດ ຫຼາຍກວ່າ 80% ສ່ວນໃຫຍ່ ຢູ່ເຂດພູພຽງບໍລະເວນ. ເກືອບ 95% ຂອງກາເຟທີ່ປູກໃນ ສປປ ລາວ ໄດ້ສະໜອງໃຫ້ແກ່ຕະຫຼາດສາກົນ ສັດສ່ວນນ້ອຍທີ່ເຫຼືອນັ້ນ ຖືກນຳໃຊ້ເພື່ອບໍລິໂພກພາຍໃນທ້ອງຖິ່ນ. ໂດຍລວມແລ້ວ, 30% ຂອງເນື້ອທີ່ດິນກະສິກຳ ທີ່ນຳໃຊເຂົ້າໃນການປູກພືດຢືນຕົ້ນເປັນເນື້ອທີ່ກາເຟ.

ແຂວງຈຳປາສັກ ແລະ ສາລະວັນ ໄດ້ປູກໝາກມ່ວງຫິມະພານຢ່າງຫຼວງຫຼາຍ. ເນື້ອທີ່ຂອງ 2 ແຂວງລວມກັນ ໄດ້ກວມເອົາຫຼາຍກວ່າ 90% ຂອງເນື້ອທີ່ປູກໝາກມ່ວງຫິມະພານທັງໝົດ ໃນ ສປປ ລາວ. ອັດຕາສ່ວນດິນກະສິກຳຂອງບ້ານຕ່າງໆ ທີ່ຖືກນຳໃຊ້ເຂົ້າໃນການປູກໝາກມ່ວງຫິມະພານແມ່ນຕ່ຳຫຼາຍ. ໂດຍລວມແລ້ວ, ຕ່ຳກວ່າ 1% ຂອງດິນກະສິກຳທັງໝົດໃນທົ່ວປະເທດ ທີ່ໃຊ້ປູກພືດຢືນຕົ້ນ ເປັນເນື້ອທີ່ປູກໝາກມ່ວງຫິມະພານ.

ໝາກຄາຍ ແລະ ໝາກຈອງ ແມ່ນປູກຫຼາຍ ຢູ່ພື້ນທີ່ອາກາດເຢັນທາງພາກເໜືອ ຂອງ ສປປ ລາວ. ແຂວງຊຽງຂວາງ ເປັນເຂດປູກໝາກຈອງທີ່ສຳຄັນຂອງປະເທດ ກວມເອົາ 66% ຂອງເນື້ອທີ່ປູກໝາກຈອງທັງໝົດ. ຊາວກະສິກອນ ໄດ້ນຳໃຊ້ອັດຕາສ່ວນນ້ອຍ (ໜ້ອຍກວ່າ 5%) ຂອງດິນກະສິກຳຂອງພວກເຂົາເພື່ອປູກໝາກຈອງ. ແຂວງຊຽງຂວາງ ກໍໄດ້ປູກໝາກຄາຍຫຼາຍເຊັ່ນກັນ ແລະ ຮອງລົງມາແມ່ນແຂວງວຽງຈັນ ແລະ ຫົວພັນ. ໂດຍລວມແລ້ວ, ເນື້ອທີ່ປູກ ໝາກຄາຍ ແລະ ໝາກຈອງ ລວມກັນ ບໍ່ເຖິງ 1% ຂອງດິນກະສິກຳທັງໝົດ ທີ່ໃຊ້ປູກພືດຢືນຕົ້ນ .

ການອະທິບາຍສາຍເຫດທີ່ເຮັດໃຫ້ເກີດຮູບແບບ

ການເຕົ້າໂຮມ ການປູກຕົ້ນໄມ້ຢືນຕົ້ນບາງຊະນິດ ເປັນຈຳນວນຫຼາຍ ໃນບາງເຂດ ຂອງ ສປປ ລາວ ມັກຈະເກີດໃນເຂດທີ່ໃກ້ກັບຕະຫຼາດ, ມີສະພາບດິນ ແລະ ອາກາດເໝາະສົມ, ແລະ ຊຸມຊົນກະສິກຳມີປະສົບການຫຼາຍໃນການປູກພືດດັ່ງກ່າວ, ເຊັ່ນ: ກາເຟ ໃນເຂດພູພຽງບໍລະເວນ. ດັ່ງນັ້ນ, ພືດຢືນຕົ້ນຫຼາຍຊະນິດຖືກປູກໃນພື້ນທີ່ຊາຍແດນທີ່ຕິດກັບປະເທດເພື່ອນບ້ານ. ພື້ນທີ່ທີ່ມີການປູກພືດຢືນຕົ້ນເປັນກຸ່ມເຂດ ເຊັ່ນໃນບັນດາ ແຂວງພາກເໜືອ, ອາດຈະເກີດຈາກຜົນຂອງໄລຍະປ່າເລົ່າ ທີ່ສັ້ນລົງ ແລະ ມີລະບົບການປູກພືດຫຼາຍຊະນິດ ເພີ່ມຂຶ້ນ ໃນເຂດເຫຼົ່ານັ້ນ.

ການສົ່ງເສີມການປູກພືດຢືນຕົ້ນຂອງລັດຖະບານລາວ ເພື່ອການຕະຫຼາດພາຍໃນ ແລະ ສົ່ງອອກສູ່ສາກົນນັ້ນໄດ້ເນັ້ນໃສ່ພື້ນທີ່ ທີ່ມີທ່າແຮງ ແລະ ຂໍ້ໄດ້ປຽບດ້ານການແຂ່ງຂັນ ສູງ ເຊັ່ນໃນແງ່ຄວາມເໝາະສົມດ້ານນິເວດ-ກະສິກຳ, ປະສົບການ ແລະ ຄວາມຊຳນານໃນການປູກ, ແລະ ຄວາມຕ້ອງການຂອງຕະຫຼາດ. ໄດ້ມີການແນະນຳໃຫ້ພັດທະນາມາດຕະຖານການຜະລິດ ແລະ ການປຸງແຕ່ງ ເພື່ອໃຫ້ໄດ້ຕາມເງື່ອນໄຂ ທີ່ການຢັ້ງຢືນເຄື່ອງໝາຍກະສິກຳທີ່ດີ (GAP), ກະສິກຳອິນຊີ (OA), ແລະ ຕົວຊີ້ວັດທາງພູມິສາດ (GI) ວາງອອກອາດຈະບໍ່ພຽງແຕ່ ປັບປຸງສຸຂະອານະໄມທົ່ວໄປ ແລະ ຄຸນນະພາບຂອງຜະລິດຕະພັນກະສິກຳ ເທົ່ານັ້ນແຕ່ຍັງ ເພີ່ມລາຄາ ແລະ ເຮັດໃຫ້ຜູ້ປະກອບການລາວ ເຂົ້າເຖິງບັນດາຕະຫຼາດພິເສດໄດ້.

ຄວາມບໍ່ແນ່ນອນຂອງຕະຫຼາດ ສຳລັບພືດຢືນຕົ້ນຫຼາຍຊະນິດອາດຈະກະທົບໃສ່ການຄ້ຳປະກັນສະບຽງອາຫານ ຫຼື ເຮັດໃຫ້ເກີດການຂາດແຄນອາຫານ ໃນພື້ນທີ່ ທີ່ຊາວກະສິກອນ ໄດ້ນຳໃຊ້ເນື້ອທີ່ສ່ວນໃຫຍ່ຂອງພວກເຂົາ ເພື່ອປູກພືດຢືນຕົ້ນ ໃຫ້ເປັນສິນຄ້າ ແລະ ດັ່ງນັ້ນ ຈຶ່ງໄດ້ເພິ່ງພາອາໄສພືດເຫຼົ່ານັ້ນໃນຕະຫຼາດໂລກເພື່ອສ້າງລາຍຮັບໃຫ້ສາມາດຕອບສະໜອງ ຄວາມຕ້ອງການຂັ້ນພື້ນຖານຂອງເຂົາເຈົ້າ.

ຄ 19 ພືດຍືນຕົ້ນ ຈັດເປັນກຸ່ມ



ຄ 20 ຢາງພາລາ

ພາກສະເໜີ

ຢາງພາລາ (*Havea brasiliensis*) ໄດ້ຖືກນຳເຂົ້າມາ ສປປ ລາວ ເປັນເທື່ອທຳອິດ ໃນປີ 1930 ໂດຍການປູກຢູ່ສວນທົດລອງໃກ້ກັບເມືອງປາກເຊ ພາຍໃຕ້ໂຄງການອະນານິຄົມຂອງຝຣັ່ງ. ນັບຈາກນັ້ນ 60 ປີຕໍ່ມາ ກໍຄືໃນປີ 1990, ບໍລິສັດພັດທະນາເຂດພູດອຍ ໄດ້ເລີ່ມປູກຢາງພາລາຢູ່ເມືອງທ່າແຂກ ແລະ ໃນປີ 1992 ໄດ້ຂະຫຍາຍໄປສູ່ເມືອງຫີນບູນ. ລະຫວ່າງປີ 1994 ແລະ 1996, ຊຸມເຜົ່າມົ້ງ ບ້ານຫາດຢາວ ແຂວງຫຼວງນ້ຳທາ ໄດ້ປູກຢາງພາລາຫຼາຍກວ່າ 342 ຮຕ ໃນຮູບແບບການປູກຂະໜາດນ້ອຍ, ແລະ ໄດ້ເລີ່ມ ຂີດຢາງ ໃນປີ 2002 (*Manivong et al.*, 2003). ການປູກຢາງພາລາ ຢູ່ພາກເໜືອຂອງລາວ ສ່ວນໃຫຍ່ເກີດຈາກອິດທິພົນຂອງນັກລົງທຶນ ສປ ຈີນ ແລະ ໃນພາກໃຕ້ ແລະ ພາກກາງ ແມ່ນຈາກ ນັກລົງທຶນຫວຽດນາມ ແລະ ໄທ. ນັບແຕ່ ຊຸມປີ 2000 ເປັນຕົ້ນມາ, ເນື້ອທີ່ປູກຢາງພາລາໃນ ສປປ ລາວ ໄດ້ເພີ່ມຂຶ້ນຢ່າງໄວວາ ຈາກການປູກສ່ວນບຸກຄົນ ແລະ ຂອງພາກເອກະຊົນ, ໂດຍການສະໜັບສະໜູນຈາກລັດຖະບານລາວ. ການປູກຢາງພາລາໃນ ສປປ ລາວ ໄດ້ຂະຫຍາຍຕົວຢ່າງໄວວາ ແລະ ເກີນຄວາມສາມາດຄວບຄຸມໄດ້ເຮັດໃຫ້ເນື້ອທີ່ ທີ່ປູກໂດຍຜູ້ຊາວກະສິກອນຂະໜາດນ້ອຍພຽງຢ່າງດຽວ ເພີ່ມຂຶ້ນເຖິງ 66,358 ຮຕ ໂດຍບໍ່ໄດ້ ລວມເນື້ອທີ່ຢາງພາລາທີ່ຢູ່ພາຍໃຕ້ໂຄງການສຳປະທານເນື້ອທີ່ດິນ.

ການປູກຢາງພາລາໃນ ສປປ ລາວ ແມ່ນມີຢູ່ 3 ຮູບແບບ ໃນນັ້ນ ມີການປູກໂດຍ ຜູ້ປະກອບການຂະໜາດນ້ອຍ, ການປູກແບບມີສັນຍາຜູກພັນ, ແລະ ການສຳປະທານຂະໜາດໃຫຍ່. ຮູບແບບສຸດທ້າຍ ເປັນຮູບແບບທີ່ໂດດເດັ່ນ ແລະ ກວມເຖິງເຄິ່ງໜຶ່ງຂອງເນື້ອທີ່ປູກຢາງພາລາທົ່ວປະເທດ. 30% ຂອງເນື້ອທີ່ປູກຢາງພາລາທັງໝົດແມ່ນປູກໂດຍຜູ້ປະກອບການຂະໜາດນ້ອຍ ແລະ 20% ແມ່ນພາຍໃຕ້ຮູບແບບມີສັນຍາຜູກພັນ (*NAFRI*, 2011).

ການອະທິບາຍຮູບແບບການປູກຢາງພາລາ ໃນປີ 2011

ແຜນທີ່ຫຼັກ ສະແດງເຖິງຮູບແບບຂອງການປູກຢາງພາລາໃນລະດັບຄົວເຮືອນ, 26% ຂອງບ້ານ ທັງໝົດໃນ ສປປ ລາວ ແມ່ນໄດ້ປູກຢາງພາລາ ໃນເນື້ອທີ່ສະເລັ່ຍ 30 ຮຕ ຕໍ່ບ້ານທີ່ປູກ. ມີ 4% ຂອງບ້ານເຫຼົ່ານີ້ ທີ່ນຳໃຊ້ເນື້ອດິນກະສິກຳຂອງພວກເຂົາ ປູກຢາງພາລາ ເຖິງ 40% (ຂະໜາດສະເລ່ຍ 115 ຮຕ). ແຜນທີ່ຍັງສະແດງໃຫ້ເຫັນ, ໃນຫຼາຍເຂດຂອງແຂວງ ຫຼວງນ້ຳທາ, ຜົ້ງສາລີ, ແລະ ບໍ່ແກ້ວ, ຢາງພາລາທີ່ປູກໂດຍສ່ວນບຸກຄົນກວມສ່ວນແບ່ງ ສ່ວນໃຫຍ່ ຂອງທີ່ດິນກະສິກຳ ຂອງບ້ານເຫຼົ່ານັ້ນ.

ທົ່ວປະເທດ ມີ 49,000 ຄົວເຮືອນ ທີ່ປູກຢາງພາລາ ໃນເນື້ອທີ່ທັງໝົດປະມານ 66,500 ຮຕ, ຊຶ່ງ 60% ຂອງເນື້ອທີ່ການປູກແມ່ນຢູ່ພາຍໃນ 3 ແຂວງທີ່ກ່າວມາຂ້າງເທິງນັ້ນ. ຫຼາຍກວ່າ 65% ຂອງຄົວເຮືອນທັງໝົດ ໃນ 3 ແຂວງນັ້ນ ແມ່ນມີສ່ວນຮ່ວມໃນການປູກຢາງພາລາ. ນອກນັ້ນ ຍັງມີເນື້ອທີ່ປູກຢາງພາລາອື່ນໆທີ່ສຳຄັນຢູ່ເຂດບໍລິເວນອ່າງນ້ຳງື່ມ ແລະ ພາກຕະເວັນອອກສ່ຽງໃຕ້ ຂອງແຂວງວຽງຈັນ ເລາະລຽບຕາມແຄມແມ່ນ້ຳຂອງລົງໄປເຖິງແຂວງຄຳມ່ວນ.

ດັ່ງທີ່ເຫັນໄດ້ໃນແຜນທີ່ຂັ້ນເມືອງ, ເກືອບທຸກໆເມືອງຢ່າງໜ້ອຍແມ່ນມີຄົວເຮືອນຈຳນວນໜຶ່ງທີ່ໄດ້ປູກຢາງພາລາ. ເກືອບທັງໝົດຂອງຄົວເຮືອນເຫຼົ່ານັ້ນປູກຢາງພາລາໃນເນື້ອທີ່ໜ້ອຍກວ່າ 2.5 ຮຕ ໂດຍສະເລ່ຍ. ໃນຈຳນວນ 23 ເມືອງ, ເນື້ອທີ່ສະເລ່ຍຕໍ່ຄົວເຮືອນທີ່ປູກຢາງພາລາແມ່ນ 2.5 ຫາ 25 ຮຕ. ເນື້ອທີ່ຢາງພາລາສະເລ່ຍສູງສຸດ ພົບເຫັນຢູ່ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ມີປະມານ 64.1 ຮຕ ຕໍ່ຄົວເຮືອນ.

ຕາຕະລາງ 5: ເນື້ອທີ່ປູກທັງໝົດ, ອັດຕາສ່ວນ ແລະ ການປ່ຽນແປງຂອງເນື້ອທີ່ປູກຢາງພາລາ ໃນປີ 1999 ແລະ 2011

ແຂວງ	ເນື້ອທີ່ຢາງພາລາທັງໝົດ (ຮຕ) 1999	1999 %	ເນື້ອທີ່ຢາງພາລາທັງໝົດ (ຮຕ) 2011	2011 %	ການປ່ຽນແປງ 1999 ເຖິງ 2011 (ຮຕ)
ນະຄອນຫຼວງວຽງຈັນ	360.5	87.5	1,333.8	0.3	973.2
ຜົ້ງສາລີ	7.9	1.9	10,817.3	18.0	10,809.4
ຫຼວງນ້ຳທາ	29.2	7.0	17,893.3	30.5	17,864.1
ອຸດົມໄຊ	0.0	0.0	10,598.9	16.7	10,598.9
ບໍ່ແກ້ວ	0.0	0.0	7,738.4	12.0	7,738.4
ຫຼວງພະບາງ	0.0	0.0	3,115.8	4.6	3,115.8
ຫົວພັນ	0.1	0.0	61.8	0.1	61.7
ໄຊຍະບູລີ	0.0	0.0	3,191.8	6.3	3,191.8
ຊຽງຂວາງ	0.2	0.0	141.4	0.2	141.2
ວຽງຈັນ	0.1	0.0	4,665.7	4.3	4,665.7
ບໍລິຄຳໄຊ	2.0	0.4	3,108.5	2.4	3,106.5
ຄຳມ່ວນ	2.2	0.5	2,418.5	2.2	2,416.3
ສະຫວັນນະເຂດ	0.3	0.0	761.4	1.1	761.1
ສະລາວັນ	2.5	0.6	85.2	0.4	82.7
ເຊກອງ	0.1	0.0	71.7	0.1	71.6
ຈຳປາສັກ	7.0	1.7	347.3	0.4	340.3
ອັດຕະປື	0.0	0.0	7.0	0.3	7.0
ລວມທັງໝົດ	**412.1**	**100.0**	**66,357.8**	**100.0**	**65,945.8**



ສັດສ່ວນຂອງເນື້ອທີ່ ທີ່ໃຊ້ປູກຢາງພາລາ ໃນລະດັບບ້ານ (8643)
0 % (6438)
> 0 - 1 % (537)
> 1 - 20 % (964)
> 20 - 40 % (347)
> 40 - 60 % (256)
> 60 - 80 % (81)
> 80 - 100 % (20)
ຈຳນວນຂອງຄົວເຮືອນທີ່ປູກຢາງພາລາ (ສີ) ແລະ ເນື້ອທີ່ປູກຢາງພາລາທັງໝົດ (ຂະໜາດ) ໃນລະດັບເມືອງ
> 50 - 250 ຄຮ
> 250 - 1000 ຄຮ
> 1000 - 2500 ຄຮ
> 2500 - 4970 ຄຮ
ບໍ່ສະແດງ < 50 ຄຮ
6600 ຮຕ
2000 ຮຕ
500 ຮຕ
ບໍ່ສະແດງ < 250 ຮຕ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
1380ha
1360ha
2100ha
2730ha
1050ha
6600ha
2850ha
6150ha
2160ha
2180ha
1740ha
980ha
2600ha
1840ha
1800ha
1310ha
3350ha
2200ha
690ha
460ha
3050ha
490ha
430ha
1710ha
410ha
340ha
380ha
560ha
2470ha
490ha
380ha
1170ha
600ha
810ha
930ha
1960ha
320ha
400ha
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0 50 100 150 km
ເນື້ອທີ່ປູກຢາງພາລາສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.0 ຮຕ / ຄຮ (9)
> 0.0 - 0.5 ຮຕ / ຄຮ (32)
> 0.5 - 2.5 ຮຕ / ຄຮ (78)
> 2.5 - 5.0 ຮຕ / ຄຮ (16)
> 5.0 - 25.0 ຮຕ / ຄຮ (7)
64.1 ຮຕ / ຄຮ (1)
0 100 200 300 km

ການປ່ຽນແປງຮູບແບບການປູກຢາງພາລາ ລະຫວ່າງປີ 1999 ແລະ 2011

ເນື້ອທີ່ປູກຢາງພາລາ ມີການເພີ່ມຂຶ້ນຢ່າງຫຼວງຫຼາຍລະຫວ່າງປີ 1999 ແລະ 2011, ຈາກ 412 ຮຕ ມາເປັນ 66,358 ຮຕ. ເນື້ອທີ່ປູກຢາງພາລາທັງໝົດ ໃນຂັ້ນແຂວງ, ແລະ ການປ່ຽນແປງຂອງເນື້ອທີ່ ລະຫວ່າງປີ 1999 ແລະ 2011, ແມ່ນສະແດງ ຢູ່ໃນຕາຕະລາງທີ 5.

ສາຍເຫດທີ່ພາໃຫ້ມີການປ່ຽນແປງ

ຢາງພາລາ ໄດ້ກາຍເປັນໜຶ່ງຂອງບັນດາພືດຢືນຕົ້ນທີ່ມີຄວາມສຳຄັນທີ່ສຸດໃນ ສປປ ລາວ ຢ່າງໄວວາ ຕະຫຼອດທົດສະວັດທີ່ຜ່ານມາ ແລະ ປັດຈຸບັນ ແມ່ນມີບົດບາດສຳຄັນຕໍ່ເສດຖະກິດຂອງລາວ. ຢ່າງໃດກໍຕາມ, ການປູກຢາງພາລາ ໃນເບື້ອງຕົ້ນ, ການສະໜັບສະໜູນດ້ານນະໂຍບາຍ, ນິຕິກຳ, ແລະ ອົງປະກອບການຈັດຕັ້ງ ແມ່ນຍັງບໍ່ສາມາດຮັບປະກັນໃຫ້ແກ່ການພັດທະນາແບບຍືນຍົງໃນລະດັບຊາດ ຢ່າງມີປະສິດທິພາບ ໄດ້ເທື່ອ. ການບຸກລຸກເຂດພື້ນທີ່ປ່າທຳມະຊາດ ເພື່ອປູກຢາງພາລາ ຍັງພົບເຫັນຢູ່ຢ່າງເນື່ອງນິດລຽນຕິດ (*NAFRI*, 2011). ເຖິງວ່າ ຢາງພາລາມີທ່າແຮງດ້ານເສດຖະກິດ ສຳລັບຄົວເຮືອນເຂດທ້ອງຖິ່ນ ກໍຕາມ, ແຕ່ ຍັງເຫັນວ່າ ການສຶກສາ ຜົນກະທົບດ້ານກັບສິ່ງແວດລ້ອມ ແລະ ສັງຄົມ ຍັງເປັນສິ່ງສຳຄັນທີ່ຕ້ອງໄດ້ເອົາໃຈໃສ່.

ການຂະຫຍາຍຕົວຢ່າງໄວວາຂອງຢາງພາລາ ແມ່ນຕິດພັນກັບການເຊື່ອມໂຍງຢ່າງແໜ້ນແຟ້ນກັບນະໂຍບາຍ ລະດັບຊາດ, ພາກພື້ນ ແລະ ສາກົນ, ພ້ອມທັງຄວາມສົນໃຈຂອງນັກລົງທຶນ, ທີ່ສະໜອງຕອບກັບຄວາມຕ້ອງການ ສູງຂອງຕະຫຼາດທີ່ຂັບເຄື່ອນໂດຍອຸດສາຫະກຳຢາງຕົນລົດໃນໂລກ, ພິເສດ ໃນປະເທດຈີນ. ບັນດານະໂຍບາຍ ການສົ່ງເສີມຢາງພາລາ ໃນປະເທດຈີນ ແລະ ຫວຽດນາມ ທີ່ສະໜັບສະໜູນບໍລິສັດໄປລົງທຶນປູກຢາງພາລາ ຢູ່ຕ່າງປະເທດ, ສົມທົບກັບນະໂຍບາຍຂອງລັດຖະບານລາວໃນການສະໜັບສະໜູນການປູກໄມ້, ໄດ້ສ້າງຫຼາຍ ເງື່ອນໄຂອັນເອື້ອອຳນວຍ ໃຫ້ແກ່ການຂະຫຍາຍຕົວຂອງຢາງພາລາ ຢູ່ ສປປ ລາວ ໃນທົດສະວັດທີ່ຜ່ານມາ.




8000000E
8200000E
8400000E
2000000N
1800000N
1600000N
1400000N
22°00'N
20°00'N
18°00'N
16°00'N
14°00'N
100°00'E
102°00'E
104°00'E
106°00'E
108°00'E
ຈີນ
ມຽນມາ
ຫວຽດນາມ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຫຼວງພະບາງ
ຊຳເໜືອ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການປ່ຽນແປງຂອງເນື້ອທີ່ປູກຢາງພາລາ ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 1000 - 2580 ຮຕ
> 250 - 1000 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.05 - 25 ຮຕ
ເນື້ອທີ່ປູກເທົ່າເດີມ
< -0.05 - -25 ຮຕ
< -25 - -360 ຮຕ
ຢຸດເຊົາປູກ
ບໍ່ມີຢາງພາລາ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
0 50 100 150 km
0 100 200 300 km
ເນື້ອທີ່ປູກຢາງພາລາທັງໝົດ ໃນລະດັບແຂວງ
ປີ 1999 ປີ 2011
10000 ຮຕ
5000 ຮຕ
1000 ຮຕ
10800
17900
7700
10600
3100
100
100
3200
4700
400
1300
3100
2400
800
100
100
300
ການປ່ຽນແປງຂອງເນື້ອທີ່ປູກຢາງພາລາ ໃນລະດັບແຂວງ (17)
> 10000 - 17900 ຮຕ (3)
> 1000 - 10000 ຮຕ (6)
> 500 - 1000 ຮຕ (2)
> 10 - 500 ຮຕ (5)
> 0 - 10 ຮຕ (1)

ຄ 21 ກາເຟ

ພາກສະເໜີ

ກາເຟ (*genus: Coffea*) ໄດ້ຖືກນຳເຂົ້າມາລາວຄັ້ງທຳອິດ ໂດຍພວກລ່າອານານິຄົມຝຣັ່ງ ໃນ ປີ 1915 ໂດຍປະມານ ແລະ ກາເຟ ໄດ້ປູກຢູ່ເຂດພູພຽງບໍລິເວນ ເປັນສ່ວນໃຫຍ່, ຊຶ່ງດິນ ມີຄວາມອຸດົມສົມບູນໄປດ້ວຍ ແຮ່ທາດ, ບໍ່ພຽງແຕ່ເໝາະສົມກັບກາເຟເທົ່ານັ້ນແຕ່ຍັງເໝາະສົມກັບພືດຫຼາຍໆຊະນິດເຊັ່ນກັນ (*Cooper*, 2014). ໃນປະຈຸບັນ ກາເຟຖືກຈັດເປັນພືດສົ່ງອອກອັນດັບທີ່ 5 ຂອງ ສປປ ລາວ. ປະລິມານການສົ່ງອອກກາເຟ ໄດ້ເພີ່ມຂຶ້ນຈາກ 14,000 ໂຕນ ໃນປີ 2000 ມາເປັນ 23,656 ໂຕນ ໃນປີ 2004. ປະມານ 95 ສ່ວນຮ້ອຍ ຂອງຜົນຜະລິດກາເຟທັງໝົດ ແມ່ນເພື່ອການສົ່ງອອກ, ຊຶ່ງ ສປປ ລາວ ປະກອບສ່ວນໃນການປູກຕ່ຳກວ່າ 0.1 ສ່ວນຮ້ອຍ ຂອງຕະຫຼາດກາເຟທົ່ວໂລກ.

ພູພຽງບໍລິເວນ ມີເນື້ອທີ່ທັງໝົດປະມານ 500 ກິໂລຕາແມັດ ກວມເອົາເນື້ອທີ່ຂອງ 4 ແຂວງ. ພູພຽງບໍລິເວນ ຕັ້ງຢູ່ລະຫວ່າງ ສາຍພູຫຼວງ ແລະ ແມ່ນ້ຳຂອງ, ແລະ ມີລະດັບຄວາມສູງເໜືອໜ້ານ້ຳທະເລສະເລ່ຍ ຕັ້ງແຕ່ 1,000 ເຖິງ 1,300 ແມັດ (ສູງກວ່າພື້ນທີ່ອື່ນໆອ້ອມຂ້າງປະມານ 500 ແມັດ). *Köppen* ໄດ້ຈັດເຂດດັ່ງກ່າວ ໃຫ້ເປັນເຂດພູມອາກາດ “*Cwa*” ໝາຍຄວາມວ່າເປັນເຂດພູມອາກາດ ມໍລະສຸມ ເຄິ່ງຮ້ອນ ປຽກຊຸ່ມ. ກົງກັນຂ້າມ ກັບເກືອບທຸກໆເຂດຂອງ ສປປ ລາວ ທີ່ຖືກຈັດໃນເຂດພູມອາກາດ “*Am*” ແລະ “*Aw*”, ເປັນເຂດອາກາດມໍລະສຸມ ຮ້ອນ ແລະ ເຂດອາກາດມໍລະສຸມ ຮ້ອນ ຊຸ່ມ ຕາມລຳດັບ.

ກາເຟທີ່ປູກຫຼັກໆ ຢູ່ ສປປ ລາວ ມີ 3 ຊະນິດ ຄື ໂຣບັດສຕາ, ອາຣາບິກາ, ແລະ ໄລເບີຣິກາ. ຍ້ອນມີບັນຫາ ການແຜ່ລະບາດຂອງພະຍາດໃບຂີ້ໝ້ຽງ ແລະ ລາຄາ ໄລເບີຣິກາ ທີ່ຕົກຕ່ຳ, ໂຣບັດສຕາ ຈຶ່ງໄດ້ຮັບຄວາມ ນິຍົມຈາກຊາວກະສິກອນ ໃນ ສປປ ລາວ. ໂຣບັດສຕາ ມີຄວາມທົນທານຕໍ່ກັບພະຍາດຕ່າງໆ ແລະ ຕ້ອງການ ການດູແລຮັກສາ ທີ່ໜ້ອຍກ່ວາກາເຟຊະນິດອື່ນໆ. ຢ່າງໃດກໍ່ຕາມ, ອາຣາບິກາ ກາຕິມໍ ສາຍພັນປັບປຸງໃໝ່ ທີ່ມີລຳຕົ້ນເຕ້ຍ ຄ່ອຍໆ ຖືກນຳເຂົ້າມາ, ກຳລັງແຜ່ຂະຫຍາຍໄປສູ່ ເກືອບທຸກໆພື້ນທີ່ປູກກາເຟ. ອາຣາບິກາ ກາຕິມໍ ມີຂໍ້ໄດ້ປຽບຫຼາຍໆຢ່າງ ເຊັ່ນລຳຕົ້ນເຕ້ຍ, ສະດວກໃນການເກັບກູ້ຜົນຜະລິດ, ຄວາມໜາແໜ້ນຕົ້ນຕໍ່ຫົວໜ່ວຍພື້ນທີ່ ສູງ (2,500 ຕົ້ນ), ໄລຍະເວລາການເກັບກ່ຽວ ສັ້ນ (4 ປີ), ໃຫ້ຜົນຜະລິດ ສູງ ແລະ ລາຄາດີ (ລາຄາສອງເທົ່າຂອງ ໂຣບັດສຕາ).

ສະພາບການປູກກາເຟ ໃນປີ 2011

ໃນປີ 2010 ເນື້ອທີ່ການປູກກາເຟທັງໝົດໃນ ສປປ ລາວ ມີ 45,847 ຮຕ, ໃນນັ້ນ 99 ສ່ວນຮ້ອຍ ແມ່ນໄດ້ ປູກຢູ່ແຂວງຈຳປາສັກ, ສາລະວັນ ແລະ ເຊກອງ. ສະເພາະແຕ່ເມືອງປາກຊ່ອງ ພູພຽງບໍລິເວນ ໄດ້ກວມເຖິງ 58 ສ່ວນຮ້ອຍ (26,421 ຮຕ) ຂອງເນື້ອທີ່ການປູກກາເຟທັງໝົດ ແລະ ມີເຖິງ 11,000 ຄົວເຮືອນທີ່ປູກກາເຟ. ທົ່ວປະເທດ ມີຈຳນວນ 25,220 ຄົວເຮືອນ ປູກກາເຟ, ໃນນັ້ນ 96 ສ່ວນຮ້ອຍ ດຳລົງຊີດ ຢູ່ພາກໃຕ້ຂອງ ສປປ ລາວ. ບັນດາເມືອງທີ່ຢູ່ອ້ອມຂ້າງເມືອງ ປາກຊ່ອງ ມີພື້ນທີ່ການປູກ ຫຼາຍພໍສົມຄວນ ເຊັ່ນ ເມືອງເລົ່າງາມ ແຂວງ ສາລະວັນ ມີເນື້ອທີ່ປູກກາເຟ 9,136 ຮຕ. ແຂວງ ເຊກອງ ມີ ສອງເຂດຂອງການປູກກາເຟ ທີ່ໂດດເດັ່ນ ຄື: ເມືອງທ່າແຕງ (4,708 ຮຕ) ຊຶ່ງມີຊາຍແດນຕິດກັບ ເມືອງປາກຊ່ອງ ແຂວງຈຳປາສັກ ແລະ ເມືອງດັກຈຶງ ຕິດກັບຊາຍແດນຫວຽດນາມ ທາງຕາເວັນອອກ (790 ຮຕ).

ແຜນທີ່ຫຼັກ ສະແດງສ່ວນແບ່ງການນຳໃຊ້ທີ່ດິນກະສິກຳເພື່ອປູກກາເຟ. ລວມມີ 37 ບ້ານໃນເຂດພູພຽງ ບໍລິເວນໃຊ້ດິນກະສິກຳຂອງພວກເຂົາ ຫຼາຍກວ່າ 95 ສ່ວນຮ້ອຍ ເພື່ອປູກກາເຟ. ມີ 103 ບ້ານໃນເຂດນີ້ ໃຊ້ດິນກະສິກຳຂອງພວກເຂົາ ຫຼາຍກວ່າ 50 ສ່ວນຮ້ອຍ ເພື່ອປູກກາເຟ. ສິ່ງນັ້ນ ເນັ້ນໃຫ້ເຫັນວ່າ ກາເຟ ເປັນພືດທີ່ສຳຄັນ ໃນເຂດດັ່ງກ່າວ. ຢູ່ພາກກາງ ແລະ ພາກເໜືອ ມີເນື້ອທີ່ພຽງແຕ່ 497 ຮຕ ຫຼື 1 ສ່ວນຮ້ອຍ ຂອງເນື້ອທີ່ກາເຟທັງໝົດ ຂອງ ສປປ ລາວ. ຢູ່ເຂດນີ້, ການປູກປະສົມປະສານ ແລະ ປູກຢູ່ກ້ອງຮົ່ມຕົ້ນໄມ້ ເປັນວິທີການປູກ ໂດຍທົ່ວໄປ. ມີພຽງແຕ່ ເມືອງຄູນ ແຂວງຊຽງຂວາງ ທີ່ມີເນື້ອທີ່ກາເຟ ກວ້າງກວ່າ 30 ຮຕ.

ແຜນທີ່ນ້ອຍ ສະແດງ ເນື້ອທີ່ການປູກກາເຟສະເລ່ຍ ຕໍ່ຄົວເຮືອນ. ຢູ່ແຂວງ ຈຳປາສັກ ມີ 4 ເມືອງ ທີ່ມີເນື້ອທີ່ປູກກາເຟ ສະເລ່ຍ ລະຫວ່າງ 2.0 ຮຕ ແລະ 10.5 ຮຕ ຕໍ່ຄົວເຮືອນ. ເມືອງທີ່ໂດດເດັ່ນ ແມ່ນ ເມືອງຈອມເພັດ ແຂວງຫຼວງພະບາງ (4.0 ຮຕ/ຄົວເຮືອນ), ເມືອງ ທ່າພະບາດ ແຂວງບໍລິຄຳໄຊ (2.4 ຮຕ/ຄົວເຮືອນ) ແລະ ຢູ່ນະຄອນຫຼວງ ສະເລ່ຍ ເນື້ອທີ່ປູກກະເຟ ຕໍ່ຄົວເຮືອນ ສູງ ເຊັ່ນກັນແມ່ນ ເມືອງ ຈັນທະບູລີ (10.5 ຮຕ/ຄົວເຮືອນ) ແລະ ໄຊເສດຖາ (70.5 ຮຕ/ຄົວເຮືອນ).



0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໄຊຍະບູລີ
ໂພນສະຫວັນ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
29ha
6ha
2ha
12ha
3ha
15ha
22ha
41ha
4ha
1ha
21ha
36ha
9ha
232ha
180ha
69ha
10ha
573ha
28ha
9136ha
4708ha
79ha
790ha
168ha
978ha
26ha
26421ha
59ha
5ha
1068ha
556ha
11ha
280ha
ສັດສ່ວນຂອງດິນກະສິກຳທັງໝົດທີ່ໃຊ້ປູກກາເຟ ໃນລະດັບບ້ານ (8643)
0 % (7825)
> 0 - 10 % (499)
> 10 - 50 % (179)
> 50 - 75 % (63)
> 75 - 95 % (40)
> 95 - 100 % (37)
ຈຳນວນຄົວເຮືອນທີ່ປູກກາເຟທັງໝົດ (ສີ) ແລະ ພື້ນທີ່ປູກກາເຟທັງໝົດ (ຂະໜາດ) ໃນລະດັບເມືອງ
1 - 5 ຄຣ
> 5 - 100 ຄຣ
> 100 - 500 ຄຣ
> 500 - 6000 ຄຣ
> 6000 - 11000 ຄຣ
26421 ຮຕ
9000 ຮຕ
1000 ຮຕ
0 50 100 150 km
ເນື້ອທີ່ປູກກາເຟສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.0 ຮຕ / ຄຣ (42)
> 0.0 - 0.5 ຮຕ / ຄຣ (67)
> 0.5 - 1.0 ຮຕ / ຄຣ (9)
> 1.0 - 2.0 ຮຕ / ຄຣ (17)
> 2.0 - 10.5 ຮຕ / ຄຣ (7)
> 10.5 - 70.5 ຮຕ / ຄຣ (1)
0 100 200 300 km

ການປ່ຽນແປງສະພາບການປູກກາເຟ ລະຫວ່າງ ປີ 1999 ແລະ ປີ 2011

ເນື້ອທີ່ການປູກກາເຟ ຍັງຄົງບໍ່ມີການປ່ຽນແປງຫຼາຍ ຈາກ 46,226 ຮຕ ໃນປີ 1999 ເປັນ 45,847 ຮຕ ໃນປີ 2011. ຢ່າງໃດກໍ່ຕາມ, ຍັງເຫັນວ່າ ມີການປ່ຽນແປງຢູ່ບາງເຂດເທົ່ານັ້ນ. ຢູ່ຕອນໃຕ້ຂອງແຂວງ ຈຳປາສັກ ເນື້ອທີ່ກາເຟຫຼຸດລົງ 4,000 ຮຕ, ໃນເວລາດຽວກັນ ພື້ນທີ່ກາເຟຢູ່ 3 ແຂວງອ້ອມຂ້າງ ພັດເພີ່ມຂຶ້ນ. ທັງ ສອງແຂວງ ສາລະວັນ ແລະ ເຊກອງ ມີເນື້ອທີ່ການປູກກາເຟ ເພີ່ມຂຶ້ນປະມານ 1,500 ຮຕ ໂດຍທຽບໃສ່ພື້ນທີ່ໃນປີ 1999. ແຂວງອັດຕະປື ເນື້ອທີ່ກາເຟ ມີພຽງ 89 ຮຕ ແລະ ໃນປີ 1999, ແຕ່ ເນື້ອທີ່ໄດ້ຂະຫຍາຍເພີ່ມຂຶ້ນຫຼາຍກວ່າ 600 ຮຕ.

ເຂດທີ່ມີການປ່ຽນແປງນ້ອຍທີ່ສຸດ ແມ່ນ ແຂວງຫົວພັນ ແລະ ນະຄອນຫຼວງ. ຕົວຢ່າງ, ຢູ່ພາກເໜືອຂອງ ແຂວງຫົວພັນ ເມືອງແອດ ແລະ ເມືອງຊຽງຄໍ້, ບາງພື້ນທີ່ໄດ້ຢຸດເຊົາການປູກກາເຟ. ໃນປີ 1999, ແຂວງ ຫົວພັນ ຍັງຄົງມີເນື້ອທີ່ກາເຟ ຫຼາຍກວ່າ 400 ຮຕ ແລະ ຫາຍໄປເກືອບໝົດໃນປີ 2011. ແນວໂນ້ມຂອງ ນະຄອນຫຼວງເປັນໄປອີກແບບໜຶ່ງ ຈາກເນື້ອທີ່ບໍ່ພໍເທົ່າໃດເຮັກຕາ ໃນປີ 1999 ໄດ້ຂະຫຍາຍເພີ່ມຂຶ້ນຫຼາຍ ກວ່າ 230 ຮຕ ໃນປີ 2011. ອີກ 11 ແຂວງທີ່ເຫຼືອ, ພື້ນທີ່ປູກກາເຟບໍ່ໄດ້ມີການປ່ຽນແປງ, ແຕ່ວ່າ ຢູ່ຫຼາຍໆ ເຂດເລີ່ມມີໜ່ແໜງການປູກກາເຟຂຶ້ນໃໝ່.

ເຫດຜົນຂອງການປ່ຽນແປງ

ການປ່ຽນແປງອາກາດຢ່າງກະທັນຫັນ ແລະ ຄວາມຕ້ອງການຂອງຕະຫຼາດທີ່ ຕໍ່າ ມີຜົນກະທົບຕໍ່ຂະແໜງ ກາເຟລາວ. ປະສົບການ ການປ່ຽນແປງຂອງອຸນຫະພູມທີ່ເຢັນລົງໃນຮອບ 4 ປີຂອງປະເທດ ແລະ ໝອກລົງ, ຄັ້ງທຳອິດໄດ້ເກີດຂຶ້ນໃນປີ 2000, ຫຼັງຈາກນັ້ນ ໃນປີ 2004 ແລະ ຕໍ່ມາ ໃນປີ 2008 (UN-Habitat, 2004). ກາເຟສາມາດທົນທານຕໍ່ອຸນຫະພູມທີ່ເຢັນໄດ້, ແຕ່ບໍ່ທົນຕໍ່ໝອກ ດ້ວຍເຫດນັ້ນ ຜູ້ປູກກາເຟຢູ່ລາວໄດ້ຮັບຜົນກະທົບຈາກໝອກໃນຊ່ວງປີທີ່ໄດ້ກ່າວມາ. ເວລາໃດທີ່ມີໝອກຕົກ ມັນສ້າງ ຄວາມເສຍຫາຍຫຼາຍຢ່າງໃຫ້ແກ່ກາເຟ. ຢູ່ເມືອງປາກຊ່ອງ, ກາເຟຈຳນວນ ພັນກວ່າ ເຮັກຕາ ໄດ້ຮັບຜົນ ເສຍຫາຍຈາກໝອກທີ່ຕົກໜັກ.

ຈາກປີ 2009 ເຖິງ ປີ 2011, ລາຄາກາເຟເພີ່ມຂຶ້ນຊຶ່ງເກີດຈາກຜົນເກັບກ່ຽວຢູ່ອາເມລິກາໃຕ້ຕົກຕໍ່າ ແລະ ດ້ວຍເຫດດັ່ງກ່າວ ເປັນສິ່ງກະຕຸ້ນໃຫ້ການຂະຫຍາຍຕົວຂອງຂະແໜງການຜະລິດກາເຟ ຢູ່ ສປປ ລາວ (*Cooper*, 2014). ດາວເຮືອງ, ສີນຸກ, ກາເຟພູພຽງ ແລະ ມູນນິທິ ໃຈ ເປັນຜູ້ຜະລິດກາເຟ ລາຍໃຫຍ່ ຢູ່ ສປປ ລາວ. ການສ້າງສະມາຄົມກາເຟລາວ, ຄະນະກຳມະການກາເຟແຫ່ງຊາດລາວ ແລະ ອົງກອນ ຜູ້ຜະລິດກາເຟ ພູພຽງບໍລິເວນ ເຮັດໃຫ້ຜູ້ປູກກາເຟຂະໜາດນ້ອຍ ແລະ ຜູ້ທີ່ກ່ຽວຂ້ອງໃນຂະແໜງການ ກາເຟລາວ ໄດ້ຮັບການສະໜອງຂໍ້ມູນການຕະຫຼາດ, ໄດ້ຮັບການເຝິກອົບຮົມດ້ານເຕັກນິກ ແລະ ໄດ້ເຂົ້າເຖິງແຫຼ່ງທຶນ ເຮັດໃຫ້ມີຫຼາຍໆສິ່ງທີ່ປະກອບສ່ວນດ້ານບວກ ໃຫ້ແກ່ຂະແໜງການຜະລິດກາເຟລາວ. ດ້ວຍເຫດຜົນດັ່ງກ່າວ, ຊາວກະສິກອນ ມີຄວາມສາມາດຫຼາຍຂຶ້ນ ໃນການບໍລິການ ແລະ ຈັດການລະບົບ ການຜະລິດຂອງເຂົາເຈົ້າໄດ້ດີກວ່າເກົ່າ. ຄວາມສົນໃຈຂອງສະຫະພາບຢູໂຣບ ແລະ ຍີ່ປຸ່ນ ຕໍ່ກັບກາເຟປອດ ສານພິດເປັນອີກປັດໃຈໜຶ່ງທີ່ຂັບເຄື່ອນການຂະຫຍາຍການປູກກາເຟ ໃນ ສປປ ລາວ.







ການປ່ຽນແປງຂອງເນື້ອທີ່ປູກກາເຟ
ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 1000 - 2480 ຮຕ
> 250 - 1000 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.05 - 25 ຮຕ
ເນື້ອທີ່ເທົ່າເດີມ
< -0.05 - -25 ຮຕ
< -25 - -50 ຮຕ
< -50 - -250 ຮຕ
< -250 - -1000 ຮຕ
< -1000 - -1320 ຮຕ
ຢຸດເຊົາປູກ
ບໍ່ໄດ້ປູກກາເຟ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
8000000E
8200000E
8400000E
2000000N
1800000N
1600000N
1400000N
22°00'N
20°00'N
18°00'N
16°00'N
14°00'N
100°00'E
102°00'E
104°00'E
106°00'E
108°00'E
0 50 100 150 km
0 100 200 300 km
ເນື້ອທີ່ປູກກາເຟທັງໝົດ
ໃນລະດັບແຂວງ
ປີ 1999
ປີ 2011
30000 ຮຕ
10000 ຮຕ
5000 ຮຕ
ການປ່ຽນແປງຂອງເນື້ອທີ່ປູກກາເຟ
ໃນລະດັບແຂວງ (17)
> 1000 - 2480 ຮຕ (2)
> 500 - 1000 ຮຕ (1)
> 100 - 500 ຮຕ (1)
> 5 - 100 ຮຕ (7)
ບໍ່ປ່ຽນແປງ (2)
< -5 - -100 ຮຕ (2)
< -100 - -500 ຮຕ (1)
< -500 - -4012 ຮຕ (1)
50
20 30
10
20
60 80
390
40
10
230
40
30
8530
10000
3870
5580
33170
29160
90
620

ຄ 22 ກ້ວຍ

ພາກສະເໜີ

ກ້ວຍ (*genus: Musa*) ແມ່ນພືດລົ້ມລຸກດັ້ງເດີມທີ່ປູກກັນໂດຍທົ່ວໄປໃນ ສປປ ລາວ ເພື່ອບໍລິໂພກພາຍໃນຄົວເຮືອນລວມທັງຂາຍ. ກ້ວຍແນວພັນພື້ນເມືອງຫຼາຍຊະນິດ ທີ່ນິຍົມປູກ ມີຄື: ກ້ວຍນໍ້າວ້າ, ກ້ວຍງ້າວ, ກ້ວຍຫອມ, ກ້ວຍທະນີ, ກ້ວຍນົກ, ກ້ວຍໄຂ່, ກ້ວຍເລັບມືນາງ, ກ້ວຍມຸສີ, ກ້ວຍທິບ, ກ້ວຍທິບຈານ, ກ້ວຍເຄນ, ກ້ວຍເຈຍ, ກ້ວຍສົມປຽງ, ກ້ວຍແຄງ. ເມື່ອບໍ່ດົນມານີ້, ແນວພັນປັບປຸງ ຄື "ກ້ວຍຄາເວນດິສ" ໄດ້ຖືກນໍາເຂົ້າມາປູກ ໂດຍສະເພາະ ຢູ່ທາງພາກເໜືອຂອງ ສປປ ລາວ ເພື່ອສົ່ງອອກໄປຍັງຕະຫຼາດຈີນເປັນຫຼັກ. ການປູກກ້ວຍເພື່ອເປັນສິນຄ້າ ແມ່ນໄດ້ມີການແຜ່ຂະຫຍາຍຢ່າງໄວວາ ໃນຊ່ວງຫຼາຍປີທີ່ຜ່ານມາ, ແຕ່ຂໍ້ມູນທີ່ນໍາສະເໜີນີ້ ໄດ້ກວມລວມເອົາພຽງແຕ່ການປູກໃນລະດັບຄົວເຮືອນ, ດັ່ງນັ້ນ ຈຶ່ງບໍ່ໄດ້ກວມລວມເຖິງສວນກ້ວຍທີ່ປູກເປັນສິນຄ້າເຫຼົ່ານັ້ນ.

ຮູບແບບການປູກກ້ວຍ ໃນປີ 2011

ໃນ ສປປ ລາວ, ມີເກືອບຮອດ 70,000 ຄົວເຮືອນ ໃນ 61% ຂອງຈໍານວນບ້ານທີ່ເຮັດກະສິກໍາດ້ານການປູກກ້ວຍໃນເນື້ອທີ່ 9,500 ຮຕ ຢູ່ທົ່ວປະເທດ. ໃນນັ້ນ ແຂວງສາລາວັນ ແລະ ສະຫວັນນະເຂດ ກວມເອົາເກືອບເຄິ່ງໜຶ່ງຂອງເນື້ອທີ່ປູກກ້ວຍທັງໝົດ. ດັ່ງແຜນທີ່ຫຼັກສະແດງໃຫ້ເຫັນ, ເນື້ອທີ່ເຫຼົ່ານີ້ ຕົ້ນຕໍແມ່ນຢູ່ທີ່ເມືອງເລົ່າງາມ (1,420 ຮຕ) ແລະ ໃນເຂດພູດອຍທາງພາກຕາເວັນອອກຂອງ ສປປ ລາວ ທີ່ຢູ່ໃກ້ກັບ ສສ ຫວຽດນາມ ເມືອງເຊໂປນ ແຂວງສະຫວັນນະເຂດ ມີ 1,370 ຮຕ, ແລະ ເມືອງຕະໂອ້ຍ ແຂວງສາລາວັນ ມີ 240 ຮຕ. ມີ 37 ບ້ານ ທີ່ປູກກ້ວຍ ຫຼາຍກວ່າ 25% ຂອງເນື້ອທີ່ດິນຂອງພວກເຂົາ ສ່ວນໃຫຍ່ແມ່ນ ຕັ້ງຢູ່ບັນດາເມືອງເຫຼົ່ານີ້.

ແຜນທີ່ຂັ້ນເມືອງ ສະແດງໃຫ້ເຫັນການກະຈາຍການປູກກ້ວຍໃນຂອບເຂດທົ່ວປະເທດ. ເນື້ອທີ່ປູກກ້ວຍເກືອບທັງໝົດຂອງ 143 ເມືອງ ມີຄ່າສະເລ່ຍຕໍ່າກວ່າ 0.5 ຮຕ ຕໍ່ຄົວເຮືອນຜູ້ປູກກ້ວຍ, ເຊິ່ງສະແດງໃຫ້ເຫັນວ່າການປູກກ້ວຍ ໂດຍທົ່ວໄປ ແມ່ນປູກໃນ ເນື້ອທີ່ຂະໜາດນ້ອຍຫຼາຍ.



ສັດສ່ວນຂອງດິນກະສິກຳທັງໝົດທີ່ໃຊ້ປູກກ້ວຍ
ໃນລະດັບບ້ານ (8643)
0.0 % (3316)
> 0.0 - 0.1 % (2631)
> 0.1 - 0.5 % (1233)
> 0.5 - 5.0 % (1188)
> 5.0 - 10.0 % (136)
> 10.0 - 25.0 % (102)
> 25.0 - 72.0 % (37)
ຈຳນວນຄົວເຮືອນທັງໝົດທີ່ປູກກ້ວຍ (ສີ) ແລະ
ພື້ນທີ່ປູກກ້ວຍທັງໝົດ (ຂະໜາດ) ໃນລະດັບເມືອງ
1 - 250 ຄຮ
250 - 500 ຄຮ
500 - 1000 ຄຮ
1000 - 1500 ຄຮ
1500 - 2194 ຄຮ
1420 ຮຕ
400 ຮຕ
50 ຮຕ
ບໍ່ສະແດງ < 20 ຮຕ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໄຊຍະບູລີ
ໂພນສະຫວັນ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0
50
100
150 km
ເນື້ອທີ່ປູກກ້ວຍສະເລ່ຍຕໍ່ຄົວເຮືອນ
ໃນລະດັບເມືອງ (143)
0.00 ຮຕ / ຄຮ (0)
> 0.00 - 0.05 ຮຕ / ຄຮ (57)
> 0.05 - 0.50 ຮຕ / ຄຮ (75)
> 0.50 - 1.50 ຮຕ / ຄຮ (9)
> 1.50 - 2.50 ຮຕ / ຄຮ (1)
0
100
200
300 km

ການປ່ຽນແປງຮູບແບບການປູກກ້ວຍ ລະຫວ່າງປີ 1999 ແລະ 2011

ການປູກກ້ວຍທົ່ວປະເທດ ທີ່ຫຼຸດລົງເຖິງ 300%. ແມ່ນໄດ້ເກີດຂຶ້ນ ໃນລະຫວ່າງ ປີ 1999 ແລະ 2011 ຈາກ 28,800 ຮຕ ໃນປີ 1999 ມາເປັນ 9,500 ຮຕ ໃນປີ 2011, ຈຳນວນຄົວເຮືອນທີ່ປູກກ້ວຍ ໄດ້ຫຼຸດລົງເຊັ່ນດຽວກັນ ຈາກ 130,000 ຄົວເຮືອນ ໃນປີ 1999 ມາເປັນ 70,000 ຄົວເຮືອ ໃນປີ 2011. ເຊັ່ນດຽວກັນກັບເນື້ອທີ່ປູກກ້ວຍ, ເກືອບທຸກແຂວງ ທີ່ປະສົບກັບການຫຼຸດລົງຂອງຈຳນວນຄົວເຮືອນປູກກ້ວຍ. ກົງກັນຂ້າມ, ມີ 3 ແຂວງ ຄື ແຂວງຜົ້ງສາລີ, ສະຫວັນນະເຂດ ແລະ ສາລາວັນ, ທີ່ເນື້ອທີ່ປູກກ້ວຍໄດ້ເພີ່ມຂຶ້ນ. ແຂວງສະຫວັນນະເຂດ, ມີເນື້ອທີ່ປູກກ້ວຍຂ້ອນຂ້າງຫຼາຍ ເລາະລຽບຕາມເຂດຊາຍແດນຫວຽດນາມ, ແລະ ໄດ້ສະໜອງກ້ວຍໃຫ້ແກ່ຕະຫຼາດຫວຽດນາມ. ແຂວງສາລະວັນ ມີປະຫວັດສາດການປູກກ້ວຍມາດົນນານ ໄດ້ສະໜອງກ້ວຍໃຫ້ແກ່ຕະຫຼາດພາຍໃນ ລວມທັ້ງຕະຫຼາດຫວຽດນາມ ແລະ ຕະຫຼາດໄທ. ຕາຕະລາງ 6 ສະແດງຂໍ້ມູນລະອຽດກ່ຽວກັບເນື້ອທີ່ປູກກ້ວຍ.

ສາຍເຫດທີ່ພາໃຫ້ມີການປ່ຽນແປງ

ການປູກກ້ວຍທີ່ຫຼຸດລົງຫຼາຍ ຢູ່ທົ່ວປະເທດ ໃນທົດສະວັດທີ່ຜ່ານມານັ້ນ ໂດຍຫຼັກແມ່ນ ຍ້ອນການຫັນປ່ຽນໄປປູກພືດເສດຖະກິດຊະນິດອື່ນ ເຊັ່ນ: ສາລີ (ເບິ່ງ ຄ11), ໝາກເດືອຍ (ເບິ່ງ ຄ12), ມັນຕົ້ນ (ເບິ່ງ ຄ13) ແລະ ຢາງພາລາ (ເບິ່ງ ຄ20). ກົງກັນຂ້າມກັບການຫຼຸດລົງຂອງເນື້ອທີ່ປູກກ້ວຍ ແລະ ຈຳນວນຄົວເຮືອນທັງໝົດທີ່ປູກກ້ວຍ ໃນໄລຍະ 10 ປີ ທີ່ຜ່ານມາ, ການປູກກ້ວຍເປັນສິນຄ້າໄດ້ເພີ່ມຂຶ້ນຢ່າງໄວວາ, ໂດຍສະເພາະຢູ່ເຂດພາກເໜືອຂອງ ສປປ ລາວ ເກີດມີການຫຼັ່ງໄຫຼເຂົ້າມາລົງທຶນ ຈາກ ສປ ຈີນ. ຄ່າເຊົ່າດິນລາຄາຖືກ, ດິນອຸດົມສົມບູນ, ລວມທັງ ສະພາບອາກາດທີ່ເໝາະສົມຕະຫຼອດທັງປີ ຊຶ່ງປາດສະຈາກລະດູໜາວທີ່ສົ່ງຜົນກະທົບຕໍ່ການປູກ ຄືຢູ່ໃນ ສປ ຈີນ ທີ່ເປັນປັດໃຈຫຼັກ ໃນການດຶງດູດນັກລົງທຶນຈີນເຫຼົ່ານັ້ນ. ແນວພັນກ້ວຍ ສ່ວນໃຫຍ່ ທີ່ໃຊ້ປູກສຳລັບການຄ້າ ແມ່ນ “ກ້ວຍຄາເວນດິສ”, ຊຶ່ງເປັນແນວພັນກ້ວຍຊັ້ນນຳຂອງໂລກ. ເຖິງວ່າ ການຈະເລີນເຕີບໂຕຂອງທຸລະກິດການປູກກ້ວຍເປັນສິນຄ້າ ຢູ່ພາກເໜືອໄດ້ຊ່ວຍເພີ່ມລາຍຮັບ ແລະ ສ້າງການຈ້າງແຮງງານ ສຳລັບຊາວກະສິກອນ ຈຳນວນໜຶ່ງ, ແຕ່ຍັງມີຄວາມກັງວົນກ່ຽວກັບສຸຂະພາບຂອງຄົນງານທີ່ເຮັດວຽກຢູ່ສວນກ້ວຍ ແລະ ຜົນກະທົບຕໍ່ກັບສະພາບແວດລ້ອມ ທີ່ເກີດຈາກການເລັ່ງລັດປູກກ້ວຍເປັນສິນຄ້າ ໂດຍນຳໃຊ້ສານເຄມີຢ່າງແຜ່ຫຼາຍ.

ຕາຕະລາງ 6: ເນື້ອທີ່ປູກທັງໝົດ ແລະ ການປ່ຽນແປງຂອງເນື້ອທີ່ປູກກ້ວຍ ລະຫວ່າງປີ 1999 ແລະ 2011

ແຂວງ	ເນື້ອທີ່ກ້ວຍທັງໝົດ 1999 (ຮຕ)	ເນື້ອທີ່ກ້ວຍທັງໝົດ 2011 (ຮຕ)	ການປ່ຽນແປງ (ຮຕ) 1999 ເຖິງ 2011
ນະຄອນຫຼວງວຽງຈັນ	1,799.5	354.2	-1,445.3
ຜົ້ງສາລີ	85.2	173.1	88.0
ຫຼວງນ້ຳທາ	277.0	38.6	-238.4
ອຸດົມໄຊ	679.6	239.6	-440.1
ບໍ່ແກ້ວ	1,764.6	89.6	-1,674.9
ຫຼວງພະບາງ	6,288.3	715.0	-5,573.3
ຫົວພັນ	1,879.7	180.3	-1,699.4
ໄຊຍະບູລີ	1,647.5	262.5	-1,385.0
ຊຽງຂວາງ	617.5	274.2	-343.2
ວຽງຈັນ	1,600.1	959.2	-640.8
ບໍລິຄຳໄຊ	3,073.8	579.9	-2,493.8
ຄຳມ່ວນ	760.4	518.6	-241.8
ສະຫວັນນະເຂດ	1,422.8	2,156.4	733.6
ສະລາວັນ	1,388.4	2,156.3	767.9
ເຊກອງ	199.9	197.2	-2.8
ຈຳປາສັກ	4,784.6	491.6	-4,293.0
ອັດຕະປື	511.5	93.6	-417.8
ລວມທັງໝົດ	**28,780.2**	**9,480.0**	**-19,300.2**







8000000E
8200000E
8400000E
ການປ່ຽນແປງຂອງເນື້ອທີ່ປູກໝາກກ້ວຍ ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 500 - 545 ຮຕ
> 250 - 500 ຮຕ
> 50 - 250 ຮຕ
> 1 - 50 ຮຕ
> 0.05 - 1 ຮຕ
ເນື້ອທີ່ປູກເທົ່າເດີມ
< -0.05 - -1 ຮຕ
< -1 - -50 ຮຕ
< -50 - -250 ຮຕ
< -250 - -500 ຮຕ
< -500 - -1000 ຮຕ
< -1000 - -1900 ຮຕ
ຢຸດເຊົາປູກ
ບໍ່ມີໝາກກ້ວຍ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
ຈີນ
ມຽນມາ
ຫວຽດນາມ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຄຳ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
22°00'N
20°00'N
18°00'N
16°00'N
14°00'N
2000000N
1800000N
1600000N
1400000N
100°00'E
102°00'E
104°00'E
106°00'E
108°00'E
0 50 100 150 km
0 100 200 300 km
ຈຳນວນເນື້ອທີ່ປູກໝາກກ້ວຍທັງໝົດ ໃນລະດັບແຂວງ
ປີ 1999 ປີ 2011
6800 ຮຕ
3000 ຮຕ
1000 ຮຕ
100 200
300 0
1800 100
700 200
6300 700
1900 200
600 300
1600 300
1600 1000
3100 600
1800 400
800 500
1400 2200
1400 2200
200 200
4800 500
500 100
ການປ່ຽນແປງຂອງເນື້ອທີ່ປູກໝາກກ້ວຍ ໃນລະດັບແຂວງ (17)
> 500 - 770 ຮຕ (2)
> 250 - 500 ຮຕ (0)
> 0 - 250 ຮຕ (1)
ບໍ່ປ່ຽນແປງ (0)
< 0 - -250 ຮຕ (3)
< -250 - -500 ຮຕ (3)
< -500 - -2500 ຮຕ (6)
< -2500 - -5600 ຮຕ (2)

ຄ 23 ໝາກແໜ່ງ

ພາກສະເໜີ

ໝາກແໜ່ງ (*Amomum spp.*) ເປັນພືດຢືນຕົ້ນຊະນິດໜຶ່ງ ຂອງຕະກູນ *Zingiberaceae* ຊຶ່ງເປັນທີ່ຮູ້ກັນດີຄື ຂີງ. ຢູ່ໃນ ສປປ ລາວ, ໝາກແໜ່ງເກີດໃນທຳມະຊາດທີ່ລະດັບຄວາມສູງສະເລ່ຍຈາກໜ້ານໍ້າທະເລ 700 – 1,200 ແມັດ, ໂດຍສະເພາະຢູ່ ເຂດປ່າໄມ້ ທີ່ມີຄວາມຊຸ່ມສູງລຽບຕາມແຄມຫ້ວຍຮ່ອງທີ່ມີນໍ້າໄຫຼຜ່ານຕະຫຼອດ ແລະ ຢູ່ໃນພື້ນທີ່ທີ່ມີຮົ່ມເງົາ. ໝາກແໜ່ງ ຖືກຄົ້ນພົບຢູ່ເຂດປ່າໄມ້ຟື້ນຟູຫຼາຍກວ່າ 50 ປີກ່ອນໂດຍສະພາະໃນເຂດພາກເໜືອຂອງລາວ, ແລະ ຍ້ອນການເກັບກູ້ຈາກປ່າ ຈຶ່ງຖືເປັນປະເພດເຄື່ອງປ່າຂອງດົງຊະນິດໜຶ່ງ. ແຕ່ເມື່ອບໍ່ດົນມານີ້, ຊາວກະສິກອນລາວຢູ່ ບາງເຂດໄດ້ເລີ້ມຕົ້ນປູກໝາກແໜ່ງ ໃນລະບົບການປູກ ພືດດ່ຽວເພື່ອເປັນສິນຄ້າ. ຢູ່ ສປປ ລາວ ມີໝາກແໜ່ງຫຼາຍຊະນິດ, ແຕ່ວ່າ ມີພຽງ 2 ຊະນິດ ເທົ່ານັ້ນ ທີ່ມີຄຸນຄ່າສຳ ລັບຕະຫຼາດສົ່ງອອກ ຄື: ໝາກແໜ່ງ ປາກຊ່ອງ ແລະ ໝາກແໜ່ງ ກວາງຕຸ້ງ.

ການປູກໝາກແໜ່ງ ເລີ່ມເປັນທີ່ນິຍົມກັນ ລະຫວ່າງ ປີ 1975 ແລະ ປີ 1980 ຢູ່ ເມືອງບາຈຽງຈະເລີນສຸກ ແລະ ເມືອງປາກຊ່ອງ ແຂວງຈຳປາສັກ, ແລະ ເມືອງເລົ່າງາມ ແຂວງສາລະວັນ. ໝາກແໜ່ງປະກອບມີນໍ້າມັນຫອມລະເຫີຍ, ກາລະບູນ, ອາເຊທັດ, ໄລໂມນີນ ແລະ ສານແອດສເຕີ ຕ່າງໆ. ສານເຫຼົ່ານັ້ນ ຖືກໃຊ້ເປັນສ່ວນປະກອບຂອງຢາຈຳນວນໜຶ່ງ ແລະ ໃນບາງປະເທດນຳໃຊ້ເປັນເຄື່ອງປຸງສຳລັບປະເພດອາຫານຈຳພວກຊີ້ນສັດ, ປຸງແຕ່ງ ກິ່ນກາເຟ ຢູ່ຕາເວັນອອກກາງ ແລະ ເປັນສ່ວນປະກອບເຂົ້າໜົມ ຢູ່ ຢູໂຣບ ແລະ ສະຫະລັດອາເມລິກາ. ສ່ວນຫຼາຍ ການສົ່ງອອກໝາກແໜ່ງ ເປັນລັກສະນະຮູບແບບວັດຖຸດິບ ຫຼື ເຄິ່ງວັດຖຸດິບໄປປະເທດຈີນ, ໄທ, ຫວຽດນາມ, ມຽນມາ, ແລະ ສາທາລະນະລັດ ເກົາຫຼີ ເພື່ອນຳໄປປະສົມເປັນຢາພື້ນເມືອງ. ອີງຕາມຂໍ້ມູນຂອງກະຊວງອຸດສະຫະກຳ ແລະ ການຄ້າ, ປະມານ 200 ເຖິງ 250 ໂຕນ ໄດ້ຖືກສົ່ງອອກຈາກລາວໃນປີ 1999, ແຕ່ ບໍ່ສາມາດບັນທຶກຕົວເລກສົ່ງອອກໄດ້ຢ່າງລະອຽດ ແລະ ຍ້ອນເຫດຜົນທີ່ກ່າວມານີ້ເອງ ຕົວເລກສົ່ງອອກທີ່ແທ້ຈິງ ອາດຈະສູງກ່ວາ ຕົວເລກດັ່ງກ່າວກໍ່ເປັນໄດ້.

ສະພາບການປູກໝາກແໜ່ງ ໃນປີ 2011

ໂດຍລວມ, ສປປ ລາວ ມີເນື້ອທີ່ໝາກແໜ່ງ ທັງໝົດ 6,427 ຮຕ, ໃນນັ້ນ 1,497 ຮຕ ຢູ່ ເມືອງ ທ່າແຕງ ເຂດຕະເວັນຕົກຂອງ ແຂວງເຊກອງ. ການປູກ ໄດ້ມີຢູ່ສອງເຂດຫຼັກຄື: ເຂດຕາເວັນອອກສຽງເໜືອ ແລະ ເຂດຕາເວັນອອກສຽງໃຕ້ ຂອງ ເມືອງປາກເຊ (ອ້ອມແອ້ມ ເຂດພູພຽງບໍລະເວນ) ກວມເອົາເກືອບເຄິ່ງໜຶ່ງ ຂອງ ພື້ນທີ່ການປູກໝາກແໜ່ງທັງໝົດ ແລະ ອີກເຂດໜຶ່ງ ຢູ່ເໜືອສຸດ ຂອງ ສປປ ລາວ ລຽບຕາມຊາຍແດນ ສປ ຈີນ, ໂດຍສະເພາະຢູ່ພາກຕາເວັນຕົກຂອງ ແຂວງຜົ້ງສາລີ ແລະ ພາກເໜືອຂອງ ແຂວງອຸດົມໄຊ ແລະ ຫຼວງນໍ້າທາ. ຢູ່ພາກຕາເວັນອອກຂອງ ເມືອງປາກເຊ ລວມມີ 19 ບ້ານ ທີ່ໄດ້ນຳໃຊ້ທີ່ດິນກະສິກຳຂອງພວກເຂົາ ຫຼາຍກວ່າ 20 ສ່ວນຮ້ອຍ (ສູງສູດ ເຖິງ 47 ສ່ວນຮ້ອຍ) ເຂົ້າໃນການປູກໝາກແໜ່ງ, ແລະ ຢູ່ພາກເໜືອ ມີ 29 ບ້ານ ດັ່ງທີ່ໄດ້ກ່າວມາເບື້ອງຕົ້ນ. ນອກຈາກສອງເຂດທີ່ກ່າວມານີ້ຍັງມີພື້ນທີ່ປູກໝາກແໜ່ງອີກຈຳນວນໜຶ່ງຢູ່ພາກອື່ນໆຂອງປະເທດ.

ປະມານ 2/3 ຂອງຈຳນວນ 13,252 ຄົວເຮືອນໄດ້ປູກໝາກແໜ່ງ ຢູ່ເຂດພາກເໜືອຂອງປະເທດດັ່ງທີ່ສະແດງໃຫ້ເຫັນໃນແຜນທີ່ນ້ອຍ. ສະເລ່ຍແລ້ວຄົວເຮືອນໜຶ່ງມີໝາກແໜ່ງ 0.1–0.5 ຮຕ ເມື່ອທຽບກັບພາກໃຕ້ແລ້ວຄົວເຮືອນໜຶ່ງມີໝາກແໜ່ງ 1.0–2.0 ເຮັກຕາ ໂດຍສະເລັ່ຍ.



ສັດສ່ວນຂອງດິນກະສິກຳທັງໝົດທີ່ໃຊ້ປູກໝາກແໜ່ງ ໃນລະດັບບ້ານ ໃນລະດັບບ້ານ (8643)
0.0 % (7983)
> 0.0 - 0.5 % (194)
> 0.5 - 5.0 % (254)
> 5.0 - 20.0 % (165)
> 20.0 - 47.1 % (47)
ຈຳນວນຄົວເຮືອນທີ່ປູກໝາກແໜ່ງ (ສີ) ແລະ ພື້ນທີ່ປູກໝາກແໜ່ງທັງໝົດ (ຂະໜາດ) ໃນລະດັບເມືອງ
10 - 100 ຄຮ
> 100 - 500 ຄຮ
> 500 - 1000 ຄຮ
> 1000 - 2727 ຄຮ
ບໍ່ສະແດງ < 10 ຄຮ
1497 ຮຕ
400 ຮຕ
50 ຮຕ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
682ha
68ha
613ha
184ha
433ha
6ha
20ha
185ha
12ha
193ha
33ha
46ha
7ha
4ha
1ha
18ha
813ha
1497ha
402ha
815ha
85ha
10ha
21ha
63ha
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0 50 100 150 km
ເນື້ອທີ່ປູກໝາກແໜ່ງສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.00 ຮຕ / ຄຮ (77)
> 0.00 - 0.01 ຮຕ / ຄຮ (20)
> 0.01 - 0.10 ຮຕ / ຄຮ (4)
> 0.10 - 0.50 ຮຕ / ຄຮ (26)
> 0.50 - 1.00 ຮຕ / ຄຮ (8)
> 1.00 - 2.00 ຮຕ / ຄຮ (8)
0 100 200 300 km

ການປ່ຽນແປງສະພາບການປູກໝາກແໜ່ງ ລະຫວ່າງ ປີ 1999 ແລະ ປີ 2011

ພື້ນທີ່ການປູກໝາກແໜ່ງໄດ້ຫຼຸດລົງ ຈາກ 8,813 ຮຕ ໃນປີ 1999 ມາເປັນ 6,427 ຮຕ ໃນປີ 2011. ໃນນັ້ນ, ການປູກໝາກແໜ່ງຢູ່ພາກເໜືອຂອງລາວສ່ວນຫຼາຍເປັນພື້ນທີ່ປູກໃໝ່, ສ່ວນຢູ່ເຂດພູພຽງບໍລະເວນເປັນໝາກແໜ່ງທີ່ປູກກ່ອນປີ 1999. ພື້ນທີ່ການປູກໝາກແໜ່ງຂອງພາກໃຕ້ໄດ້ຫຼຸດລົງຫຼາຍກວ່າເຄິ່ງ, ຈາກ 8,000 ຮຕ ໃນປີ 1999 ລົງເປັນ ຕ່ຳກວ່າ 4,000 ຮຕ ໃນປີ 2011. ເຖິງວ່າພື້ນທີ່ໝາກແໜ່ງ ຢູ່ພາກເໜືອຂອງລາວ ໄດ້ເພີ່ມຂຶ້ນ ແຕ່ ຍັງບໍ່ເທົ່າກັບການຫຼຸດລົງຂອງພື້ນທີ່ຢູ່ພາກໃຕ້. ດ້ວຍເຫດນີ້ ການປູກໝາກແໜ່ງ ຢູ່ ສປປ ລາວ ຈຶ່ງປະສົບກັບການຫຼຸດລົງທັງໝົດ 27 ສ່ວນຮ້ອຍໃນທ້າຍທົດສະວັດທີ່ຜ່ານມາ.

ເຫດຜົນການປ່ຽນແປງ

ການປູກໝາກແໜ່ງ ຢູ່ ສປປ ລາວ ສ່ວນຫຼາຍເປັນການປູກແບບປະສົມປະສານກັບປ່າໄມ້. ຄວາມຕ້ອງການໝາກແໜ່ງຂອງຕະຫຼາດ ມີສູງ ແລະ ຜູ້ເກັບຊື້ຢູ່ທ້ອງຖິ່ນ ຫຼື ຄູ່ຄ້າໃນບັນດາປະເທດໃກ້ຄຽງ ໄດ້ຈ່າຍໃຫ້ຊາວກະສິກອນດ້ວຍລາຄາທີ່ສົມເຫດສົມຜົນ. ຍ້ອນມີການສົ່ງເສີມການປູກພືດເສດຖະກິດຢ່າງແຂງແຮງ ເຊັ່ນ ຢາງພາລາ (ເບິ່ງ ຄ20) ແລະ ກາເຟ (ເບິ່ງ ຄ21) ເຮັດໃຫ້ພື້ນທີ່ການປູກໝາກແໜ່ງ ໄດ້ຫຼຸດລົງໃນຊ່ວງໄລຍະ 10 ປີຄືນຫຼັງ.

ການຫຼຸດລົງຂອງເນື້ອທີ່ການປູກຢູ່ພາກໃຕ້ ມີສາເຫດມາຈາກລາຄາໝາກແໜ່ງປາກຊ່ອງຕົກຕ່ຳຍ້ອນແນວພັນທີ່ໃຊ້ປູກພ້ອມທັງແນວພັນໝາກແໜ່ງປ່າ. ລາຄາຄ່າຂົນສົ່ງຈາກຈຳປາສັກ ຫາ ສປ ຈີນ ຊຶ່ງເປັນຕະຫຼາດຫຼັກຂ້ອນຂ້າງສູງຫຼາຍ, ຈຶ່ງເຮັດໃຫ້ການປູກໝາກແໜ່ງຢູ່ພາກໃຕ້ບໍ່ໄດ້ຮັບຄວາມສົນໃຈ. ປັດໃຈຂັບເຄື່ອນທີ່ສຳຄັນ ອັນໜຶ່ງທີ່ເຮັດໃຫ້ເນື້ອທີ່ການປູກໝາກແໜ່ງຢູ່ພາກເໜືອເພີ່ມຂຶ້ນແມ່ນການເກີດຂຶ້ນຂອງ ຫຼາຍໂຄງການພັດທະນາ ຊົນນະບົດຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາສາກົນ.







8000000E
8200000E
8400000E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການປ່ຽນແປງຂອງເນື້ອທີ່ປູກໝາກແໜ່ງ
ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 500 - 780 ຮຕ
> 250 - 500 ຮຕ
> 50 - 250 ຮຕ
> 25 - 50 ຮຕ
> 0.05 - 25 ຮຕ
ເນື້ອທີ່ເທົ່າເດີມ
< -0.05 - -25 ຮຕ
< -25 - -50 ຮຕ
< -50 - -250 ຮຕ
< -250 - -500 ຮຕ
< -500 - -930 ຮຕ
ຢຸດເຊົາປູກ
ບໍ່ມີໝາກແໜ່ງ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
22°00'N
20°00'N
18°00'N
16°00'N
14°00'N
2000000N
1800000N
1600000N
1400000N
0 50 100 150 km
100°00'E
102°00'E
104°00'E
106°00'E
108°00'E
0 100 200 300 km
100 ha
2180 ha
230 ha
250 ha
10 ha
100 ha
20 ha
2500 ha
810 ha
1200 ha
1500 ha
4600 ha
300 ha
1320 ha
70 ha
ເນື້ອທີ່ປູກໝາກແໜ່ງທັງໝົດ
ໃນລະດັບແຂວງ
ປີ 1999
ປີ 2011
4600 ຮຕ
2000 ຮຕ
1000 ຮຕ
ບໍ່ສະແດງ < 10 ຮຕ
ການປ່ຽນແປງເນື້ອທີ່ປູກໝາກແໜ່ງ
ໃນລະດັບແຂວງ (17)
> 500 - 2100 ຮຕ (1)
> 250 - 500 ຮຕ (3)
> 0 - 250 ຮຕ (5)
ບໍ່ປ່ຽນແປງ (3)
< 0 - -250 ຮຕ (1)
< -250 - -500 ຮຕ (2)
< -500 - -2500 ຮຕ (1)
< -2500 - -3285 ຮຕ (1)

ຄ 24 ຊາ

ພາກສະເໜີ

ຊາ (*Camellia sinensis*) ເປັນເຄື່ອງດື່ມປະເພດໜຶ່ງ ທີ່ມີກິ່ນຫອມ ນິຍົມກັນໃນທົ່ວໂລກ. ຊາ ທີ່ອາຍຸເກົ່າແກ່ທີ່ສຸດເຖິງ 3,200 ປີ ແລະ ໄດ້ຖືກຄົ້ນພົບທີ່ແຄວ້ນ ເຟິງກິງ ຂອງ ແຂວງຢູນານ ພາກຕາເວັນຕົກສ່ຽງໃຕ້ຂອງ ປະເທດ ຈີນ ເປັນ ເຂດຊາຍແດນຕິດກັບ ສປປ ລາວ (*Heiss and Heiss*, 2007). ການປູກ ຊາ ໃນລາວ ໄດ້ເລີ່ມຕົ້ນຂຶ້ນເປັນສອງໄລຍະ ແລະ ໃນສອງເຂດ. ໄລຍະທີໜຶ່ງ, ການປູກຊາ ໄດ້ເລີ່ມຕົ້ນຢູ່ເຂດພາກເໜືອຂອງ ສປປ ລາວ ເມື່ອປະມານ 600 ກວ່າປີທີ່ຜ່ານມາ ແລະ ການຕິດຕໍ່ພົວພັນການຄ້າ ຊາ ລະຫວ່າງ ລາວ ແລະ ຈີນ ໄດ້ຖືກບັນທຶກໄວ້ຕັ້ງແຕ່ສັດຕະວັດທີ 7 ຄືນຫຼັງ. ໄລຍະທີສອງ ແມ່ນໄດ້ເລີ້ມຕັ້ງແຕ່ ລັດຖະບານ ລ່າອານານິຄົມຝຣັ່ງເສດ ໄດ້ນຳເອົາ ຊາ ເຂົ້າມາລາວໃນ ປີ 1920 ຈາກພາກກາງຂອງຫວຽດນາມ ມາສູ່ດິນແດນພູເຂົາໄຟເຂດພູພຽງບໍລະເວນ ແຂວງຈຳປາສັກ ເຂດທີ່ມີຄວາມອຸດົມສົມບຸນ .

ຕົ້ນຊາ ຖືກຈັດເປັນ 3 ກຸ່ມຫຼັກ ຄື: ຊາປ່າທຳມະຊາດ, ຊາປ່າປູກ (ເປັນທີ່ຮູ້ກັນດີໃນເຂດທ້ອງຖິ່ນ ຄື ຊາບູຮານ) ແລະ ຊາປູກ ເປັນສິນຄ້າ. ຊາປ່າທຳມະຊາດ ແລະ ຊາປ່າປູກ ເປັນທີ່ນິຍົມກັນຫຼາຍຢູ່ທາງພາກເໜືອ, ໂດຍສະເພາະແຂວງຜົ້ງສາລີ, ໃນຂະນະທີ່ການປູກຊາ ເພື່ອເປັນສິນຄ້າໂດຍທົ່ວໄປ ພົບເຫັນຢູ່ບັນດາແຂວງພາກໃຕ້.

ເຖິງຈະມີປະຫວັດການປູກຊາທີ່ຍາວນານ, ຂະແໜງການ ຊາ ຍັງຄົງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ ເມື່ອທຽບກັບພືດທີ່ມີທ່າແຮງອື່ນໆ. ຍ້ອນການປູກຊາເປັນໜຶ່ງໃນບັນດາກິດຈະກຳຫຼັກຂອງພາກກະສິກຳ ສຳລັບຫຼາຍໆຊົນເຜົ່າ ແລະ ໂດຍສະເພາະເພດຍິງເຂດຊົນນະບົດຫ່າງໄກ ແລະ ຊຸມຊົນເຂດພູດອຍ, ຊາ ຈຶ່ງເປັນທ່າແຮງອັນສຳຄັນ ປະກອບເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາຊົນຊົນນະບົດ ຢູ່ ສປປ ລາວ. ຜົນຜະລິດຊາທີ່ປູກ ຢູ່ ສປປ ລາວ ແມ່ນສົ່ງອອກໄປຈີນ ເປັນຫຼັກ ຍ້ອນວ່າໃບຊາຖືກແມ່ນມີມູນຄ່າສູງໃນຕະຫຼາດຈີນ.

ສະພາບການປູກຊາ ໃນປີ 2011

ໂດຍລວມການປູກຊາໃນ ສປປ ລາວ ມີຢູ່ 2,497 ຮຕ, ປະມານ 95 ສ່ວນຮ້ອຍ ຢູ່ເຂດພາກເໜືອ. ແຜນທີ່ຫຼັກ ໄດ້ສະແດງໃຫ້ເຫັນເຖິງ ພື້ນທີ່ປູກຊາຕົ້ນຕໍຂອງລາວ ແມ່ນຢູ່ ແຂວງຜົ້ງສາລີ, ໄຊຍະບູລີ (ເມືອງໄຊສະຖານ) ແລະ ແຂວງອຸດົມໄຊ (ເມືອງ ແບ່ງ ແລະ ເມືອງປາກແບ່ງ). ໃນແຕ່ລະແຂວງເຫຼົ່ານີ້ ໃນໜຶ່ງເມືອງມີເນື້ອທີ່ປູກຊາ ຫຼາຍກວ່າ 100 ຮຕ. ເມືອງ ຜົ້ງສາລີ ແຂວງ ຜົ້ງສາລີ ມີເຖິງ 2,100 ຄົວເຮືອນ ປູກຊາໃນເນື້ອທີ່ ລວມທັງໝົດເຖິງ 1,228 ຮຕ. ແຂວງ ຊຽງຂວາງ ກໍມີເນື້ອທີ່ປູກຊາ ເຊັ່ນກັນ ໂດຍສະເພາະຢູ່ອ້ອມຂ້າງເທດສະບານເມືອງ ໂພນສະຫວັນ. ເພດຍິງ ຊົນເຜົ່າຕ່າງໆ ເຊັ່ນ: ຂະມຸ, ລາວໄຕ, ໄປຣ, ອາຂ່າ, ມົ້ງ, ໄຕລື້ ແລະ ຫໍ້ ສ່ວນໃຫຍ່ ແມ່ນເກັບກ່ຽວໃບຊາດ້ວຍມື.

ປະມານ 5 ສ່ວນຮ້ອຍ ຂອງເນື້ອທີ່ກະສິກຳທັງໝົດຂອງແຂວງ ຜົ້ງສາລີ ໄດ້ຖືກນຳໃຊ້ເຂົ້າໃນການປູກຊາ. ຫຼາຍກວ່າ 50 ສ່ວນຮ້ອຍ (ຫຼາຍກ່ວາ ເຖິງ 85 ສ່ວນຮ້ອຍ) ຂອງເນື້ອທີ່ດິນກະສິກຳ ຂອງຈຳນວນ 21 ບ້ານ ໄດ້ຖືກນຳໃຊ້ເຂົ້າໃນການປູກຊາ. ມີຈຳນວນຄົວເຮືອນທີ່ປູກຊາ ທັງໝົດມີ 6,205 ຄົວເຮືອນ ໃນ ສປປ ລາວ, ໃນນັ້ນ 74 ສ່ວນຮ້ອຍ ຢູ່ແຂວງ ຜົ້ງສາລີ, 15 ສ່ວນຮ້ອຍ ຢູ່ແຂວງ ໄຊຍະບູລີ ແລະ 4 ສ່ວນຮ້ອຍ ຢູ່ແຂວງ ອຸດົມໄຊ.

ດັ່ງທີ່ສະແດງໃນແຜນທີ່ນ້ອຍ, ໃນ 46 ເມືອງ ການປູກຊາ ຍັງເປັນການປູກຂະໜາດນ້ອຍ ສະເລັ່ຍ ຕ່ຳກວ່າ 1 ຮຕ. ມີ 3 ເມືອງ ທີ່ມີເນື້ອທີ່ການປູກຊາ ສະເລ່ຍຫຼາຍກວ່າ 1 ຮຕ ແລະ ສູງສຸດ 4 ຮຕ ຕໍ່ຄົວເຮືອນ ໄດ້ແກ່ ເມືອງຫລາ ແຂວງ ອຸດົມໃຊ, ເມືອງ ງອຍ ແຂວງ ຫຼວງພະບາງ ແລະ ເມືອງ ທ່າແຕງ ແຂວງເຊກອງ.


ສັດສ່ວນຂອງດິນກະສິກຳທັງໝົດທີ່ໃຊ້ປູກຊາ ໃນລະດັບບ້ານ (8643)
0.0 % (8387)
> 0.0 - 1.0 % (115)
> 1.0 - 10.0 % (61)
> 10.0 - 50.0 % (59)
> 50.0 - 88.5 % (21)
ຈຳນວນຂອງຄົວເຮືອນທີ່ປູກຊາ (ສີ) ແລະ ພື້ນທີ່ປູກຊາທັງໝົດ (ຂະໜາດ) ໃນລະດັບເມືອງ
> 1 - 50 ຄຮ
> 50 - 100 ຄຮ
> 100 - 500 ຄຮ
> 500 - 2100 ຄຮ
1228 ຮຕ
250 ຮຕ
10 ຮຕ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
99ha
1228ha
311ha
138ha
139ha
12ha
11ha
4ha
2ha
34ha
17ha
111ha
46ha
25ha
13ha
21ha
39ha
129ha
10ha
26ha
20ha
3ha
37ha
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
0 50 100 150 km
ເນື້ອທີ່ປູກຊາສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
0.00 ຮຕ / ຄຮ (94)
> 0.00 - 0.01 ຮຕ / ຄຮ (13)
> 0.01 - 0.10 ຮຕ / ຄຮ (3)
> 0.10 - 0.50 ຮຕ / ຄຮ (19)
> 0.50 - 1.00 ຮຕ / ຄຮ (11)
> 1.00 - 4.00 ຮຕ / ຄຮ (3)
0 100 200 300 km

ການປ່ຽນແປງສະພາບການປູກຊາ ໃນລະຫວ່າງ ປີ 1999 ແລະ ປີ 2011

ໃນປີ 1999, ປະມານ 80 ສ່ວນຮ້ອຍ ຂອງພື້ນທີ່ການປູກຊາ (1,339 ເຮັກຕາ) ແມ່ນຢູ່ທາງພາກໃຕ້, ໃນຂະນະທີ່ພາກເໜືອກວມເອົາສ່ວນທີ່ເຫຼືອ 20 ສ່ວນຮ້ອຍ. ເນື້ອທີ່ການປູກຊາ ຢູ່ໃນພາກໃຕ້ ຍັງຄົງສືບຕໍ່ຫຼຸດລົງ, ໂດຍສະເພາະຢູ່ ແຂວງ ຈຳປາສັກ. ຫຼາຍໆຄົວເຮືອນຊາວກະສິກອນ ຢູ່ເຂດດັ່ງກ່າວ ໄດ້ຢຸດເຊົາການປູກຊາ ຫັນໄປປູກພືດຊະນິດອື່ນ ທີ່ໃຫ້ຜົນຕອບແທນທາງດ້ານເສດຖະກິດສູງກວ່າ. ຜົນທີ່ຕາມມາຄື ຫຼາຍກວ່າ 96 ສ່ວນຮ້ອຍ ໄດ້ຢຸດເຊົາການປູກຊາ ຫຼື ປະມານ 1,025 ຮຕ ຖືກປະປ່ອຍໂດຍບໍ່ໄດ້ຮັບການບົວລະບັດຮັກສາ.

ເຖິງແມ່ນວ່າ ການປູກຊາຢູ່ແຂວງ ຈຳປາສັກ ຈະຫຼຸດລົງ, ແຕ່ເນື້ອທີ່ການປູກຊາທັງໝົດ ໄດ້ເພີ່ມຂຶ້ນເກືອບ 2 ເທົ່າ. ແຂວງ ຜົ້ງສາລີ ໄດ້ເພີ່ມຂຶ້ນຈາກແຕ່ກ່ອນເຖິງ 11 ເທົ່າ ຄື ຈາກ 174 ຮຕ ໃນປີ 1999 ຂຶ້ນເປັນ 1,928 ຮຕ ໃນປີ 2011. ເຊັ່ນດຽວກັນ ການປູກຊາ ຢູ່ແຂວງ ອຸດົມໄຊ ແລະ ໄຊຍະບູລີ ໄດ້ເພີ່ມຂຶ້ນ 150 ຮຕ ແລະ 120 ຮຕ ຕາມລຳດັບ ໃນຊ່ວງລະຍະເວລາດຽວກັນ. ຄຽງຄູ່ກັບການເພີ່ມຂຶ້ນຂອງເນື້ອທີ່ຊາ ຫຼາຍກວ່າ 4,000 ຄົວເຮືອນ ໄດ້ເຂົ້າຮ່ວມປູກຊາ ເພີ່ມເຕີມ (ຈາກ 2,041 ຄົວເຮືອນ ໃນປີ 1999 ເປັນ 6,205 ໃນປີ 2011). ການເພີ່ມຂຶ້ນຂອງຄົວເຮືອນທີ່ປູກຊາທີ່ຫຼາຍທີ່ສຸດ ແມ່ນແຂວງຜົ້ງສາລີ, ໃນທາງກັບກັນການຫຼຸດລົງຫຼາຍທີ່ສຸດເກີດຂຶ້ນຢູ່ແຂວງຈຳປາສັກໃນຊ່ວງໄລຍະເວລາດຽວກັນ.

ເຫດຜົນຂອງການປ່ຽນແປງ.

ການປູກຊາຢູ່ແຂວງ ຈຳປາສັກ ໄດ້ຫຼຸດລົງຢ່າງຫຼວງຫຼາຍລະຫວ່າງ ປີ 1999 ແລະ ປີ 2011 ຍ້ອນມີຫຼາຍໆເຫດຜົນ. ເຫດຜົນທຳອິດ ຍ້ອນລາຄາກາເຟມີການປັບຕົວດີຂຶ້ນ, ເຮັດໃຫ້ຊາວກະສິກອນໃນເຂດພາກໃຕ້ທີ່ເຄີຍປູກຊາ ຫັນໄປສົນໃຈການປູກກາເຟ. ດ້ວຍເຫດຜົນດັ່ງກ່າວ ສວນຊາຫຼາຍບ່ອນບໍ່ໄດ້ຖືກເກັບກ່ຽວ ຫຼື ບໍ່ມີການບົວລະບັດຮັກສາເປັນເວລາຫຼາຍປີ. ນອກນັ້ນ ຍັງມີບັນຫາກ່ຽວກັບການຂາດແຄນແຮງງານ ເນື່ອງຈາກແຮງງານໄດ້ເຄື່ອນຍ້າຍໄປເຮັດວຽກຢູ່ຕົວເມືອງ ແລະ ໄປປະເທດເພື່ອນບ້ານ (ໂດຍສະເພາະປະເທດໄທ), ການເຄື່ອນຍ້າຍແຮງງານ ໄດ້ສົ່ງຜົນກະທົບທາງລົບ ຕໍ່ຂະແໜງການກະສິກຳຂອງລາວ. ເຖິງວ່າ ຈະມີຄວາມຕ້ອງການ ຊາລາວ ທີ່ສູງ ຈາກ ສປ ຈີນ ກໍຕາມ ລາຄາຊາ ຢູ່ພາກໃຕ້ ບໍ່ສາມາດປຽບທຽບກັບລາຄາຊາຂອງພາກເໜືອລາວໄດ້. ຄວາມແຕກຕ່າງນີ້ແມ່ນຍ້ອນຕົ້ນທຶນການຂົນສົ່ງທີ່ສູງ ແລະ ຜູ້ເກັບຊື້ຊາຈາກ ຈີນ ເລືອກທີ່ຈະຊື້ຊາຢູ່ເຂດພາກເໜືອຂອງລາວ.

ຫຼາຍໆໂຄງການ ສະໜັບສະໜູນຊາວກະສິກອນຂະໜາດນ້ອຍທີ່ລິເລີ່ມ ໂດຍລັດຖະບານ ສປປ ລາວ ແລະ ຜູ້ໃຫ້ທຶນສາກົນຕ່າງໆ, ລວມທັງ ບັນດາໂຄງການລົບລ້າງຄວາມທຸກຍາກ ແລະ ການດຳລົງຊີວິດແບບຍືນຍົງ ມັກຖືເອົາ ຊາ ເປັນພືດ ທີ່ແທດເໝາະສຳລັບກູ່ມເປົ້າໝາຍຜູ້ທຸກຍາກໃນເຂດຊົນນະບົດຫ່າງໄກ.

ຕະຫຼາດມີຄວາມຕ້ອງການ ຊາ ສູງ ລວມທັງການຂາດແຄນດິນ ສຳລັບການປູກຊາຢູ່ ຈີນ ເຮັດໃຫ້ລາຄາຊາເພີ້ມຂຶ້ນຢ່າງໄວ, ໂດຍສະເພາະ ຢູ່ບັນດາແຂວງທາງພາກເໜືອ ທີ່ ບໍລິສັດຈີນໄດ້ຂະຫຍາຍພື້ນທີ່ປູກຊາຂອງພວກເຂົາ, ເຊັ່ນດ່ຽວກັບ ເຂດທີ່ໄດ້ຮັບການປຶກສາ ດ້ານເຕັກນິກແກ່ຊາວກະສິກອນຂະໜາດນ້ອຍ ແລະ ຮ່ວມມືກັບອຳນາດການປົກຄອງແຂວງ. ການຂະຫຍາຍໂອກາດຂອງຕະຫຼາດຊາໃນເຂດດັ່ງກ່າວ ໄດ້ປະກອບສ່ວນ ເຮັດໃຫ້ເສດຖະກິດທ້ອງຖິ່ນມີການຂະຫຍາຍຕົວ, ເຊິ່ງໄດ້ສົ່ງຜົນປະໂຫຍດ ແກ່ຄົວເຮືອນທີ່ປູກຊາ.





8000000E
8200000E
8400000E
ການປ່ຽນແປງຂອງເນື້ອທີ່ປູກຊາ
ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 250 - 630 ຮຕ
> 100 - 250 ຮຕ
> 25 - 100 ຮຕ
> 0.05 - 25 ຮຕ
ເນື້ອທີ່ເທົ່າເດີມ
< -0.05 - -25 ຮຕ
< -25 - -100 ຮຕ
< -100 - -280 ຮຕ
ຢຸດເຊົາປູກ
ບໍ່ມີຊາ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
ຈີນ
ມຽນມາ
ຫວຽດນາມ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຊຳເໜືອ
ຫ້ວຍຊາຍ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ປາກຊັນ
ວຽງຈັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
0 100 200 300 km
ຈຳນວນເນື້ອທີ່ປູກຊາທັງໝົດ
ໃນລະດັບແຂວງ
ປີ 1999 ປີ 2011
2000 ຮຕ
1000 ຮຕ
200 ຮຕ
170 1930
10
20
150
70
10 50
70
50 170
1070 40
ການປ່ຽນແປງຂອງເນື້ອທີ່ປູກຊາ
ໃນລະດັບແຂວງ (17)
> 150 - 1750 ຮຕ (1)
> 100 - 150 ຮຕ (2)
> 5 - 100 ຮຕ (4)
ບໍ່ປ່ຽນແປງ (8)
< -5 - -100 ຮຕ (1)
< -100 - -1025 ຮຕ (1)
0 50 100 150 km
100°00′E
102°00′E
104°00′E
106°00′E
108°00′E
22°00′N
20°00′N
18°00′N
16°00′N
14°00′N

ຄ 25 ໝາກມ່ວງ

ພາກສະເໜີ

ໝາກມ່ວງ (*Mangifera indica*) ແມ່ນຕົ້ນໄມ້ກິນໝາກ ທີ່ປູກກັນທົ່ວປະເທດ ເພື່ອບໍລິໂພກພາຍໃນຄົວເຮືອນ ແລະ ເພື່ອຂາຍເຊັ່ນດຽວກັນ. ມີແນວພັນໝາກມ່ວງພື້ນເມືອງຫຼາຍຊະນິດທີ່ປູກຢູ່ໃນ ສປປ ລາວ ເປັນຕົ້ນແມ່ນໝາກມ່ວງປ່າ, ກະສໍ, ກະເສນ, ມ່ວງນາງ, ມ່ວງແກ້ວ, ອໍອກລ່ອງ, ງາຊ້າງ, ມ່ວງໄຂ່. ຢ່າງໃດກໍຕາມ, ຊາວກະສິກອນທີ່ປູກໝາກມ່ວງ ກໍ່ຍັງມີຄວາມສົນໃຈທີ່ຈະປູກແນວພັນໃໝ່, ໂດຍສະເພາະແມ່ນ ແນວພັນທີ່ເປັນຄວາມຕ້ອງການຂອງຕະຫຼາດເຊັ່ນ: ຂຽວສະເຫວີຍ, ນໍ້າດອກໄມ້, ນາງແຊມ, ຟາລານ, ໂຊໂກ້ອານັນ, ມະຫາແຊ້ງ, ນາງຄັນວັນ, ທອງດໍາ, ສາລາຍາ, ໂຊຊຸນທີບ, ນໍເລດ. ໝາກມ່ວງ ແມ່ນກິນໄດ້ທັງຕອນຍັງດິບ ແລະ ສຸກ ໃນ ສປປ ລາວ.

ຮູບແບບການປູກໝາກມ່ວງ ໃນປີ 2011

ມີເນື້ອທີ່ປູກໝາກມ່ວງທັງໝົດ 3,955 ຮຕ ຊຶ່ງມີ 184,800 ຄົວເຮືອນທີ່ປູກຢູ່ທົ່ວ ສປປ ລາວ. ການປູກໝາກມ່ວງພາຍໃນບ້ານສ່ວນຫຼາຍໄດ້ນໍາໃຊ້ດິນກະສິກໍາຂອງພວກເຂົາພຽງແຕ່ສ່ວນໜ້ອຍເທົ່ານັ້ນ. ຕາມປົກກະຕິຈະມີຕົ້ນໝາກມ່ວງ ບໍ່ເທົ່າໃດຕົ້ນ ຕໍ່ບ້ານ. ຢ່າງໃດກໍດີ ມີພຽງແຕ່ 27% ຂອງບ້ານທີ່ເຮັດກະສິກໍາທັງໝົດ ທີ່ບໍ່ໄດ້ປູກໝາກມ່ວງເລີຍ. ຢູ່ເມືອງພູຄູນ, ແຂວງຫຼວງພະບາງ, ມີ 438 ຄົວເຮືອນ ປູກໝາກມ່ວງໃນເນື້ອທີ່ທັງໝົດ 500 ຮຕ. ຢູ່ແຂວງຫົວພັນ, ມີ 2 ເມືອງ ທີ່ຢູ່ທາງເໜືອ ຕິດກັບຊາຍແດນຫວຽດນາມຄື: ເມືອງແອັດ ແລະ ເມືອງຄໍ້, ມີເນື້ອທີ່ປູກໝາກມ່ວງທັງໝົດ 400 ຮຕ ແລະ 266 ຮຕ ທີ່ມີ 1,976 ແລະ 1,988 ຄົວເຮືອນຕາມລໍາດັບ ທີ່ປູກໝາກມ່ວງ.

ແຜນທີ່ຂັ້ນເມືອງ ສະແດງໃຫ້ເຫັນວ່າ ໝາກມ່ວງແມ່ນປູກໃນທຸກໆເມືອງ ແຕ່ວ່າ ຄົວເຮືອນ ໃນຫຼາຍເມືອງ ໂດຍສະເລ່ຍ ປູກໝາກມ່ວງໃນເນື້ອທີ່ ພຽງບໍ່ເທົ່າໃດຕາແມັດ. ໂດຍສະເພາະ ແຂວງຄໍາມ່ວນ ແລະ ໃຕ້ສຸດຂອງ ສປປ ລາວ, ຢູ່ທາງທິດຕະເວັນຕົກຂອງແຂວງຊຽງຂວາງ, ແລະ ແຂວງຜົ້ງສາລີ, ເນື້ອທີ່ສະເລ່ຍຕໍ່ຄົວເຮືອນ ຖືວ່າຕໍ່າຫຼາຍ. ເນື້ອທີ່ສະເລ່ຍສູງສຸດ ຕໍ່ຄົວເຮືອນ ທີ່ໄດ້ພົບເຫັນໃນບັນດາຕົວເມືອງທີ່ກ່າວຂ້າງເທິງນັ້ນ ແມ່ນ ເມືອງພູຄູນ ແຂວງຫຼວງພະບາງ ແລະ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ.

ຕາຕະລາງ 7: ເນື້ອທີ່ປູກທັງໝົດ ແລະ ການປ່ຽນແປງຂອງເນື້ອທີ່ປູກໝາກມ່ວງ ລະຫວ່າງປີ 1999 ແລະ 2011

ແຂວງ	ເນື້ອທີ່ໝາກມ່ວງທັງໝົດ 1999 (ຮຕ)	ເນື້ອທີ່ໝາກມ່ວງທັງໝົດ 2011 (ຮຕ)	ການປ່ຽນແປງ (ຮຕ) 1999 ເຖິງ 2011
ນະຄອນຫຼວງວຽງຈັນ	1,083.8	209.2	-874.6
ຜົ້ງສາລີ	54.4	54.0	-0.5
ຫຼວງນໍ້າທາ	72.3	42.3	-30.1
ອຸດົມໄຊ	200.7	148.5	-52.3
ບໍ່ແກ້ວ	865.8	34.6	-831.2
ຫຼວງພະບາງ	2,167.3	856.9	-1,310.4
ຫົວພັນ	1,545.4	817.6	-727.8
ໄຊຍະບູລີ	842.2	363.8	-478.4
ຊຽງຂວາງ	265.9	135.2	-130.7
ວຽງຈັນ	215.5	293.0	77.6
ບໍລິຄໍາໄຊ	277.2	118.2	-159.0
ຄໍາມ່ວນ	481.0	195.8	-285.1
ສະຫວັນນະເຂດ	435.5	298.6	-136.8
ສະລາວັນ	189.5	120.0	-69.5
ເຊກອງ	28.7	19.6	-9.1
ຈໍາປາສັກ	442.0	205.0	-237.0
ອັດຕະປື	33.3	42.5	9.2
ລວມທັງໝົດ	**9,200.5**	**3,954.8**	**-5,245.8**


ສັດສ່ວນຂອງດິນກະສິກຳທັງໝົດທີ່ໃຊ້ປູກໝາກມ່ວງ ໃນລະດັບບ້ານ (8643)
0.0 % (2305)
> 0.0 - 0.1 % (2837)
> 0.1 - 1.0 % (3029)
> 1.0 - 5.0 % (350)
> 5.0 - 40.0 % (115)
> 40.0 - 100.0 % (7)
ຈຳນວນຄົວເຮືອນທີ່ປູກໝາກມ່ວງ (ສີ) ແລະ ພື້ນທີ່ປູກໝາກມ່ວງທັງໝົດ (ຂະໜາດ) ໃນລະດັບເມືອງ
100 - 500 ຄຮ
> 500 - 1000 ຄຮ
> 1000 - 2000 ຄຮ
> 2000 - 4169 ຄຮ
ບໍ່ສະແດງ < 100 ຄຮ
500 ຮຕ
100 ຮຕ
25 ຮຕ
ບໍ່ສະແດງ < 20 ຮຕ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຫຼວງພະບາງ
ຊຳເໜືອ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
500ha
400ha
266ha
100ha
92ha
84ha
76ha
70ha
68ha
60ha
56ha
49ha
46ha
44ha
43ha
41ha
39ha
36ha
35ha
34ha
30ha
29ha
28ha
27ha
25ha
24ha
23ha
22ha
21ha
20ha
ເນື້ອທີ່ປູກໝາກມ່ວງສະເລ່ຍຕໍ່ຄົວເຮືອນ ໃນລະດັບເມືອງ (143)
> 0.00 - 0.01 ຮຕ / ຄຮ (52)
> 0.01 - 0.05 ຮຕ / ຄຮ (65)
> 0.05 - 0.10 ຮຕ / ຄຮ (9)
> 0.10 - 0.50 ຮຕ / ຄຮ (15)
> 0.50 - 1.38 ຮຕ / ຄຮ (2)
0 100 200 300 km
0 50 100 150 km
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N

ການປ່ຽນແປງຮູບແບບການປູກໝາກມ່ວງ ລະຫວ່າງປີ 1999 ແລະ 2011

ໃນລະຫວ່າງ ປີ 1999 ແລະ 2011 ເນື້ອທີ່ປູກໝາກມ່ວງໄດ້ຫຼຸດລົງຢ່າງຫຼວງຫຼາຍ – ຈາກ 9,200 ຮຕ ໃນປີ 1999 ມາເປັນ 3,955 ຮຕ ໃນປີ 2011 ແລະ ເຫັນໄດ້ໃນເກືອບ ທຸກແຂວງ, ຊຶ່ງຊັດເຈນກ່ວາໝູ່ ແມ່ນ ແຂວງຫຼວງພະບາງ – ຈາກບໍ່ພໍເທົ່າໃດເຮັກຕາ ຈົນເຖິງ 1,300 ຮຕ. ກົງກັນຂ້າມ, ມີພຽງ 2 ແຂວງເທົ່ານັ້ນ (ແຂວງວຽງຈັນ ແລະ ອັດຕະປື) ທີ່ມີເນື້ອທີ່ປູກໝາກມ່ວງເພີ່ມຂຶ້ນເລັກນ້ອຍ. ເນື້ອທີ່ການປູກໝາກມ່ວງ ໃນແຂວງຜົ້ງສາລີ ບໍ່ໄດ້ມີການປ່ຽນແປງ ແລະ ໃນເຂດເມືອງຫຼວງພະບາງ, ຫ້ວຍຊາຍ (ເມືອງຫຼວງຂອງ ແຂວງບໍ່ແກ້ວ), ທາງພາກໃຕ້ຂອງແຂວງໄຊຍະບູລີ, ເຂດຊານເມືອງຂອງນະຄອນຫຼວງວຽງຈັນ, ແລະ ເຂດພາກຕະເວັນຕົກ ຂອງແຂວງສະຫວັນນະເຂດ ທັງໝົດ ໄດ້ສູນເສຍເນື້ອທີ່ການປູກໝາກມ່ວງໄປຫຼາຍຢ່າງເຫັນໄດ້ຊັດ. ຕາຕະລາງ 7 ສະແດງຂໍ້ມູນລະອຽດກ່ຽວກັບເນື້ອທີ່ປູກໝາກມ່ວງ ໃນປີ 1999 ແລະ 2011 ຂອງແຕ່ລະແຂວງ.

ເມື່ອສົມທຽບກັບເນື້ອທີ່ການປູກ, ຈຳນວນຄົວເຮືອນທີ່ປູກໝາກມ່ວງ ແມ່ນບໍ່ໄດ້ຫຼຸດລົງຫຼາຍ. ໃນປີ 1999, ມີ 191,000 ຄົວເຮືອນທີ່ປູກໝາກມ່ວງ, ສ່ວນ ໃນປີ 2011, ມີ 185,000 ຄົວເຮືອນ ຍັງສືບຕໍ່ປູກໝາກມ່ວງ ແຕ່ໄດ້ ຫຼຸດລົງພຽງ 3–4% ເທົ່ານັ້ນ.

ສາຍເຫດທີ່ພາໃຫ້ມີການປ່ຽນແປງ

ການຫຼຸດລົງຂອງເນື້ອທີ່ການປູກໝາກມ່ວງທົ່ວປະເທດ ໃນທົດສະວັດທີ່ຜ່ານມາຫຼັກໆແມ່ນຍ້ອນຜົນຂອງການນຳເຂົ້າໝາກມ່ວງຈາກປະເທດໄທທີ່ເພີ່ມຂຶ້ນ, ເຊິ່ງເຮັດໃຫ້ຕະຫຼາດ ໝາກມ່ວງພາຍໃນ ມີການແຂ່ງຂັນທີ່ສູງຂຶ້ນ. ພະຍາດອັນເທຣກໂນສ (ການຕິດເຊື້ອລາ) ເປັນພະຍາດ ຄຸກຄາມຕົ້ນໝາກມ່ວງທີ່ພົບເຫັນເລື້ອຍໆ, ແລະ ການລະບາດຂອງພະຍາດດັ່ງກ່າວ ໃນ ສປປ ລາວ ເປັນອີກສາເຫດໜຶ່ງທີ່ເຮັດໃຫ້ເນື້ອທີ່ປູກໝາກມ່ວງໄດ້ຫຼຸດລົງ. ນອກຈາກນັ້ນ, ການຫຼຸດລົງຂອງເນື້ອທີ່ປູກໝາກມ່ວງ ໃນແຂວງຫຼວງພະບາງ, ຫົວພັນ ແລະ ບໍ່ແກ້ວ ແມ່ນຍ້ອນສະພາບອາກາດທີ່ໜາວເຢັນ ໃນບາງປີທີ່ຜ່ານມາ ເຊິ່ງມັນໄດ້ທຳລາຍເນື້ອທີ່ປູກໝາກມ່ວງຈຳນວນໜຶ່ງ, ເນື່ອງຈາກວ່າ ຕົ້ນໝາກມ່ວງ ມັກອາກາດເຂດຮ້ອນປາສະຈາກນ້ຳໜອກກ້າມ ແລະ ອາກາດອຸ່ນຂ້ອນຂ້າງຮ້ອນ.

ການທີ່ບໍ່ໄດ້ກຳນົດມາດຕະຖານຂອງແນວພັນໝາກມ່ວງພື້ນເມືອງທີ່ນຳໃຊ້ ແລະ ການປູກແບບຊີວະພາບ ໃນ ສປປ ລາວ, ເຮັດໃຫ້ມີຫຼາກຫຼາຍຜະລິດຕະພັນ. ກົງກັນຂ້າມ, ມັນເຮັດໃຫ້ສະມັດຕະພາບຂອງຜົນຜະລິດຕົກຕ່ຳ ແລະ ການຄຸ້ມຄອງການລະບາດຂອງສັດຕູພືດ ຂາດປະສິດທິພາບ. ການຂາດການປູກໝາກມ່ວງນອກລະດູ ລວມທັງ ເຕັກໂນໂລຊີ ໃນການຈັດການຫຼັງການເກັບກ່ຽວຍັງຢູ່ໃນລະດັບຕ່ຳເຮັດໃຫ້ຊາວກະສິກອນລາວທີ່ປູກໝາກມ່ວງມີຂໍ້ເສຍປຽບໃນການແຂ່ງຂັນເມື່ອປຽບທຽບກັບປະເທດໃກ້ຄຽງ, ໂດຍສະເພາະກັບປະເທດໄທ.







8000000E
8200000E
8400000E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຄຳ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ການປ່ຽນແປງຂອງເນື້ອທີ່ປູກໝາກມ່ວງ
ໃນລະຫວ່າງປີ 1999 ແລະ 2011
ເລີ່ມຕົ້ນປູກ
> 250 - 270 ຮຕ
> 50 - 250 ຮຕ
> 1 - 50 ຮຕ
> 0.05 - 1 ຮຕ
ເນື້ອທີ່ເທົ່າເດີມ
< -0.05 - -1 ຮຕ
< -1 - -50 ຮຕ
< -50 - -250 ຮຕ
< -250 - -500 ຮຕ
< -500 - -750 ຮຕ
ຢຸດເຊົາປູກ
ບໍ່ໄດ້ປູກໝາກມ່ວງ
ບໍ່ມີບ້ານ
ເພີ່ມຂຶ້ນ
ຫຼຸດລົງ
22°00'N
20°00'N
18°00'N
16°00'N
14°00'N
2000000N
1800000N
1600000N
1400000N
0 50 100 150 km
0 100 200 300 km
ຈຳນວນເນື້ອທີ່ປູກໝາກມ່ວງ
ທັງໝົດໃນລະດັບແຂວງ
ປີ 1999 ປີ 2011
2000 ຮຕ
1000 ຮຕ
500 ຮຕ
ບໍ່ສະແດງ < 100 ຮຕ
100 100
100
900
200 100
2200 900
1500 800
300 100
800 400
200 300
300 100
1100 200
500 200
400 300
200 100
400 200
ການປ່ຽນແປງຂອງເນື້ອທີ່ປູກໝາກມ່ວງ
ໃນລະດັບແຂວງ (17)
> 0 - 100 ຮຕ (2)
ບໍ່ປ່ຽນແປງ (1)
< 0 - -100 ຮຕ (4)
< -100 - -250 ຮຕ (4)
< -250 - -500 ຮຕ (2)
< -500 - -1000 ຮຕ (3)
< -1000 - -1500 ຮຕ (1)
100°00'E
102°00'E
104°00'E
106°00'E
108°00'E

ສັດລ້ຽງ

ໆ 1 ສະພາບລວມຂອງສັດລ້ຽງ

ໃນ ສປປ ລາວ ການຜະລິດສັດລ້ຽງ ແມ່ນຂະແໜງການໜຶ່ງທີ່ສຳຄັນຂອງເສດຖະກິດ. ຂະແໜງລ້ຽງສັດລວມທັງຂະແໜງການປະມົງ ໄດ້ກວມເອົາປະມານ 16 ສ່ວນຮ້ອຍຂອງ ລວມຍອດຜະລິດຕະພັນພາຍໃນຂອງ ສປປ ລາວ (ວິວຊັ້ນ, 2007) ແລະ ສຳລັບບາງຄົວເຮືອນກະສິກຳ ລ້ຽງສັດ ແລະ ການປະມົງ ກາຍເປັນແຫຼ່ງລາຍຮັບເງິນສົດ ເຖິງ 50% ຕໍ່ປີ (ເອດີບີ, 2005). ສ່ວນໃຫຍ່ແລ້ວ ແມ່ນຊາວກະສິກອນຂະໜາດນ້ອຍເປັນຜູ້ລ້ຽງສັດໃນ ສປປ ລາວ (ວິວຊັ້ນ, 2007) ແລະ ນອກຈາກນັ້ນ ຍັງມີວິສາຫະກິດຈຳນວນໜຶ່ງທີ່ລ້ຽງໝູ ແລະ ສັດປີກ ຢູ່ເຂດ ຕະຫຼາດຊານຕົວເມືອງໃຫຍ່. ຄວາມຕ້ອງການ ຜະລິດຕະພັນສັດລ້ຽງໃນພາກພື້ນໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນທ້າຍທົດສະຫວັດທີ່ ຜ່ານມາ. ໃນລະຫວ່າງປີ 1997 ແລະ 2009, ການບໍລິໂພກຊີ້ນໃນອາຊີຕາເວັນອອກສຽງໃຕ້ໄດ້ຂະຫຍາຍຕົວຈາກ 18 ກິໂລກຣາມ ເປັນ 26 ກິໂລກຣາມຕໍ່ຄົນ ຕໍ່ປີ. ຄາດວ່າການບໍລິໂພກ ຈະເຕີບໂຕປະມານ 3% ຕໍ່ປີ ແລະ ຈະຮອດ 30 ກິໂລກຣາມຕໍ່ຄົນໃນປີ 2020 (ເດວກາໂດ, 2003, *FAO*, 2012). ໃນປີ 2009, ການບໍລິໂພກຊີ້ນຕໍ່ຫົວຄົນທັງໝົດ ໃນ ສປປ ລາວ ແມ່ນເທົ່າກັບ 21 ກິໂລກຣາມ ແລະ ຄາດຄະເນການຈະເລີນເຕີບໂຕຕໍ່ປີ ແມ່ນ 5.2% (*FAO*, 2012). ການເພີ່ມຂຶ້ນຂອງຄວາມຕ້ອງການ ຊີ້ນໃນພາກພື້ນໄດ້ມີສ່ວນເຮັດໃຫ້ສະພາບເຄືອຂ່າຍເສັ້ນທາງຕ່າງໆດີຂຶ້ນ ແລະ ເຮັດໃຫ້ລາຍຮັບຂອງຊາວກະສິກອນທົ່ວທັງອະນຸພາກພື້ນແມ່ນ້ຳຂອງ ເພີ່ມຂຶ້ນ(ເອດີບີ, 2005). ປະເພດສັດລ້ຽງຕົ້ນຕໍ ເພື່ອການຕະຫຼາດໃນ ສປປລາວ ແມ່ນງົວ, ຄວາຍ, ໝູ, ແບ້ ແລະ ສັດປີກ.

ແຜນທີ່ຫຼັກໄດ້ສະແດງໃຫ້ເຫັນເຖິງອັດຕາສ່ວນຄົວເຮືອນທີ່ມີສັດລ້ຽງໃນລະດັບບ້ານ. ມີພຽງແຕ່ 64 ບ້ານ ໃນທົ່ວປະເທດທີ່ບໍ່ໄດ້ລ້ຽງສັດ ແລະ 130 ບ້ານທີ່ມີອັດຕາສ່ວນຄົວເຮືອນລ້ຽງສັດຕ່ຳກວ່າ 25%. ດິນໃນເຂດພູພຽງບໍລະເວນ ສ່ວນໃຫຍ່ ແມ່ນໃຊ້ສຳລັບການປູກກາເຟ ແລະ ຍ້ອນອາກາດໜາວເຢັນຈຶ່ງບໍ່ເໝາະສົມສຳລັບການສັດລ້ຽງ. ແຂວງສະຫວັນນະເຂດ ມີຈຳນວນຄົວເຮືອນທີ່ມີສັດລ້ຽງສູງທີ່ສຸດເຖິງ 90,700 ຄົວເຮືອນ, ຖັດມາ ແມ່ນແຂວງຈຳປາສັກມີ 57,800 ຄົວເຮືອນ. ສ່ວນແຂວງບໍ່ແກ້ວ, ອັດຕະປືແລະ ເຊກອງ ມີ 21,700, 16,600 ແລະ 10,400 ຄົວເຮືອນທີ່ມີສັດລ້ຽງຕາມລຳດັບ. ບາງແຂວງທີ່ມີຄວາມໜາແໜ້ນຂອງປະຊາກອນຕ່ຳ ແລະ ມີຄົວເຮືອນ ຈຳນວນໜ້ອຍທີ່ລ້ຽງສັດ ແຕ່ຄົວເຮືອນດັ່ງກ່າວມີ ສັດລ້ຽງຈຳນວນຫຼາຍ. ຕົວຢ່າງເຊັ່ນ 90% ຂອງຄົວເຮືອນ ໃນແຂວງບໍ່ແກ້ວ, 88% ໃນ ແຂວງອັດຕະປືແລະ 84% ໃນ ແຂວງເຊກອງ ໄດ້ມີການລ້ຽງສັດຫຼາຍກວ່າ ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ, ເຊິ່ງມີພຽງແຕ່ 82% ແລະ 77% ຂອງຄົວເຮືອນທັງໝົດທີ່ລ້ຽງສັດຕາມລຳດັບ.

ແຂວງສະຫວັນນະເຂດ ແມ່ນແຂວງໜຶ່ງ ທີ່ມີຍອດຈຳນວນສັດລ້ຽງສູງສຸດ, ຮອງລົງມາແມ່ນແຂວງວຽງຈັນ ແລະ ແຂວງໄຊຍະບູລີ ໄກ່ ແລະ ເປັດເປັນປະເພດສັດລ້ຽງທີ່ນິຍົມລ້ຽງຫຼາຍທີ່ສຸດ ແລະ ໃນລະຫວ່າງປີ 1999 ແລະ 2011 ຈຳນວນສັດທັງສອງປະເພດນີ້ ເພີ່ມຂຶ້ນ 3,7% ແລະ 32,5% ຕາມລຳດັບ. ຖັດມາແມ່ນ ງົວ, ເຊິ່ງມີຈຳນວນເພີ່ມຂຶ້ນເຖິງ 68% ລະຫວ່າງປີ 1999 ແລະ 2011. ໝູ ແລະ ຄວາຍກໍ່ເປັນສັດລ້ຽງທີ່ສຳຄັນ; ໝູໄດ້ຫຼຸດລົງ 5,6%, ຄວາຍໄດ້ຫຼຸດລົງ 22% ໃນລະຫວ່າງຊຸມປີດ່ຽວກັນ. ການລ້ຽງໝູໄດ້ພົບເຫັນໃນທຸກໆແຂວງ, ສ່ວນການລ້ຽງຄວາຍສ່ວນຫຼາຍ ແມ່ນພົບພົມເຫັນໃນຄົວເຮືອນທາງພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ. ຮູບພາບທີ7 ສະແດງການປ່ຽນແປງຂອງຈຳນວນສັດລ້ຽງຈາກປີ 1999 ເຖິງ ປີ2011

ແຂວງຊຽງຂວາງເປັນແຂວງທີ່ມີຈຳນວນສັດລ້ຽງສູງສຸດ ໂດຍສະເລ່ຍ ແຕ່ລະຄົວເຮືອນໃນລະດັບເມືອງມີຈຳນວນລ້ຽງສັດ ຢູ່ໃນລະຫວ່າງ 3.00 ຫາ 3.40 ໂຕ. ເມືອງຄຳເກີດ ແຂວງບໍລິຄຳໄຊ ແລະ ເມືອງນອງແຂວງສະຫວັນນະເຂດ ມີຈຳນວນສັດລ້ຽງທີ່ຕ່ຳສຸດ ໂດຍສະເລ່ຍ ສັດລ້ຽງ ຢູ່ທີ່ລະດັບ 1.17 ຫາ 1.50 ໂຕ ຕໍ່ຄົວເຮືອນ.

ຮູບພາບທີ7: ສະແດງການປ່ຽນແປງຂອງຈຳນວນສັດລ້ຽງຈາກປີ 1999 ເຖິງ ປີ2011




0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
CHINA
MYANMAR
VIETNAM
THAILAND
CAMBODIA
ອັດຕາສ່ວນຄົວເຮືອນທີ່ມີສັດລ້ຽງ
ໃນລະດັບບ້ານ (8643)
0 % (64)
> 0 - 25 % (130)
> 25 - 50 % (457)
> 50 - 75 % (1246)
> 75 - 95 % (3475)
> 95 - 100 % (3271)
ຄົວເຮືອນທັງໝົດທີ່ມີສັດລ້ຽງ
ໃນລະດັບແຂວງ
90000 ຄຮ
45000 ຄຮ
15000 ຄຮ
Phongsaly 26.600
PHONGSALY
Luang Namtha 21.900
LUANG NAMTHA
Muang Xay 38.200
BOKEO
21.700
Huay Xay
OUDOMXAI
LUANG PRABANG
47.200
Luang Prabang
Xamneua 38.100
HOUAPHAN
Phonsavan 34.200
XIENGKHOUANG
Xayabouly
XAYABOULY
52.800
VIENTIANE PROVINCE
54.700
Vienkham
25.500
Vientiane
VIENTIANE CAPITAL
27.700
Paksanh
BOLIKHAMXAI
KHAMMOUAN
42.400
Thakhek
SAVANNAKHET
90.700
Savannakhet
42.600
SALAVAN
Salavan
XEKONG
10.400
Xekong
Pakxe
57.800
CHAMPASAK
Attapeu
16.600
ATTAPEU
0 50 100 150 km
ຈຳນວນທັງໝົດຂອງສັດລ້ຽງ (ຂະໜາດ)
ແລະ ປະເພດ (ສີ) ໃນລະດັບແຂວງ
1500000
750000
100000
ໄກ່
ເປັດ
ງົວ
ໝູ
ຄວາຍ
410.000
338.000
688.000
475.000
1.217.000
840.000
1.030.000
1.447.000
1.557.000
602.000
1.305.000
615.000
1.591.000
658.000
137.000
357.000
1.152.000
ຈຳນວນສັດລ້ຽງສະເລ່ຍຕໍ່ຄົວເຮືອນລ້ຽງສັດ
ໃນລະດັບເມືອງ (143)
1.17 - 1.50
1.50 - 2.00
2.00 - 2.50
2.50 - 3.00
3.00 - 3.40
0 100 200 300 km

ໆ 2 ປະເພດຂອງສັດລ້ຽງ ແລະ ການສັກຢາປ້ອງກັນພະຍາດ

ສ່ວນໃຫຍ່ ຄົວເຮືອນກະສິກຳໃນ ສປປ ລາວ ຈະໃຊ້ສັດລ້ຽງຂອງພວກເຂົາເປັນການສະສົມເງິນ ແລະ ບໍ່ພຽງແຕ່ໃຊ້ບໍລິໂພກ ຫຼື ຂາຍ ເທົ່ານັ້ນ ແຕ່ຍັງໃຊ້ສຳລັບພິທີກຳຕ່າງໆອີກດ້ວຍ (ມິນລ້າ ແລະ ພູຕະຄູນ, 2008, ວິວຊັ້ນ, 2007). ປະມານ 75% ຂອງສັດໃຫຍ່ ເຊັ່ນງົວ ແລະ ຄວາຍ, ແມ່ນຜະລິດ ແລະ ບໍລິໂພກພາຍໃນທ້ອງຖິ່ນ, ສ່ວນທີ່ເຫລືອ 25% ແມ່ນສົ່ງອອກໄປໄທ ແລະ ຫວຽດນາມ. ຄຽງຄູ່ກັບບັນດາປັດໃຈອື່ນໆ ການລະບາດຂອງພະຍາດຕິດຕໍ່ໃນຫຼາຍບ້ານໄດ້ມີຜົນກະທົບຢ່າງຫຼວງຫຼາຍຕໍ່ກັບການລ້ຽງສັດ, ໂດຍສະເພາະແມ່ນງົວ ແລະ ຄວາຍ. ພະຍາດທີ່ພົບເຫັນຫຼາຍທີ່ສຸດໃນງົວ ແລະ ຄວາຍແມ່ນ ພະຍາດປາກເປື່ອລີ້ງເລັບ (FMD) ແລະ ພະຍາດເຕົ້າໂຮມເລືອດ (HS). ສ່ວນພະຍາດທີ່ພົບເຫັນຫຼາຍທີ່ສຸດໃນໝູ ແມ່ນໄຂ້ຫວັດໝູ ແລະ ໂລກທາງເດີນຫາຍໃຈ (ເປັນທີ່ຮູ້ທົ່ວໄປແມ່ນພະຍາດຫູສີຟ້າ). ສຳລັບພະຍາດທີ່ພົບຫຼາຍທີ່ສຸດໃນບັນດາສັດປີກແມ່ນ ພະຍາດໂກເລຣາສັດປີກ, ນິວກັດເຊີນ ແລະ ໄຂ້ຫວັດສັດປີກ.

ອີງຕາມການສຳຫຼວດກະສິກຳຂອງປີ 2010/11, ເກືອບ 90% ຂອງຄົວເຮືອນມີສັດລ້ຽງລະຫວ່າງ 1 ຫາ 8 ຊະນິດ. ແຜນທີ່ຫຼັກໄດ້ສະແດງໃຫ້ເຫັນເຖິງຈຳນວນຊະນິດສັດລ້ຽງທີ່ຢູ່ລະດັບບ້ານ. 74% ຂອງບ້ານມີສັດລ້ຽງ 4 ຫາ 6 ຊະນິດ, ປະມານ 20% ຂອງບ້ານມີ 7 ຫາ 8 ຊະນິດ ແລະ 4% ຂອງບ້ານທັງໝົດໃນ ສປປ ລາວ ມີສັດລ້ຽງໜ້ອຍກ່ວາ 3 ຊະນິດ. ແຂວງສະຫວັນນະເຂດມີຈຳນວນຄົວເຮືອນລ້ຽງສັດຫຼາຍທີ່ສຸດ, ໃນຂະນະທີ່ ແຂວງເຊກອງ ມີຄົວເຮືອນທີ່ລ້ຽງສັດໜ້ອຍກ່ວາ ແຕ່ອັດຕາສ່ວນຄົວເຮືອນທີ່ລ້ຽງສັດ ມີເຖິງ 84% ຂອງຄົວເຮືອນຢູ່ແຂວງເຊກອງ ໃນຂະນະທີ່ແຂວງສະຫວັນນະເຂດ ອັດຕາສ່ວນຄົວເຮືອນລ້ຽງສັດມີພຽງ 82% ເທົ່ານັ້ນ.

ອັດຕາການສັກຢາປ້ອງກັນພະຍາດໃຫ້ສັດລ້ຽງໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນລະຫວ່າງປີ 1999 ແລະ 2011 ຈາກ 36 ຫາ 56% ສຳລັບງົວ, 48 ຫາ 60 ສ່ວນຮ້ອຍສຳລັບຄວາຍ ແລະ 8 ຫາ 18% ສຳລັບໝູ. ຕາມການສະແດງໃນແຜນທີ່, ຄົວເຮືອນມັກຈະສັກຢາປ້ອງກັນພະຍາດໃຫ້ສັດໃຫຍ່ຫຼາຍກວ່າສັດປີກ ແລະ ໝູ. ອັດຕາການສັກຢາປ້ອງກັນພະຍາດໃຫ້ຄວາຍ ແມ່ນເທົ່າກັບ 56%, 60% ສຳລັບງົວ, 18% ສຳລັບໝູ ແລະ 10% ສຳລັບສັດປີກ. ໃນນະຄອນຫຼວງວຽງຈັນ 79% ຂອງຄົວເຮືອນທັງໝົດໄດ້ສັກຢາປ້ອງກັນພະຍາດໃຫ້ງົວ, ໃນຂະນະທີ່ແຂວງອຸດົມໄຊ ມີພຽງແຕ່ 18%. ອັດຕາການສັກຢາປ້ອງກັນພະຍາດໃຫ້ຄວາຍທີ່ຕ່ຳທີ່ສຸດແມ່ນຢູ່ແຂວງຜົ້ງສາລີ ມີພຽງແຕ່ 18% ຂອງຄວາຍທັງໝົດທີ່ໄດ້ຮັບການສັກຢາປ້ອງກັນພະຍາດ ແລະ ສູງສຸດແມ່ນແຂວງຈຳປາສັກ.

ໃນພາກເໜືອຂອງ ສປປ ລາວ ມີພຽງແຕ່ 38% ຂອງຊາວກະສິກອນໄດ້ສັກຢາປ້ອງກັນພະຍາດໃຫ້ງົວທຽບໃສ່ 63% ແລະ 62% ໃນພາກໃຕ້ ແລະ ພາກກາງຕາມລຳດັບ. ມີແນວໂນ້ມດຽວກັນທີ່ພົບເຫັນ ສຳລັບການສັກຢາປ້ອງກັນພະຍາດໃຫ້ແກ່ຄວາຍ 75% ຂອງຄົວເຮືອກະສິກຳຢູ່ພາກໃຕ້ ແຕ່ພາກເໜືອມີພຽງແຕ່ 44% ຂອງຄົວເຮືອນກະສິກຳ ການສັກຢາປ້ອງກັນພະຍາດໃນພາກຕ່າງໆ ບໍ່ມີຄວາມແຕກຕ່າງກັນຫຼາຍລະວ່າງໝູ ແລະ ສັດປີກ, ຈາກ 18 ສ່ວນຮ້ອຍ ເປັນ 20 ສ່ວນຮ້ອຍ ຂອງຄົວເຮືອນໄດ້ສັກຢາປ້ອງກັນພະຍາດໃຫ້ໝູ ແລະ ຈາກ 2 ສ່ວນຮ້ອຍ ເປັນ 8 ສ່ວນຮ້ອຍ ຂອງຄົວເຮືອນໄດ້ສັກຢາປ້ອງກັນໃຫ້ສັດປີກ. ໃນປີຊຸ່ມ 1999 ແລະ ປີ 2011 ອັດຕາການສັກຢາປ້ອງກັນພະຍາດໃຫ້ໝູ ໄດ້ເພີ່ມຂຶ້ນຫຼາຍ. ໃນແຂວງຜົ້ງສາລີ ໄດ້ເພີ່ມຂຶ້ນຈາກ 3 ສ່ວນຮ້ອຍ ເປັນ 17 ສ່ວນຮ້ອຍ ແລະ ແຂວງຫົວພັນ ເພີ່ມຂຶ້ນຈາກ 2 ສ່ວນຮ້ອຍ ເປັນ 8 ສ່ວນຮ້ອຍຕາມລຳດັບ.

ໃນແຜນທີ່ລະດັບແຂວງໄດ້ສະແດງໃຫ້ເຫັນເຖິງສ່ວນແບ່ງຂອງບັນດາຄົວເຮືອນທີ່ພົບກັບອຸປະສັກໃນການຮັບຢາປ້ອງກັນພະຍາດສັດລ້ຽງໃນຂັ້ນເມືອງ. ສ່ວນຫຼາຍແມ່ນເມືອງທີ່ເຂົ້າເຖິງໄດ້ຍາກ ຈະມີອັດຕາສ່ວນສູງ, ເຊັ່ນເມືອງຍອດອູ ໃນເຂດພາກເໜືອສຸດ ຫຼື ເມືອງ ກະລຶມໃນພາກຕາເວັນອອກຂອງ ແຂວງເຊກອງ. ໃນ 25 ເມືອງ, ຫຼາຍກ່ວາ 50 % ຂອງຄົວເຮືອນໄດ້ປະເຊີນກັບອຸປະສັກໃນການຮັບຢາປ້ອງກັນພະຍາດໃຫ້ສັດລ້ຽງ.

ຈະສັງເກດເຫັນໄດ້ວ່າ ການເກີດພະຍາດນັ້ນ ບໍ່ສະເພາະແຕ່ເກີດຈາກການປົກຫູ້ມຂອງການສັກຢາປ້ອງກັນພະຍາດທີ່ບໍ່ທົ່ວເຖິງເທົ່ານັ້ນ ແຕ່ ບາງທີ ຫຼື ອາດຈະສຳຄັນທີ່ສຸດ ຄືເປັນການສະທ້ອນໃຫ້ເຫັນເຖິງຂໍ້ຫຍູ້ງຍາກໃນພາກປະຕິບັດຕົວຈິງໃນການຮັກສາຄວາມປອດໄພດ້ານຊີວະພາບ ກໍເປັນໄດ້ (ພີ. ວິນເຊີ້, 2013, ການສື່ສານສ່ວນຕົວ). ແນວຄວາມຄິດຂອງການຮັກສາຄວາມປອດໄພດ້ານຊີວະພາບ ແມ່ນໝາຍເຖິງການປະຕິບັດດ້ານສຸຂະອະນາໄມທັງໝົດ ທີ່ຖືກອອກແບບມາເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອພະຍາດທີ່ເກີດຂຶ້ນພາຍໃນ ຫຼື ຖືກນຳເຂົ້າໄປໃນຄອກສັດ ຫຼື ໃນປະເທດ; ລວມທັງພາກປະຕິບັດໃນການຄວບຄຸມການແຜ່ກະຈາຍຂອງພາຫານະນຳເຊື້ອພະຍາດເຂົ້າສູ່ຄອກສັດ (ລາຊັ້ນ, 2008). ການມີແນວພັນສັດພື້ນເມືອງຈຳນວນຫລາຍ ທີ່ລ້ຽງຢູ່ໃນລະດັບຄົວເຮືອນ ຫຼື ລະດັບບ້ານອາດຖືເປັນສິ່ງໄດ້ປຽບຍ້ອນວ່າແນວພັນເຫຼົ່ານັ້ນ ມັກຈະປັບຕົວເຂົ້າກັບສະພາບທ້ອງຖິ່ນ ແລະ ທົນທານຕໍ່ກັບບັນດາພະຍາດບາງຊະນິດໄດ້ດີ, ເຖິງແມ່ນວ່າສະມັດຕະພາບການຜະລິດຕ່ຳ ກໍຕາມ. ຊາວກະສິກອນຍັງສາມາດຜະລິດແນວພັນສັດລ້ຽງພື້ນເມືອງດ້ວຍຕົວເອງ ແລະ ມີທັກສະພ້ອມກັບຄວາມຮູ້ຄວາມສາມາດ ທີ່ ນຳໃຊ້ເຂົ້າໃນບັນດາກິດຈະກຳເຫຼົ່ານັ້ນໄດ້ໂດຍກົງນຳອີກ.

ງ 2 ປະເພດຂອງສັດລ້ຽງ ແລະ ການສັກຢາປ້ອງກັນພະຍາດ



ໆ 3 ຄວາຍ

ຄວາຍນໍ້າ ແລະ ໂດຍສະເພາະສາຍພັນຄວາຍຕົມ ກາຍເປັນສັນຍາລັກສັດລ້ຽງໜຶ່ງຂອງອາຊີຕາເວັນອອກສຽງໄຕ້. ໂດຍທົ່ວໄປແລ້ວຖືກເອີ້ນວ່າເປັນລົດໄຖນາຂອງຕາເວັນອອກ ແລະ ກໍ່ໄດ້ມີບົດບາດທີ່ສໍາຄັນໃນການພັດທະນາກະສິກໍາຂອງພາກພື້ນ. ປະມານ 4,000 ປີ ທີ່ຜ່ານມາ ຄວາຍນໍ້າໄດ້ຖືກນໍາໃຊ້ເປັນປະຈໍາໃນ ສປປ ລາວ ເພື່ອໄຖດິນ ແລະ ຟາດເຂົ້າ ໃນການຜະລິດເຂົ້າ, ເປັນທັງ ຊີ້ນ ແລະ ສ່ວນໜ້ອຍໜຶ່ງເປັນນໍ້ານົມ ດັ່ງນັ້ນຈຶ່ງກາຍເປັນສ່ວນປະກອບໜຶ່ງທີ່ສໍາຄັນ ຕໍ່ກັບ ການດໍາລົງຊີວິດ ແລະ ອາຫານ ໃນຊົນນະບົດ.

ໃນອາຊີຕາເວັນອອກສຽງໃຕ້ ປະຊາກອນຄວາຍຕົມ ໄດ້ຫຼຸດລົງ ຫຼາຍກວ່າ 5% ລະຫວ່າງປີ 1999 ແລະ 2011. ການຫຼຸດລົງນີ້ ສວນທາງກັບ ການລ້ຽງຄວາຍທີ່ເພີ່ມຂຶ້ນເຖິງ 17% ໃນທົ່ວໂລກຂອງໄລຍະດຽວກັນ, ນັ້ນແມ່ນຍ້ອນການເພີ່ມຂຶ້ນທີ່ສໍາຄັນຂອງປະຊາກອນຄວາຍນໍ້າທົ່ວທັງພາກພື້ນອາຊີຕາເວັນອອກສຽງໃຕ້. ຢູ່ ສປປ ລາວ, ປະຊາກອນຄວາຍໄດ້ຫຼຸດລົງປະມານ 22% ຫຼື 217,700 ໂຕ ຂອງຈໍານວນທັງໝົດ 772,900 ໂຕ ໃນໄລຍະເວລາດຽວທີ່ກ່າວມາຂ້າງເທິງ. ເກືອບໜຶ່ງໃນສາມຂອງການຫຼຸດລົງທັງໝົດທີ່ເກີດຈາກການປ່ຽນແປງໃນແຂວງສະຫັວນນະເຂດ ແລະ ແຂວງຄໍາມ່ວນ (ຫຼຸດລົງລວມກັນ 29%) ເຊິ່ງເປັນ 2 ແຂວງທີ່ມີຄວາຍຫຼາຍທີ່ສຸດ. ການຫຼຸດລົງຫຼາຍທີ່ສຸດແມ່ນຢູ່ໃນບັນກາແຂວງພາກເໜືອ ເຊັ່ນແຂວງຫຼວງນໍ້າທາ ຫຼຸດລົງ 60%, ແຂວງອຸດົມໄຊ ຫຼຸດລົງ 49% ແລະ ນະຄອນຫຼວງວຽງຈັນ ຫຼຸດລົງ 55% .

ແຜນທີ່ຫຼັກໄດ້ສະແດງໃຫ້ເຫັນວ່າ ການລ້ຽງຄວາຍຫຼາຍທີ່ສຸດແມ່ນຢູ່ແຂວງສະຫວັນນະເຂດ (19% ຂອງ ຈໍານວນທັງໝົດຂອງປະເທດ), ແຂວງຈໍາປາສັກ (13%), ແຂວງວຽງຈັນ (8%), ແຂວງຄໍາມ່ວນ (8%) ແລະ ແຂວງຫົວພັນ (7%). ສ່ວນອີກ 13% ແມ່ນລວມ ຢູ່ທີ່ ແຂວງຫລວງນໍ້າທາ, ເຊກອງ, ນະຄອນຫຼວງວຽງຈັນ, ຜົ້ງສາລີ, ບໍ່ແກ້ວ, ແລະ ອຸດົມໄຊ. ຕົວເລກທີ່ແຍກລະອຽດຢູ່ໃນລະດັບບ້ານ ສະແດງໃຫ້ເຫັນເຖິງການກະຈາຍ ທີ່ບໍ່ເທົ່າທຽມ ຂອງການລ້ຽງຄວາຍ ເຊິ່ງ ກໍ່ສອດຄ່ອງກັບບັນດາເຂດພື້ນທີ່ນິເວດກະສິກໍາ ຂອງ ສປປ ລາວ. ສ່ວນໃຫຍ່ ຄົວເຮືອນ ໃນບັນດາບ້ານທີ່ຕັ້ງຢູ່ເຂດທົ່ງພຽງຂອງພາກໃຕ້ຍັງລ້ຽງຄວາຍໄວ້ ໜຶ່ງ ຫຼື ຫຼາຍໂຕໃວ້ ເພື່ອໃຊ້ໄຖນາ. ຄົວເຮືອນທີ່ຍັງລ້ຽງຄວາຍ ມີອັດຕາສ່ວນສູງໃນພາກຕາເວັນອອກຂອງ ແຂວງວຽງຈັນ, ຫົວພັນ ແລະ ຜົ້ງສາລີ. ໃນເຂດພູພຽງບໍລະເວນ ເຊິ່ງຢູ່ທາງພາກຕາເວັນອອກຂອງແຂວງຈໍາປາສັກ ແມ່ນເກືອບບໍ່ມີຄວາຍເລີຍ ດ້ວຍເຫດຜົນເນື້ອທີ່ເກືອບທັງໝົດຖືກນໍາໃຊ້ເຂົ້າໃສ່ການຜະລິດກາເຟ ແລະ ບັນດາພືດເສດຖະກິດອື່ນໆ.

ຕົວເລກຂ້າງເທິງສະແດງໃຫ້ເຫັນວ່າ, ເມື່ອທຽບກັບປະເທດເພື່ອນບ້ານໃກ້ຄຽງ, ຄວາມສໍາຄັນຂອງຄວາຍຕໍ່ກັບບັນດາກິດຈະກໍາກະສິກໍາໃນ ສປປ ລາວ ໄດ້ຫຼຸດລົງ. ແນວໂນ້ມນີ້ ໄດ້ພັດທະນາຢ່າງໄວໂດຍສະເພາະໃນເຂດທີ່ ເຂົ້າເຖິງໄດ້ສະດວກ ຫັນເປັນທັນສະໄໝ ແລະ ໃຊ້ກົນຈັກກະສິກໍາ ເຂົ້າໃນການຜະລິດເຂົ້າ. ໃນຂົງເຂດດັ່ງກ່າວ, ປະຊາກອນຂອງຄວາຍໄດ້ຫຼຸດລົງ ເນື່ອງຈາກ ຄວາມຕ້ອງການແຮງງານຂອງຄວາຍໜ້ອຍລົງ ແລະ ອີກເຫດຜົນໜຶ່ງ ກໍ່ຍ້ອນຜົນຕອບແທນທາງເສດຖະກິດທີ່ຕໍ່າກວ່າການລ້ຽງງົວ, ໝູ ແລະ ສັດປີກ. ເຖິງຢ່າງໃດກໍ່ຕາມ, ຄວາຍຍັງມີຄວາມສໍາຄັນຫຼາຍ ໂດຍສະເພາະຕໍ່ກັບຊາວກະສິກອນຂະໜາດນ້ອຍໃນເຂດຫ່າງໄກສອກຫຼີກ. ນອກເໜືອຈາກຄວາມສໍາຄັນຂອງແຮງງານລາກແກ່, ຄວາຍຍັງເປັນແຫຼ່ງທາດໂປຼຕີນທີ່ເປັນອົງປະກອບສໍາຄັນຂອງອາຫານຂອງຄົວເຮືອນກະສິກອນນໍາອີກ ໃນຮູບແບບຂອງຊີ້ນ ແລະ ນໍ້ານົມ. ສຸດທ້າຍ, ຄວາຍ ເປັນສ່ວນປະກອບໜຶ່ງຂອງຊັບສິນຂອງຄົວເຮືອນ ແລະ ຖືກຖືວ່າເປັນສະມາຊິກໜຶ່ງຂອງຄອບຄົວຊາວກະສິກອນນໍາອີກ.




0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຫຼວງພະບາງ
ຊຳເໜືອ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ອັດຕາສ່ວນຂອງຄົວເຮືອນທີ່ລ້ຽງຄວາຍ
ໃນລະດັບບ້ານ (8643)
0 % (705)
> 0 - 25 % (3482)
> 25 - 50 % (2424)
> 50 - 75 % (1614)
> 75 - 100 % (418)
ຈຳນວນຄວາຍທັງໝົດໃນລະດັບກຸ່ມບ້ານ
100
500
1000
2000
0
50
100
150 km
46600 ຄຣ
30000 ຄຣ
15000 ຄຣ
ສະແດງສັນຍາລັກ > 5000 ຄຣ
8800
6100
8800
12500
15400
10700
10700
12100
7000
16400
31400
9200
ອັດຕາສ່ວນຂອງຄົວເຮືອນທີ່ລ້ຽງຄວາຍ
ໃນລະດັບເມືອງ (143)
< 5 % (8)
> 5 - 20 % (48)
> 20 - 40 % (55)
> 40 - 60 % (34)
> 60 - 71 % (5)
0
100
200
300 km

ງ 4 ງົວ

ໃນ ສປປ ລາວ, ມີງົວຢູ່ 1.58 ລ້ານໂຕ ເຊິ່ງສ່ວນໃຫຍ່ແມ່ນພວກສາຍພັນງົວເຫຼືອງອາຊີ (*Bos indicus*). ຊາວກະສິກອນຂະໜາດນ້ອຍ ມີ ງົວຫຼາຍກວ່າ 98% ຂອງຈຳນວນງົວທັງໝົດ. ສ່ວນໃຫຍ່ແລ້ວການຜະລິດງົວໃນ ສປປ ລາວ ແມ່ນປະສົມປະສານກັບລະບົບການຜະລິດພືດຕ່າງໆໃນລະດັບຄົວເຮືອນ. ຍ້ອນເຫດຜົນນີ້, ຊາວກະສິ ກອນໃນ ສປປ ລາວ ຈຶ່ງຖືກຈັດເປັນປະເພດ "ຜູ້ຮັກສາງົວ" ແທນທີ່ຈະເປັນ "ຜູ້ຜະລິດງົວ". ການຂາດຄຸນຄ່າໂພຊະນາການຂອງອາຫານສັດ, ໂດຍສະເພາະແມ່ນໃນລະຍະລະດູແລ້ງ, ຂີດຈຳກັດດ້ານຄວາມຮູ້ໃນດ້ານການຈັດການຄຸ້ມຄອງງົວ ແລະ ການລະບາດຂອງພະຍາດຕິດຕໍ່ເລື້ອຍໆ (ເຊັ່ນ: ພະຍາດເຕົ້າໂຮມເລືອດ ແລະ ປາກເປື່ອຍລົງເລັບ) ໄດ້ສົ່ງຜົນກະທົບທາງລົບຕໍ່ກັບການຜະລິດງົວໃນປະເທດ.

ສປປ ລາວ ມີທັງໝົດເກືອບຮອດ 782,000 ຄົວເຮືອນກະສິກຳ ໃນນັ້ນ ມີ 38% ໄດ້ລ້ຽງງົວ, ອັດຕາສ່ວນຂອງຄົວເຮືອນທີ່ລ້ຽງງົວ ແຕກຕ່າງກັນ ຈາກພາກພື້ນທີ່ໜຶ່ງ ຫາພື້ນທີ່ໜຶ່ງ; ໃນພາກເໜືອ 27% ຂອງຄົວເຮືອນທັງໝົດລ້ຽງງົວ, ໃນຂະນະທີ່ຢູ່ພາກກາງ ແລະ ພາກໃຕ້ຂອງ ສປປ ລາວ, 50% ແລະ 32 ສ່ວນຮ້ອຍ ຂອງຄົວເຮືອນທີ່ລ້ຽງງົວ ຕາມລຳດັບ.

ແຜນທີ່ຫຼັກໄດ້ສະແດງໃຫ້ເຫັນອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງງົວຢູ່ໃນລະດັບບ້ານ. ສາມາດສັງເກດເຫັນໄດ້ວ່າຄົວເຮືອນສ່ວນຫຼາຍໃນຂົງເຂດບໍລິເວນ ແຂວງຊຽງຂວາງ ແລະ ບໍລິເວນ ແຂວງສະຫວັນນະເຂດມີການລ້ຽງງົວ. ຢູ່ພາກຕາເວັນຕົກສ່ຽງເໜືອ ແລະ ພາກໃຕ້ຂອງສປປລາວ, ອັດຕາການລ້ຽງງົວໃນຄົວເຮືອນແມ່ນຕ່ຳກວ່າຫຼາຍ. ແຂວງສະຫວັນນະເຂດ ມີງົວຫຼາຍທີ່ສຸດ ແລະ ມີ 62,000 ຄົວເຮືອນທີ່ລ້ຽງງົວ; ຕາມດ້ວຍແຂວງວຽງຈັນ ໂດຍມີ 28,700 ຄົວເຮືອນ. ໃນແຂວງ ຜົ້ງສາລີ, ຫຼວງນ້ຳທາ, ເຊກອງ ແລະ ອັດຕະປື, ມີໜ້ອຍກວ່າ 5,000 ຄົວເຮືອນທີ່ລ້ຽງງົວ

ແຜນທີ່ປຽບທຽບໄດ້ສະແດງໃຫ້ເຫັນເຖິງການປ່ຽນແປງລະຫວ່າງປີ 1999 ແລະ 2011, ແລະ ປະຊາກອນງົວໃນລາວມີການເພີ່ມຂຶ້ນຢ່າງຫລວງຫລາຍໃນທຸກໆແຂວງ ຍົກເວັ້ນແຂວງຫລວງນ້ຳທາ. ແຂວງສະຫວັນນະເຂດ ແລະ ແຂວງວຽງຈັນ ມີການຂະຫຍາຍຕົວຢ່າງຫຼວງຫຼາຍ ລວມມີ 107,300 ໂຕ ແລະ 82,400 ໂຕ ຕາມລຳດັບ. ເຖິງວ່າແຂວງອັດຕະປືຈະມີງົວຈຳນວນໜ້ອຍກໍຕາມ, ແຕ່ອັດຕາການເພີ່ມຂຶ້ນແມ່ນເທົ່າກັບ 233%, ຖືໄດ້ວ່າເປັນການເພີ່ມຂຶ້ນສູງສຸດໃນປະເທດ.

ການປ່ຽນແປງໃນລະດັບຕ່ຳ ຂອງຈຳນວນງົວ ທີ່ແຂວງຫລວງນ້ຳທາ ແລະ ແຂວງອຸດົມໄຊ ແມ່ນຕິດພັນກັບການຂະຫຍາຍຕົວຢ່າງໄວວາຂອງການປູກຢາງພາລາ ແລະ ການປູກກ້ວຍ ໃນສອງແຂວງ. ການຈັດສັນຄືນທີ່ດິນສຳລັບການປູກພືດໃນແຂວງເຫຼົ່ານັ້ນ ໄດ້ເຮັດໃຫ້ພື້ນທີ່ທົ່ງຫຍ້າສຳລັບການລ້ຽງສັດຫຼຸດລົງ ແລະ ບັງຄັບໃຫ້ຊາວກະສິກອນ ຈຳນວນຫຼາຍ ຕ້ອງຂາຍງົວອອກ. ໃນທາງກົງກັນຂ້າມ ການເພີ່ມຂຶ້ນຂອງງົວໃນຂອບເຂດທົ່ວປະເທດ ໂດຍລວມແລ້ວ ແມ່ນເກີດຈາກຫຼາຍປັດໃຈ ລວມທັງການມີອາຫານສັດຢ່າງພຽງພໍ ແລະ ມີທົ່ງຫຍ້າທີ່ກ້ວາງໃຫຍ່, ການຊ່ວຍເຫຼືອດ້ານວິຊາການຈາກບັນດາຜູ້ໃຫ້ທຶນ, ແລະ ຄວາມຕ້ອງການບໍລິໂພກຊີ້ນຂອງປະເທດເພື່ອນບ້ານໃກ້ຄຽງທີ່ເພີ່ມຂຶ້ນ (ສ່ວນຫຼາຍ ແມ່ນຈີນ ແລະ ຫວຽດນາມ). ຜ່ານຫຼາຍຮູບແບບການຊ່ວຍເຫຼືອຂອງອົງການຜູ້ໃຫ້ທຶນ, ການປັບປຸງຄຸນນະພາບອາຫານສັດ, ການວິນິດໄສພະຍາດ ແລະ ການເຝົ້າລະວັງ, ພ້ອມທັງການຜະລິດ ແລະ ການແຈກຢາຍຢາປ້ອງກັນພະຍາດລ້ວນແຕ່ມີຜົນຕໍ່ການເພີ່ມຂຶ້ນຂອງປະຊາກອນງົວ.







0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງງົວ
ໃນລະດັບບ້ານ (8643)
0 % (575)
> 0 - 20 % (1838)
> 20 - 40 % (2135)
> 40 - 60 % (2241)
> 60 - 80 % (1415)
> 80 - 100 % (439)
ຈຳນວນທັງໝົດຂອງງົວ ໃນລະດັບກຸ່ມບ້ານ
250
1000
2500
5000
0 50 100 150 km
ຈຳນວນທັງໝົດຂອງຄົວເຮືອນທີ່ລ້ຽງງົວ
ໃນລະດັບແຂວງ
62000 ຄຣ
30000 ຄຣ
15000 ຄຣ
ສະແດງສັນຍາລັກ > 5000 ຄຣ
5100
9400
9200
15500
16400
22400
18600
28700
15400
14900
24600
62000
21500
21300
ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງງົວ
ໃນລະດັບເມືອງ (143)
0 % (0)
> 0 - 20 % (28)
> 20 - 40 % (55)
> 40 - 60 % (46)
> 60 - 73 % (14)
0 100 200 300 km

໗ 5 ໝູ

ການຜະລິດໝູແມ່ນໜຶ່ງໃນກິດຈະກຳທີ່ສຳຄັນທີ່ສຸດຂອງຊາວກະສິກອນລາວໃນເຂດຊົນນະບົດ. ມັນໄດ້ກາຍເປັນສິ່ງສຳຄັນສຳລັບລະບົບຕ່ອງໂສ້ສະບຽງອາຫານ ແລະ ມີບົດບາດສຳຄັນໃນການສ້າງລາຍຮັບໃຫ້ຊາວກະສິກອນທີ່ໃຊ້ປັດໃຈນຳເຂົ້າຂ້ອນຂ້າງຕໍ່າໃນລະບົບການຜະລິດກະສິກຳແບບດັ້ງເດີມ.

ການລ້ຽງໝູໃນ ສປປ ລາວ ແມ່ນມີສາມລະບົບຕົ້ນຕໍຄື: ການລ້ຽງແບບປ່ອຍ, ການລ້ຽງແບບເຄິ່ງປ່ອຍເຄິ່ງຂັງ ແລະ ການລ້ຽງແບບຂັງຕະຫຼອດປີ. ພາຍໃຕ້ລະບົບທີ່ລ້ຽງປ່ອຍແມ່ນປ່ອຍໃຫ້ໝູຊອກຫາອາຫານແບບອິດສະຫຼະຕະຫຼອດປີ, ໄດ້ຮັບອາຫານເພີ່ມ ກໍ່ຕໍ່ເມື່ອຊາວກະສິກອນບໍ່ໄດ້ເຮັດວຽກຢູ່ໄຮ່ນາ.ໂດຍທົ່ວໄປປະຊາຊົນເຂດຫ່າງໄກສອກຫຼີກ ນິຍົມການລ້ຽງແບບປ່ອຍ. ການລ້ຽງແບບເຄິ່ງປ່ອຍເຄິ່ງຂັງແມ່ນໃຊ້ສຳລັບການຜະລິດໝູນ້ອຍ ແລະ ການຂຸນໝູໃຫ້ຕຸ້ຍ. ໝູທີ່ອອກຫາກິນໂດຍອິດສະລະໄດ້ ຫຼັງສຳເລັດການເກັບກ່ຽວຜົນລະປູກເທົ່ານັ້ນ, ໃນເວລາດຽວກັນນັ້ນ ໝູຈະໄດ້ຮັບອາຫານເພີ້ມຈາກເຈົ້າຂອງ. ວິທີປະຕິບັດດັ່ງກ່າວນີ້ແມ່ນນິຍົມກັນໃນເກືອບທຸກຂົງເຂດ, ໂດຍສະເພາະ ໃນຊຸມຊົນຂອງຊົນເຜົ່າມອນ- ຂະແມ ແລະ ມົ້ງ-ມຽນ. ລະບົບການລ້ຽງແບບຂັງຕະຫຼອດປີ ແມ່ນນິຍົມປະຕິບັດໃນຂົງເຂດທີ່ມີພົນລະເມືອງໜາແໜ້ນ, ໂດຍສະເພາະໃນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ. ພາຍໃຕ້ລະບົບນີ້, ໝູໄດ້ຖືກລ້ຽງຢູ່ໃນຄອກເພື່ອຂາຍເຂົ້າຕະຫຼາດ.

ໃນ ສປປ ລາວ ລວມມີໝູທັງໝົດ 976,566 ໂຕ ເຊິ່ງ 306,600 ຄົວເຮືອນເປັນຈົ້າຂອງ. ປະມານ 39% ຂອງຄົວເຮືອນ ມີໝູຢ່າງນ້ອຍ ໜຶ່ງໂຕ. 60% ຂອງຄົວເຮືອນ ມີໝູ 1 ຫຼື 2 ໂຕ, ໃນຂະນະດຽວກັນນັ້ນ ມີພຽງ 5% ເທົ່ານັ້ນ ທີ່ມີໝູ 10 ໂຕ ຫຼື ຫຼາຍກວ່າ ແລະ ໂດຍສະເລັ່ຍ ຄົວເຮືອນໜຶ່ງລ້ຽງໝູ ໝູ 3.2 ໂຕ. ດັ່ງແຜນແຜນທີ່ສະແດງໃຫ້ເຫັນ, ບ້ານທີ່ມີສ່ວນແບ່ງຄົວເຮືອນລ້ຽງໝູສູງສຸດ ແມ່ນຢູ່ໃນເຂດເນີນສູງ; ປະມານ 61% ຂອງຄົວເຮືອນດັ່ງກ່າວ ແມ່ນມີຖິ່ນຖານໃນເຂດເນີນສູງ, ແລະມີພຽງ 28% ຂອງຄົວເຮືອນໃນເຂດທົ່ງພຽງ ທີ່ການລ້ຽງໝູ.

ໂດຍລວມແລ້ວລະຫວ່າງ ປີ 1999 ແລະ ປີ 2011, ຈຳນວນໝູໄດ້ຫຼຸດລົງ 5.6%. ບັນດາແຂວງໃນພາກຕາເວັນອອກສຽງໃຕ້ ແລະ ພາກໃຕ້ ຈະຫຼຸດລົງຫຼາຍຢ່າງເດັ່ນຊັດ. ແຂວງຈຳປາສັກ (ຫຼຸດລົງ 53%), ແຂວງ ຫົວພັນ (ຫຼຸດລົງ 23%) ແລະ ແຂວງສະຫວັນນະເຂດ (ຫຼຸດລົງ 27%) ໄດ້ປະສົບກັບການຫຼຸດລົງຂອງປະຊາກອນໝູຢ່າງໜັກໜ່ວງ. ຂະນະທີ່ ປະຊາກອນໝູ ໄດ້ເພີ່ມຂຶ້ນ ໃນພາກຕາເວັນຕົກສຽງເໜືອ; ເຊັ່ນ: ແຂວງຜົ້ງສາລີ ປະຊາກອນໝູໄດ້ເພີ່ມຂຶ້ນ 36%.

ການຫຼຸດລົງຂອງປະຊາກອນໝູ ສ່ວນໃຫຍ່ແມ່ນເກີດຂື້ນຢູ່ບັນດາເຂດຫ່າງໄກສອກຫລີກ, ບ່ອນທີ່ຂາດການເອົາໃຈໃສ່ດ້ານສຸຂະອະນາໄມ ແລະ ການຈັດການດ້ານອາຫານ ກາຍເປັນຕົ້ນເຫດການຕາຍຂອງໝູສູງ. ການເກີດໃໝ່ຂອງຄອກໝູຂະໜາດກາງ ແລະ ຂະໜາດໃຫຍ່ ອາດເປັນອີກປັດໃຈໜຶ່ງທີ່ສົ່ງຜົນກະທົບຕໍ່ການລ້ຽງໝູຂະໜາດນ້ອຍ, ເຮັດໃຫ້ບໍ່ສາມາດແຂ່ງຂັນໃນຕະຫຼາດໄດ້. ການເພີ່ມຂື້ນຂອງການຜະລິດພືດເປັນສິນຄ້າ ແລະ ກິດຈະກຳນອກພາກກະເສດກໍ່ໄດ້ມີສ່ວນເຮັດໃຫ້ການລ້ຽງໝູຫຼຸດລົງ, ໂດຍສະເພາະໃນແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ.






ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງໝູ ໃນລະດັບບ້ານ (8643)
0 % (565)
> 0 - 20 % (2163)
> 20 - 40 % (1298)
> 40 - 60 % (1386)
> 60 - 80 % (1514)
> 80 - 100 % (1717)
ຈຳນວນໝູທັງໝົດ ໃນລະດັບກຸ່ມບ້ານ
500
1000
2000
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0
50
100
150 km
ຈຳນວນຄົວເຮືອນທັງໝົດທີ່ລ້ຽງໝູ ໃນລະດັບແຂວງ
29900 ຄຮ
10000 ຄຮ
5000 ຄຮ
ສະແດງສັນຍາລັກ > 5000 ຄຮ
22600
15200
26100
14800
26800
28900
22500
28800
16400
8900
12500
29900
22400
6400
8300
14200
ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງໝູ ໃນລະດັບເມືອງ (143)
0 % (1)
> 0 - 20 % (35)
> 20 - 40 % (30)
> 40 - 60 % (36)
> 60 - 80 % (36)
> 80 - 91 % (5)
0
100
200
300 km

ໆ 6 ໄກ່

ການຜະລິດໄກ່ໄດ້ປະກອບສ່ວນຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານໃນຫຼາຍປະເທດທີ່ກໍາລັງພັດທະນາ ແລະ ໄດ້ສະໜອງລາຍໄດ້ໃຫ້ແກ່ຊາວກະສິກອນທີ່ທຸກຍາກ, ໂດຍສະເພາະແມ່ຍິງ. ຄົນລາວສ່ວນຫຼາຍບໍລິໂພກຊີ້ນ 30 ຫາ 40 ກຼາມ ຕໍ່ມື້, ເຊິ່ງໃນລະຫວ່າງ 8.2 ຫາ 9.7 ກຼາມປະກອບມີຊີ້ນສັດປີກ. ການຜະລິດໄກ່ຢູ່ ສປປ ລາວ ມີຢູ່ 3 ປະເພດໃຫຍ່ຄື: ການຜະລິດແບບປ່ອຍຢູ່ສວນຫຼັງບ້ານດ້ທີ່ມີຈໍານວນສັດປີກ ໜ້ອຍກວ່າ 50 ໂຕ (ພົບເລື້ອຍໃນ ສປປ ລາວ), ການຜະລິດແບບເຄິ່ງທັນສະໄໝທີ່ມີຈໍານວນສັກປີ ບໍ່ເກີນ 1,000 ໂຕ ແລະ ການຜະລິດ ຂະໜາດໃຫຍ່ ທີ່ມີຈໍານວນສັດປີກ ຫຼາຍກວ່າ 1,000 ໂຕຂຶ້ນໄປ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກການຜະລິດໄກ່ໃນທ້ອງຖິ່ນ ຕອບສະໜອງໄດ້ແຕ່ສ່ວນໜຶ່ງຂອງຄວາມຕ້ອງການພາຍໃນປະເທດ, ຈຶ່ງເປັນສາເຫດໃຫ້ ສປປ ລາວ ຕ້ອງນໍາເຂົ້າໄກ່ຈາກປະເທດເພື່ອນບ້ານ.

63 ສ່ວນຮ້ອຍຂອງຄົວເຮືອນກະສິກໍາ ລ້ຽງໄກ່ໄດ້ທັງໝົດ 9.3 ລ້ານໂຕ ແລະ ໃນນັ້ນ 93% ແມ່ນສາຍພັນທ້ອງຖິ່ນ. ແຜນທີ່ຫຼັກ ໄດ້ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ລ້ຽງໄກ່ສ່ວນຫຼາຍແມ່ນຢູ່ພາກເໜືອຂອງ ສປປ ລາວ, ສ່ວນນະຄອນຫຼວງວຽງຈັນ ກໍ່ຖືວ່າ ເປັນສູນກາງລ້ຽງໄກ່ແບບທຸລະກິດ ແລະ ສອງສ່ວນສາມຂອງໄກ່ທີ່ລ້ຽງເປັນສິນຄ້າ ໃນ ສປປ ລາວ ຖືກລ້ຽງໃນສະຖານທີ່ແຫ່ງນີ້. ດັ່ງທີ່ ແຜນທີ່ຫຼັກໄດ້ສະແດງໃຫ້ເຫັນ, ມີພຽງແຕ່ 222 ບ້ານ ທີ່ສ່ວນໃຫຍ່ ຢູ່ພາກຕາເວັນອອກ ຂອງແຂວງບໍລິຄໍາໄຊ, ແຂວງສະຫວັນນະເຂດ ແລະ ຢູ່ເຂດທົ່ງພຽງບໍລະເວນ, ບໍ່ໄດ້ລ້ຽງໄກ່.

ແຂວງ ສະຫວັນນະເຂດ ມີ 57,700 ຄົວເຮືອນທີ່ລ້ຽງໄກ່, ຕາມດ້ວຍ ແຂວງວຽງຈັນ ແລະ ແຂວງ ຈໍາປາສັກ ລວມມີທັງໝົດ 45,400 ແລະ 41,200 ຄົວເຮືອນ ຕາມລໍາດັບ. ເຖິງຢ່າງໃດກໍຕາມ ມີພຽງ 58% ຂອງຄົວເຮືອນລ້ຽງໄກ່ ໃນ ແຂວງສະຫວັນນະເຂດ, ໃນຂະນະທີ່ ແຂວງຈໍາປາສັກ ມີ 68% ແລະ ແຂວງວຽງຈັນ ມີ 83%. ໃນແຂວງເຊກອງ ແລະ ແຂວງອັດຕະປື ມີ 7,400 ແລະ 13,100 ຄົວເຮືອນລ້ຽງໄກ່, ກວມເອົາ 74% ແລະ 77% ຂອງຈໍານວນຄົວເຮືອນທັງໝົດ ຂອງແຕ່ລະແຂວງ. ໃນແຂວງຜົ້ງສາລີ ມີ 23,600 ຄົວເຮືອນລ້ຽງໄກ່ ຫຼື 90% ຂອງຄົວເຮືອນທັງໝົດ, ເປັນແຂວງທີ່ມີສ່ວນແບ່ງຂອງຄົວເຮືອນລ້ຽງໄກ່ສູງທີ່ສຸດ.

ລະຫວ່າງປີ 1999 ແລະ 2011, ປະຊາກອນໄກ່ທ້ອງຖິ່ນ ໄດ້ເພີ່ມຂຶ້ນ 3.7% ຫຼື ປະມານ 1 ລ້ານ ໂຕ. ການເພີ່ມຂຶ້ນ ໄດ້ເກີດຂຶ້ນໃນທົ່ວປະເທດ ຍົກເວັ້ນແຕ່ ແຂວງຈໍາປາສັກ, ແຂວງສະຫວັນນະເຂດ, ແຂວງຄໍາມ່ວນ ແລະ ແຂວງຫົວພັນ. ຈໍານວນໄກ່ທີ່ເປັນສິນຄ້າ ມີການຂະຫຍາຍຕົວເພີ່ມຂຶ້ນ 124% ຫຼື 6.9% ຕໍ່ປີ; ເກືອບ 84% ຂອງໄກ່ທີ່ເປັນສິນຄ້າ ຖືກລ້ຽງຢູ່ພາກກາງຂອງ ສປປ ລາວ, ເກືອບຮອດ 470,000 ໂຕ ໄກ່ຊີ້ນ ແລະ ໄກ່ໄຂ່ (ຫຼື ປະມານ 72% ຂອງສາຍພັນທັງໝົດ) ສ່ວນຫຼາຍ ຖືກລ້ຽງຢູ່ທີ່ນະຄອນຫຼວງວຽງຈັນ. ການລ້ຽງໄກ່ແບບທຸລະກິດໄດ້ຂະຫຍາຍຕົວເພີ່ມຂຶ້ນເພື່ອຕອບສະໜອງຄວາມຕ້ອງການ ຊີ້ນ ແລະ ໄຂ່ໄກ່ ໃນເຂດຕົວເມືອງ. ໃນອີກດ້ານໜຶ່ງປະຊາກອນໄກ່ໃນແຂວງຈໍາປາສັກ ໄດ້ຫຼຸດລົງ 207,100 ໂຕ ລະຫວ່າງປີ 1999 ແລະ 2011, ກວມເອົາ 62% ຂອງການຫຼຸດລົງທັງໝົດຂອງທົ່ວປະເທດ. ຖັດມາ ແມ່ນ ແຂວງສະຫວັນນະເຂດ ມີ 94,600 ໂຕ ໃນປີ 2011 ເມື່ອທຽບກັບປີ 1999 ໄດ້ຫຼຸດລົງ 28% ຂອງການຫຼຸດລົງທັງໝົດ. ແຂວງຄໍາມ່ວນ ຫຼຸດລົງ 6.6% ແລະ ແຂວງຫົວພັນ ຫຼຸດລົງ 3.5%, ລວມທັງສອງແຂວງ ກວມເອົາ 10% ຂອງການຫລຸດລົງທັງໝົດ.

ການເພີ່ມຂຶ້ນຂອງການລ້ຽງໄກ່ ສ່ວນໃຫຍ່ ແມ່ນເນື່ອງຈາກ ການບໍລິໂພກຊີ້ນທີ່ເພີ່ມຂຶ້ນໃນລະດັບຊາດ, ລະດັບພາກພື້ນ ແລະ ລະດັບສາກົນ. ການເພີ່ມຂຶ້ນ ຍັງໄດ້ກ່ຽວພັນເຖິງ ການໄດ້ຮັບຄວາມຮູ້ດ້ານວິຊາການ ແລະ ການຄຸ້ມຄອງ ທີ່ດີຂຶ້ນກ່ຽວກັບການລ້ຽງໄກ່ແບບອຸດສາຫະກໍາ. ລັດຖະບານໄດ້ມີບົດບາດອັນສໍາຄັນຍິ່ງຕໍ່ກັບການເພີ່ມຂຶ້ນຂອງການລ້ຽງໄກ່ ໂດຍການນໍາເອົາແຜນການພັດທະນາສັດລ້ຽງແບບກ້າວໜ້າເພື່ອສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມ ການຜະລິດສັດ (*GoL*, 2006, *FAO*, 2007).

ບັນດາພະຍາດ ເຊັ່ນ ໄຂ້ຫວັດສັດປີກ, ອະຫິວາ ແລະ ລົວຄາດສເຊິນ ເປັນອຸປະສັກໜຶ່ງທີ່ສໍາຄັນຕໍ່ກັບການພັດທະນາ ອຸດສະຫະກໍາລ້ຽງໄກ່. ຄວາມຮູ້ທີ່ຈໍາກັດກ່ຽວກັບກ່ຽວກັບການດູແລສຸຂະພາບສັດ, ໂພຊະນາການ ແລະ ການຄຸ້ມຄອງ ເປັນໄພຂົ່ມຂູ່ເພີ້ມເຕີມ ໃຫ້ແກ່ການຂະຫຍາຍຕົວ ຂອງອຸດສະຫະກໍາສັດປີກ.





ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງໄກ່ ໃນລະດັບບ້ານ (8643)
0 % (222)
> 0 - 20 % (751)
> 20 - 40 % (909)
> 40 - 60 % (1300)
> 60 - 80 % (1922)
> 80 - 95 % (2137)
> 95 - 100 % (1402)
ຈຳນວນໄກ່ທັງໝົດ ໃນລະດັບກຸ່ມບ້ານ
2500
5000
10000
25000
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
0 50 100 150 km
ຈຳນວນຄົວເຮືອນທີ່ລ້ຽງໄກ່ທັງໝົດ ໃນລະດັບແຂວງ
57700 ຄຣ
30000 ຄຣ
15000 ຄຣ
23600
18000
16900
31700
38500
31800
30000
41000
45400
15400
17900
28100
57700
31600
7500
41200
13100
ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງໄກ່ ໃນລະດັບເມືອງ (143)
> 9 - 20 % (4)
> 20 - 40 % (10)
> 40 - 60 % (33)
> 60 - 80 % (66)
> 80 - 93 % (28)
0 100 200 300 km

ໆ 7 ເປັດ

ໃນສອງທົດສະວັດທີ່ຜ່ານມາ, ການຜະລິດເປັດໃນອາຊີ ໄດ້ມີຄວາມສຳຄັນຫຼາຍຂຶ້ນ ເຊິ່ງກວມເອົາ 87% ຂອງປະຊາກອນເປັດໃນໂລກ. ໃນ ສປປ ລາວ, ຫຼາຍກວ່າ 90% ຂອງຄົວເຮືອນທັງໝົດ ມີສັດປີກຢ່າງໜ້ອຍໜຶ່ງຊະນິດ. ເປັດ ແມ່ນປະເພດສັດປີກທີ່ມີຄວາມນິຍົມລ້ຽງເປັນອັນດັບສອງ ໃນປະເທດ ແລະ ເປັດສອງຊະນິດ ທີ່ລ້ຽງໃນປະເທດແມ່ນເປັດກາບ (Muscovy -*Cairina moschata*) ແລະ ເປັດເທດ (*Anas platyrhyncos*). ໃນ ສປປ ລາວ, ມີສາມລະບົບການຜະລິດສັດປີກຕົ້ນຕໍ: ການຜະລິດສັດປີກ ແບບພື້ນເມືອງ, ຂະໜາດນ້ອຍ, ປ່ອຍຢູ່ສວນຫຼັງບ້ານ ກວມເອົາປະມານ 84% ຂອງຊະນິດສັດປີກຂອງປະເທດ; ແບບເຄິ່ງເລັ້ງລັດ, ຂະໜາດນ້ອຍ ເຖິງຂະໜາດກາງ, ເລັ້ງໃສ່ການຜະລິດສັດປີກ ເພື່ອການຕະຫຼາດ ແລະ ເປັນສິນຄ້າ; ແລະລະບົບການຜະລິດສັດປີກແບບເລັ້ງລັດ, ຂະໜາດໃຫຍ່, ປະສົມປະສານ ແບບອຸດສາຫະກຳ (*Burgos et al*, 2008). ລະບົບການລ້ຽງເປັດ ແບບພື້ນເມືອງ ແມ່ນນິຍົມກັນຢ່າງແຜ່ຫຼາຍໃນສປປລາວ, ສ່ວນໃຫຍ່ສຳລັບການບໍລິໂພກພາຍໃນຄົວເຮືອນ.

ໃນ ສປປ ລາວ, ມີ 212,700 ຄົວເຮືອນ ລ້ຽງເປັດທັງໝົດ 1,788,000 ໂຕ, ກວມເອົາ 27% ຂອງຄົວເຮືອກະສິກຳທັງໝົດ. ແຜນທີ່ຫຼັກ ສະແດງໃຫ້ເຫັນເຖິງ ອັດຕາສ່ວນຂອງຄົວເຮືອນທີ່ລ້ຽງເປັດໃນລະດັບບ້ານ. ຈຸດທີ່ມີການລ້ຽງເປັດຫຼາຍທີ່ສຸດ ແມ່ນຢູ່ທີ່ແຂວງວຽງຈັນ (261,200 ໂຕ), ຈຳປາສັກ (217,000 ໂຕ), ໄຊຍະບູລີ (204,000 ໂຕ) ແລະ ສະຫວັນນະເຂດ (184,000 ໂຕ). ການລ້ຽງເປັກ ໂດຍສ່ວນໃຫຍ່ແມ່ນຢູ່ໃນເຂດດິນຕ່ຳ ແລະ ຢູ່ໃນເຂດ ທົ່ງພຽງໂພນສະຫວັນ. ແຜນທີ່ຫຼັກຍັງສະແດງໃຫ້ເຫັນວ່າ ການລ້ຽງເປັດເປັນທີ່ນິຍົມກັນໂດຍທົ່ວໄປ ແລະ ມັກຈະກະຈຸກຢູ່ອ້ອມແອ້ມເຂດເທດ ສະບານຂອງບັນດາແຂວງ.

ລະຫວ່າງປີ 1999 ແລະ 2011, ປະຊາກອນເປັດ ໃນ ສປປ ລາວ ໄດ້ເພີ່ມຂຶ້ນ 32.5% ຫຼື 318,300 ໂຕ. ເມື່ອສັງເກດກໍ່ພົບວ່າ ເກືອບທັງໝົດແຂວງ ມີການເພີ່ມຂຶ້ນມີ ນອກຈາກ ນະຄອນຫລວງວຽງຈັນ, ແຂວງຫົວພັນ ແລະ ແຂວງຈຳປາສັກ. ການເພີ່ມຂຶ້ນ 35 ສ່ວນຮ້ອຍຂອງການລ້ຽງເປັດ ໃນແຂວງໄຊຍະບູລີ ຖືວ່າເປັນການຂະຫຍາຍຕົວທີ່ຫຼາຍທີ່ສຸດ ໃນປະເທດ. ຕາມມາດ້ວຍ ນະຄອນຫຼວງວຽງຈັນ ແລະ ແຂວງຊຽງຂວາງ ມີການເພີ່ມຂຶ້ນ 24% ແລະ 18% ຕາມ ລຳດັບ. ກົງກັນຂ້າມກັບ ແຂວງຜົ້ງສາລີ, ຫຼວງນ້ຳທາ, ສາລະວັນ, ເຊກອງ ແລະ ອັດຕະປື ມີການເພີ່ມຂຶ້ນ ທີ່ໜ້ອຍກວ່າ 5% ໃນລະຫວ່າງປີ 1999 ແລະ ປີ 2011.

ເຊັ່ນດຽວກັນກັບສັດປີກອື່ນໆ, ການລະບາດຂອງພະຍາດຕ່າງໆ, ຄວາມຮູ້ ແລະ ການບໍລິການທາງດ້ານສຸຂະພາບສັດ, ໂພຊະນາການ ແລະ ການຄຸ້ມຄອງ ສັດລ້ຽງໄດ້ກີດກັ້ນການພັດທະນາອຸດສາຫະກຳການລ້ຽງເປັດໃນ ສປປ ລາວ. ໃນລະຫວ່າງປີ 2004 ແລະ 2008 ໄດ້ມີການລະບາດຂອງພະຍາດໄຂ້ຫວັດສັດປີກ 13 ເທື່ອ ເຮັດໃຫ້ສັດປີກຈຳນວນ 156,000 ໂຕ ຕາຍໃນທົ່ວປະເທດ. 8 ໃນ 13 ຄັ້ງ ຂອງການລະບາດໄດ້ເກີດຂຶ້ນໃນລະວ່າງ ເດືອນກຸມພາ ແລະ ເດືອນມີນາ ປີ 2007, ສ່ວນໃຫຍ່ແມ່ນ ຢູ່ໃນນະຄອນຫຼວງວຽງຈັນ ແລະ ຢູ່ບັນດາຟາມລ້ຽງແບບການຄ້າ, ສ້າງຜົນເສຍຫາຍເຖິງ 1 ໃນ 5 ຂອງ ຈຳນວນເປັດໄຂ່ຂອງປະເທດ. ແຜນທີ່ໃນລະດັບແຂວງໄດ້ສະແດງໃຫ້ເຫັນເຖິງການຫຼຸດລົງຢ່າງຫຼວງຫຼາຍ ຂອງຈຳນວນເປັດໂດຍສະເພາະຢູ່ໃນນະຄອນຫຼວງວຽງຈັນ.



ງ 7 ເປັດ


ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງເປັດ ໃນລະດັບບ້ານ (8643)
0 % (1280)
> 0 - 20 % (3127)
> 20 - 40 % (2011)
> 40 - 60 % (1400)
> 60 - 80 % (670)
> 80 - 100 % (155)
ຈຳນວນທັງໝົດຂອງເປັດ ໃນລະດັບກຸ່ມບ້ານ
500
2000
5000
10000
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຈຳນວນທັງໝົດຂອງຄົວເຮືອນທີ່ລ້ຽງເປັດ ໃນລະດັບແຂວງ
27400 ຄຮ
10000 ຄຮ
5000 ຄຮ
ສະແດງສັນຍາລັກ > 4000 ຄຮ
ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງເປັດ ໃນລະດັບເມືອງ (143)
0 % (2)
> 0 - 10 % (14)
> 10 - 20 % (39)
> 20 - 40 % (68)
> 40 - 60 % (19)
> 60 - 62 % (1)
0 100 200 300 km
0 50 100 150 km
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
2400000N
2200000N
2000000N
1800000N
1600000N

ໆ 8 ການຫາປາ

ການປະມົງໃນປະເທດລາວແມ່ນອີງໃສ່ ລະບົບນິເວດຂອງນໍ້າ ປະກອບດ້ວຍບັນດາ ແມ່ນໍ້າ, ແອ່ງນໍ້າ, ອ່າງເກັບນໍ້າເຂື່ອນໄຟຟ້າ, ອ່າງເກັບນໍ້າຊົນລະປະທານ ແລະ ຝາຍນໍ້າລົ້ນ, ດິນທາມທໍາມະຊາດ ແລະ ເຂດນໍ້າຖ້ວມ ແລະ ເຂດທົ່ງນາ. ໃນປີ 2006 ກົມລ້ຽງສັດ ແລະ ການປະມົງ ໄດ້ລາຍງານວ່າ ພື້ນທີ່ທັງໝົດຂອງຊັບພະຍາກອນນໍ້າ ທີ່ໃຊ້ສໍາລັບການປະມົງມີ ປະມານ 1.2 ລ້ານເຮັກຕາ. ປະຊາຊົນລາວ, ໂດຍສະເພາະໃນເຂດຊົນນະບົດ ສ່ວນຫຼາຍ ໄດ້ເພິ່ງພາອາໃສ ຊັບພະຍາກອນນໍ້າ ເຊັ່ນ: ປາ ແລະ ສັດນໍ້າອື່ນໆທີ່ເປັນແຫຼ່ງສໍາຄັນ ຂອງທາດໂປຼຕີນ ຈາກສັດ. ໃນປີ 2010, ກະຊວງແຜນການ ແລະ ການລົງທຶນໄດ້ລາຍງານວ່າ ປາ, ກົບ, ເຕົ່າ, ຫອຍ ແລະ ສັດນໍ້າ ອື່ນໆ ຫຼາຍກວ່າ 50 ສ່ວນຮ້ອຍຂອງແຫຼ່ງທາດໂປຼຕີນຈາກສັດ ທີ່ປະຊາຊົນບໍລິໂພກ, ຈຶ່ງ ຖືສໍາຄັນຍິ່ງ ຕໍ່ກັບຄວາມໝັ້ນຄົງດ້ານສະບຽງອາຫານ ຂອງປະເທດ.

ມີຫຼາຍກວ່າ 92 ຄົວເຮືອນ ທີ່ຫາປາຢູ່ໃນບັນດາແມ່ນໍ້າ, ແມ່ນໍ້າຂອງ ແລະ ທັງ 14 ສາຂາຂອງມັນທີ່ເປັນແຫຼ່ງຫາປາຫຼັກຂອງປະເທດ. ໃນຂະນະດຽວກັນ, ມີ 39.7% ຂອງຄົວເຮືອນຫາປາຢູ່ໃນອ່າງເກັບນໍ້າ ແລະ ບຶງຕ່າງໆ, 36.6% ໃນທົ່ງນາ ແລະ 28.7% ໃນໜອງ. 14% ຂອງຄົວເຮືອນ ຫາປາ ຢູ່ໃນຄອງເໝືອງຊົນລະປະທານ ແລະ 9.8% ໃນໜອງນໍ້າຕ່າງໆ ຂອງບ້ານ.

ໃນປະເທດລາວ, ມີ 526,300 ຄົວເຮືອນ ຫຼື ປະມານ 67 ສ່ວນຮ້ອຍ ຂອງຄົວເຮືອນທັງໝົດມີສ່ວນຮ່ວມ ໃນການຫາປາ. ແຂວງສະຫວັນນະເຂດ ກວມເອົາ 15.2% (74,800 ຄົວເຮືອນ). ຕາມດ້ວຍແຂວງຈໍາປາສັກ ມີ 9.4%. ສ່ວນ ແຂວງວຽງຈັນ, ແຂວງຄໍາມ່ວນ, ແຂວງສາລະວັນ ແລະ ແຂວງໄຊຍະບູລີມີປະມານ 7 ແລະ 8%. ແຂວງຫຼວງນໍ້າທາ, ບໍ່ແກ້ວ, ຊຽງຂວາງ ແລະ ນະຄອນຫຼວງວຽງຈັນກວມເອົາ 13 ສ່ວນຮ້ອຍ. ຍ້ອນປະຊາກອນຂອງແຂວງເຊກອງ ມີຈໍານວນໜ້ອຍ ຈຶ່ງກວມເອົາແຕ່ 2.7% ຂອງຄົວເຮືອນທັງໝົດ ທີ່ຫາປາທົ່ວປະເທດ. ເຖິງຈະກວມເອົາປະມານ 8% ຂອງຄົວເຮືອນທີ່ຫາປາທັງໝົດ ຂອງປະເທດ, ແຂວງຄໍາມ່ວນ ມີຄົວເຮືອນທີ່ຫາປາ ຫຼາຍທີ່ສຸດ (ກວມເອົາ 82%), ຕາມດ້ວຍ ແຂວງບໍລິຄໍາໄຊ ແລະ ຜົ້ງສາລີ ຢູ່ທີ່ 79%.

ແຜນທີ່ໄດ້ສະແດງໃຫ້ເຫັນວ່າ ແມ່ນໍ້າ ເປັນລະບົບນິເວດ ຫຼັກ ທີ່ຖືກນໍາໃຊ້ ສໍາລັບການຫາປາໃນທົ່ວປະເທດ; ມີ 92 %ຂອງຄົວເຮືອນ ຫາປາ ຢູ່ໃນບັນດາແມ່ນໍ້າຕ່າງໆ. ໃນຂະນະດຽວກັນ 40% ຫາປາ ຢູ່ໃນອ່າງເກັບນໍ້າ ຫຼື ບຶງ, ໂດຍສະເພາະໃນພາກກາງ ແລະ ພາກໃຕ້ຂອງລາວ. ຍ້ອນ ນາເຂົ້າໃນປະເທດມີຈໍານວນຫຼາຍ, ມັນບໍ່ແປກເລີຍ ທີ່ ຫຼາຍກ່ວາ ໜຶ່ງສ່ວນສາມ (37%) ຂອງຄົວເຮືອນທັງໝົດ ຫາປາໃນນາເຂົ້າ. ເຊັ່ນດຽວກັນກັບ ການຫາປາໃນນາເຂົ້າ, ການຫາປາໃນເຂດ ໜອງນໍ້າ ແມ່ນຖືກປະຕິບັດຢູ່ໃນທຸກໆແຂວງ, ສ່ວນໃຫຍ່ຢູ່ໃນພາກໃຕ້ ແລະ ພາກກາງຂອງລາວ. ໂດຍສະເລ່ຍ 29% ຂອງຄົວເຮືອນທັງໝົດ ໄດ້ຈັບປາຢູ່ໜອງນໍ້າ.

ໃນແຜນທີ່ລະດັບແຂວງ ໄດ້ສະແດງໃຫ້ເຫັນວ່າ ການຫາປາເປັນລາຍໄດ້ຫຼັກໃຫ້ກັບຄົວເຮືອນກະສິກໍາມີບາງຈໍານວນເທົ່ານັ້ນ, ເນື່ອງຈາກວ່າ ສ່ວນຫຼາຍການຫາປາ ແມ່ນເພື່ອການບໍລິໂພກຂອງຄົວເຮືອນ, ບໍ່ແມ່ນເພື່ອຂາຍ. ເຖິງຢ່າງໃດກໍ່ຕາມ ມີບາງເມືອງ ລະຫວ່າງ 5 ຫາ 16.7% ຂອງຄົວເຮືອນທັງໝົດອາໃສການຫາປາເປັນການລ້ຽງຊີບເຂົາເຈົ້າ. ເມືອງເຫຼົ່ານີ້ ຕັ້ງຢູ່ໃນແຂວງວຽງຈັນ (ອ້ອມຮອບອ່າງນໍ້າງື່ມ), ແຂວງບໍລິຄໍາໄຊ (ເຂດນໍ້າເທີນຫີນບູນ), ແຂວງຄໍາມ່ວນ (ອ້ອມຮອບນໍ້າເທີນ 2), ແຂວງສະຫວັນນະເຂດ ແລະ ແຂວງຈໍາປາສັກ (ລຽບຕາມແມ່ນໍ້າຂອງ ແລະ ເຂດ 4,000 ດອນ).

ລະຫວ່າງ ປີ 1999 ແລະ ປີ2011, ຈໍານວນຄົວເຮືອນທີ່ມີສ່ວນຮ່ວມໃນການຈັບປາໄດ້ເພີ່ມຂຶ້ນ 61,600 ຄົວເຮືອນ ຫຼື 13.3%. ການປ່ຽນແປງດັ່ງກ່າວ ເຫັນໄດ້ ໂດຍສະເພາະໃນເຂດພາກເໜືອ ເຊັ່ນ ແຂວງໄຊຍະບູລີ, ອຸດົມໄຊ ແລະ ວຽງຈັນ. ໃນທາງກົງກັນຂ້າມ ຢູ່ທີ່ ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ປາກເຊ, ບ່ອນທີ່ ມີການຈັບປາ ເກີນຄວາມຈໍາເປັນ, ມົນລະພິດ ທີ່ເພີ່ມຂຶ້ນ ແລະ ສະພາບອາກາດທີ່ປ່ຽນແປງ ມີສ່ວນສໍາຄັນເຮັດໃຫ້ຈໍານວນຄອບຄົວຊາວປະມົງຫຼຸດລົງ.


ສັດສ່ວນຂອງຄົວເຮືອນທີ່ໄດ້ໄປຫາປາ
ໃນລະດັບບ້ານ (8643)
0 % (497)
> 0 - 25 % (1025)
> 25 - 50 % (1004)
> 50 - 75 % (1348)
> 75 - 95 % (1985)
> 95 - 100 % (2784)
ສ່ວນຮ້ອຍຂອງຄົວເຮືອນທີ່ໄດ້ໄປຫາປາ
ແບ່ງຕາມປະເພດຂອງແຫຼ່ງຫາປາ ໃນລະດັບແຂວງ
100%
60%
20%
ແມ່ນ້ຳລຳເຊ
ໜອງວັງທຳມະຊາດ ຫຼື ອ່າງເກັບນ້ຳ
ບຶງ, ແກ່ງນ້ຳຖ້ວມຂັງ ຕາມລະດູການ
ນາເຂົ້າ
ຮ່ອງນ້ຳ ແລະ ຊົນລະປະທານ
ໜອງປາລວມຂອງບ້ານ
ອື່ນໆ
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
0E
200000E
400000E
600000E
102°0'E
104°0'E
106°0'E
22°0'N
20°0'N
18°0'N
16°0'N
14°0'N
0 50 100 150 km
ຈຳນວນທັງໝົດຂອງຄົວເຮືອນທີ່ໄປຫາປາ
ໃນລະດັບແຂວງ
75000 ຄຮ
40000 ຄຮ
10000 ຄຮ
22500
17000
28400
14700
33100
27900
19300
40800
40600
20200
26500
40900
74800
37600
8800
50300
14000
ອັດຕາສ່ວນຂອງຄົວເຮືອນທີ່ຫາປາ
ເປັນແຫຼ່ງລາຍໄດ້ຫຼັກໃນລະດັບເມືອງ (143)
0 % (16)
> 0.0 - 0.5 % (61)
> 0.5 - 1.0 % (25)
> 1.0 - 2.0 % (20)
> 2.0 - 5.0 % (13)
> 5.0 - 16.7 % (8)
0 100 200 300 km

ໆ 9 ການລ້ຽງສັດນໍ້າ

ອົງການອາຫານ ແລະ ການກະເສດ (*FAO*) ກໍານົດ ການລ້ຽງສັດນໍ້າ ເປັນ "ການລ້ຽງສັດນໍ້າ, ລວມທັງປາ, ຫອຍ, ກຸ້ງ ແລະ ພືດໃນນໍ້າ". ການລ້ຽງສັດນໍ້າ ໃນ ສປປ ລາວ ໄດ້ມີການຂະຫຍາຍຕົວ, ໂດຍສະເພາະ ກິດຈະກໍາຂະໜາດນ້ອຍ. ປະມານ 68,200 ຄົວເຮືອນ, ຫຼື 9 ສ່ວນຮ້ອຍ ຂອງຈໍານວນທັງໝົດ, ໄດ້ມີການລ້ຽງສັດນໍ້າແບບໃດແບບໜຶ່ງ. ການລ້ຽງສັດນໍ້າ ກວມເອົາປະມານ 60–70 ສ່ວນຮ້ອຍຂອງການຜະລິດປາ ປະຈໍາປີຂອງປະເທດ ແລະ ການຜະລິດປາສ່ວນໃຫຍ່ ໃນໜອງ, ທົ່ງນາ, ຫຼື ການໃຊ້ຖັງ ແລະ ກະຊັງ. ປາທີ່ມີຊື່ສຽງທີ່ສຸດໃນປະເທດລາວ ເປັນ ປາປາກຈີນ, ປາປາກຫົວໃຫຍ່, ປາກິນຫຍ້າ, ປາປາກອິນເດຍ, ປາປາກທົ່ວໄປ, ປາດຸກອາຟຣິກາ, ປາຄໍ່ ແລະ ປາຕະພຽນເງິນ (*DLF*, 2005).

ຈໍານວນຄົວເຮືອນທີ່ມີສ່ວນຮ່ວມໃນການລ້ຽງສັດນໍ້າ ໄດ້ເພີ່ມຂຶ້ນຈາກ 55,000 ຄົວເຮືອນ ໃນປີ 1999 ມາເປັນ 62,500 ຄົວເຮືອນ ໃນປີ 2011. ຄົວເຮືອນທີ່ເຂົ້າຮ່ວມໃນກະສິກໍາສັດນໍ້າຢູ່ພາກກາງຂອງ ສປປ ລາວ ມີອັດຕາສ່ວນສູງກວມເອົາ 45% ຂອງຄົວເຮືອນທັງໝົດ, ຕາມດ້ວຍ 42% ຢູ່ພາກເໜືອ ແລະ ພາກໃຕ້ ມີພຽງແຕ່ 13%. ໂດຍສະເລ່ຍແຕ່ລະຄົວເຮືອນນໍາໃຊ້ທີ່ດິນ 0.22 ເຮັກຕາ ສໍາລັບກິດຈະກໍາກະລ້ຽງສັດນໍ້າຂອງເຂົາເຈົ້າ. ຄົວເຮືອນຢູ່ໃນພາກໃຕ້ ແລະ ພາກກາງຂອງ ສປປ ລາວ ໄດ້ໃຊ້ພື້ນທີ່ ຫຼາຍກວ່າ ພາກເໜືອ.

ເພື່ອຕອບສະໜອງ ຕໍ່ກັບການຂະຫຍາຍຕົວ ຂອງພົນລະເມືອງ, ການປ່ຽນແປງໃນລະບົບນິເວດຂອງນໍ້າ, ການທໍາລາຍປ່າໄມ້ ແລະ ມົນລະພິດທາງນໍ້າ, ຄົວເຮືອນກະສິກໍາ ໄດ້ພັດທະນາ ຫຼາຍຮູບແບບການລ້ຽງສັດນໍ້າ ເພື່ອຮັບປະກັນວິຖີຊີວິດຂອງພວກເຂົາ ແລະ ເພື່ອມີລາຍຮັບ. ໃນ ສປປ ລາວ, ຫຼາຍກວ່າ 90% ຂອງຄົວເຮືອນທັງໝົດໄດ້ມີການລ້ຽງສັດນໍ້າໃນໜອງເພື່ອຜະລິດປາ, ໃນຂະນະທີ່ 14% ຂອງຄົວເຮືອນລ້ຽງປາ ແລະ ຈັບປາໃນນາເຂົ້າ.

ແຜນທີ່ຫຼັກ ຊີ້ໃຫ້ເຫັນວ່າ ແຂວງຫົວພັນ ແລະ ຊຽງຂວາງ ມີສ່ວນຮ່ວມໃນການລ້ຽງສັດນໍ້າສູງສຸດໃນລະດັບບ້ານ. ໃນສອງແຂວງເນັ້, ໜຶ່ງໃນສີ່ ແລະ ໜຶ່ງໃນຫ້າ ຂອງຄົວເຮືອນທັງໝົດ ມີສ່ວນຮ່ວມໃນການລ້ຽງສັດນໍ້າ, ສ່ວນຫຼາຍ ໃຊ້ໃນນາເຂົ້າເປັນບ່ອນນຜະລິດປາ. ພັນປາ ທີ່ຖືກລ້ຽງຫຼາຍທີ່ສຸດໃນນາເຂົ້າ ຄື ປາໄນ (*Cyprinus carpio*), *Carassius auratus*, ແລະ ປານິນ (*Oreochromis*). ການລ້ຽງປາໃນກະຊັງ ກວມເອົາ ພຽງແຕ່ ໜຶ່ງສ່ວນຮ້ອຍ ຂອງຄົວເຮືອນທັງໝົດ ທີ່ລ້ຽສັດນໍ້າ ແລະ ສ່ວນໃຫຍ່ ຢູ່ໃກ້ກັບ ອ່າງເກັບນໍ້າຂອງເຂື່ອນໄຟຟ້າ, ຕາມລໍາແມ່ນໍ້າຂອງ ແລະ ໃນອ່າງເກັບນໍ້າຊົນລະປະທານ. ມີພຽງແຕ່ 4% ທີ່ລ້ຽງປາ ໃນຖັງ, ເຊິ່ງ ສ່ວນຫຼາຍ ພົບທີ່ແຂວງຈໍາປາສັກ ແລະ ແຂວງບໍລິຄໍາໄຊ.

ທົ່ວປະເທດ ມີທັງໝົດ 11,400 ຄົວເຮືອນ ທີ່ລ້ຽງສັດນໍ້າ, ໃນນັ້ນ ແຂວງສະຫວັນນະເຂດ ກວມເອົາ ຈໍານວນຄົວເຮືອນ ຫຼາຍກ່ວາໝູ່. ຕາມດ້ວຍ ແຂວງຫົວພັນ ແລະ ໄຊຍະບູລີ ເຊິ່ງມີ 10,000 ແລະ 6,500 ຄົວເຮືອນ ຕາມລໍາດັບ. ເຖິງວ່າ ສ່ວນຫຼາຍ ການຜະລິດ ເພື່ອການບໍລິໂພກພາຍໃນຄົວເຮືອນ, ແຕ່ ໃນ 9 ຕົວເມືອງ ຢູ່ໃນແຂວງຈໍາປາສັກ, ແຂວງອັດຕະປື, ແຂວງບໍລິຄໍາໄຊ ແລະ ແຂວງວຽງຈັນ ການລ້ຽງສັດນໍ້າ ຖືເປັນແຫຼ່ງລາຍຮັບຕົ້ນຕໍ ຢ່າງໜ້ອຍ 10% ຂອງຄົວເຮືອນທັງໝົດ.

ການລ້ຽງສັດນໍ້າ ໃນ ສປປ ລາວ ໄດ້ ປ່ຽນແປງ ແລະ ມີການຂະຫຍາຍຕົວ ຢ່າງຊ້າໆ; ໃນລະຫວ່າງ ປີ 1999 ແລະ ປີ 2011, ຫຼາຍແຂວງ ໄດ້ລາຍງານວ່າ ເນື້ອທີ່ ການລ້ຽງ ແລະ ລະດັບ ການຜະລິດ ສັດນໍ້າ ໄດ້ເພີ່ມຂຶ້ນ, ໂດຍສະເພາະຢູ່ ແຂວງຊຽງຂວາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະ ແຂວງຜົ້ງສາລີ. ເພື່ອຮັກສາ ລະດັບການຜະລິດເຫຼົ່ານີ້, ລັດຖະບານຕ້ອງໄດ້ລົງທຶນຢ່າງຫຼວງຫຼາຍ ເຂົ້າໃສ່ການຄວບຄຸມສະພາບແວດລ້ອມການລ້ຽງສັດນໍ້າ ແລະ ແກ້ໄຂຄວາມສ່ຽງຕ່າງໆ ທີ່ເກີດຈາກການປ່ຽນແປງສະພາບອາກາດ.


0E
200000E
400000E
600000E
2400000N
2200000N
2000000N
1800000N
1600000N
22°0'N
20°0'N
18°0'N
16°0'N
14°0'N
102°0'E
104°0'E
106°0'E
ຈີນ
ຫວຽດນາມ
ມຽນມາ
ໄທ
ກຳປູເຈຍ
ຜົ້ງສາລີ
ຫຼວງນ້ຳທາ
ເມືອງໄຊ
ຫ້ວຍຊາຍ
ຊຳເໜືອ
ຫຼວງພະບາງ
ໂພນສະຫວັນ
ໄຊຍະບູລີ
ວຽງຈັນ
ປາກຊັນ
ທ່າແຂກ
ສະຫວັນນະເຂດ
ສາລະວັນ
ເຊກອງ
ປາກເຊ
ອັດຕະປື
ສັດສ່ວນຂອງຄົວເຮືອນທີ່ລ້ຽງສັດນ້ຳ ໃນລະດັບບ້ານ (8643)
> 0 - 10 % (3502)
> 10 - 25 % (1235)
> 25 - 50 % (444)
> 50 - 75 % (177)
> 75 - 100 % (67)
ສ່ວນຮ້ອຍຂອງຄົວເຮືອນທີ່ລ້ຽງສັດນ້ຳ ແບ່ງຕາມ ຮູບແບບຂອງການລ້ຽງສັດນ້ຳ ໃນລະດັບແຂວງ
100%
60%
20%
ລ້ຽງໃສ່ໜອງ
ລ້ຽງໃສ່ນາເຂົ້າ
ລ້ຽງໃສ່ຖັງ-ອ່າງ
ລ້ຽງໃສ່ກະຊັງ
ອື່ນໆ
ຈຳນວນຄົວເຮືອນທັງໝົດທີ່ລ້ຽງສັດນ້ຳ ໃນລະດັບແຂວງ
11500 ຄຣ
5000 ຄຣ
2000 ຄຣ
ລະແດງສັນຍາລັກ > 1000 ຄຣ
2000
3600
3100
10000
7400
6500
4600
2400
1900
11400
3700
2200
ອັດຕາສ່ວນຂອງຄົວເຮືອນທີ່ລ້ຽງສັດນ້ຳ ເປັນລາຍໄດ້ຫຼັກໃນລະດັບເມືອງ (143)
0 % (20)
> 0 - 1 % (50)
> 1 - 2 % (20)
> 2 - 5 % (31)
> 5 - 10 % (13)
> 10 - 29 % (9)
0
100
200
300 km
0
50
100
150 km

ເອກະສານອ້າງອີງ

ACO (2012) Lao Census of Agriculture 2010/11 – Highlights. Agricultural Census Office (ACO), Ministry of Agriculture and Forestry, Vientiane, Lao PDR.

ADB (2005) Sector Assistance Program Evaluation for the Agriculture and Natural Resources Sector in the Lao People's Democratic Republic, Operations Evaluation Department Asian Development Bank, Manila, Philippines.

ADB and WB (2012) Country Gender Assessment for Lao PDR. Reducing vulnerability and increasing opportunity, Mandaluyong City, Philippines and Washington DC, USA, Asian Development Bank and the International Bank for Reconstruction and Development/the World Bank.

Agricultural Statistic Year Book (2015) Department of Planning and Cooperation, Ministry of Agriculture and Forestry, Vientiane, Lao PDR.

Alton, C., Bluhm, D. and Sannanikone, S. (2005) Para Rubber in Northern Laos: the Case of Luang Namtha. Lao-German Program, Rural Development in Mountainous Areas of Northern Laos, Vientiane, Lao PDR.

Aubertin, C. (2004) Cardamom (Amomum spp.) in Lao PDR: the hazardous future of an agroforest system product. In: Kusters, K. and Belcher, B. (eds.), Forest Products, Livelihoods and Conservation: Case studies of non-timber forest product systems. Volume 1- Asia, 43.

Baird, I. (2011) Turning Land into Capital, Turning People into Labour: Primitive Accumulation and the Arrival of Large-Scale Economic Land Concessions in the Lao People's Democratic Republic, Journal of Marxism and Interdisciplinary Inquiry, Vol. 5 (1), University of Wisconsin-Madison, USA.

Bouahom, B., Kingkeo, S., Phimphachanvongsod, V., Thao, L., Fahrney, K. and Aye, T.M. (2015) The changing role of cassava in rural poverty alleviation in Lao PDR, In: Howeler, R. (ed.), Sustainable cassava production in Asia for multiple uses and for multiple markets. International Center for Tropical Agriculture (CIAT), Cali, Colombia.

Burgos, S., Otte, J. and Roland-Holst, D. (2008) Poultry, HPAI and Livelihoods in Lao Democratic Republic – A Review. Food and Agriculture Organization of the United Nation, http://cdn.aphca.org/dmdocuments/Study/WP05_081204.pdf, accessed 3 March 2016.

Burnette, R. (2012) Three Cheers for Job's Tears: Asia's Other Indigenous Grain, A Regional Supplement to ECHO Development Notes Issue 13, https://www.echocommunity.org/resources/d0eaf359-b4a4-43a1-801b-ab1320c1ba76, accessed 20 November 2016.

CFE-DM (2014) Center for Excellence in Disaster Management and Humanitarian Assistance - Disaster management reference handbook, https://www.cfe-dmha.org/LinkClick.aspx?fileticket=lOMhs1ByC5U%3d&portalid=0, accessed 1 November 2017.

Chaisiricharoenkul, J., Tongta, S. and Intarapichet, K.-O. (2011) Structure and chemical and physicochemical properties of Job's tear (Coix lacryma-jobi L.) kernels and flours, https://www.researchgate.net/publication/267707183_structure_and_chemical_and_physicochemical_properties_of_job%27s_tear_coix_lacryma-jobi_l_kernels_and_flours, accessed 13 August 2016.

Chiengthong, J. (2014) State, Capital, Border Traders, Farmers, and Cross-Border Corn, the 12th International Conference on Thai Studies, University of Sydney, Australia.

Cooper, R. (2014) Laos – work in progress. Lao Insight books, Vientiane, Lao PDR.

Cramb, R.A. and Newby, J.C. (2015) Trajectories of rice-farming households in mainland Southeast Asia, In: Cramb, R.A. (ed), Trajectories of rice-based farming systems, Australian centre for international agricultural research (ACIGAR), Canberra, Australia.

DAFF (2012) Sugarcane. Department of Agriculture, Forestry and Fisheries, Pretoria, Republic of South Africa.

Delgado, C., Rosegrant, M. and Wada, N. (2003) Meating and milking global demand: Stakes for small-scale farmers in developing countries, https://ageconsearch.umn.edu/bitstream/124009/2/Delgado2003.pdf, accessed 21 July 2016.

Diane, R. and Alan, M. (2015) Sweet corn. Communications and Marketing, College of Agriculture and Life Sciences, Virginia Polytechnic Institute and State University, USA.

DLF (2005) The National Strategy for Fisheries from the present to 2020: Action Plan for 2006 to 2010, Department of Livestock and Fisheries, Vientiane, Lao PDR.

DLF (2015) The action Plan of Livestock and Fisheries for 2015-2020, Department of Livestock and Fisheries, Vientiane, Lao PDR.

DOAC (2013) Status Paper on Sugarcane. Department of Agriculture & Cooperation, Ministry of Agriculture, New Delhi, India.

Eliste, P. and Santos, N. (2012) Lao People's Democratic Republic Rice Policy Study, Food and Agriculture Organization (FAO), Rome, Italy.

FAO (2010) FAO in Laos - Laos at a glance, http://www.fao.org/laos/fao-in-laos/laos-at-a-glance/en/, accessed 12 March 2016.

FAO (2014) Lao Census of Agriculture 2010/11. Analysis of selected themes, Vientiane, Lao PDR, http://www.fao.org/3/a-at767e.pdf, accessed 17 March 2016.

FAO (2016) Aquastat website. Food and Agriculture Organization of the United Nations, http://www.fao.org/nr/water/aquastat/countries_regions/LAO/, accessed 17 October 2016.

FAOSTAT (2016) Peanut production in 2014, Food and Agricultural Organization of the United Nations, Statistics Division, http://faostat3.fao.org/browse/Q/QC/E. FAOSTAT, accessed 23 November 2016.

FRC (2005) Summary of Rubber in Lao PDR. Forestry Research Centre (FRC). National Agriculture and Forestry Research Institute (NAFRI), Vientiane, Lao PDR.

FRC (2016) Cardamom production and value chain in Laos. Forestry Research Center, NAFRI, Vientiane, Lao PDR.

Fujita, Y. and Phanvilay, K. (2008) Land and forest allocation in Lao People's Democratic Republic: comparison of case studies from community-based natural resource management research. Society and Natural Resources, 21(2), 120-133.

GIZ (2012) Microfinance in Lao PDR. GIZ, Vientiane, Lao PDR.

Heiss, M.L. and Heiss, R.J. (2007) The Story of Tea: A Cultural History and Drinking Guide. Citing Modal, 519, Berkeley, USA.

Hong, T. T. T., Linh, N.Q., Ogle, B. and Lindberg, J.E. (2006) Survey on the prevalence of diarrhea in pre-weaning piglets and on feeding systems as contributing risk factors in smallholdings in Central Vietnam. Trop. Anim. Health Prod. 38: 397-405.

ICEM (2003) Lao PDR national report on protected areas and development, Review of Protected Areas and Development in the Lower Mekong River Region, International Centre for Environmental Management, Queensland, Australia.

Inthapanya, P., Boualaphanh, C., Hatsadong, C. and Schiller, J. M. (2006) The history of lowland rice variety improvement in Laos. In: Schiller, J.M., Chanphengxay, M.B., Linquist, B.A. and Appa Rao, S. (eds.), Rice in Laos. International Rice Research Institute (IRRI), Los Baños, Philippines.

IUCN and NERI (2011) Assessment of Economic, Social and Environmental Costs and Benefits of Mitr Lao Sugar Plantation and Factory: Case Study in Savannakhet Province. International Union for Conservation of Nature (IUCN) Lao PDR and the National Economic Research Institute (NERI), Ministry of Planning and Investment of Lao PDR.

JICA (2011) Vientiane Capital - Urban development master plan - proposal, https://www.jica.go.jp/project/english/laos/009/materials/pdf/pamphlet_01.pdf, accessed 11 August 2016.

Kaiser, C. and Ernst, M. (2010) Sweet corn. University of Kentucky College of Agriculture, Food and Environment, USA.

Kenney-Lazar, M. (2013) Shifting Cultivation in Laos: Transitions in Policy and Perspective. Technical Report, Kyoto University, Japan.

Larson, B. (2008) Entangled biological, cultural and linguistic origins of the war on invasive species. In: Cognitive Linguistics Research: Frank, R.M., Dirven, R., Ziemke, T. and Bernardez, E. (eds.), Sociocultural Situatedness, 169–195, Berlin, Germany.

Leebouapao, L. and Voladeth, S. (2011) Agricultural Development, Trade, and Regional Cooperation in an Integrating and Industrializing East Asia. The Case of Lao PDR, In: Intal, Jr., P. S., Oum, S. and Simorangkir, M. J. O. (eds.), Agricultural Development, Trade and Regional Cooperation in Developing East Asia, 269-306, Jakarta, Indonesia.

Lienhard, P., Chaivanna, S., Castella, J.-C., Phimmasone, S., Phonekhampeng, C. and Khamxaykhay, C. (2015) Protecting riparian areas using Cardamom. Eco-Friendly Intensification and Climate-resilient Agricultural Systems (EFICAS). DALaM, Vientiane, Lao PDR.

Linquist, B.A., Keoboualapha, B., Sipaseuth and Inthapanya, P. (2006) Rice production systems of Laos. In: Schiller, J.M., Chanphengxay, M.B., Linquist, B.A. and Appa Rao, S. (eds.), Rice in Laos. International Rice Research Institute (IRRI), Los Baños, Philippines.

LSUAFRP (2005) Promoting Soybean as a Cash Crop: Determinants and Possible Impacts. Lao-Swedish Upland Agriculture and Forestry Research Programme, NAFRI, MAF, Vientiane, Lao PDR.

MAF (1999) Agriculture Statistic Yearbook 1999, Department of Planning and Cooperation, Ministry of Agriculture and Forestry, Vientiane, Lao PDR.

MAF (2010) Strategy for agricultural development 2011 to 2020 draft Vientiane: Ministry of Agriculture and Forestry, Vientiane, Lao PDR.

MAF (2012) Agricultural Statistics Year Book 2011, Ministry of Agriculture and Forestry (MAF), Vientiane, Lao PDR.

MAF (2015) Agriculture and Forestry Development Strategy 2025 and Vision 2030. Ministry of Agriculture and Forestry (MAF), Vientiane, Lao PDR.

MAF (2016) Strategy for Agricultural Development 5 years (2016-2020) Ministry of Agriculture and Forestry, Vientiane, Lao PDR.

MAF/WREA (2010) Fourth national report to the Convention on Biological Diversity, Ministry of Agriculture and Forestry, Water Resources and Environment Administration, 101, Vientiane, Lao PDR, http://www.cbd.int/doc/world/la/la-nr-04-en.pdf, accessed 26 October 2013.

Manivong, P., Mahavong, P., David, A., Homevongsa, V., Mongpadith, S. and Guitet, C. (2007) Participative analysis of coffee supply chain in Lao PDR. Groupe de Travail Café (GTC), Vientiane, Lao PDR.

Manivong, V. and Cramb, R.A. (2008) Economics of Smallholder Rubber Expansion in Northern Laos: Agroforest System, Vientiane, Lao PDR, https://doi.org/10.1007/s10457-008-9136-3, accessed 11 March 2015.

Manivong, V., Phouyyavong, K., Thongpadid, V., Phiasakha, V., Saycocie, S. and Bouahom, B. (2003) Field Report on Rubber and Sugarcane Markets in Northern Laos. Socio-Economics Research Component. Lao-Swedish Upland Agriculture and Forestry Research Programme. National Agriculture and Forestry Research Institute (NAFRI), Vientiane, Lao PDR.
Marije, B. (2005) Peanuts Market Rapid Appraisal. Micro Projects Development through Local Communities. TABI, Vientiane, Lao PDR,

http://www.tabi.la/articlemapper/resources/NTFP%20Lao%20docs/Marketing%20of%20NTFPs%20in%20Laos/NTFP%20Marketing%20studies/Chompet%20Peanuts%20Marketassessment%20Feb05.pdf, accessed 7 October 2017.

Martens, S. D., Tiemann, T. T., Bindelle, J., Peters, M. and Lascano, C. E. (2013) Alternative plant protein sources for pigs and chickens in the tropics–nutritional value and constraints: a review. Journal of Agriculture and Rural Development in the Tropics and Subtropics, 113 (2), 101–123.

Messerli, P., Epprecht, M. and Heinimann, A. (2009) Finding Homogeneity in Heterogeneity-A New Approach to Quantifying Landscape Mosaics Developed for the Lao PDR, Bern, Switzerland.

Millar, J. and Phoutakhoun, V. (2008) Livestock development and poverty alleviation: revolution or evolution for upland livelihood in Lao PDR, International Journal of Agriculture Sustainability, 6, 89–102.

MOPI (2010) The seventh national socio-economic development plan 2011-2015, Executive Summary, Ministry of Planning and Investment, Vientiane, Lao PDR, http://www.rtm.org.la/documents/DRAFT%20NSEDP%20EX%20SUMMARY%20MAY%202010.pdf, accessed 6 September 2015.

MRC (2010) Social impact monitoring and vulnerability assessment report on a regional pilot study for the Mekong corridor, Mekong River Commission, MRC Technical Paper No. 30: 179, http://www.mrcmekong.org/assets/Publications/technical/Tech-No30-Social-Impact-Monitoring.pdf, accessed 15 November 2014.

MRC (2012) The Impact & Management of Floods & Droughts in the Lower Mekong Basin & the Implications of Possible Climate Change, http://www.mrcmekong.org/assets/Publications/basin-reports/FMMP-working-paper-110820.pdf, accessed 3 April 2015.

NAFRI (2011) Rubber Research in Lao PDR, National Agriculture and Forestry Research Institute (NAFRI), Vientiane, Lao PDR.

NAFRI (2016) Sustainable Commercial Agricultural Production: A Case Study of Commercialized Banana Production in Lao PDR. National Agriculture and Forestry Research Institute (NAFRI), Vientiane, Lao PDR.

Newby, J.C. (2016) Cassava farmers in Southeast Asia exposed to policy changes in global carbohydrate market. The official blog from the Australian Centre for International Agricultural Research (ACIAR), http://aciarblog.blogspot.com/2016/04/cassava-farmers-in-southeast-asia.html, accessed 17 March 2015.

Pavelic, P., Clement, C., Somphasith, D., Snwoy-Haiblen, A., Karthikeyan and B., Keokhamphui, K. (2016) Enhancing the resilience and productivity of rainfed dominated systems in Lao PDR through sustainable groundwater use, https://www.researchgate.net/publication/315380626_Enhancing_the_resilience_and_productivity_of_rainfed_dominated_systems_in_Lao_PDR_through_sustainable_groundwater_use, accessed 1 November 2016.

Pedersen, O., Carroll, M., Liang, C. and Shixiong, Y. (2016) Phou San Wild Tea in Xiengkhouang Province, Lao PDR. From Early Days to Current Production and Market Development. Agro-biodiversity Project, UNDP.

Phengsavanh, P., Ogle, B., Stür, W., Frankow-Lindberg, B. and Lindberg, J.E. (2011) Small holder pig rearing system in Northern Lao PDR. Asian-Australasian Journal of Animal Science, 24, 867-874.

Phommavong, T. (2010) Country Report – ASEAN training course on Aquaculture Production, MAF, NAFRI, Living aquatic resources research center, Vientiane, Lao PDR.

Phouyyavong, K. and Talje, D. (2006) Case Study on Production and Market Conditions for Corn in Namor District, Oudomxay Province, Lao-Swedish Upland Agriculture and Forestry Research Program, NAFRI, Vientiane, Lao PDR.

Poungchompu, S. (2015) Determinants of Technical Efficiency of Sugarcane Production among Small Holder Farmers in Lao PDR. American Journal of Applied Sciences 2015, 12 (9), 644-649.

Qiu, L. J. and Chang, R. Z. (2010) The origin and history of soybean. In: Singh, G. (ed.) the soybean: botany, production and uses. CABI Publishing, Oxford, UK.

Rouw, A.D., Baranger, P. and Soulidad, B. (2002) Upland Rice and Job's Tear Cultivation in Slash and Burn Systems under very Short Fallow Periods in Luang Prabang Province. The Lao Journal of Agriculture and Forestry, NAFRI, Vientiane, Lao PDR.

Schiller, J.M., Hatsadong and Doungsila, K. (2006) A history of rice in Laos. In: Schiller, J.M., Chanphengxay, M.B., Linquist, B.A. and Appa Rao, S. (eds.) Rice in Laos. International Rice Research Institute (IRRI), Los Baños, Philippines.

Schiller, J.M., Manivong, V. and Phengvichith, V. (2013) Lao PDR – Rice Production and Food Security. The Lao Journal of Agriculture and Forestry, No. 28, January-June 2013, 116-135, NAFRI, Vientiane, Lao PDR.

Setboonsarng, S., Leung, P.S. and Stefan, A. (2008) Rice contract farming in Lao PDR: Moving from subsistence to commercial agriculture. ADBI Discussion Paper 90, Tokyo, Japan.

Shurtleff, W. and Aoyagi, A. (2004) History of fermented soymilk and its products. History of soybeans and soy foods, 1100 B.C. to the 1980s, Soyinfo Center, Lafayette, USA.

Singh, A.K. and Nigam, S.N. (1997) Groundnut, In: Fuccillo, D., Sears, L. and Stapleton, P. (eds.) Biodiversity in Trust. Cambridge University Press, UK, https://www.cambridge.org/core/books/biodiversity-in-trust/groundnut/F14F5A5AA58616B928C20D1F6560CCBB, accessed 1 July 2017.
Somlith, V. (2017) Agriculture Section, Champasak Provincial Agriculture and Forestry Office, Vientiane, Lao PDR.

Sourideth, V., Ouanesamone, P. and Newby, J.C. (2011) Factors influencing the adoption of corn in irrigated rice-based farming systems in Lao PDR. International Conference on Conservation Agriculture, Brisbane, Australia.

Stür, W., Gray, D. and Bastin, G. (2002) Review of the livestock sector in the Lao People's Democratic Republic. International Livestock Research Institute, Manila, Philippines.

Thongmanivong, S. and Fujita, Y. (2006) Recent Land Use and Livelihood Transitions in Northern Laos. Mountain Research and Development, 26 (3), 237-244, Bern, Switzerland.

UN in Lao PDR (2017) SDG 5: Gender, Achieve gender equality and empower all women and girls, http://www.la.one.un.org/sdgs/sdg-5-gender, accessed 11 October 2017.

UNDP (2010) Developing a national risk profile of Lao PDR, http://www.adpc.net/igo/category/ID275/doc/2013-sWNa61-ADPC-Final_Report_Part1.pdf, accessed 7 March 2016.

UNDP (2016) Cardamom Agronomy, Marketing & Extension-Services Study & Capacity Building. Northern Uplands Development Programme, MAF, Vientiane, Lao PDR.

UN-Habitat (2004) Pakse, Lao People's Democratic Republic - Climate Change Vulnerability Assessment. United Nations Human Settlements Programme.

UXO Lao (2013) Lao national unexploded ordanance programme, UXO impact, https://www.uxolao.org/index.php/en/the-uxo-problem/uxo-impact, accessed 14 August 2014.

UXO-NRA (2014) National regulatory authority for UXO/mine action sector in Lao PDR, http://www.nra.gov.la/uxoimpact.html, accessed 3 February 2015.

Van Kerkhove, M.D., Mumford, E., Mounts, A.W., Bresee, J. and Ly, S. (2011) Highly pathogenic avian influenza (H5N1): Pathways of exposure at the animal-human interface, a systematic review. PLoS ONE, e14582.doi:10.1371/journal.pone.0014582.

Wilson, R. (2007) Status and prospects for livestock production in the Lao People's Democratic Republic. Tropical Animal Health Production, Vol. 39 (6), 443-452.

World Bank (2008) Lao People's Democratic Republic: Policy, Market, and Agriculture Transition in the Northern Uplands, Washington DC, USA.

World Education (2016) Value chain assessment report - Lao Ngam. Assessment of Value Chains to Support Sustainable Livelihoods for the Poor through Inclusive Economic Development Lao Ngam District, Salavane Province, http://53c5r2vuv7y1h7ipr2fx8kut.wpengine.netdna-cdn.com/wp-content/uploads/2014/10/World-Education-Value-Chain-Assessment-Lao-Ngam-2016.pdf, accessed 1 February 2014.

Wu, Y., Chanhda, H., Xiaoling, Z., Yoshida, A. and Cifang, W. (2011) Tea industry development and land utilization along the China-Laos border: A case study of Komen Village in Laos. African Journal of Business Management, Vol. 5 (11), 4328-4336.

ແຜນທີ່ ກະສິກຳ ໃນ ສປປ ລາວ

ຮູບແບບ ແລະ ທ່າອ່ຽງ ລະຫວ່າງປີ 1999 ຫາ 2011

ພູມີທັດດ້ານກະສິກຳໃນ ສປປ ລາວ ກຳລັງປະສົບກັບການປ່ຽນແປງທີ່ສຳຄັນ. ໃນຊ່ວງທົດສະວັດທີໜຶ່ງຂອງສັດຕະວັດທີ 21, ສ່ວນແບ່ງຂອງການປະກອບສ່ວນຂອງກະສິກຳ ຕໍ່ກັບເສດຖະກິດແຫ່ງຊາດ ໄດ້ຫຼຸດລົງ, ໃນຂະນະທີ່ ປະຊາກອນຊາວກະສິກອນ ພັດເຕີບໂຕຂຶ້ນ, ຄົວເຮືອນນຳໃຊ້ເນື້ອທີ່ດິນເພື່ອຫານກະເສດ ໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ ແລະ ລະບົບການຜະລິດກະສິກຳ ໄດ້ກາຍເປັນການຜະລິດ ເພື່ອການຄ້າ ແລະ ມີປະສິດທິພາບສູງຂຶ້ນ. ເຖິງຢ່າງໃດກໍຕາມ, ທ່າອ່ຽງເຫຼົ່ານີ້ ຍັງບໍ່ເປັນເອກະພາບທົ່ວປະເທດ, ແລະ ຮູບແບບການຜະລິດກະສິກຳ ພ້ອມທັງພົນລະວັດຂອງມັນຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງພາກຕ່າງໆ.

ປື້ມແຜນທີ່ກະສິກຳ ເຫຼັ້ມທຳອິດ ຂອງ ສປປ ລາວ ເຫຼັ້ມນີ້ ໄດ້ໃຊ້ຖານຂໍ້ມູນສະຖິຕິທີ່ມີຄວາມອຸດົມສົມບູນຂອງການສຳຫຼວດກະສິກຳໃນປີ 1999 ແລະ ປີ 2011, ແລະ ນຳສະເໜີ ບັນດາແຜນທີ່ມີລາຍລະອຽດສູງ ກ່ຽວກັບ ຮູບແບບການຜະລິດຂອງຄົວເຮືອນກະສິກຳ ລາວທີ່ຫຼາກຫຼາຍ, ພ້ອມທັງຊີ້ໃຫ້ເຫັນເຖິງການປ່ຽນແປງທີ່ເກີດຂຶ້ນຕະຫຼອດຊ່ວງທົດສະວັດທຳອິດຂອງສັດຕະວັດນີ້.

ຄວາມເລິກໃນລາຍລະອຽດໃໝ່ຂອງຂໍ້ມູນກ່ຽວກັບພົນລະວັດໃນຂະແໜງກະສິກຳ ທີ່ໄດ້ນຳສະເໜີໃນປື້ມແຜນທີ່ສະບັບນີ້ ຄາດວ່າຈະສະໜັບສະໜູນການວິເຄາະ, ການວາງແຜນ ພັດທະນາຊົນນະບົດ ແລະ ການຕັດສິນບັນຫາ ຂອງບັນດາຜູ້ທີ່ນຳໃຊ້ຂໍ້ມູນດັ່ງກ່າວ ທັງພາກລັດ ແລະ ພາກເອກະຊົນ ໃນວົງກ້ວາງ.

ປື້ມແຜນທີ່ກະສິກຳເຫຼັ້ມນີ້ ໄດ້ຖືກພັດທະນາຂຶ້ນ ໂດຍການຮ່ວມມື ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້, ສປປ ລາວ ແລະ ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ ຂອງມະຫາວິທະຍາໄລເບີນ ປະເທດສະວິດເຊີແລນ, ໂດຍແນວຄິດລິເລີ່ມຂອງ ລາວ ດີຊາຍ ອິນໂຟ. ແນວຄວາມຄິດດັ່ງກ່າວນີ້ ໄດ້ຮັບການສະໜັບສະໜູນທຶນ ຈາກ ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດ ສະວິດເຊີແລນ (SDC), ແລະ ມີຈຸດປະສົງສົ່ງເສີມການແລກປ່ຽນ ແລະ ການເຊື່ອມໂຍງຂໍ້ມູນ ເພື່ອ ເສີມຂະຫຍາຍການວິເຄາະ ແລະ ການວາງແຜນ ພັດທະນາ.

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

u^b
b UNIVERSITÄT BERN
CDE
CENTRE FOR DEVELOPMENT AND ENVIRONMENT